International Labour Organization

unicef
ເພື່ອເດັກທຸກໆຄົນ

JOINT SDG FUND

Australian Aid



# ຄູ່ມືຝຶກອົບຮົມຄູຝຶກ ການປົກປ້ອງສັງຄົມ ສຳລັບ ສປປ ລາວ

ປະກອບດ້ວຍຄູ່ມືການຝຶກອົບຮົມ
ແລະ ຊຸດການຮຽນ

# ຄຳນຳ

ໂຄງການຮ່ວມມືຂອງອົງການສະຫະປະຊາຊາດ “ບໍ່ປະໃຜໄວ້ຂ້າງຫຼັງ: ສ້າງພື້ນຖານໃຫ້ແກ່ລະບົບປົກປ້ອງສັງຄົມຂັ້ນພື້ນຖານໃນ ສປປ ລາວ”, ໄດ້ຮັບ ທຶນສະໜັບສະໜູນຈາກກອງທຶນຮ່ວມມື SDG ແລະ ລັດຖະບານອົດສະຕຣາລີ, ແນໃສ່ສະໜັບສະໜູນລັດຖະບານ ແຫ່ງ ສປປ ລາວ ໃນການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ປີ 2025 ໂດຍຜ່ານຫຼາກຫຼາຍວິທີການດັ່ງລຸ່ມນີ້:

- ການສ້າງລະບົບປົກປ້ອງສັງຄົມແຫ່ງຊາດ.
- ທົດລອງໂຄງການໃຫ້ເງິນອຸດໜຸນແມ່ຍິງຖືພາ ແລະ ເດັກນ້ອຍກ່ອນໄວຮຽນ (ກອງທຶນອຸດໜຸນແມ່ຍິງຖືພາ ແລະ ເດັກນ້ອຍກ່ອນໄວຮຽນ ຫຼື MECG).

ອົງການ ILO ໄດ້ຈັດກອງປະຊຸມຝຶກອົບຮົມກ່ຽວກັບການອອກແບບ ແລະ ຈັດຕັ້ງປະຕິບັດນະໂຍບາຍປົກປ້ອງສັງຄົມໃຫ້ແກ່ອຳນາດການປົກຄອງຂັ້ນສູນກາງ ແລະ ຂັ້ນແຂວງທົ່ວປະເທດ ເຊິ່ງແມ່ນສ່ວນໜຶ່ງຂອງແຜນງານດັ່ງກ່າວ. ສິ່ງດັ່ງກ່າວນີ້ຈະຊ່ວຍຮັບປະກັນໃຫ້ບັນດາຄູ່ຮ່ວມງານແຫ່ງຊາດທີ່ຮັບຜິດຊອບໃນການຈັດຕັ້ງປະຕິບັດຍຸດທະສາດປົກປ້ອງສັງຄົມແຫ່ງຊາດ ມີຄວາມເຂົ້າໃຈກ່ຽວກັບແນວຄວາມຄິດທີ່ກ່ຽວຂ້ອງກັບການປົກປ້ອງສັງຄົມ, ຄວາມສຳຄັນ, ຜົນກະທົບ, ຄວາມຈຳເປັນໃນການລົງທຶນເຂົ້າໃນງົບປະມານການປົກປ້ອງສັງຄົມ, ແລະ ຂົງເຂດວຽກງານຕົ້ນຕໍໃນການຈັດຕັ້ງປະຕິບັດໂຄງການປົກປ້ອງສັງຄົມ.

ເພື່ອຈັດຕັ້ງປະຕິບັດບັນດາຄຳໝັ້ນສັນຍາດັ່ງກ່າວໃຫ້ປະກົດຜົນເປັນຈິງ, ອົງການແຮງງານສາກົນ ໄດ້ສ້າງຊຸດເຄື່ອງມືໃນການຝຶກອົບຮົມການປົກປ້ອງສັງຄົມຂຶ້ນມາ ເພື່ອຊ່ວຍຜູ້ເຂົ້າຮ່ວມທີ່ຈະເປັນຄູຝຶກໃນອະນາຄົດ ໃນການອຳນວຍຄວາມສະດວກຝຶກອົບຮົມໃຫ້ແກ່ພາກສ່ວນກ່ຽວຂ້ອງ ແລະ ຄູ່ຮ່ວມງານທ້ອງຖິ່ນຢູ່ພາຍໃນແຂວງໃນຫົວຂໍ້ການອອກແບບ ແລະ ການຈັດຕັ້ງປະຕິບັດການປົກປ້ອງສັງຄົມ. ເຄື່ອງມືດັ່ງກ່າວໄດ້ມີການທົດສອບຢູ່ກອງປະຊຸມທີ່ຈັດຂຶ້ນຢູ່ເມືອງວັງວຽງໃນລະຫວ່າງວັນທີ 13-17 ມິຖຸນາ 2022, ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 26 ຄົນ ຈາກກະຊວງແຮງງານ ແລະ ສະຫວັດດີການສັງຄົມ ລວມທັງ ອົງການປະກັນສັງຄົມແຫ່ງຊາດ; ຫ້ອງການປະກັນສຸຂະພາບແຫ່ງຊາດ; ອົງການ UNICEF; Oxfam; ແລະ ອົງການຈັດຕັ້ງທາງສັງຄົມອື່ນໆ – ໃນກອງປະຊຸມດັ່ງກ່າວຜູ້ເຂົ້າຮ່ວມໄດ້ຝຶກອົບຮົມໃນການນຳໃຊ້ເຄື່ອງມືດັ່ງກ່າວ.

# ບົດກ່າວຂອບໃຈ

ຄູ່ມືຝຶກອົບຮົມຄູຝຶກການປົກປ້ອງສັງຄົມສຳລັບສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ຮັບການພັດທະນາຂຶ້ນໂດຍ ທ່ານ ອໍຣາ ສີວິລາ ທີ່ປຶກສາ ແລະ ຜູ້ນຳພາໃນການອຳນວຍຄວາມສະດວກການຝຶກອົບຮົມໃນກອງປະຊຸມທີ່ວັງວຽງ.

ອົງການແຮງງານສາກົນ (ILO) ໂດຍສະເພາະແມ່ນ ທ່ານນາງ ເລິບລິນ ດີ ຫົວໜ້າໂຄງການ ປົກປ້ອງສັງຄົມ, ທ່ານ ທອງເຫຼັກ ຊົ່ງ ຜູ້ປະສານງານໂຄງການ, ທ່ານ ນູໂນ ກັນທາ ຜູ້ຊ່ຽວຊານອາວຸໂສດ້ານການປົກປ້ອງສັງຄົມ; ແລະ ທ່ານນາງ ເຂັມພອນ ເຜົ່າຄຳແກ້ວ ອະດີດຜູ້ປະສານງານອົງການ ILO ປະຈຳ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ຊີ້ນຳລວມ ແລະ ສະໜັບສະໜູນດ້ານເຕັກນິກວິຊາການ. ນອກຈາກນັ້ນກໍໄດ້ຮັບການປະກອບຄຳຄິດເຫັນອັນມີປະໂຫຍດ ຈາກ ທ່ານນາງ ມາຣຽນ ອັບດູ ຫົວໜ້າພະແນກນະໂຍບາຍສັງຄົມ, ອົງການ UNICEF, ແລະ ທ່ານ ວິໄລພົງ ສີສົມວັງ, ຫົວໜ້າກົມແຜນການ ແລະ ການຮ່ວມມືສາກົນ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ.

ຄູ່ມືການຝຶກອົບຮົມນີ້ໄດ້ຖືກພັດທະນາພາຍໃຕ້ກອບແຜນງານຮ່ວມມືຂອງອົງການສະຫະປະຊາຊາດ. ຂໍສະແດງຄວາມຂອບໃຈມາຍັງອົງການສະຫະປະຊາຊາດ ໃນການສະໜອງທຶນຮອນ ໂດຍຜ່ານກອງທຶນຮ່ວມມືເພື່ອບັນລຸເປົ້າໝາຍການພັດທະນາແບບຍືນຍົງ ແລະ ຂໍສະແດງຄວາມຂອບໃຈມາຍັງລັດຖະບານ ອົດສະຕາລີທີ່ໃຫ້ການສະໜັບສະໜູນຊ່ວຍເຫຼືອ.

# ກ່ຽວກັບຄູ່ມືການຝຶກອົບຮົມ

ຄູ່ມືການຝຶກອົບຮົມນີ້ ປະກອບມີສາມພາກ:

1. **ຄູ່ມືການຝຶກອົບຮົມ** ເຊິ່ງເປັນບົດແນະນຳໃນການດຳເນີນກອງປະຊຸມຝຶກອົບຮົມກ່ຽວກັບການປົກປ້ອງສັງຄົມ. ຄູ່ມືນີ້ປະກອບດ້ວຍເຄື່ອງມືການອຳນວຍຄວາມສະດວກ, ເຕັກນິກ ແລະ ຄຳແນະນຳ ພ້ອມທັງເອກະສານທີ່ຈະແຈກຢາຍໃຫ້ຜູ້ເຂົ້າຮ່ວມ. ເຄື່ອງມືນີ້ໃຊ້ຄູ່ກັບຊຸດການຮຽນແລະບົດນຳສະເໜີພາວເວີພອຍ.
2. **ຊຸດການຮຽນ** ປະກອບມີຂໍ້ມູນພື້ນຖານກ່ຽວກັບການປົກປ້ອງສັງຄົມ, ເພື່ອຊ່ວຍຜູ້ອຳນວຍຄວາມສະດວກໃນການບັນຍາຍ ແລະ ການສົນທະນາ. ຊຸດການຮຽນນີ້ແມ່ນສຳລັບຄູຝຶກ, ແຕ່ສາມາດແຈກຢາຍໃຫ້ຜູ້ເຂົ້າຮ່ວມໄດ້ພາຍຫຼັງການຝຶກອົບຮົມສຳເລັດ.
3. **ບົດສະເໜີພາວເວີພອຍ**, ຄູຝຶກສາມາດນຳໄປດັດປັບ ຫຼື ປັບປຸງໃຫ້ເຂົ້າກັບສະພາບຈຸດພິເສດໃນເວລາຝຶກອົບຮົມ

ເອກະສານນີ້ປະກອບດ້ວຍຄູ່ມືຝຶກອົບຮົມ ແລະ ຊຸດການຮຽນ

ຄູ່ມືການຝຶກອົບຮົມສະບັບນີ້ ໄດ້ຖືກອອກແບບມາສຳລັບພະນັກງານພາກລັດ, ໂດຍສະເພາະແມ່ນກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ອົງການປະກັນສັງຄົມແຫ່ງຊາດ, ແລະ ຫ້ອງການປະກັນສຸຂະພາບແຫ່ງຊາດ, ລວມທັງສະຖາບັນການສຶກສາ, ອົງການຈັດຕັ້ງທາງສັງຄົມ, ແລະ ຄູ່ຮ່ວມພັດທະນາ ສຳລັບກິດຈະກຳການສ້າງຄວາມອາດສາມາດ ແລະ ການໂຄສະນາຂົນຂວາຍ. ຄູ່ມືນີ້ໄດ້ຖືກອອກແບບສຳລັບຜູ້ທີ່ໄດ້ຜ່ານການຝຶກອົບຮົມເພື່ອ:

- ໃຫ້ເຂົ້າໃຈວ່າການປົກປ້ອງສັງຄົມແມ່ນຫຍັງ ແລະ ໃຫ້ມີຄວາມຄຸ້ນເຄີຍກັບແນວຄວາມຄິດຫຼັກທີ່ກ່ຽວຂ້ອງກັບການປົກປ້ອງສັງຄົມ
- ຮຽນຮູ້ກ່ຽວກັບວິທີການອອກແບບ ແລະ ຈັດຕັ້ງປະຕິບັດແຜນງານປົກປ້ອງສັງຄົມ
- ໃຫ້ຄຸ້ນເຄີຍກັບເຄື່ອງມືປົກປ້ອງສັງຄົມທີ່ສຳຄັນ
- ເຂົ້າໃຈວິທີການດຳເນີນງານໃຫ້ເຂົ້າກັນເປັນລະບົບ
- ຮຽນຮູ້ກ່ຽວກັບແນວຄວາມຄິດອັນເປັນພື້ນຖານໃນການອອກແບບແຜນງານປົກປ້ອງສັງຄົມ
- ເສີມຂະຫຍາຍທັກສະ ແລະ ຄວາມໝັ້ນໃຈໃນການອຳນວຍຄວາມສະດວກໃຫ້ແກ່ຄູຝຶກທີ່ຈະໄປຝຶກໃຫ້ຄົນອື່ນຕໍ່.

ຄູ່ມືການຝຶກອົບຮົມນີ້ ປະກອບມີສາມຫຼັກສູດ: ຫຼັກສູດ 1 ເປັນບົດຮຽນພື້ນຖານກ່ຽວກັບການປົກປ້ອງສັງຄົມ. ຫຼັກສູດ 2 ແມ່ນກ່ຽວກັບກອບການປົກປ້ອງສັງຄົມແຫ່ງຊາດຢູ່ ສປປ ລາວ. ຫຼັກສູດ 3 ແມ່ນບົດສຳລັບຝຶກອົບຮົມຜູ້ທີ່ຈະເປັນຄູຝຶກໃນອານາຄົດ ເພື່ອເສີມຂະຫຍາຍທັກສະຂອງຜູ້ເຂົ້າຮ່ວມ ແລະ ຄວາມໝັ້ນໃຈໃນການອຳນວຍຄວາມສະດວກ.

# ກຸ່ມເປົ້າໝາຍນຳໃຊ້ເຄື່ອງມື

ຄູ່ມືນີ້ຖືກອອກແບບມາສຳລັບກຸ່ມເປົ້າໝາຍຫຼັກດັ່ງຕໍ່ໄປນີ້: ພະນັກງານ-ລັດຖະກອນ ທັງໃນຂັ້ນສູນກາງ ແລະ ຂັ້ນແຂວງ; ອົງການຈັດຕັ້ງທາງສັງຄົມ, ລວມທັງອົງການຈັດຕັ້ງທີ່ຢູ່ໃນເຄືອຂ່າຍສະມາຊິກ; ແລະ ຄູ່ຮ່ວມພັດທະນາ. ຄູຝຶກສາມາດໃຫ້ການຝຶກອົບຮົມຢ່າງຕໍ່ເນື່ອງ, ບໍ່ຕໍ່ເນື່ອງ, ເຊັ່ນ: ຈັດເປັນຫົວຂໍ້ (ຕົວຢ່າງ, ຫົວຂໍ້ລະສອງຊົ່ວໂມງຫຼືສາມຊົ່ວໂມງ), ຫຼື ການຝຶກອົບຮົມແບບຕໍ່ເນື່ອງ ເຊັ່ນ ການຝຶກອົບຮົມຫຼາຍມື້ຕິດຕໍ່ກັນ

ຂ້າງລຸ່ມນີ້ແມ່ນກຸ່ມເປົ້າໝາຍຫຼັກ ແລະ ວິທີການທີ່ຄູຝຶກສາມາດນຳໃຊ້ຄູ່ມືການຝຶກອົບຮົມ (ໂດຍການດັດປັບ):

| ກຸ່ມເປົ້າໝາຍນຳໃຊ້ເຄື່ອງມື | ຈຸດປະສົງ/ການນຳໃຊ້ຄູ່ມືຝຶກອົບຮົມ | ການອອກແບບຊຸດຝຶກອົບຮົມ |
|---|---|---|
| **ພາກລັດ** | ▶ ຝຶກອົບຮົມອຳນາດການປົກຄອງແຂວງໃນການວາງແຜນເພື່ອປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ແລະ ລະບົບປົກປ້ອງສັງຄົມ. | ການສົນທະນາດ້ານວິຊາການເພີ່ມເຕີມໂດຍນຳໃຊ້ຊຸດການຮຽນຈາກຫຼັກສູດທີ 1–2;<br>ການຝຶກອົບຮົມຢ່າງຕໍ່ເນື່ອງ, ບໍ່ຕໍ່ເນື່ອງ ໃນໄລຍະ 1-2 ມື້ |
| **ອົງການຈັດຕັ້ງສັງຄົມ** | ▶ ດັດປັບໃຫ້ເຂົ້າກັບການຝຶກອົບຮົມໃນທ້ອງຖິ່ນ / ບ້ານ / ຊຸມຊົນຂອງພວກເຂົາ<br>▶ ສ້າງຄວາມເຂົ້າໃຈຕໍ່ກັບຄູ່ຮ່ວມງານອົງການຈັດຕັ້ງສາກົນ / ຜູ້ປະຕິບັດງານຕົວຈິງໃນທ້ອງຖິ່ນ<br>▶ ອອກແບບການໂຄສະນາປູກຈິດສຳນຶກກ່ຽວກັບສິດທິ ຫຼື ລະບົບໃດໜຶ່ງທີ່ເຫັນວ່າມີຄວາມຈຳເປັນຢູ່ໃນທ້ອງຖິ່ນຂອງຕົນ | ການຝຶກອົບຮົມຕິດຕໍ່ກັນຫຼາຍມື້; ການຝຶກອົບຮົມແບບນີ້ສາມາດອຳນວຍຄວາມສະດວກໃຫ້ແກ່ ການສ້າງທີມເນື່ອງຈາກມັນໃຫ້ເວລາຜູ້ເຂົ້າຮ່ວມໄດ້ແລກປ່ຽນຄວາມຄິດເຫັນກ່ຽວກັບການຝຶກອົບຮົມໃນແຕ່ລະພາກ. ວິທີນີ້ສາມາດຊ່ວຍໃຫ້ຜູ້ເຂົ້າຮ່ວມມີໂອກາດໃນການາງໂອກາດໃນການສະຫນັບສະຫນູນເຊິ່ງກັນແລະກັນ ພ້ອມນັ້ນກໍເປັນການເຕີບໂຕ ແລະ ການພັດທະນາຜູ້ເຂົ້າຮ່ວມເອງ |
| **ຄູ່ຮ່ວມພັດທະນາ** | ▶ ນຳໃຊ້ສຳລັບກິດຈະກຳການສ້າງຄວາມອາດສາມາດ ເຊິ່ງເປັນສ່ວນໜຶ່ງຂອງການອອກແບບ ຫຼື ການປະຕິບັດນະໂຍບາຍ | ສາມາດເປັນການຝຶກອົບຮົມແບບບໍ່ຕໍ່ເນື່ອງ ຫຼື ຫຼາຍມື້ |




# ຄູ່ມື
# ຝຶກອົບຮົມ
# ການປົກປ້ອງສັງຄົມ

# ▶ ພາບລວມຕາຕະລາງການຝຶກອົບຮົມໃນແຕ່ລະພາກ

ຫຼັກສູດ ແລະ ພາກຕ່າງໆໄດ້ສະແດງຢູ່ລຸ່ມນີ້.

| | | | |
|---|---|---|---|
| **ພາກນຳສະເໜີ** | | | |
| **35 ນາທີ** | 10 ນາທີ | ການທຳຄວາມຮູ້ຈັກກັນ | ກິດຈະກຳ1,ເອກະສານ1 |
| | 25 ນາທີ | ກົດລະບຽບ ແລະ ຄວາມຄາດຫວັງ | ກິດຈະກຳ 2 |
| **ຫຼັກສູດ1: ການແນະນຳເຂົ້າສູ່ການປົກປ້ອງສັງຄົມ** | | | |
| **60 ນາທີ** | **ພາກທີ 1: ຄວາມສ່ຽງ ແລະ ກົນໄກການຮັບມື/ ແນວທາງແກ້ໄຂບັນຫາຢູ່ໃນຊຸມຊົນ**<br>ພາກນີ້ຈະໄດ້ຄົ້ນຄວ້າຄຳຖາມ ເປັນຫຍັງການປົກປ້ອງສັງຄົມຈຶ່ງມີຄວາມສຳຄັນຕໍ່ ປະຊາຊົນລາວ | | |
| | 60 ນາທີ | ແຜນວາດຄວາມສ່ຽງ ແລະ ວິທີການແກ້ໄຂບັນຫາຢູ່ໃນຊຸມຊົນ | ກິດຈະກຳ 3; ເອກະສານ 2 |
| **40 ນາທີ** | **ພາກທີ 2: ແນວຄວາມຄິດພື້ນຖານ ແລະ ຄວາມເປັນມາຂອງການປົກປ້ອງສັງຄົມ**<br>▶ ຄົ້ນຄວ້າວິທີການປົກປ້ອງສັງຄົມທີ່ສາມາດຊ່ວຍພວກເຮົາຕອບສະໜອງຄວາມຕ້ອງການຂອງ ປະຊາຊົນລາວໄດ້<br>▶ ຄົ້ນຄວ້າຄວາມໝາຍຂອງຄຳວ່າການປົກປ້ອງສັງຄົມ<br>▶ ຄົ້ນຄວ້າຄວາມໝາຍຂອງວິທີການວົງຈອນຊີວິດຕໍ່ກັບການປົກປ້ອງສັງຄົມ | | |
| | 30 ນາທີ | ການນຳສະເໜີຫົວຂໍ້:<br>▶ ການປົກປ້ອງສັງຄົມ<br>▶ ມາດຕະຖານສາກົນຕໍ່ກັບການປົກປ້ອງສັງຄົມຂັ້ນພື້ນຖານ<br>▶ ວິທີການຂະຫຍາຍລະບົບປົກປ້ອງສັງຄົມແບບ "ຂັ້ນໄດ" ແມ່ນຫຍັງ<br>▶ ການປົກປ້ອງສັງຄົມຢູ່ໃນ ເປົ້າໝາຍພັດທະນາແບບຍືນຍົງ (SDGs) | |
| | 10 ນາທີ | ຄຳສັບ ແລະ ຄວາມໝາຍ | ກິດຈະກຳ 4 |

| | | | |
|---|---|---|---|
| **65 ນາທີ** | **ພາກທີ 3: ລະບົບປົກປ້ອງສັງຄົມທີ່ມີ ຢູ່ ສປປ ລາວ**<br><br>ພາກນີ້ມີເປົ້າໝາຍລິເລີ່ມສ້າງຮູບພາບຄວາມຕ້ອງການການປົກປ້ອງສັງຄົມຂອງປະເທດ. | | |
| | 20 ນາທີ | ການສ້າງຮູບພາບຂອງການປົກປ້ອງ ສັງຄົມຢູ່ ສປປ ລາວ | ກິດຈະກຳ 5, ເອກະສານ 3 |
| | 30ນາທີ | ລະບົບປົກປ້ອງສັງຄົມຢູ່ລາວ (ອີງຕາມຜົນໄດ້ຮັບຂອງ ABND ແລະ ຖານຂໍ້ມູນການປົກປ້ອງສັງຄົມ) | |
| | 15 ນາທີ | ໃຜຢາກເປັນເສດຖີແດ່? | ກິດຈະກຳ 6 |
| **45 ນາທີ** | **ພາກທີ 4: ພາລະບົດບາດຂອງການປົກປ້ອງສັງຄົມ**<br>ພາກນີ້ມີເປົ້າໝາຍຊ່ວຍໃຫ້ຜູ້ເຂົ້າຮ່ວມເຂົ້າໃຈວ່າເປັນຫຍັງການປົກປ້ອງສັງຄົມຈຶ່ງມີ ຄວາມສຳຄັນ. | | |
| | 15 ນາທີ | ຄວາມເຊື່ອທີ່ຜິດ ຫລື ຄວາມຈິງ | ກິດຈະກຳ 7 |
| | 30 ນາທີ | ກໍລະນີສຶກສາ:<br>ການອຸດໜູນເງິນສົດແກ່ເດັກ ຢູ່ປະເທດໄທ | |
| **120 ນາທີ** | **ພາກທີ 5. ວິທີການກຳຫນົດເປົ້າຫມາຍການປົກປ້ອງສັງຄົມ**<br>ຮຽນຮູ້ກ່ຽວກັບອົງປະກອບຫລັກຂອງການປົກປ້ອງສັງຄົມ,ໂດຍສະເພາະ ແມ່ນການອຸດໜູນເງິນ | | |
| | 60 ນາທີ | ຄວາມເຂົ້າໃຈຕໍ່ກັບຄວາມສັບຊ້ອນຂອງການ ກຳຫນົດເປົ້າລຫມາຍ | ກິດຈະກຳ8;<br>ເອກະສານ 4 |
| | 30 ນາທີ | ການບັນຍາຍກ່ຽວກັບວິທີການ ກຳນົດກຸ່ມເປົ້າ ໝາຍ ແລະ ກໍລະນີສຶກສາກ່ຽວກັບ ເງິນບຳນານທາງສັງຄົມສຳລັບຜູ້ສູງອາຍຸ ທີ່ທຸກຍາກຂາດເຂີນ ຢູ່ຟີລິບປິນ | |
| | 30ນາທີ | ການປົກປ້ອງສັງຄົມແບບກຳນົດເປົ້າໝາຍ | ກິດຈະກຳ 9 |

| | | | |
|---|---|---|---|
| **60 ນາທີ** | **ພາກທີ 6: ປະເພດຂອງການປົກປ້ອງສັງຄົມ** | | |
| | 30 ນາທີ | ການອຸດໜູນເງິນໂດຍມີເງື່ອນໄຂ ຫຼື ບໍ່ມີເງື່ອນໄຂ | ກິດຈະກຳ 10 |
| | 30 ນາທີ | ກໍລະນີສຶກສາ:<br>▶ ເງິນອຸດໜູນແມ່ ແລະ ເດັກ (MECG);<br>▶ ການໃຫ້ອຸດໜູນເງິນສົດເພື່ອການສຶກສາ ແບບມີເງື່ອນໄຂ (CCTE) | |
| **30 ນາທີ** | **ພາກທີ 7: ການສັງລວມຄວາມເຂົ້າໃຈຕໍ່ການປົກປ້ອງສັງຄົມ** | | |
| | 30 ນາທີ | "ລະແວງສົງໄສ" ແລະ "ຜູ້ທີ່ເຊື່ອ" | ກິດຈະກຳ11 |

**30 ນາທີ "ລະແວງສົງໄສ" ແລະ "ຜູ້ທີ່ເຊື່ອ" ກິດຈະກຳ11**

| | | | |
|---|---|---|---|
| **75 ນາທີ** | **ພາກທີ 1: ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ**<br>ຮຽນຮູ້ກ່ຽວກັບຍຸດທະສາດການປົກປ້ອງສັງຄົມແຫ່ງຊາດຂອງ ສປປ ລາວ | | |
| | 45 ນາທີ | ການສ້າງແຜນວາດຍຸດທະສາດ ການປົກປ້ອງສັງຄົມແຫ່ງຊາດກັບການປົກປ້ອງສັງຄົມທີ່ມີຢູ່ພາຍໃນແຂວງ | ກິດຈະກຳ12 |
| | 30 ນາທີ | ບົດນຳສະເໜີ: ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ(ພາບລວມ) | |

| | | | |
|---|---|---|---|
| **60 ນາທີ** | **ພາກທີ 2: ການລົງທຶນໃສ່ລະບົບປົກປ້ອງສັງຄົມ**<br>ບົດຮຽນດ້ານທາງເລືອກໃນການລົງທຶນໃສ່ລະບົບປົກປ້ອງສັງຄົມຢູ່ປະເທດອື່ນໆ, ພ້ອມດ້ວຍຕົວຢ່າງ. | | |
| | 30 ນາທີ | ການບັນຍາຍການລົງທຶນໃສ່ລະບົບປົກປ້ອງສັງຄົມ | |
| | 30 ນາທີ | ສາມ “A”: ການຂະຫຍາຍ ຂອບເຂດງົບປະມານ | ກິດຈະກຳ13, ເອກະສານ 5 |
| **30 ນາທີ** | **ພາກທີ 3: ບາດກ້າວຕໍ່ໄປຂອງຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ (NSPS)** | | |
| | 30 ນາທີ | ການຈັດຕັ້ງປະຕິບັດຍຸດທະສາດ ການປົກປ້ອງສັງຄົມຢູ່ຂັ້ນແຂວງ | ກິດຈະກຳ 14 |

## ຫຼັກສູດ 3 : ການອຳນວຍຄວາມສະດວກ ແລະ ກະກະກຽມການຝຶກອົບຮົມ

| | |
|---|---|
| **30 ນາທີ** | **ພາກທີ: ພາລະບົດບາດຂອງຜູ້ອຳນວຍຄວາມສະດວກ** |
| **30 ນາທີ** | **ພາກທີ 2: ທັກສະ ແລະ ເຕັກນິກໃນການອຳນວຍຄວາມສະດວກໃນການຝຶກອົບຮົມ** |
| **45 ນາທີ** | **ພາກທີ 3: ສິ່ງທ້າທາຍທີ່ຜູ້ອຳນວຍຄວາມສະດວກພົບພໍ້** |
| **90 ນາທີ** | **ພາກທີ 4: ການກະກຽມ ແລະ ການວາງແຜນ** |

## ການປະເມີນການຝຶກອົບຮົມ

ການປະເມີນການຝຶກອົບຮົມແມ່ນພາກຫນຶ່ງທີ່ຂາດບໍ່ໄດ້ໃນການຝຶກອົບຮົມ ເພື່ອໃຫ້ການຝຶກອົບຮົມປະສົບຜົນສຳເລັດ. ການປະເມີນກ່ອນການຝຶກອົບຮົມ (ເອກະສານຊ້ອນທ້າຍ I) ສາມາດເຮັດກ່ອນ ຫຼື ເຮັດໃນຕອນເລີ່ມຕົ້ນຂອງການຝຶກອົບຮົມ. ມັນຈະຊ່ວຍໃຫ້ຄູຝຶກເຂົ້າໃຈລະດັບຄວາມຮູ້ຂອງຜູ້ເຂົ້າຮ່ວມ ແລະ ເຂົ້າໃຈເຖິງສິ່ງທີ່ເຂົາເຈົ້າຄາດຫວັງຈາກການຝຶກອົບຮົມ, ຂໍ້ມູນເຫຼົ່ານີ້ຈະຊ່ວຍເຂົ້າໃນການວາງແຜນ ແລະ ການຕັດສິນໃຈກ່ຽວກັບວາລະແລະເນື້ອໃນຂອງການຝຶກອົບຮົມ. ຄຽງຄູ່ກັນນັ້ນ, ການປະເມີນຜົນຫຼັງການຝຶກອົບຮົມ (ເອກະສານຊ້ອນທ້າຍ II) ໄດ້ວັດແທກປະສິດທິຜົນຂອງການຝຶກອົບຮົມຕໍ່ກັບການປັບປຸງຄວາມຮູ້ຂອງຜູ້ເຂົ້າຮ່ວມ. ຍິ່ງໄປກວ່ານັ້ນ, ມັນຍັງຊ່ວຍໃຫ້ຄູຝຶກປັບປຸງ ແລະ ວາງແຜນສຳລັບການຝຶກອົບຮົມໃນອະນາຄົດ ໂດຍການປະເມີນສິ່ງດຳເນີນໄປໄດ້ດີ ແລະ ສິ່ງທີ່ດຳເນີນໄປບໍ່ໄດ້ດີ.

ປົກກະຕິແລ້ວການປະເມີນກ່ອນການຝຶກອົບຮົມແມ່ນຕ້ອງໄດ້ເຮັດຫນຶ່ງເດືອນກ່ອນການຝຶກອົບຮົມ, ແຕ່ການປະເມີນຜົນຫລັງການຝຶກອົບຮົມຈະໄດ້ເຮັດທັນທີຫຼັງຈາກການຝຶກອົບຮົມພາກສຸດທ້າຍ. ທ່ານສາມາດນຳໃຊ້ເຄື່ອງມືເຊັ່ນ ແບບຟອມກູໂກ (Google Forms) ຫຼື ການສຳຫຼວດມັງກີ (Survey Monkey) ເຂົ້າໃນການເກັບກຳຂໍ້ມູນ ແລະ ການວິເຄາະຂໍ້ມູນທີ່ມີປະສິດທິພາບ,.

## ລາຍການກວດສອບກ່ອນການຝຶກອົບຮົມ

ການຝຶກອົບຮົມທີ່ປະສົບຜົນສຳເລັດຕ້ອງໄດ້ໃຊ້ເວລາຫຼາຍໃນການກະກຽມ ແລະ ວາງແຜນ. ລາຍການກວດສອບການຝຶກອົບຮົມ (ເອກະສານຊ້ອນທ້າຍ III) ໄດ້ລະບຸເອກະສານທັງໝົດທີ່ຈຳເປັນຕ້ອງໃຊ້ໃນແຕ່ລະພາກ. ນອກນັ້ນກໍຈະຊ່ວຍໃຫ້ຄູຝຶກຈື່ລາຍລະອຽດໃນການດຳເນີນການຝຶກອົບຮົມໄດ້ຢ່າງຄ່ອງແຄ້ວ.

# ພາກສະເໜີ

## ▸ ກິດຈະກຳ 1: ການທຳຄວາມຮູ້ຈັກກັນ

| | |
|---|---|
| **ເວລາ:** | 10 ນາທີ |
| **ຈຸດປະສົງ** | ຜູ້ເຂົ້າຮ່ວມຍ່າງອ້ອມຫ້ອງເພື່ອທຳຄວາມຮູ້ຈັກຜູ້ເຂົ້າຮ່ວມຄົນອື່ນໆເພີ່ມເຕີມ |
| **ອຸປະກອນ** | ພິມເອກະສານແຈກຢາຍ 1( 1 ເອກະສານຕໍ່ຜູ້ເຂົ້າຮ່ວມໜຶ່ງຄົນ)<br>ບິກເພີດ ( 1 ກ້ານຕໍ່ຜູ້ເຂົ້າຮ່ວມໜຶ່ງຄົນ) |
| **ການກະກຽມ** | **1.** ຢາຍເອກະສານແຈກຢາຍ 1 ແລະ ບິກເພີດໃຫ້ຜູ້ເຂົ້າຮ່ວມແຕ່ລະຄົນ<br>**2.** ອະທິບາຍຈຸດປະສົງຂອງເກມ ແລະ ກົດລະບຽບໃນການຫລິ້ນເກມ |
| **ຂັ້ນຕອນ** | **1.** ບອກໃຫ້ຜູ້ເຂົ້າຮ່ວມຊອກຫາຜູ້ທີ່ມີຄຸນລັກສະນະຄືກັນແລະຂຽນຊື່ຂອງເຂົາເຈົ້າໃສ່ໃນຫ້ອງທີ່ຖືກກັນ.<br>**2.** ຜູ້ເຂົ້າຮ່ວມຕ້ອງໄດ້ເອົາລາຍເຊັນຈາກ 5 ແຖວທາງຕັ້ງ ແລະ ທາງຂວາງ ຫຼືແຖວຕັດກັນ.<br>**3.** ບອກຜູ້ເຂົ້າຮ່ວມໃຫ້ຮ້ອງ ບິງໂກ້ ເມື່ອເຂົາເຈົ້າໄດ້ 5 ແຖວ. |

### ບັນທຶກຂອງຜູ້ອຳນວຍຄວາມສະດວກ

ສະຫຼຸບກິດຈະກຳຫຼັງຈາກ 10 ນາທີ ເຖິງແມ່ນວ່າບໍ່ມີຜູ້ເຂົ້າຮ່ວມຄົນໃດຕື່ມໃສ່ໃນແຖວສຳເລັດ. ໃຫ້ເນັ້ນໜັກວ່າຄຸນລັກສະນະເຫຼົ່ານີ້ສ່ວນຫຼາຍແມ່ນກ່ຽວຂ້ອງກັບການປົກປ້ອງສັງຄົມ, ໂດຍສະເພາະແມ່ນຄວາມສ່ຽງຕໍ່ຊີວິດ, ສະຖານະການ, ແລະ ກົນໄກການຮັບມື/ແນວທາງແກ້ໄຂບັນຫາ.

## ▸ ເອກະສານແຈກຢາຍ 1: ການທຳຄວາມຮູ້ຈັກກັນ

# ເກມ ບິງໂກ

ຊອກຫາຄົນຢູ່ໃນຫ້ອງທີ່ຍອມຮັບວ່າມີຄຸນລັກສະນະເຫຼົ່ານີ້ ແລະ ຂຽນຊື່ຂອງເຂົາເຈົ້າໃສ່ໃນຫ້ອງ. ທ່ານໃດຕື່ມແຖວທາງຕັ້ງ, ແຖວທາງລຸ່ມ ຫລື ແຖວທາງຂວາງເຕັມໝົດ ແມ່ນຜູ້ນັ້ນຊະນະເກມ!

| | | | | |
|---|---|---|---|---|
| ມີລູກຢ່າງໜ່ອຍໜຶ່ງຄົນ | ຢືມເງິນເພື່ອຈ່າຍຄ່າໂຮງຮຽນ | ທັງເຮັດວຽກທັງເຂົ້າຮຽນວິທະຍາໄລ | ເປັນລູກຄົນດຽວ | ມີປະກັນສຸຂະພາບເອກະຊົນ |
| ບໍ່ເຄີຍໄປໂຮງໝໍ | ອາຍຸເທົ່າກັນກັບເຈົ້າ | ເປັນລູກຫລ້າ | ແຕ່ງງານ | ເປັນຜູ້ດຽວທີ່ຫາເງິນມາລ້ຽງຄອບຄົວ |
| ບໍ່ແຕ່ງງານ | ພິການ | ບໍ່ມີພາລະ | ອາໃສຢູ່ຄົນດຽວ | ມີສະມາຊິກຄອບຄົວຜູ້ໜຶ່ງເຂົ້ານອນໂຮງໝໍປີໜຶ່ງຜ່ານມາ |
| ມີສະມາຊິກຄອບຄົວຜູ້ໜຶ່ງເກີດອຸປະຕິເຫດໃນປີຜ່ານມາ | ເປັນລູກກົກ | ເຊົ່າເຮືອນຢູ່ | ພໍ່ແມ່ບໍ່ມີລູກຢູ່ນຳ | ມີວຽກເຮັດບໍ່ເຕັມເວລາ |
| ມີເຮືອນຢູ່ | ບໍ່ສະບາຍ 6 ເດືອນຜ່ານມາ | ອາໄສຢູ່ກັບພໍ່ແມ່ | ມີອ້າຍເອື້ອຍນ້ອງຫລາຍກວ່າ 4 ຄົນ | ເຂົ້າໂຮງຮຽນລັດ |

# ▸ ກິດຈະກໍາ 2: ກົດລະບຽບ ແລະ ຄວາມຄາດຫວັງ

| | |
|---|---|
| **ເວລາ:** | 25 ນາທີ |
| **ຈຸດປະສົງ** | ໃນຕອນເລີ່ມຕົ້ນຂອງມື້ທີ 1 ໃຫ້ຊີ້ແຈງ ແລະ ບັນທຶກສິ່ງທີ່ຜູ້ເຂົ້າຮ່ວມຄາດຫວັງຈາກການຝຶກອົບຮົມ ແລະ ສິ່ງທີ່ເຂົາເຈົ້າອາດຈະກັງວົນ. |
| **ອຸປະກອນ** | ▶ ເຈ້ຍແຜ່ນໃຫຍ່ 5 ແຜ່ນ<br>▶ ປາກກາເມີດ 4 ກ້ານ<br>▶ ສະກອດຕິດເຈ້ຍ |
| **ການກະກຽມ** | **1.** ຂຽນຈຸດປະສົງຂອງການຝຶກອົບຮົມໃສ່ເຈ້ຍແຜ່ນໃຫຍ່<br>**2.** ຕິດເຈ້ຍແຜ່ນໃຫຍ່ທີ່ຂຽນຈຸດປະສົງຂອງການຝຶກອົບຮົມ ແລະ ປະໄວ້ຕະຫລອດການຝຶກອົບຮົມ<br>**3.** ຕິດເຈ້ຍແຜ່ນໃຫຍ່ 1 ແຜ່ນໃສ່ຝາ ພ້ອມກັບຂຽນຫົວຂໍ້ "ກົດລະບຽບ"<br>**a.** ເນື້ອໃນ/ວິທີການ<br>**b.** ຜູ້ອໍານວຍຄວາມສະດວກການຝຶກອົບຮົມ / ຜູ້ບັນຍາຍ<br>**c.** ຜູ້ເຂົ້າຮ່ວມ |
| **ຂັ້ນຕອນ** | **1.** ແບ່ງຜູ້ເຂົ້າຮ່ວມອອກເປັນສາມກຸ່ມ<br>**2.** ຢາຍເຈ້ຍແຜ່ນໃຫຍ່ໃຫ້ແຕ່ລະກຸ່ມຕາມຫົວຂໍ້ເຊັ່ນ ເນື້ອໃນ/ວິທີການ, ຜູ້ອໍານວຍຄວາມສະດວກການຝຶກອົບຮົມ / ຜູ້ບັນຍາຍ ແລະ ຜູ້ເຂົ້າຮ່ວມ<br>**3.** ບອກຜູ້ເຂົ້າຮ່ວມຂຽນຄວາມຄາດຫວັງໃນການຝຶກອົບຮົມອີງຕາມຫົວຂໍ້ທີ່ເຂົາເຈົ້າໄດ້ຮັບ. ໃຫ້ເວລາ 5 ນາທີ<br>**4.** ຫລັງຈາກ 5 ນາທີ, ກຸ່ມຈະໄດ້ຍ້າຍໄປຫາເຈ້ຍແຜ່ນຕໍ່ໄປ. ເຂົາເຈົ້າຈະໄດ້ອ່ານສິ່ງທີ່ກຸ່ມຜ່ານມາໄດ້ຂຽນລົງ ແລະ ຕື່ມຄວາມຄາດຫວັງຂອງເຂົາເຈົ້າໃສ່. ເຂົາເຈົ້າອາດຈະເຫັນດີກັບສິ່ງທີ່ກຸ່ມຜ່ານມາຂຽນລົງ. ໃຊ້ເວລາ 5 ນາທີເຊັ່ນກັນ<br>**5.** ຂັ້ນຕອນນີ້ກໍເຮັດຄືເກົ່າເປັນເທື່ອທີສາມ ຈົນກວ່າໝົດທຸກກຸ່ມໄວ້ໝູນວຽນກັນຂຽນໃສ່ເຈ້ຍ ສາມແຜ່ນ. |

6. ຫລັງຈາກໜູນວຽນກັນສາມຄັ້ງແລ້ວ, ຜູ້ອຳນວຍຄວາມສະດວກຈະອ່ານສິ່ງທີ່ທາງກຸ່ມໄດ້ຂຽນ.ຜູ້ອຳນວຍຄວາມສະດວກຈະໄດ້ເນັ້ນໃຫ້ຜູ້ເຂົ້າຮ່ວມຊາບວ່າ ຄວາມຄາດຫວັງໃດທີ່ຈະໄດ້ບັນລຸ. ຈາກນັ້ນຜູ້ອຳນວຍຄວາມສະດວກຈະໄດ້ແຍກ ແລະ ສະຫລຸບສັງລວມບັນດາກົດລະບຽບທີ່ໄດ້ຂຽນມາໃສ່ໃນເຈ້ຍຕ່າງຫາກ " ກົດລະບຽບໃນການຝຶກອົບຮົມ"
7. ຕິດເຈ້ຍເຫລົ່ານັ້ນໄວ້ບ່ອນທີ່ທຸກຄົນສາມາດໄປເບິ່ງຄືນໄດ້ ແລະ ຖືເອົາເປັນບ່ອນອ້າງອີງໃນຕະຫຼອດການຝຶກອົບຮົມ

## ບັນທຶກຂອງຜູ້ອຳນວຍຄວາມສະດວກ

ນຳພາຜູ້ເຂົ້າຮ່ວມໃນເວລາໜູນວຽນຂຽນໃສ່ເຈ້ຍ. ຮັບປະກັນວ່າທຸກຄົນມີສ່ວນຮ່ວມ. ສິ່ງສຳຄັນກໍຄື ກົດລະບຽບຂອງການຝຶກອົບຮົມຕ້ອງມາຈາກຜູ້ເຂົ້າຮ່ວມເອງ ແລະ ໄດ້ຕົກລົງເຫັນດີນຳກັນ. ຍົກຕົວຢ່າງໃຫ້ຜູ້ເຂົ້າຮ່ວມ ຖ້າເຂົາເຈົ້າບໍ່ເຂົ້າໃຈ:

**ເນື້ອໃນ/ວິທີການ**

- ມ່ວນຊື່ນ ແລະ ມີການປະກອບສ່ວນ
- ໄດ້ມີເວລາພັກຜ່ອນພຽງພໍ
- ມີກິດຈະກຳສ້າງບັນຍາກາດຫລາຍ

**ຜູ້ອຳນວຍຄວາມສະດວກໃນການຝຶກອົບຮົມ**

- ມີຄວາມຮູ້
- ເວົ້າຈະແຈ້ງ
- ຫ້າວຫັນກະຕືລືລົ້ນ

**ຜູ້ເຂົ້າຮ່ວມ**

- ເວົ້າເທື່ອລະຄົນ
- ບໍ່ໃຊ້ໂທລະສັບມືຖືໃນເວລາຝຶກອົບຮົມ

# ຫຼັກສູດ 1: ພາກສະເໜີ ກ່ຽວກັບການປົກປ້ອງສັງຄົມ

## ▸ ພາກທີ 1: ຄວາມສ່ຽງ ແລະ ກົນໄກການຮັບມື/ວິທີການ ແກ້ໄຂບັນຫາຢູ່ໃນຊຸມຊົນ

## ▸ ກິດຈະກຳ 3: ແຜນວາດຄວາມສ່ຽງ ແລະ ວິທີການ ແກ້ໄຂບັນຫາຢູ່ໃນຊຸມຊົນ

| | |
|---|---|
| **ເວລາ:** | 60 ນາທີ |
| **ຈຸດປະສົງ** | ເພື່ອກຳນົດຄວາມຍາກລຳບາກ ແລະ ຄວາມສ່ຽງທີ່ປະຊາຊົນປະສົບພົບພໍ້ໃນຕົວຈິງ ແລະ ມາດຕະການໃນການຮັບມື/ ວິທີການແກ້ໄຂທີ່ເຂົາເຈົ້ານຳໃຊ້ |
| **ອຸປະກອນ** | ▶ ພິມເອກະສານແຈກຢາຍ 2 ( 1 ສະບັບຕໍ່ຜູ້ເຂົ້າຮ່ວມໜຶ່ງຄົນ)<br>▶ ເຈ້ຍແຜ່ນໃຫຍ່ 6 ແຜ່ນ<br>▶ ບິກເຟີດ 6 ກ້ານ<br>▶ ສະກັອດຕິດເຈ້ຍ |
| **ການກະກຽມ** | ບໍ່ມີ |
| **ຂັ້ນຕອນ** | 1. ບອກຜູ້ເຂົ້າຮ່ວມນັ່ງເປັນ 6 ກຸ່ມ<br>2. ຜູ້ເຂົ້າຮ່ວມແຕ່ລະຄົນຈະໄດ້ຮັບເອກະສານແຈກຢາຍ 2, ບົດເລື່ອງຈຳລອງພາບ ຂອງຜູ້ຊາຍທີ່ມີລູກ 4 ຄົນ<br>3. ຜູ້ອຳນວຍຄວາມສະດວກກຳນົດຄວາມສ່ຽງຈຳນວນໜຶ່ງທີ່ຄອບຄົວນີ້ປະສົບ ພົບພໍ້ຄື: ຄວາມທຸກຍາກ, ຄວາມຕ້ອງການຮັກສາປິ່ນປົວສຸຂະພາບ, ຄວາມພິການ, ຄວາມຕ້ອງການ ການສຶກສາ ແລະ ເບິ່ງແຍງເດັກ, ຜົນຜະລິດຕົກຕໍ່າ. |

4. ຜູ້ເຂົ້າຮ່ວມແຕ່ລະຄົນໃຊ້ເວລາ 5 ນາທີ ເພື່ອສະທ້ອນເບິ່ງເຫດການທີ່ຄ້າຍຄື ກັນຈາກປະສົບການໃນການເຮັດວຽກ ແລະ ຈາກຊີວິດສ່ວນຕົວ.
5. ແຕ່ລະກຸ່ມຈະໄດ້ຮັບລັກສະນະຂອງຄອບຄົວດ້ອຍໂອກາດ. ນຳໃຊ້ເອກະສານ 2 ເພື່ອເປັນທິດທາງ, ແຕ່ລະກຸມມີເວລາ 45 ນາທີໃນການສ້າງບົດເລື່ອງຈຳລອງ ພາບຊີວິດຂອງຄອບຄົວດັ່ງກ່າວ ແລະ ສົນທະນາເຖິງຄວາມສ່ຽງສະເພາະທີ່ ເຂົາເຈົ້າພົບພໍ້. ພາຍໃນກຸ່ມຕ້ອງໄດ້ບັນທຶກຜົນການຄົ້ນຄວ້າໃສ່ເຈ້ຍແຜ່ນໃຫຍ່.

- ແບ່ງປະເພດຄອບຄົວດ້ອຍໂອກາດໃຫ້ແຕ່ລະກຸ່ມດັ່ງຕໍ່ໄປນີ້:
  **ກຸ່ມ 1:** ມີສະມາຊິກຄອບຄົວຜູ້ອອກແຮງງານປະສົບອຸປະຕິເຫດ
  **ກຸ່ມ 2:** ມີເດັກນ້ອຍເກີດໃໝ່, ລູກສາວອາຍຸ 6 ປີມີຄວາມພິການທາງສະໝອງ, ແລະ ລູກຊາຍອາຍຸ 12 ປີ
  **ກຸ່ມ 3:** ພໍ່ເປັນຊາວນາ, ເປັນຄົນຊົນເຜົ່າ
  **ກຸ່ມ 4:** ພໍ່ແມ່ທີ່ເປັນຜູ້ອອກແຮງງານ ໄດ້ຍ້າຍຖິ່ນຖານໄປເຮັດວຽກບ່ອນອື່ນ
  **ກຸ່ມ 5:** ຄອບຄົວທີ່ຫາກໍ່ສູນເສຍຜູ້ທີ່ເປັນເສົາຫລັກຫາເງິນມາລ້ຽງຄອບຄົວ
  **ກຸ່ມ 6:** ລູກສາວຢູ່ໃນໄວອອກແຮງງານ ອາໃສຢູ່ກັບພໍ່ແມ່ເຖົ້າແກ່ສອງຄົນ

- ໃຫ້ແຕ່ລະກຸ່ມກຳນົດຄຸນລັກສະນະຂອງຄອບຄົວ, ເຊັ່ນ ຈຳນວນສະມາຊິກ ຄອບຄົວ, ອາຍຸ, ຂົງເຂດວຽກເຮັດງານທຳ ແລະ ອື່ນໆ.ນອກຈາກກຳນົດຄວາມ ສ່ຽງສະເພາະແລ້ວ, ລັກສະນະຂອງຄອບຄົວດັ່ງກ່າວ ຕ້ອງເປັນຄອບຄົວຕາມ ປົກກະຕິມັກພົບເຫັນທົ່ວໄປຢູ່ໃນເຂດທ້ອງຖິ່ນຂອງຜູ້ເຂົ້າຮ່ວມ
- ໃຫ້ແຕ່ລະກຸ່ມກຳນົດ 5 ຄວາມສ່ຽງທີ່ຄອບຄົວປະສົບພົບພໍ້
- ໃຫ້ແຕ່ລະກຸ່ມສ້າງແຜນວາດກົນໄກການຮັບມືທີ່ທາງຄອບຄົວໄດ້ນຳໃຊ້ເພື່ອ ຮັບມືກັບຄວາມສ່ຽງຕ່າງໆ. ສິ່ງສຳຄັນ ແມ່ນໃຫ້ເລັ່ງໃສ່ກົນໄກການຮັບມື/ ວິທີການແກ້ໄຂບັນຫາຂອງຄອບຄົວເອງ ບໍ່ແມ່ນກິດຈະກຳຂອງພາກລັດ

6. ໃຫ້ແຕ່ລະກຸ່ມຂຶ້ນນຳສະເໜີຄຸນລັກສະນະຂອງຄອບຄົວຄອບ, ຄວາມສ່ຽງ ແລະ ກົນໄກການຮັບມື/ ແນວທາງແກ້ໄຂບັນຫາຂອງຄອບຄົວຕໍ່ຫ້ອງປະຊຸມ.
7. ຢູ່ຫ້ອງປະຊຸມ, ສົນທະນາຕາມຄຳຖາມດັ່ງລຸ່ມນີ້:
   a. ແມ່ຍິງ ແລະ ຜູ້ຊາຍມີຄວາມສ່ຽງ ແລະ ຄວາມຫຍຸ້ງຍາກ ແຕກຕ່າງກັນ ແນວໃດແດ່?
   b. ຄວາມແຕກຕ່າງຂອງຄວາມສ່ຽງ ແລະ ຄວາມຫຍຸ້ງຍາກໃນເວລາທີ່ພວກເຂົາ ເປັນຄົນໜຸ່ມ ແລະ ເປັນຄົນເຖົ້າ ມີຫຍັງແດ່?
   c. ສະພາບແວດລ້ອມທາງດ້ານສັງຄົມ, ເສດຖະກິດ ແລະ ການເມືອງມີຜົນ ກະທົບແນວໃດແດ່ຕໍ່ເລື່ອງລາວຊີວິດຂອງພວກເຂົາ?
   d. ແມ່ຍິງ ແລະ ຜູ້ຊາຍໄດ້ສ້າງຍຸດທະສາດອັນໃດແດ່ ເພື່ອຮັບມືກັບຄວາມ ຫຍຸ້ງຍາກທີ່ພວກເຂົາປະສົບພົບພໍ້?

# ເອກະສານແຈກຢາຍ 2: ແຜນວາດຄວາມສ່ຽງ ແລະ ວິທີການແກ້ໄຂຢູ່ໃນຊຸມຊົນ



ຊາຍຄົນໜຶ່ງອາໃສຢູ່ກັບເມຍ ແລະ ລູກ 4 ຄົນຢູ່ບ້ານແຫ່ງໜຶ່ງ. ລູກຂອງລາວອາຍຸ 3, 5, 9 ປີ ແລະ 12 ປີ. ລູກຫລ້າເປັນພິການ. ແມ່ຂອງຜູ້ຊາຍຄົນນີ້ກໍອາໃສຢູ່ກັບເຂົາເຈົ້າ. ນາງມີອາຍຸ 65 ປີ ແລະ ນາງຊ່ວຍເບິ່ງແຍງລູກ, ແຕ່ມັກເຈັບປ່ວຍຕະຫລອດ ແລະ ທົນທຸກທໍລະມານຫລາຍ. ແພດບ້ານ ແລະ ໝໍຕຳແຍຢູ່ພາຍໃນບ້ານ ບອກຊາຍຄົນນັ້ນວ່າ ແມ່ເຖົ້າ ແລະ ລູກຂອງລາວຕ້ອງໄປປິ່ນປົວຢູ່ໂຮງໝໍແຂວງ, ແຕ່ລາວບໍ່ມີເວລາ ຫຼື ບໍ່ມີເງິນທີ່ຈະພາໄປໂຮງໝໍ.

ໃນປີກາຍນີ້, ໄດ້ມີຝົນຕົກໜັກ ແລະ ນ້ຳຖ້ວມ ເຊິ່ງໄດ້ທຳລາຍຜົນລະປູກ. ຄອບຄົວບໍ່ມີລາຍຮັບ ແລະໃຊ້ເງິນທ້ອນທັງໝົດເພື່ອຊື້ອາຫານ.

ລູກສອງຄົນອາຍຸ 5 ປີ ແລະ 9 ປີ ເຂົ້າໂຮງຮຽນ, ແຕ່ລູກກົກອອກໂຮງຮຽນໄດ້ 3 ປີ ແລ້ວ. ພໍ່ແມ່ຫວັງວ່າຈະສົ່ງລູກທັງໝົດໄປຮຽນຢູ່ມະຫາວິທະຍາໄລ ເພື່ອໃຫ້ເຂົາເຈົ້າໄດ້ວຽກເຮັດງານທຳທີ່ດີ ແລະ ຫລຸດພົ້ນຈາກວົງຈອນຄວາມທຸກຍາກ.

ຊາຍຜູ້ທີ່ບໍ່ເຄີຍຮັບຮູ້ເຖິງເລື່ອງກອງທຶນປະກັນສຸຂະພາບ ທີ່ຈະໃຫ້ສິດພວກເຂົາໃນການປິ່ນປົວໂດຍບໍ່ໄດ້ເສຍຄ່າ ເມື່ອເວລາເຈັບເປັນ. ລາວໄດ້ຢືມເງິນຈາກອ້າຍຂອງລາວ ຜູ້ທີ່ເຮັດວຽກຢູ່ໃນເມືອງ ແລະ ຍັງຄິດຈະໄປກູ້ຢືມເພີ່ມເຕີມຈາກຜູ້ອອກເງິນກູ້ຢູ່ບ້ານ. ລາວຍັງໄດ້ວາງແຜນທີ່ຈະເຮັດສວນຊາ ແຕ່ບໍ່ຮູ້ວ່າຈະເລີ່ມຕົ້ນແນວໃດ ແລະ ຈະເອົາເງິນລົງທຶນມາຈາກໃສ.

#### ຄວາມສ່ຽງ

- ຄວາມທຸກຍາກ
- ຕ້ອງການ ການປິ່ນປົວຮັກສາສຸຂະພາບ
- ຄວາມພິການ
- ຕ້ອງການ ການສຶກສາ ແລະ ເບິ່ງແຍງລູກ
- ຜົນຜະລິດຕົກຕ່ຳ

#### ກົນໄກການຮັບມື/ແນວທາງແກ້ໄຂບັນຫາ

- ໃຊ້ເງິນທີ່ທ້ອນໄວ້
- ກູ້ເງິນຈາກພີ່ນ້ອງ
- ກູ້ເງິນຈາກກອງທຶນບ້ານ?
- ເລີ່ມຕົ້ນໃໝ່, ເຮັດວຽກທີ່ມີລາຍຮັບໃຫ້ຫລາຍຂຶ້ນ?



## บันທຶກຂອງຜູ້ອຳນວຍຄວາມສະດວກ

ບັນທຶກຄຳຕອບຂອງກຸ່ມ ແລະ ບັນທຶກການສັງເກດການ. ກະກຽມບົດສະຫຼຸບຂອງຄວາມຄ້າຍຄືກັນແລະຄວາມແຕກຕ່າງກັນ. ທ່ານຈະຕ້ອງໄດ້ໃຊ້ບົດບັນທຶກນີ້ໃນເວລາສົນທະນາກ່ຽວກັບຫົວຂໍ້ການປົກປ້ອງສັງຄົມ.

## ຈຸດຮຽນຮູ້

ຄວາມທຸກຍາກ ແລະ ຄວາມບໍ່ຫມັ້ນຄົງ ແມ່ນມີຫລາຍສາເຫດ, ແຕ່ສ່ວນຫລາຍແລ້ວແມ່ນພົວພັນກັບຊ່ວງໄລຍະເວລາຢູ່ໃນວົງຈອນຊີວິດຂອງບຸກຄົນ. ແຕ່ລະຄົນໄດ້ປະເຊີນກັບສິ່ງທ້າທາຍ ແລະ ຄວາມສ່ຽງຢູ່ໃນແຕ່ລະຊ່ວງໄລຍະເວລາຂອງຊີວິດຂອງພວກເຂົາ, ເຊິ່ງຍັງໄດ້ສົ່ງຜົນກະທົບຕໍ່ເຄືອຂ່າຍສັງຄົມໃນວົງກວ້າງ, ລວມທັງຄອບຄົວ, ຄົວເຮືອນ, ກຸ່ມພີ່ນ້ອງ, ແລະ ຊຸມຊົນຂອງພວກເຂົາ. ປະເພດຂອງສິ່ງທ້າທາຍທີ່ບຸກຄົນປະເຊີນຢູ່ນັ້ນໄດ້ເຮັດໃຫ້ພວກເຂົາມີຄວາມສ່ຽງຕໍ່ການຕົກຢູ່ໃນມາດຕະຖານການດຳລົງຊີວິດທີ່ແຕກຕ່າງກັນ ເນື່ອງຈາກຄົນໄດ້ຂ້າມຜ່ານເສັ້ນທາງຊີວິດ (Transform, 2017)

ນອກນັ້ນ, ແມ່ຍິງຍັງມີຄວາມສ່ຽງ ແລະ ຄວາມບອບບາງສະເພາະຕະຫລອດຊ່ວງໄລຍະເວລາຂອງຊີວິດ (ເຊັ່ນ: ຄວາມສ່ຽງດ້ານສຸຂະພາບທີ່ກ່ຽວຂ້ອງກັບການຖືພາ ແລະ ເກີດລູກ ແລະ ກິດຈະກຳທາງເພດ, ການເບິ່ງແຍງດູແລ ແລະ ຄວາມຮັບຜິດຊອບຕໍ່ວຽກໃນຄົວເຮືອນ, ການຈຳແນກທາງດ້ານກົດໝາຍ ແລະ ຢູ່ບ່ອນເຮັດວຽກ, ການເປັນແມ່ໝ້າຍ, ແລະ ອື່ນໆ)

### ຄວາມສ່ຽງຕະຫຼອດວົງຈອນຊີວິດ




**ແຫຼ່ງຂໍ້ມູນ:** Key Risks Across the Lifecycle, Development Pathways

ເພື່ອຫຼີກລ່ຽງການຕົກຢູ່ໃນຄວາມທຸກຍາກ, ບຸກຄົນ ຫຼື ກຸ່ມຄົນທີ່ມີຄວາມສ່ຽງແມ່ນໃຊ້ເວລາຫລາຍກັບຍຸດທະສາດການຮັບມື ເມື່ອພວກເຂົາພົບພໍ້ກັບອຸປະສັກສິ່ງທ້າທາຍຕ່າງໆ, ເຊິ່ງປົກກະຕິແລ້ວ ບໍ່ແມ່ນຍຸດທະສາດທາງການ ແລະ ໃນທາງລົບ. ຍຸດທະສາດເຫລົ່ານີ້ລວມມີ: ກູ້ຢືມເງິນ, ຫຼຸດຜ່ອນການບໍລິໂພກອາຫານທີ່ບໍ່ເປັນຫລັກ, ປິ່ນປົວສຸຂະພາບດ້ວຍຕົນ

## ພາກທີ 2: ແນວຄວາມຄິດພື້ນຖານ ແລະ ຄວາມເປັນມາຂອງການປົກປ້ອງສັງຄົມ

## ກິດຈະກຳທີ 4: ຄຳສັບ ແລະ ຄວາມໝາຍ

| | |
|---|---|
| **ເວລາ:** | 10 ນາທີ |
| **ຈຸດປະສົງ** | ເພື່ອອະທິບາຍແນວຄວາມຄິດໂດຍໃຫ້ມີສ່ວນຮ່ວມ, ບໍ່ແມ່ນລັກສະນະການບັນລະຍາຍ |
| **ອຸປະກອນ** | ບົດນຳສະເໜີຄຳສັບເປັນພາວເວີພອຍ ແລະ ຄຳນິຍາມການປົກປ້ອງສັງຄົມ |
| **ການກະກຽມ** | ບໍ່ມີ |
| **ຂັ້ນຕອນ** | 1. ແບ່ງຜູ້ເຂົ້າຮ່ວມອອກເປັນ 3 – 4 ກຸ່ມ ອີງຕາມບ່ອນນັ່ງ<br>2. ບອກຕາງໜ້າຂອງແຕ່ລະກຸ່ມເລືອກເອົາ 1-2 ຄຳສັບດັ່ງຕໍ່ໄປນີ້: |

| | | |
|---|---|---|
| **ການປະກັນສັງຄົມ** | **ປະກັນສຸຂະພາບ** | **ກອງທຶນແບບບໍ່ປະກອບທຶນສົມທົບ** |
| **ຄວາມທຸກຍາກ** | **ສະຫວັດດີການສັງຄົມ** | **ການປົກປ້ອງສັງຄົມຂັ້ນພື້ນຖານ** |
| **ແຮງງານນອກລະບົບ** | **ໂຄງການວຽກສາທາລະນະ** | **ກຸ່ມຄົນບອບບາງ ຫຼື ດ້ອຍໂອກາດ** |

3. ໃຫ້ແຕ່ລະກຸ່ມສົນທະນາເຖິງຄວາມໝາຍຂອງຄຳສັບ
4. ກຸ່ມທີ່ຕອບຖືກຕ້ອງ ຈະໄດ້ຮັບໜຶ່ງຄະແນນ. ຖ້າຄຳນິຍາມຜິດ, ໃຫ້ໂອກາດແກ່ກຸ່ມອື່ນຕອບ.
5. ສະແດງຄຳນິຍາມທີ່ແທ້ຈິງຂອງຄຳສັບ. ອະທິບາຍວ່າ ນີ້ແມ່ນຄຳນິຍາມຈາກຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ (NSPS)
6. ກຸ່ມທີ່ມີຄະແນນສູງສຸດ ແມ່ນກຸ່ມທີ່ຊະນະເກມນີ້.

## ບັນທຶກຂອງຜູ້ອຳນວຍຄວາມສະດວກ

ເນັ້ນໜັກໃສ່ຄຳຕອບຂອງຜູ້ເຂົ້າຮ່ວມທີ່ກົງກັບຄຳຕອບທີ່ຖືກຕ້ອງ.

## ບົດຮຽນ

**ຄຳສັບ ແລະ ຄຳນິຍາມການປົກປ້ອງສັງຄົມ:**

***ການປົກປ້ອງສັງຄົມ*** ເປັນຊຸດນະໂຍບາຍທີ່ຖືກອອກແບບມາເພື່ອຫຼຸດຜ່ອນ ແລະ ປ້ອງກັນຄວາມທຸກຍາກ, ຄວາມບອບບາງ ແລະ ການຖືກຈຳແນກຈາກສັງຄົມ ໃນຕະຫຼອດໄລຍະຂອງຮອບວຽນຊີວິດ.
ວາງນະໂຍບາຍເລົ່ານີ້ທັງໝົດໂດຍຜ່ານການປະສົມປະສານລະຫວ່າງ ກອງທຶນປະກອບເງິນສົມທົບ(ປະກັນສັງຄົມ ແລະ ປະກັນສຸຂະພາບ) ແລະ ບໍ່ປະກອບເງິນສົມທົບ ( ສະຫວັດດີການສັງຄົມ).

***ການປະກັນສັງຄົມ*** ໝາຍເຖິງ ການຮັບປະກັນໃຫ້ຜູ້ປະກັນຕົນ ແລະ ສະມາຊິກຄອບຄົວໄດ້ຮັບການອຸດໜູນຈາກກອງທຶນປະກັນສັງຄົມ ເພື່ອຄໍ້າປະກັນການດຳລົງຊີວິດຂັ້ນພື້ນຖານເມື່ອມີການປິ່ນປົວສຸຂະພາບ, ເກີດອຸປະຕິເຫດແຮງງານ  ຫຼືພະຍາດອາຊີບ, ອອກລູກ, ປ່ວຍການ, ເສຍກຳລັງແຮງງານ, ບຳນານ, ເສຍຊີວິດ, ອຸດໜູນສະມາຊິກຄອບຄົວ ແລະ ວ່າງງານ ຕາມເງື່ອນໄຂທີ່ໄດ້ກຳນົດໄວ້ແຕ່ລະກໍ ລະນີ ໂດຍແມ່ນລະບົບປະກອບທຶນສົມທົບຈາກຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານ.

***ສະຫວັດດີການສັງຄົມ*** ແມ່ນລະບົບການບໍລິການສັງຄົມ ເພື່ອປ້ອງກັນ, ແກ້ໄຂບັນຫາສັງຄົມ ແລະ ການພັດທະນາສັງຄົມ ລວມທັງການສົ່ງເສີມຄວາມໝັ້ນຄົງທາງສັງຄົມ ເພື່ອໃຫ້ປະຊາຊົນດຳລົງຊີວິດໃນສັງຄົມ ຕາມລະດັບມາດຕະຖານ ໂດຍຕອບສະໜອງການບໍລິການຕາມຄວາມຕ້ອງການຂັ້ນພື້ນຖານຂອງປະຊາຊົນ ໃຫ້ໄດ້ຮັບການພັດທະນາຄຸນນະພາບຊີວິດຢ່າງທົ່ວເຖິງ ແລະ ເປັນທຳລວມທັງດ້ານການສຶກສາທີ່ດີ, ການມີສຸຂະພາບດີ, ການມີທີ່ຢູ່ອາໃສ, ການມີວຽກເຮັດງານທຳ, ການມີລາຍໄດ້, ມີສະຫວັດດີການດ້ານແຮງງານ ແລະ ການມີຄວາມໝັ້ນຄົງທາງສັງຄົມ.

***ກຸ່ມດ້ອຍໂອກາດ*** ໝາຍເຖິງ ກຸ່ມທີ່ມີຄວາມສ່ຽງສະເພາະຈາກໄພຂົ່ມຂູ່ດ້ານສັງຄົມ, ເສດຖະກິດ, ການເມືອງ ຫຼື ອື່ນໆ.

***ຜູ້ອອກແຮງງານນອກລະບົບ*** ໝາຍເຖິງ ຜູ້ອອກແຮງງານທີ່ເຮັດວຽກແບບສ່ວນບຸກຄົນ.

***ການປະກັນສຸຂະພາບ*** ແມ່ນການຮັບປະກັນໃຫ້ຜູ້ເປັນສະມາຊິກໄດ້ເຂົ້າເຖິງການບໍລິການປິ່ນປົວສຸຂະພາບ ໂດຍນຳໃຊ້ທຶນສົມທົບທີ່ໄດ້ຈ່າຍລ່ວງໜ້າ ແລະ ງົບປະມານສົມທົບຂອງລັດ.

***ການອຸດໜູນແບບບໍ່ປະກອບທຶນສົມທົບ*** ແມ່ນການອຸດໜູນທີ່ຊ່ວຍເຫຼືອຜູ້ໄດ້ຮັບການອຸດໜູນ ໂດຍທີ່ບໍ່ຕ້ອງປະກອບທຶນສົມທົບ.

**ຄວາມທຸກຍາກ** ໝາຍເຖິງ ການຂາດປັດໃຈພື້ນຖານໃນການດໍາລົງຊີວິດປະຈໍາວັນ ເປັນຕົ້ນຂາດເຂີນສະບຽງອາຫານທີ່ບໍ່ສາມາດສະໜອງພະລັງງານ 2100 ກິໂລກາລໍລິດຕໍ່ຄົນຕໍ່ມື້, ຂາດເຂີນເຄື່ອງນຸ່ງຫົ່ມທີ່ຈໍາເປັນ, ບໍ່ມີທີ່ຢູ່ອາໄສຖາວອນ, ບໍ່ສາມາດໃຊ້ຈ່າຍໃນການປິ່ນປົວເວລາເຈັບເປັນພື້ນຖານ, ບໍ່ສາມາດໃຊ້ຈ່າຍເຂົ້າໃນການສຶກສາຂັ້ນພື້ນຖານ, ບໍ່ມີເງື່ອນໄຂ ເຂົ້າເຖິງຕາໜ່າງການບໍລິການດ້ານພື້ນຖານໂຄງລ່າງທີ່ຈໍາເປັນຂອງສັງຄົມ

**ໂຄງການວຽກສະທາລະນະ** ໝາຍເຖິງ ໂຄງການຍ່ອຍຂອງການປົກປ້ອງສັງຄົມ ຊຶ່ງໂດຍລວມແລ້ວ ແມ່ນກໍານົດເປັນວຽກລິເລີ່ມເພື່ອການພັດທະນາໂຄງລ່າງພື້ນຖານຂອງສາທາລະນະ ທີ່ມີການນໍາໃຊ້ແຮງງານຄົນ ໂດຍຕອບແທນຄ່າແຮງງານເປັນເງິນ ຫຼື ເປັນອາຫານ ເພື່ອສະໜັບສະໜູນຜູ້ທຸກຍາກໃຫ້ມີວຽກເຮັດງານທໍາໃນຍາມຕິດຂັດດ້ານລາຍຮັບ ໂດຍສະເພາະໃນຍາມທີ່ລໍາບາກ ຫຼື ອຶດຫິວ ເພື່ອສ້າງວຽກເຮັດງານທໍາຕາມໂຄງການພື້ນຖານໂຄງລ່າງ ເປັນຕົ້ນ ໂຄງການສ້າງເສັ້ນທາງຊຸມຊົນ, ຊົນລະປະທານ, ການປູກຕົ້ນໄມ້, ການສ້າງໂຮງຮຽນ,
ສຸກສາລາ ແລະ ອື່ນໆ

**ການປົກປ້ອງສັງຄົມຂັ້ນພື້ນຖານ** ແມ່ນ ການກໍານົດການຄໍ້າປະກັນສັງຄົມຂັ້ນພື້ນຖານໃນລະດັບຊາດ ເພື່ອຮັບປະກັນ ໄລຍະວົງຈອນຊີວິດຂອງບຸກຄົນຂັ້ນພື້ນຖານ ທີ່ຕ້ອງການເຂົ້າເຖິງການປິ່ນປົວ ສຸຂະພາບທີ່ຈໍາເປັນ ແລະ ການມີລາຍຮັບທີ່ຄໍ້າປະກັນຂັ້ນພື້ນຖານ ເພື່ອໃຫ້ສາມາດເຂົ້າເຖິງສິນຄ້າ ແລະ ການບໍລິການພຽງພໍ ຕາມທີ່ກໍານົດເປັນຖານການປົກປ້ອງສັງຄົມໃນລະດັບຊາດ.

## ພາກທີ 3: ລະບົບປົກປ້ອງສັງຄົມທີ່ມີຢູ່ໃນ ສປປ ລາວ

## ກິດຈະກໍາທີ 5: ລິເລີ່ມສ້າງຮູບພາບການປົກປ້ອງສັງຄົມຢູ່ ສປປ ລາວ

| | |
|---|---|
| **ເວລາ:** | 20 ນາທີ |
| **ຈຸດປະສົງ** | ເພື່ອລິເລີ່ມສ້າງຮູບພາບຄວາມຕ້ອງການການປົກປ້ອງສັງຄົມຢູ່ ສປປ ລາວ |
| **ອຸປະກອນ** | ຈັດພິມເອກະສານ 3 (ພິມຮູບສັດ ຂະໜາດ A4 ໜຶ່ງແຜ່ນຕໍ່ໜຶ່ງໂຕ) |

| | |
|---|---|
| **ການກະກຽມ** | ຕິດຮູບພາບສັດໃສ່ຕາມມູມຕ່າງໆຂອງຫ້ອງ |
| **ຂັ້ນຕອນ** | 1. ຖາມຜູ້ເຂົ້າຮ່ວມວ່າ: **"ເຈົ້າຄິດວ່າການປົກປ້ອງສັງຄົມຢູ່ລາວຄືກັບຮູບສັດໂຕໃດ?"**<br>2. ບອກຜູ້ເຂົ້າຮ່ວມຢືນຢູ່ໃກ້ກັບຮູບສັດທີ່ເປັນຕົວແທນໃຫ້ຄຳຕອບຂອງພວກເຂົາ.<br>3. ແຕ່ລະກຸ່ມສົນທະນາກັນ10 ນາທີ ຕໍ່ກັບເຫດຜົນທີ່ເລືອກໂຕສັດຕ່າງໆ<br>4. ອາສາສະໝັກຂຶ້ນສະຫຼຸບຄຳຕອບຕໍ່ກອງປະຊຸມ. |

### ບັນທຶກຂອງຜູ້ອຳນວຍຄວາມສະດວກ

ເນັ້ນໃສ່ຄຳສັບທີ່ມັກໃຊ້ອະທິບາຍເຖິງການປົກປ້ອງສັງຄົມ ຢູ່ ສປປ ລາວ

## ▶ ເອກະສານແຈກຢາຍ 3: ການປົກປ້ອງສັງຄົມຢູ່ລາວຄືກັບຮູບສັດໂຕໃດ?








# ▶ ກິດຈະກຳ 6: ໃຜຢາກເປັນເສດຖີແດ່?

| | |
|---|---|
| ເວລາ: | 15 ນາທີ |
| ຈຸດປະສົງ | ເພື່ອລິເລີ່ມສ້າງຮູບພາບຄວາມຕ້ອງການການປົກປ້ອງສັງຄົມຢູ່ ສປປ ລາວ |
| ອຸປະກອນ | ຈັດພິມ 3 ບັດທີ່ຂຽນດ້ວຍ A, B ແລະ C  (6 ຊຸດ) |
| ການກະກຽມ | ຢາຍບັດທີ່ຂຽນດ້ວຍ A, B ແລະ C |
| ຂັ້ນຕອນ | 1. ຖາມຄຳຖາມທີ່ມີຫລາຍທາງເລືອກໂດຍອີງໃສ່ຂໍ້ມູນຂອງລະບົບການປົກປ້ອງສັງຄົມທີ່ມີຢູ່ ສປປ ລາວ (ເບິ່ງບົດຮຽນຢູ່ຂ້າງລຸ່ມນີ້: ການປົກປ້ອງສັງຄົມຢູ່ ສປປ ລາວ).<br>2. ໃຫ້ເວລາແຕ່ລະກຸ່ມ 30 ວິນາທີ ເພື່ອສົນທະນາຄຳຕອບຂອງເຂົາເຈົ້າ ແລະ ເລືອກໂຕໜັງສື<br>3. ເມື່ອໝົດເວລາ, ກຸ່ມຈະສະແດງຄຳຕອບຂອງເຂົາເຈົ້າ.<br>4. ຜູ້ອຳນວຍຄວາມສະດວກຈະສະແດງຄຳຕອບທີ່ຖືກຕ້ອງ |

## ບົດຮຽນ

**ລະບົບການປົກປ້ອງສັງຄົມຢູ່ ສປປ ລາວ**

**1.** ໃນປີ 2019, ປະຊາກອນທີ່ໄດ້ປົກຄຸມຈາກລະບົບປະກັນສຸຂະພາບແຫ່ງຊາດມີຈັກເປີເຊັນ?

**a.** 87%
**b.** 93%
**c.** 62%

**2.** ມີປະຊາກອນຈັກເປີເຊັນໄດ້ຮັບການປົກປ້ອງສັງຄົມອຸດໜູນຜູ້ອາຍຸສູງ?

**a.** ຕ່ຳກວ່າ 5 %
**b.** ກວ່າ 5% ແລະ 10%
**c.** ຫຼາຍກວ່າ 10%

**3.** ຢູ່ໃນປະເທດ ມີຈັກຄົນເຮັດວຽກຢູ່ຂະແໜງການນອກລະບົບ?

**a.** 45.5%
**b.** 60.5%
**c.** 75.5%

**4.** ຢູ່ຂັ້ນສຸກສາລາ ລະບົບປະກັນສຸຂະພາບແຫ່ງຊາດໄດ້ຈ່າຍຮ່ວມເທົ່າໃດ?

**a.** 5,000 ກີບ
**b.** 10,000 ກີບ
**c.** 30,000 ກີບ

**5.** ຢູ່ປະເທດຂອງທ່ານມີຈັກເປີເຊັນຂອງ GDP ນຳໃຊ້ເຂົ້າໃນການປົກປ້ອງສັງຄົມ?

**a.** ຕ່ຳກວ່າ 1% ຂອງ GDP
**b.** ລະຫວ່າງ 1-2% ຂອງ GDP
**c.** ລະຫວ່າງ 2-3% ຂອງ GDP

**ແຫຼ່ງຂໍ້ມູນ:** ILO Social Protection Dashboard
https://www.social-protection.org/gimi/WSPDB.action?id=19

## ▶ ພາກທີ 4: ພາລະບົດບາດຂອງການປົກປ້ອງສັງຄົມ

## ▶ ກິດຈະກຳ 7: ຄວາມເຊື່ອທີ່ຜິດ ຫລື ຄວາມຈິງ

| | |
|---|---|
| ເວລາ: | 15 ນາທີ |
| ຈຸດປະສົງ | ທົດສອບຄວາມຮູ້ຂອງຜູ້ເຂົ້າຮ່ວມ ແລະ ຢຸດຕິຄວາມເຂົ້າໃຈຜິດທົ່ວໄປກ່ຽວກັບການປົກປ້ອງສັງຄົມ |
| ອຸປະກອນ | ບໍ່ມີ |
| ການກະກຽມ | ບໍ່ມີ |
| ຂັ້ນຕອນ | **1.** ບອກໃຫ້ຜູ້ເຂົ້າຮ່ວມຢືນເປັນແຖວ<br>**2.** ບອກຜູ້ເຂົ້າຮ່ວມວ່າ ທ່ານຈະອ່ານປະໂຫຍກໃຫ້ຟັງ ແລະ ໃຫ້ກຳນົດວ່າ ປະໂຫຍກດັ່ງກ່າວນັ້ນເປັນປະໂຫຍກ “ຄວາມຈິງ” ຫຼື “ຄວາມເຊື່ອທີ່ຜິດ”?<br>**3.** ເລີ່ມຕົ້ນອ່ານປະໂຫຍກ<br>**4.** ບອກໃຫ້ເຂົາເຈົ້າຍ່າງກ້າວໄປຂ້າງໜ້າ ຖ້າຄຳຕອບຂອງເຂົາເຈົ້າເປັນ “ຄວາມຈິງ” ແລະ ຍ່າງຖອຍຫຼັງ ຖ້າຄຳຕອບຂອງເຂົາເຈົ້າເປັນ “ຄວາມເຊື່ອທີ່ຜິດ”.<br>**5.** ບອກໃຫ້ເຂົາເຈົ້າກັບຄືນໄປຫາແຖວຫຼັງຈາກແຕ່ລະຄຳຖາມ |

## 🕮 ບົດຮຽນ

**ການປົກປ້ອງສັງຄົມ: ຄວາມຈິງ ຫລື ຄວາມເຊື່ອທີ່ຜິດ**

**1.** “ສະຫວັດດີການເຮັດໃຫ້ຄົນຂີ້ຄ້ານ”: ຄວາມເຊື່ອທີ່ຜິດ
**2.** “ການຊ່ວຍເຫຼືອສັງຄົມ ມີການສໍ້ໂກງຫລາຍເກີນໄປ”: ຄວາມເຊື່ອທີ່ຜິດ
**3.** “ມີເງິນພຽງພໍທີ່ຈະກວມເອົາກົນໄກຄວາມສາມັກຄີ”: ຄວາມຈິງ
**4.** “ການບໍລິການທາງສັງຄົມ ແລະ ສາທາ ມີແຕ່ອຸດໜູນຜູ້ທຸກຍາກເທົ່ານັ້ນ”: ຄວາມເຊື່ອທີ່ຜິດ
**5.** ສາທາລະນະສຸກ, ການສຶກສາ, ການບໍລິການສັງຄົມ ແມ່ນດີຕໍ່ເສດຖະກິດ”: ຄວາມຈິງ

**ຫລັງຈາກກິດຈະກຳນີ້ສຳເລັດແລ້ວໃຫ້ສາຍວີດີໂອ:** https://www.srpoverty.org/2021/06/21/new-animated-video-5-myths-about-social-protection/

## ▸ ພາກທີ 5 : ວິທີການກຳນົດເປົ້າໝາຍການປົກປ້ອງສັງຄົມ

## ▸ ກິດຈະກຳ 8: ຄວາມເຂົ້າໃຈຕໍ່ກັບຄວາມສັບຊ້ອນຂອງການກຳຫນົດເປົ້າຫມາຍ

| | |
|---|---|
| **ເວລາ:** | 60 ນາທີ |
| **ຈຸດປະສົງ** | ເພື່ອເຂົ້າໃຈຄວາມເຖິງຄວາມຫຍຸ້ງຍາກໃນການເລືອກຄວາມສ່ຽງໃດໜຶ່ງ, ແລະ ຄວາມຮູ້ສຶກທາງລົບ ເມື່ອຜູ້ໄດ້ຮັບຜົນປະໂຫຍດຮູ້ສຶກວ່າລາວສົມຄວນໄດ້ຮັບແຕ່ບໍ່ຖືກເລືອກ. |
| **ອຸປະກອນ** | ຈັດພິມເອກະສານແຈກຢາຍ 4 (2 ຊຸດ) |
| **ການກະກຽມ** | ຕັດເອກະສານ ແລະ ພັບບັດຜູ້ໄດ້ຮັບການອຸດໜູນ ເພື່ອບໍ່ໃຫ້ເຫັນເນື້ອໃນຢູ່ຂ້າງໃນ. ແຈກຢາກບັດຊຸດທຳອິດໝົດແລ້ວ ຈຶ່ງຢາຍບັດຊຸດຕໍ່ມາ |
| **ຂັ້ນຕອນ** | **1.** ໃຫ້ຜູ້ເຂົ້າຮ່ວມນັ່ງເປັນ 6 ກຸ່ມ, ແຕກຕ່າງຈາກກຸ່ມໃນບົດຜ່ານມາ.<br>**2.** ແບ່ງບັດຜູ້ໄດ້ຮັບການອຸດໜູນອອກເປັນ 6 ກຸ່ມ, ຮັບປະກັນວ່າແຕ່ລະກຸ່ມຈະບໍ່ໄດ້ຮັບບັດຊ້ອນກັນ. ແຕ່ລະຄົນໃນກຸ່ມຕ້ອງໄດ້ຮັບຢ່າງໜ່ອຍໜຶ່ງບັດ<br>**3.** ບອກໃຫ້ຜູ້ເຂົ້າຮ່ວມໃນແຕ່ລະກຸ່ມຈັບເອົາ 1 ບັດ<br>**4.** ຜູ້ເຂົ້າຮ່ວມເປີດບັດ ແລະໃຊ້ເວລາຄິດ 5 ນາທີ. ບອກພວກເຂົາໃຫ້ຄິດຢ່າງຮອບຄອບກ່ຽວກັບຄຸນລັກສະນະໃນບັດຂອງພວກເຂົາ (ພວກເຂົາຢູ່ໃສ? ພວກເຂົາກິນເຂົ້າຄັ້ງລ້າສຸດເມື່ອໃດ? ພວກເຂົາມີຄວາມຫວັງຫຍັງແດ່? ພວກເຂົາສາມາດປ່ຽນແປງສະຖານະການຂອງພວກເຂົາໄດ້ຫຼາຍປານໃດ, ຖ້າພວກເຂົາຕ້ອງການຢາກປ່ຽນ? ເຂົາເຈົ້າມີສິດອຳນາດຫຼາຍປານໃດໃນການປ່ຽນແປງຄວາມບອບບາງ ຫລື ຄວາມສ່ຽງຂອງເຂົາເຈົ້າ, ແລະ ອື່ນໆ). ຈາກນັ້ນໃຫ້ລະບຸເຫດຜົນວ່າເປັນຫຍັງຜູ້ໄດ້ຮັບຜົນປະໂຫຍດຄົນນັ້ນຈຶ່ງສົມຄວນໄດ້ຮັບການປົກປ້ອງສັງຄົມ. |

5. ແຕ່ລະກຸ່ມໃຊ້ເວລາ 30 ນາທີ ສົນທະນາກັນ ໂດຍມີເປົ້າໝາຍສຸດທ້າຍຄື ເລືອກເອົາຜູ້ຈະໄດ້ຮັບການອຸດໜູນ 2 ຄົນ. ຜູ້ເຂົ້າຮ່ວມແຕ່ລະຄົນໃຫ້ເຫດຜົນໂຕ້ແຍ້ງວ່າເປັນຫຍັງຜູ້ຈະໄດ້ຮັບການອຸດໜູນຂອງເຂົາເຈົ້າຈຶ່ງຄວນຈະຖືກເລືອກ/ເປັນເປົ້າໝາຍ.
6. ບັນດາກຸ່ມຕ້ອງມີຄວາມເປັນເອກະສັນກັນຕໍ່ກັບຜູ້ຈະໄດ້ຮັບການອຸດໜູນ 2 ຄົນທີ່ຈະໄດ້ຮັບການຄັດເລືອກ.
7. ແຕ່ລະກຸ່ມເລືອກເອົາອາສາສະຫມັກຂື້ນມານຳສະເຫນີຕໍ່ຫ້ອງປະຊຸມ.
8. ອາສາສະໝັກນຳສະເໜີ, ເນັ້ນໜັກໃສ່ເຫດຜົນຂອງການເລືອກເປົ້າໝາຍ.
9. ຫຼັງຈາກການແລກປ່ຽນແລ້ວ ໃຫ້ພິຈາລະນາຄຳຖາມຕໍ່ໄປນີ້:

- ແມ່ນໃຜໄດ້ຮັບການປົກປ້ອງສັງຄົມ? ຍ້ອນຫຍັງ?
- ທ່ານຮູ້ສຶກແນວໃດ ແລະ ຍ້ອນຫຍັງ?
- ທ່ານສາມາດຖອດຖອນບົດຮຽນອັນລ້ຳຄ່າອັນໃດແດ່ຈາກເລື່ອງນີ້?
- ກຸ່ມອື່ນໆໄດ້ຕັດສິນໃຈຄ້າຍຄືກັນບໍ?

## ບັນທຶກຂອງຜູ້ອຳນວຍຄວາມສະດວກ

ໃຊ້ຄຳຖາມຢູ່ໃນສະໄລ ເພື່ອອຳນວຍຄວາມສະດວກໃນການຖາມ, ຈົດບັນທຶກຄຳຕອບໃສ່ໃນເຈ້ຍແຜ່ນໃຫຍ່ ແລະ ສະແດງຄວາມຄິດເຫັນຕໍ່ກັບແນວໂນ້ມ) ເນັ້ນໃສ່ຄຳສັບທີ່ມັກໃຊ້ອະທິບາຍເຖິງການປົກປ້ອງສັງຄົມ ຢູ່ ສປປ ລາວ.

## ບົດຮຽນ

**ພາກນີ້ ສາມາດສັງລວມໄດ້ບົດຮຽນດັ່ງນີ້:**

- ກົນໄກການກຳນົດເປົ້າຫມາຍທັງຫມົດມີຂໍ້ຜິດພາດ ແລະ ມີຄ່າໃຊ້ຈ່າຍ ດັ່ງນັ້ນມັນຈຶ່ງຈຳເປັນທີ່ຕ້ອງຮູ້ວ່າການໃຊ້ວິທີການກຳຫນົດເປົ້າຫມາຍຍັງເປັນບັນຫາໂຕ້ແຍ້ງກັນ ແລະ ມີຄຳວິພາກວິຈານ
- ເຫດຜົນທາງຈັນຍາບັນ. ເນື່ອງຈາກວ່າມັນສາມາດນຳໄປສູ່ ຄວາມແຕກແຍກທາງສັງຄົມ ແລະ ແນວຄວາມຄິດທີ່ບໍ່ກວມເອົາຜົນປະໂຫຍດຂອງປະຊາຊົນຈຳນວນໜຶ່ງ ນີ້ແມ່ນຄວາມບໍ່ຍຸຕິທຳທາງສັງຄົມ.
- ກົນໄກການກຳນົດເປົ້າໝາຍ ພົບກັບຄວາມຫຍຸ້ງຍາກໃນການອອກແບບ ແລະ ການຈັດຕັ້ງປະຕິບັດ ເພື່ອເຂົ້າເຖິງຜູ້ທີ່ຕ້ອງການຄວາມຊ່ວຍເຫຼືອຫລາຍທີ່ສຸດ;ດັ່ງນັ້ນ, ກຸ່ມຄົນດ້ອຍໂອກາດຈຳນວນໜຶ່ງອາດບໍ່ຖືກນັບເຂົ້າ.
- ໂດຍປົກກະຕິແລ້ວ ການນຳໃຊ້ຕົວແທນສະເລ່ຍເພື່ອມາກວດສອບເບິ່ງລັກສະນະ ແມ່ນມີ "ຂໍ້ຜິດພາດໃນການນັບເຂົ້າ ແລະ ການບໍ່ໄດ້ຖືກນັບເຂົ້າຢູ່ 30-40%", ແຕ່ໃນຂະນະດຽວກັນນັ້ນການເກັບກຳຂໍ້ມູນ ແລະ ການວິເຄາະຄວາມທຸກຍາກເພື່ອກຳນົດເປົ້າຫມາຍ, ແລະ ການເກັບຮັກສາຂໍ້ມູນນີ້ໃຫ້ທັນສະກັບສະພາບການ ອາດມີຄ່າໃຊ້ຈ່າຍສູງ.
- ນອກຈາກນັ້ນ, ການກຳນົດເປົ້າຫມາຍຍັງເພີ່ມຄວາມເຄັ່ງຕຶງທາງສັງຄົມ. ຫຼັກຖານກ່ຽວກັບຜົນກະທົບຂອງການກຳນົດເປົ້າຫມາຍທີ່ກວ້າງຂວາງຕໍ່ກັບຄວາມສາມັກຄີພາຍໃນສັງຄົມແມ່ນຍັງຈຳກັດ, ຜົນຂອງການສຳຫລວດຍັງບໍ່ມີຄວາມຈະແຈ້ງ.

### ຄວາມຮູ້

**ວິທີການກຳນົດເປົ້າໝາຍເພື່ອການປົກປ້ອງສັງຄົມ**

ການກຳນົດເປົ້າຫມາຍຫມາຍເຖິງກົນໄກໃດໜຶ່ງທີ່ຈະລະບຸຕົວບຸກຄົນ, ຄົວເຮືອນ, ແລະ ກຸ່ມຄົນທີ່ມີສິດ, ເພື່ອຈຸດປະສົງການໂອນຊັບພະຍາກອນຫຼືບຸລິມະສິດໃນການເຂົ້າເຖິງການບໍລິການສັງຄົມຕ່າງໆ. ‘ກົນໄກການກຳນົດເປົ້າຫມາຍທີ່ໄດ້ຮັບຄວາມນິຍົມຫລາຍກວ່າໝູ່ ປະກອບມີການກວດສອບຄ່າສະເລ່ຍ, ການກວດສອບຕົວແທນຄ່າສະເລ່ຍ, ການຈັດປະເພດ, ທີ່ຕັ້ງພູມສັນຖານ, ຊຸມຊົນ, ແລະ ການຄັດເລືອກຕົນເອງ.

ເຫດຜົນສຳຄັນທີ່ສຸດສຳລັບການກຳນົດເປົ້າຫມາຍ ‘ແມ່ນເພື່ອນຳໂຄງການ ໄປຫາຜູ້ທີຈະໄດ້ຮັບຜົນປະໂຫຍດຫຼາຍທີ່ສຸດ’. ການກຳນົດເປົ້າໝາຍອາດຈະມີຈຸດປະສົງອື່ນອີກຄື:

- ເພື່ອແນໃສ່ຫຼຸດຜ່ອນຄວາມທຸກຍາກໃຫ້ໄດ້ຫລາຍທີ່ສຸດ;
- ເພື່ອຮັບປະກັນວ່າບໍ່ມີໃຜຖືກ ‘ປະໄວ້ຂ້າງຫລັງ’;
- ເພື່ອບັນຈຸຄ່າໃຊ້ຈ່າຍໃນການສະຫນອງ;
- ນຳໃຊ້ຊັບພະຍາກອນໃຫ້ມີປະສິດທິພາບສູງສຸດ ເມື່ອປະເຊີນກັບຂໍ້ຈຳກັດທາງດ້ານງົບປະມານ.

ບາງຄັ້ງກໍຖືກນຳໃຊ້ເພື່ອຜົນປະໂຫຍດທາງການເມືອງໃນເບື້ອງຕົ້ນ.

**ແຫຼ່ງຂໍ້ມູນ:** (Carter, Roelen, Enfield, & Avis, 2019)

# ເອກະສານແຈກຢາຍ 4: ບັດຜູ້ໄດ້ຮັບຜົນປະໂຫຍດ

| | |
|---|---|
| ເດັກນ້ອຍອາຍຸ 15 ປີ ເປັນຜູ້ນຳຄອບຄົວ ທີ່ມີອ້າຍເອື້ອຍນ້ອງ 3 ຄົນ, ອາໃສຢູ່ຕູບນ້ອຍຢູ່ໃນບ້ານ | ແມ່ເຖົ້າເບິ່ງແຍງເດັກນ້ອຍ 4 ຄົນທີ່ພໍ່ແມ່ ຂອງເຂົາເຈົ້າເຄື່ອນຍ້າຍໄປເຮັດວຽກ |
| ຜູ້ຊາຍອາຍຸ 20 ປີ ຫວ່າງງານ, ຫາກໍອອກ ຈາກຄຸກ ຫລັງຈາກຖືກຈັບໃນຂໍ້ຫາລັກເຄື່ອງ | ແມ່ຍິງອາຍຸ 19 ປີ ຢູ່ໃນຄອບຄົວຮັ່ງມີ ນາງມີ ພັດທະນາການ ແລະ ການເຕີບໂຕຊ້າ ແລະ ຕ້ອງການການດູແລຢ່າງໃກ້ຊິດ |
| ເດັກຊາຍຢູ່ຊົນນະບົດ ອາຍຸ 9 ປີ ມີ ອາຫານກິນແຕ່ຢູ່ໂຮງຮຽນເທົ່ານັ້ນ | ນັກຮຽນມະຫາວິທະຍາໄລ ອາຍຸ 20 ປີ ມາຈາກຄອບຄົວຊາວນາທີ່ທຸກຍາກ |

| | |
|---|---|
| ເດັກຍິງອາຍຸ 14 ປີ ຖືພາ ແລະ ໄດ້ອອກໂຮງຮຽນ | ຜູ້ຊາຍອາຍຸ 25 ປີ ບໍ່ມີເຮືອນຢູ່ ອາໃສ່ຢູ່ແຄມທາງໄດ້12 ປີ ແລະ ເຮັດວຽກເລັກໆນ້ອຍໆເພື່ອຫາເງິນ |
| ຊາຍອາຍຸ 40 ປີ ເປັນພະຍາດທີ່ເກີດຈາກສານເອດປາໂຕດ ຫລື ສານໄຍຫີນ( ພະຍາດຊຳເຮື້ອ ແລະ ຊຸດໂຊມ)ຖືກໄລ່ອອກຈາກວຽກໃນບໍ່ແຮ່ ໄດ້ 5 ປີຜ່ານມາ | ນາຍໝໍທີ່ມີຄຸນວຸດທິສູງ ເຮັດວຽກຢູ່ໂຮງໝໍໃນຊົນນະບົດ ສູນເສຍແຂນສອງເບື້ອງຂອງນາງຈາກລົດເກີດອຸປະຕິບັດ |
| ແຮງງານເຄື່ອນຍ້າຍຕ່າງປະເທດທີ່ບໍ່ຮູ້ໜັງສື, ມີທັກສະສີມືຕ່ຳ | ແມ່ຍິງອາຍຸ 18 ປີ ເຮັດວຽກຢູ່ໃນໂຮງງານຕັດຫຍິບນ້ອຍໆແຫ່ງໜຶ່ງໄດ້ຮັບເງິນເດືອນຕ່ຳກວ່າຄ່າແຮງງານຂັ້ນຕ່ຳ |
| ແຮງງານທີ່ເຮັດວຽກໃນຄົວເຮືອນ ເຮັດວຽກ16 ຊົ່ວໂມງຕໍ່ມື້, ພະຍາຍາມຫາເງິນໃຫ້ພໍກັບຄ່າຄອງຊີບຂອງຄອບຄົວທີ່ມີລູກ 6 ຄົນ | ແມ່ໝ້າຍ ອາຍຸ 67 ປີ ບຳນານ ແລະ ມີມູນມໍລະດົກເປັນເຮືອນ ແຕ່ບໍ່ມີລາຍຮັບ ຫລື ບຳເນັດ |
| ຜູ້ຊາຍທີ່ມີຄອບຄົວຢູ່ຊົນນະບົດຫ່າງໄກສອກຫລີກ ເປັນພະຍາດວັນນະໂລກ ແລະ ອາໃສຢູ່ໄກຈາກຄລີນິກ 40 ກິໂລແມັດ ແລະ ບໍ່ມີເສັ້ນທາງເຂົ້າເຖິງບ້ານຂອງລາວ | ຜູ້ຊາຍອາຍຸ 35 ປີ ຢູ່ໃນຕົວເມືອງ ສະໜັບສະໜູນຄອບຄົວ ແລະ ນ້ອຍຊາຍທີ່ວ່າງງານ |

# ▸ ກິດຈະກຳ 9: ກຳນົດກຸ່ມເປົ້າໝາຍເພື່ອການປົກປ້ອງສັງຄົມ

| | |
|---|---|
| **ເວລາ:** | 30 ນາທີ |
| **ຈຸດປະສົງ** | ເພື່ອຄົ້ນຄິດກ່ຽວກັບທາງເລືອກການອອກແບບທີ່ແຕກຕ່າງກັນ ແລະ ຄົ້ນຫາເຫດຜົນທີ່ເຫັນດີກັບທາງເລືອກທັງໝົດ ຫລື ເຫດຜົນທີ່ບໍ່ເຫັນດີກັບທາງເລືອກທັງຫມົດ |
| **ອຸປະກອນ** | ບັດທີ່ພິມຂໍ້ຄວາມໃສ່ດັ່ງນີ້:<br>▶ ວິທີການ ເລັ່ງໃສ່ກຸ່ມເປົ້າໝາຍຜູ້ທຸກຍາກ<br>▶ ວິທີການ ເລັ່ງໃສ່ທາງດ້ານພູມສັນຖານ<br>▶ ວິທີການ ເລັ່ງໃສ່ປະເພດກຸ່ມຄົນ<br>▶ ວິທີການ ເລັ່ງໃສ່ ຊຸມຊົນ ຫຼື ບ້ານ<br>▶ ວິທີການ ເລັ່ງໃສ່ເປົ້າໝາຍປົກຄຸມທົ່ວປວງຊົນ |
| **ການກະກຽມ** | ຕິດເຈ້ຍທີ່ພິມໄວ້ໃສ່ແຈຫ້ອງ ຫລື ຕິດໃສ່ຂາຕັ້ງເຈ້ຍແຜ່ນໃຫຍ່ |
| **ຂັ້ນຕອນ** | **1.** ແບ່ງຜູ້ເຂົ້າຮ່ວມອອກເປັນ 4 ກຸ່ມ.<br><br>**2.** ບອກຕາງໜ້າແຕ່ລະກຸ່ມເລືອກໂຄງການປົກປ້ອງສັງຄົມໃດໜຶ່ງດັ່ງນີ້:<br>▶ ໂຄງການ ອຸດໜູນແມ່ ແລະ ເດັກນ້ອຍ<br>▶ ອຸດໜູນຜູ້ສູງອາຍຸ<br>▶ ກອງທຶນການປະກັນສຸຂະພາບແຫ່ງຊາດ<br>▶ ເງິນຊ່ວຍເຫຼືອສຸກເສີນຕໍ່ພະຍາດໂຄວິດ 19<br>ບໍ່ໃຫ້ເລືອກໂຄງການດຽວກັນ<br><br>**3.** ຖາມຜູ້ເຂົ້າຮ່ວມວ່າ: "ວິທີການກຳນົດເປົ້າຫມາຍອັນໃດທີ່ທ່ານຄິດວ່າເຫມາະສົມທີ່ສຸດສຳລັບໂຄງການປົກປ້ອງສັງຄົມຂອງທ່ານຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ?" |

| | |
|---|---|
| | **4.** ຊຸກຍູ້ໃຫ້ຜູ້ເຂົ້າຮ່ວມທົບທວນຄືນເປັນການສ່ວນຕົວກ່ຽວກັບການກໍານົດເປົ້າໝາຍໃນການສົນທະນາກັນຢູ່ໃນບົດຮຽນຜ່ານມາ. ນີ້ບໍ່ແມ່ນການສົນທະນາເປັນກຸ່ມ.<br><br>**5.** ບອກຜູ້ເຂົ້າຮ່ວມຢືນຢູ່ຕໍ່ໜ້າຄໍາຕອບຂອງເຂົາເຈົ້າ:<br>▶ ເລັ່ງໃສ່ກຸ່ມເປົ້າໝາຍຜູ້ທຸກຍາກ<br>▶ ການ ເລັ່ງໃສ່ທາງດ້ານພູມສັນຖານ<br>▶ ເລັ່ງໃສ່ປະເພດກຸ່ມຄົນ,<br>▶ ເລັ່ງໃສ່ ຊຸມຊົນ ຫຼື ບ້ານ<br>▶ ເລັ່ງໃສ່ເປົ້າໝາຍປົກຄຸມທົ່ວປວງຊົນ<br><br>**6.** ຊຸກຍູ້ໃຫ້ຜູ້ເຂົ້າຮ່ວມແລກປ່ຽນວ່າເປັນຫຍັງເຂົາເຈົ້າຈຶ່ງຢືນຢູ່ບ່ອນທີ່ເຂົາເຈົ້າຢືນຢູ່. |

# ▶ ພາກທີ 6: ປະເພດຂອງການປົກປ້ອງສັງຄົມ

# ▶ ກິດຈະກໍາ10: ແບບມີເງື່ອນໄຂ ແລະ ແບບບໍ່ມີເງື່ອນໄຂ

| | |
|---|---|
| **ເວລາ:** | 30 ນາທີ |
| **ຈຸດປະສົງ** | ເພື່ອຄົ້ນຄິດກ່ຽວກັບທາງເລືອກການອອກແບບທີ່ແຕກຕ່າງກັນ ແລະ ຄົ້ນຫາເຫດຜົນທີ່ເຫັນດີກັບທາງເລືອກທັງໝົດ ຫລື ເຫດຜົນທີ່ບໍ່ເຫັນດີກັບທາງເລືອກທັງຫມົດ |
| **ອຸປະກອນ** | ບັດທີ່ພິມຂໍ້ຄວາມໃສ່ດັ່ງນີ້:<br>▶ ແບບມີເງື່ອນໄຂ<br>▶ ແບບມີເງື່ອນໄຂທີ່ບໍ່ຮຸນແຮງ<br>▶ ແບບບໍ່ມີເງື່ອນໄຂຫຍັງທັງໝົດ |

| | |
|---|---|
| ການກະກຽມ | ຕິດເຈ້ຍທີ່ພິມໄວ້ໃສ່ແຈຫ້ອງ ຫລື ຕິດໃສ່ຂາຕັ້ງເຈ້ຍແຜ່ນໃຫຍ່ |
| ຂັ້ນຕອນ | 1. ຖາມຜູ້ເຂົ້າຮ່ວມ "ທ່ານເຊື່ອໃນວິທີການເລັ່ງໃສ່ເປົ້າໝາຍອັນໃດ?"<br>2. ຊຸກຍູ້ໃຫ້ຜູ້ເຂົ້າຮ່ວມທົບທວນຄືນບົດຮຽນຜ່ານມາກ່ຽວກັບບ່ອນທີ່ມີຄວາມສ່ຽງ ແລະ ສະພາບຄວາມເປັນຈິງທີ່ໄດ້ສົນທະນາກັນຜ່ານມາ.<br>3. ບອກຜູ້ເຂົ້າຮ່ວມຢືນຢູ່ຕໍ່ໜ້າຄໍາຕອບຂອງເຂົາເຈົ້າ:<br>▶ ແບບມີເງື່ອນໄຂ<br>▶ ແບບມີເງື່ອນໄຂທີ່ບໍ່ຮຸນແຮງ<br>▶ ແບບບໍ່ມີເງື່ອນໄຂຫຍັງທັງໝົດ<br>4. ຊຸກຍູ້ໃຫ້ຜູ້ເຂົ້າຮ່ວມແລກປ່ຽນວ່າເປັນຫຍັງເຂົາເຈົ້າຈຶ່ງຢືນຢູ່ບ່ອນທີ່ເຂົາເຈົ້າຢືນຢູ່. |

## ຄວາມຮູ້

**ຄໍານິຍາມການອຸດໜູນແບບມີເງື່ອນໄຂ**

- ການອຸດໜູນເງິນແບບມີເງື່ອນໄຂ ຮຽກຮ້ອງໃຫ້ຜູ້ໄດ້ຮັບການອຸດໜູນປະຕິບັດຕາມເງື່ອນໄຂສະເພາະໃດໜຶ່ງໃນການຮັບເງິນ. ສ່ວນຫຼາຍແລ້ວແມ່ນພົວພັນກັບ ການເຂົ້າໂຮງຮຽນຫຼືການດູແລສຸຂະພາບ (ຕົວຢ່າງ, 90 ເປີເຊັນໄດ້ເຂົ້າໂຮງຮຽນ ຫຼື ຝາກທ້ອງ). ຖ້າຜູ້ໄດ້ຮັບການອຸດໜູນບໍ່ປະຕິບັດຕາມເງື່ອນໄຂເຫຼົ່ານີ້ ແມ່ນຈະໄດ້ມີການໃສ່ມາດຕະການ ຫຼື ປັບໂທດ (ເຊັ່ນ ຢຸດເຊົາໂອນເງິນ).
- ແບບມີເງື່ອນໄຂທີ່ບໍ່ຮຸນແຮງ:ວິທີການປະສົມປະສານ. ແມ່ນເພື່ອເຕືອນໃຫ້ປະຊາຊົນຮູ້ວ່າການທີ່ເຂົາເຈົ້າຈະໄດ້ຮັບການອຸດໜູນເງິນສົດນັ້ນແມ່ນເພື່ອໃຫ້ບັນລຸເປົ້າຫມາຍຂອງໂຄງການໄດ້ຫຼາຍຂຶ້ນ, ໂດຍບໍ່ຕ້ອງໄດ້ແບກຫາບພາລະໜັກໃນການຕິດຕາມແລະການປະເມີນຜົນ (M&E)ໂຄງການທີ່ໃຫ້ການອຸດ ໜູນແບບມີເງື່ອນໄຂທີ່ແທ້ຈິງ (Hemsteede 2018). ສິ່ງທີ່ແຕກຕ່າງກັບການອູດໜູນແບບມີເງື່ອນໄຂກໍ່ຄື ຖ້າຜູ້ໄດ້ຮັບການອູດໜູນບໍ່ປະຕິບັດຕາມເງື່ອນໄຂ ນັ້ນ ແມ່ນຈະບໍ່ໄດ້ມີການປັບໂທດ ຫຼື ໃສ່ມາດຕະການກັບຜູ້ໄດ້ຮັບການອູດໜູນ.
- ການອຸດໜູນເງິນແບບບໍ່ມີເງື່ອນໄຂ ບໍ່ໄດ້ຮຽກຮ້ອງໃຫ້ຜູ້ໄດ້ຮັບການອຸດໜູນທີ່ເປັນເປົ້າໝາຍຕ້ອງປະຕິບັດຕາມເງື່ອນໄຂສະເພາະໃດໜຶ່ງ.

# ▸ ພາກທີ 7: ການສັງລວມຄວາມເຂົ້າໃຈຕໍ່ການປົກປ້ອງສັງຄົມ

## ▸ ກິດຈະກຳ 11: "ສົງໃສລະແວງ" ແລະ "ຜູ້ທີ່ເຊື່ອ"

| | |
|---|---|
| **ເວລາ:** | 30 ນາທີ |
| **ຈຸດປະສົງ** | ເພື່ອປະເມີນຄວາມຮູ້ ແລະ ທັດສະນະຄະຕິຂອງຜູ້ເຂົ້າຮ່ວມຕໍ່ກັບການປົກປ້ອງສັງຄົມ |
| **ອຸປະກອນ** | ບັດທີ່ພິມຂໍ້ຄວາມໃສ່ດັ່ງນີ້:<br>▶ "ຂ້ອຍເຊື່ອວ່າການປົກປ້ອງສັງຄົມ ແມ່ນການຊ່ວຍເຫລືອ ແລະ ເຮັດໃຫ້ຄົນທຸກຍາກເອື່ອຍອີງໃສ່ຄົນອື່ນ "<br>▶ "ຂ້ອຍເຊື່ອວ່າການປົກປ້ອງສັງຄົມແມ່ນການລົງທຶນໃສ່ອານາຄົດ" |
| **ການກະກຽມ** | ຕັ້ງສອງສະຖານີກົງກັນຂ້າມກັນຢູ່ໃນຫ້ອງ ແລະ ເອົາສອງບັດຕິດໄວ້ເທິງ ແລະ ເອົາສະກອດຕິດເຈ້ຍຍາວປະມານ 3 ແມັດ ໄປຕິດໄວ້ລະຫວ່າງກາງຂອງສອງສະຖານີ ເພື່ອແບ່ງຫ້ອງອອກເປັນຫ້ອງລະຫວ່າງຜູ້ລະແວງສົງໃສ ແລະ ຜູ້ທີ່ເຊື່ອ, ທັງສອງທີມປິ່ນໜ້າໃສ່ກັນ (ສອງທີມຢືນກົງກັນຂ້າມກັນ). |
| **ຂັ້ນຕອນ** | 1. ບອກຜູ້ເຂົ້າຮ່ວມຄິດເຖິງສິ່ງທີ່ພວກເຮົາໄດ້ຮຽນຈາກພາກທີ 1.<br>2. ຖາມຈຸດຢືນຂອງເຂົາເຈົ້າຕໍ່ກັບການປົກປ້ອງສັງຄົມ ແລະ ເລືອກວ່າລະຫວ່າງສອງປະໂຫຍດເຫຼົ່ານີ້ ແມ່ນປະໂຫຍກໃດສະແດງໃຫ້ເຫັນເຖິງຈຸດຢືນຂອງເຂົາເຈົ້າ: "ຂ້ອຍເຊື່ອວ່າການປົກປ້ອງສັງຄົມແມ່ນການຊ່ວຍເຫລືອແລະເຮັດໃຫ້ຜູ້ທຸກຍາກເອື່ອຍອີງໃສ່ຄົນອື່ນ " ຫຼື "ຂ້ອຍເຊື່ອວ່າການປົກປ້ອງສັງຄົມແມ່ນການລົງທຶນໃສ່ອານາຄົດ".<br>3. ແນະນຳເຂົາໃຫ້ຢືນຢູ່ບ່ອນໃດບ່ອນໜຶ່ງ ແລະ ຄິດກ່ຽວກັບເຫດຜົນວ່າເປັນຫຍັງເຂົາເຈົ້າຈຶ່ງສະໜັບສະໜູນສິ່ງເຫລົ່ານີ້.<br>4. ຊຸກຍູ້ໃຫ້ແລກປ່ຽນຄວາມເຂົ້າໃຈຢູ່ໃນຫ້ອງປະຊຸມລວມ |

## ບັນທຶກຂອງຜູ້ອຳນວຍຄວາມສະດວກ

ຖາມຄວາມເຫັນໃນຫ້ອງປະຊຸມເພື່ອໃຫ້ຜູ້ເຂົ້າຮ່ວມສາມາດນຳສະເຫນີເຫດຜົນຂອງເຂົາເຈົ້າ. ກວດເບິ່ງວ່າທັງສອງກຸ່ມໄດ້ໃຫ້ເຫດຜົນຄ້າຍຄືກັນບໍ, ແລະ ກວດເບິ່ງວ່າ ຜູ້ລະແວງສົງໃສໄດ້ຖືກໂນ້ມນ້າວຈິດໃຈຈາກຜູ້ທີ່ເຊື່ອຫຼືບໍ. ຂ້າງລຸ່ມນີ້ (ບໍ່ມີລຳດັບສະເພາະໃດໜຶ່ງ) ແມ່ນບັນດາເຫດຜົນ ແຕ່ຍັງບໍ່ທັນຄົບຖ້ວນ ເຊິ່ງອາດຈະຖືກຍົກຂຶ້ນມາເພື່ອເປັນຕົວຢ່າງ ແລະ ເພື່ອການກະກຽມເທົ່ານັ້ນ.

ແນວຄວາມຄິດເຫັນຂອງຜູ້ລະແວງສົງໃສມີຮາກຖານເລິກເຊິ່ງ, ແລະ ພວກເຮົາອາດຈະໄດ້ພົບພໍ້ກັບບັນຫານີ້ເຊັ່ນກັນ - ຄຽງຄູ່ກັບການເປັນຜູ້ປະຕິບັດຕົວຈິງໃນວຽກງານປົກປ້ອງສັງຄົມ. ມີແຕ່ຫຼັກຖານຢ່າງດຽວແມ່ນຍັງບໍ່ພຽງພໍທີ່ຈະໂນ້ມນ້າວຈິດໃຈ ຫຼື ແນວຄວາມຄິດຂອງຄົນອື່ນ. ພວກເຮົາຕ້ອງມີຄວາມເຂົ້າໃຈຕໍ່ກັບຈຸດຢືນຂອງເຂົາເຈົ້າເປັນຢ່າງດີ ເພື່ອຫາເຫດຜົນມາສົນທະນາກັບເຂົາເຈົ້າ, ກົດ “ປຸ່ມ” ທີ່ຈະເກີດປະຕິກະລິຍາ.

ໃຫ້ຜູ້ເຂົ້າຮ່ວມແລກປ່ຽນການປ່ຽນແປງຈິດໃຈທີ່ເກີດຂຶ້ນກັບເຂົາເຈົ້າ, ແລະ ຈະນຳໃຊ້ແນວຄວາມຄິດ ໃໝ່ເຂົ້າໃນສະພາບແວດລ້ອມການເຮັດວຽກໃນປະຈຸບັນໄດ້ຢູ່ໃສແດ່ ແລະ ໃຊ້ແນວໃດແດ່?

## ຄວາມຮູ້

**ຈຸດຢືນ ແລະ ການໂຕ້ຕອບຈຳນວນໜຶ່ງ**

**ລະແວງສົງໃສ**

- ສ້າງພື້ນຖານໃຫ້ແກ່ການສໍ້ລາດບັງຫຼວງ
- ມີຄ່າໃຊ້ຈ່າຍສູງ
- ບໍ່ສ້າງການແຂ່ງຂັນທາງດ້ານເສດຖະກິດຂອງສາກົນ
- ສົ່ງເສີມໃຫ້ເກີດມີການເອື່ອຍອີງ ແລະ ຂີ້ຄ້ານ
- ກ່ອນຈະລົງມືຈັດຕັ້ງປະຕິບັດ ຕ້ອງໄດ້ມີການຝຶກອົບຮົມຢ່າງຫຼວງຫຼາຍ - ບໍ່ມີຊັບພະຍາກອນ
- ການແກ້ໄຂຊ່ອງຫວ່າງຂອງລາຍໄດ້/ຄວາມບໍ່ສະເໝີພາບ ສາມາດແກ້ໄຂໄດ້ດ້ວຍວິທີອື່ນ, ວິທີອື່ນທີ່ດີກວ່າເຊັ່ນ- ໂດຍທາງເສດຖະສາດ “ ລະບົບເສດຖະກິດ ທີ່ຜູ້ທຸກຍາກໄດ້ຮັບຜົນປະໂຫຍດເມື່ອເສດຖະກິດມີການເຕີບໂຕ”
- ການປົກປ້ອງສັງຄົມ ສາມາດປ່ຽນແປງໄດ້ ຫຼື ຍົກເລີກໄດ້ - ລັດຖະທຳມະນູນຂອງພວກເຮົາບໍ່ຄົງທີ່ຢູ່ບ່ອນເກົ່າ
- ເພີ່ມຄວາມອັນຕະລາຍຂອງລະບົບປົກປ້ອງທີ່ຈຳກັດສິດເສລີພາບ ແລະ ຄວາມຮັບຜິດຊອບຂອງຜູ້ຢູ່ໃນການປົກຄອງ ແລະ ສ້າງພຶດຕິກຳທີ່ບໍ່ສ້າງແຮງຈູງໃຈ
- ການບໍລິຫານຂອງລັດເພີ່ມຂຶ້ນ ແລະ ໃຊ້ງົບປະມານຂອງລັດບໍ່ເປັນປະໂຫຍດ ແລະ ສິ້ນເປືອງງົບປະມານຂອງລັດ

**ຜູ້ທີ່ເຊື່ອ**

- ມີແນວທາງທີ່ຊັດເຈນເພື່ອຫຼີກລ່ຽງການຄຸ້ມຄອງບໍລິຫານທີ່ຜິດພາດ ເຊິ່ງສາມາດກວດກາຕິດຕາມຄວາມໂປ່ງໃສ ແລະ ຕິດຕາມຢ່າງເຂັ້ມງວດ
- ໂດຍປົກກະຕິ, ແມ່ນມີປະສິດທິພາບ
- ການປົກປ້ອງສັງຄົມສ້າງໃຫ້ຄົນໄດ້ເຂົ້າຮ່ວມທາງດ້ານເສດຖະກິດ
- ການສຶກສາຄົ້ນຄວ້າສະແດງໃຫ້ເຫັນວ່າ ໃນຕົວຈິງການປົກປ້ອງສັງຄົມໄດ້ປະກອບສ່ວນເຂົ້າໃນເສດຖະກິດແລະ ເຮັດເສດຖະກິດຂະຫຍາຍຕົວ ແລະ ຫຼຸດຜ່ອນຄວາມທຸກຍາກ ແລະການເອື່ອຍອີງ
- ການປົກປ້ອງສັງຄົມ ບໍລິການປະຊາຊົນ, ພີ່ນ້ອງຮ່ວມຊາດທີ່ມີຄວາມສ່ຽງທີ່ສຸດຂອງພວກເຮົາ, ແລະ ທຸກຄົນກໍເຫັນດີກັບການປົກປ້ອງສັງຄົມ ແລະ ກໍບໍ່ມີໃຜຈະຖົກຖຽງໄດ້.
- ການປົກປ້ອງສັງຄົມແມ່ນສິດທິມະນຸດ
- ກຳລັງແຮງງານທີ່ມີສຸຂະພາບດີ, ມີຄວາມສາມາດ ແລະ ມີສ່ວນຮ່ວມ ເປັນກຳລັງແຮງງານທີ່ດີ

**ແຫຼ່ງຂໍ້ມູນ:** Transform 2017

# ຫຼັກສູດ 2: ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ

## ▸ ພາກທີ 1: ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ

## ▸ ກິດຈະກຳ 12: ການສ້າງແຜນວາດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ກັບການປົກປ້ອງສັງຄົມທີ່ມີຢູ່ພາຍໃນແຂວງ

| | |
|---|---|
| **ເວລາ:** | 45 ນາທີ |
| **ຈຸດປະສົງ** | ເພື່ອໃຫ້ຜູ້ເຂົ້າຮ່ວມຄຸ້ນເຄີຍກັບເນື້ອໃນຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ແລະ ເຊື່ອມໂຍງໃສ່ແນວຄວາມຄິດ ແລະ ໂຄງສ້າງ. |
| **ອຸປະກອນ** | ▶ ພິມແຜ່ນພັບຂອງຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ (ຜູ້ລະໜຶ່ງຊຸດ1)<br>▶ ເຈ້ຍແຜ່ນໃຫຍ່ 6 ແຜ່ນ<br>▶ ບິກເຟີດ |
| **ການກະກຽມ** | ▶ ແຈກຢາຍແຜ່ນພັບຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ໃຫ້ຜູ້ເຂົ້າຮ່ວມແຕ່ລະຄົນ. |

| | |
|---|---|
| **ຂັ້ນຕອນ** | 1. ໃຫ້ຜູ້ເຂົ້າຮ່ວມນັ່ງເປັນກຸ່ມ 6 ຄົນ, ແຕກຕ່າງຈາກກຸ່ມໃນບົດຮຽນຜ່ານມາ.<br>2. ໃຫ້ຜູ້ເຂົ້າຮ່ວມແຕ່ລະຄົນໃຊ້ເວລາ 5 ນາທີ ອ່ານແຜ່ນພັບດ້ວຍຕົນເອງ.<br>3. ແຕ່ລະກຸ່ມສົນທະນາກັນເປັນເວລາ 30 ນາທີ ເພື່ອສ້າງແຜນວາດ ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ກັບການປົກປ້ອງສັງຄົມທີ່ມີຢູ່ພາຍໃນແຂວງ ລວມທັງລະບົບປະກັນສັງຄົມແຫ່ງຊາດ ແລະ ລະບົບປະກັນສຸຂະພາບແຫ່ງຊາດ.<br>4. ແຕ່ລະກຸ່ມບັນທຶກແຜນວາດຂອງຕົນໃສ່ເຈ້ຍແຜ່ນໃຫຍ່.<br>5. ຫຼັງຈາກເຮັດກິດຈະກໍາແລ້ວ ແມ່ນໃຫ້ນໍາສະເໜີຍຸດທະສາດປົກປ້ອງສັງຄົມແຫ່ງຊາດ ເພື່ອຢືນຢັນຄໍາຕອບຂອງເຂົາເຈົ້າ |

## ▶ ພາກທີ 2: ການລົງທຶນໃສ່ລະບົບປົກປ້ອງສັງຄົມ

## ▶ ກິດຈະກໍາ 13: ສາມ “A”: ການຂະຫຍາຍການລົງທຶນໃສ່ລະບົບປົກປ້ອງສັງຄົມ

| | |
|---|---|
| **ເວລາ:** | 45 ນາທີ |
| **ຈຸດປະສົງ** | ▶ ເພື່ອທົບທວນເບິ່ງສິ່ງກີດຂວາງ ແລະ ສິ່ງທີ່ເຮັດໃຫ້ເກີດການລົງທຶນໃສ່ລະບົບປົກປ້ອງສັງຄົມ ນອກຈາກແນວຄວາມຄິດທາງດ້ານເສດຖະກິດການເມືອງ - ການປະເມີນຄວາມເປັນໄປໄດ້ທີ່ແທ້ຈິງ ແລະ ທາງເລືອກດ້ານການເງິນອື່ນໆທີ່ເປັນໄປໄດ້. |
| **ອຸປະກອນ** | ▶ ພິມ ເອກະສານແຈກຢາຍ 5 (1 ຊຸດ)<br>▶ ເຈ້ຍແຜ່ນໃຫຍ່ 2 ແຜ່ນ<br>▶ ສະກອດຕິດເຈ້ຍ |
| **ການກະກຽມ** | ▶ ຕັດຕາມເສັ້ນຢູ່ໃນເອກະສານແຈກຢາຍ 5, ຕັດອອກເປັນ 4 ບັດ. |

- ຕໍ່ເຈ້ຍແຜ່ນໃຫຍ່ 2 ແຜ່ນໃສ່ກັນ(ຕໍ່ທາງຕັ້ງເພື່ອໃຫ້ໄດ້ຮູບສີ່ຫຼ່ຽມໃຫຍ່) ແລະ ແຕ້ມຮູບວົງມົນ 3 ວົງກວມກັນ, ໃສ່ຊື່ໃຫ້ແຕ່ລະວົງມົນຄື: ຍອມຮັບ, ອຳນາດ(ການຈັດຕັ້ງ), ຄວາມສາມາດ (ເບິ່ງຮູບຂ້າງລຸ່ມນີ້). ຕິດເຈ້ຍໃສ່ຝາໄວ້ເພື່ອໃຫ້ຜູ້ເຂົ້າຮ່ວມທຸກຄົນສາມາດເຕົ້າໂຮມກັນຢູ່ທາງຫນ້າໃນເວລາເຮັດກິດຈະກຳ.




**ຂັ້ນຕອນ**

1. ເຊີນຜູ້ເຂົ້າຮ່ວມສຶກສາສະໄລ້ທີ່ມີສາມວົງກວມກັນ: ການຍອມຮັບ, ອຳນາດ, ແລະ ຄວາມສາມາດ.
2. ອະທິບາຍຄຳສັບດ້ວຍການນຳໃຊ້ຄຳຖາມຢູ່ໃນຫ້ອງຂ້າງເທິງ ແລະ ຄຳຖາມດັ່ງຕໍ່ໄປນີ້:

**ອຳນາດ**

- ກົດໝາຍທີ່ມີຢູ່ອະນຸຍາດໃຫ້ທ່ານເຮັດໄດ້ບໍ?
- ໜ້າທີ່ ແລະ ຄວາມຮັບຜິດຊອບຂອງສະຖາບັນລັດສອດຄ່ອງກັນບໍ?
- ພາກເອກະຊົນຈະໃຫ້ການສະໜັບສະໜູນບໍ?
- ອຳນາດການປົກຄອງບ້ານ ແລະ ຊຸມຊົນຈະໃຫ້ການສະໜັບສະໜູນບໍ?

**ການຍອມຮັບ**

- ແນວຄວາມຄິດໄດ້ເປັນທີ່ຍອມຮັບບໍ?
- ຄ່າໃຊ້ຈ່າຍເປັນທີ່ຍອມຮັບບໍ?
- ການປຶກສາຫາລືກັບອົງການຈັດຕັ້ງຂອງຜູ້ໃຊ້ແຮງງານ, ຜູ້ອອກແຮງງານ ແລະ ອົງການຈັດຕັ້ງທາງສັງຄົມຊ່ວຍໄດ້ບໍ?
- ທ່ານສາມາດປັບປຸງລະດັບການຍອມຮັບໂດຍການສື່ສານທີ່ດີກ່ຽວກັບແນວຄວາມຄິດໄດ້ບໍ?

**ຄວາມສາມາດ**

- ມີພະນັກງານພຽງພໍໃນການວາງແຜນ ແລະ ຈັດຕັ້ງປະຕິບັດການປະຕິຮູບບໍ?
- ພະນັກງານມີທັກສະໃນການວາງແຜນ ແລະ ຈັດຕັ້ງປະຕິບັດການປະຕິຮູບບໍ?
- ຈຳເປັນຕ້ອງມີການຝຶກອົບຮົມໃຫ້ພະນັກງານບໍ?
- ຜູ້ຈັດຕັ້ງປະຕິບັດ ແລະ ປະຊາຊົນຮັບຮູ້ດີບໍ?
- ລະບົບພາສີອາກອນມີປະສິດທິພາບບໍ?

3. ແບ່ງຜູ້ເຂົ້າຮ່ວມອອກເປັນ 4 ກຸ່ມ ແລະ ແຈກບັດ ໜຶ່ງຂອງເອກະສານແຈກຢາຍ 5 (ປະກອບດ້ວຍ ຊ່ອງທາງໜຶ່ງໃນການແກ້ໄຂບັນຫາການສະໜອງທຶນ) ໃຫ້ແຕ່ລະກຸ່ມ:
   - ການລະດົມທຶນຜ່ານການຊ່ວຍເຫຼືອພາຍນອກ (ການຊ່ວຍເຫຼືອລ້າ)
   - ການເກັບອາກອນລາຍຮັບໃນຂະແໜງບໍ່ແຮ່
   - ເຮັດໃຫ້ກົນໄກການຊຳລະອາກອນ ແລະ ການຈ່າຍເງິນສົມທົບເຂົ້າປະກັນສັງຄົມງ່າຍຂຶ້ນ
   - ບັງຄັບໃຫ້ບໍລິສັດຂະໜາດໃຫຍ່ ແລະ ທຸລະກິດຂະໜາດໜ້ອຍ ແລະ ກາງປະຕິບັດການຈ່າຍເງິນສົມທົບເຂົ້າປະກັນສັງຄົມ (ຜ່ານກົນໄກການກວດກາ ແລະ ມາດຕະການລົງໂທດ)

4. ອີງຕາມຄວາມເຂົ້າໃຈຂອງເຂົາເຈົ້າຕໍ່ກັບຫົວຂໍ້ການລົງທຶນໃສ່ການປົກປ້ອງສັງຄົມ, ໃຫ້ເຂົາເຈົ້າສົນທະນາກັນຢູ່ພາຍໃນກຸ່ມວ່າວິທີການແກ້ໄຂບັນຫາການສະໜອງທຶນຢູ່ໃນບັດນັ້ນຕົກຢູ່ໃນວົງມົນໃດ,ໂດຍອີງໃສ່ສະພາບຈຸດພິເສດຂອງລາວ.

5. ບອກໃຫ້ແຕ່ລະກຸ່ມຢືນຂຶ້ນ ແລະ ນຳສະເໜີ "ຄຳຕອບ" ຂອງເຂົາເຈົ້າຕໍ່ກອງປະຊຸມ, ເອົາບັດໄປຕິດໃສ່ບ່ອນໃດໜຶ່ງໃນວົງມົນ.

6. ຖາມຜູ້ເຂົ້າຮ່ວມຄົນອື່ນໆໃນຫ້ອງວ່າເຫັນດີຫຼືບໍ່ເຫັນດີ... ໃຫ້ມີການໂຕ້ວາທີກັນເກີດຂຶ້ນຕໍ່ກັບປະເດັນດັ່ງກ່າວ!

7. ເມື່ອໄດ້ມີການປະເມີນທາງເລືອກທັງໝົດແລ້ວ, ໃຫ້ເບິ່ງວ່າມີທາງເລືອກໃດຢູ່ໃຈກາງ (ຂ້າງເທິງ ໄດ້ໝາຍໄວ້ວ່າ "ບັນລຸໄດ້" ), ແລະ ຖາມວ່າສິ່ງເຫຼົ່ານີ້ເບິ່ງຄືວ່າເປັນໄປໄດ້ແທ້ໆບໍ... ແລະ ເຂົາເຈົ້າຄວນຈະຈັດລຳດັບຄວາມສຳຄັນບໍ?

## ບັນທຶກຂອງຜູ້ອຳນວຍຄວາມສະດວກ

ບອກຜູ້ເຂົ້າຮ່ວມແລກປ່ຽນແນວຄວາມຄິດຂອງເຂົາເຈົ້າກ່ຽວກັບວິທີການທີ່ເຂົາເຈົ້າສາມາດດຳເນີນການແກ້ໄຂບັນຫາບູລິມະສິດໃນລະບົບປົກປ້ອງສັງຄົມຂອງເຂົາເຈົ້າ. ຂັ້ນຕອນທຳອິດທີ່ເຂົາເຈົ້າສາມາດປະຕິບັດໄດ້ຢູ່ໃນຂອບເຂດການຄວບຄຸມຂອງຕົນເອງແມ່ນຫຍັງ. ຖ້າບາງທາງເລືອກຢູ່ເໜືອຄວາມສາມາດຂອງເຂົາເຈົ້າ ຕ້ອງໄດ້ມີການປັບປຸງຕາມຄຳຖາມແນະນຳ ແລ້ວກໍຈະສາມາດຍ້າຍທາງເລືອກນັ້ນໃຫ້ສາມາດບັນລຸໄດ້.

## ▶ ເອກະສານແຈກຢາຍ 5: ບັດສາມ A

| | |
|---|---|
| ການລະດົມທຶນ<br>ຜ່ານການຊ່ວຍເຫຼືອພາຍນອກ<br>(ການຊ່ວຍເຫຼືອລ້າ) | ນຳໃຊ້ລາຍຮັບຈາກອາກອນໃນ<br>ຂະແໜງບໍ່ແຮ່ |
| ເຮັດໃຫ້ກົນໄກ ການຈ່າຍເງິນ<br>ສົມທົບເຂົ້າປະກັນສັງຄົມ<br>ງ່າຍຂຶ້ນ | ກວດກາ ແລະ ບັງຄັບໃຫ້<br>ວິສາຫະກິດປະຕິບັດພັນທະ<br>ການ ເຂົ້າເປັນສະມາຊິກກອງ<br>ທຶນປະກັນສັງຄົມ |

## ▶ ພາກທີ 3: ບາດກ້າວຕໍ່ໄປຂອງຍຸດທະສາດການປົກປ້ອງ ສັງຄົມແຫ່ງຊາດ (NSPS)

## ▶ ກິດຈະກຳ14: ການຈັດຕັ້ງປະຕິບັດຍຸດທະສາດປົກປ້ັງສັງຄົມ ຢູ່ຂັ້ນແຂວງສັງຄົມແຫ່ງຊາດ (NSPS)

| | |
|---|---|
| ເວລາ: | 30 ນາທີ |
| ຈຸດປະສົງ | ▶ ເພື່ອກຳນົດສິ່ງທ້າທາຍທົ່ວໄປໃນການປະຕິບັດວຽກງານປົກປ້ອງສັງຄົມຢູ່ໃນແຂວງ.<br>▶ ເພື່ອກຳນົດສິ່ງທີ່ເປັນບູລິມະສິດຢູ່ໃນແຂວງຂອງຜູ້ເຂົ້າຮ່ວມ |

| | |
|---|---|
| **ອຸປະກອນ** | ▶ ເຈ້ຍແຜ່ນໃຫຍ່ ( 1 ແຜ່ນຕໍ່ກຸ່ມ) |
| **ການກະກຽມ** | ▶ ຈັດຜູ້ເຂົ້າຮ່ວມເປັນກຸ່ມຕາມແຂວງຂອງເຂົາເຈົ້າ |
| **ຂັ້ນຕອນ** | 1. ແຕ່ລະກຸ່ມຕ້ອງແຕ່ງຕັ້ງຄົນຫນຶ່ງໃຫ້ອຳນວຍຄວາມສະດວກ/ນຳພາການສົນທະນາ ໃນກຸ່ມ ແລະ ແຕ່ງຕັ້ງອີກຄົນໜຶ່ງເປັນຜູ້ຂຽນໃສ່ເຈ້ຍແຜ່ນໃຫຍ່ ແລະ ສະເໜີຜົນ ການສົນທະນາໃນກຸ່ມຕໍ່ຫ້ອງປະຊຸມ.<br>2. ກຳນົດໂຄງການປົກປ້ອງສັງຄົມທີ່ມີຢູ່ໃນແຂວງຂອງຕົນ.<br>3. ສົນທະນາໃນກຸ່ມຕາມຄຳຖາມຕໍ່ໄປນີ້:<br>a. ການຈັດຕັ້ງປະຕິບັດໂຄງການປົກປ້ອງສັງຄົມຢູ່ໃນແຂວງຂອງທ່ານພົບກັບອຸປະສັກ ແລະ ສິ່ງທ້າທາຍອັນໃດແດ່?<br>b. ວິທີການແກ້ໄຂສິ່ງທ້າທາຍເຫຼົ່ານີ້ມີຫຍັງແດ່?<br>c. ໃນການປົກປ້ອງສັງຄົມທ່ານຕ້ອງການຈັດລຳດັບຄວາມສຳຄັນໃນດ້ານໃດແດ່?<br>d. ທ່ານຕ້ອງການການສະຫນັບສະຫນູນປະເພດໃດຈາກລັດຖະບານຂັ້ນສູນກາງໃນ ການປະຕິບັດວຽກງານນີ້?<br>4. ແຕ່ລະກຸ່ມນຳສະເຫນີຜົນການສົນທະນາຕໍ່ກອງປະຊຸມ.<br>5. ສະມາຊິກໃນກຸ່ມເພີ່ມຂໍ້ມູນເພີ່ມເຕີມຖ້າມີອັນໃດຍັງບໍ່ຄົບຖ້ວນ |





# ຊຸດການຮຽນ
# ການປົກປ້ອງ
# ສັງຄົມ

# ສາລະບານ


**ຫຼັກສູດທີ 1: ການແນະນໍາເຂົ້າສູ່ການປົກປ້ອງສັງຄົມ** **54**

ພາກທີ1: ຄວາມສ່ຽງ ແລະ ວິທີການແກ້ໄຂບັນຫາຢູ່ໃນຊຸມຊົນ 54
ພາກທີ 2: ແນວຄວາມຄິດພື້ນຖານ ແລະ ຄວາມເປັນມາຂອງການປົກປ້ອງສັງຄົມ 56
ການປົກປ້ອງສັງຄົມແມ່ນຫຍັງ? 56
ມາດຕະຖານສາກົນຕໍ່ກັບການປົກປ້ອງສັງຄົມ 57
ການປົກປ້ອງສັງຄົມຂັ້ນພື້ນຖານແມ່ນຫຍັງ? 61
ການຂະຫຍາຍການປົກປ້ອງສັງຄົມ: ວິທີການແບບຂັ້ນໄດ 63
ຄໍາສັບ ແລະ ຄໍານິຍາມການປົກປ້ອງສັງຄົມຢູ່ໃນຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ 64
ພາກທີ 3: ລະບົບການປົກປ້ອງສັງຄົມຢູ່ ສປປ ລາວ 66
ລະບົບການປົກປ້ອງສັງຄົມຢູ່ ສປປ ລາວ 67
ພາກທີ 4: ພາລະບົດບາດຂອງການປົກປ້ອງສັງຄົມ 74
ການປົກປ້ອງສັງຄົມ: ຄວາມຈິງ ຫລື ຄວາມເຊື່ອທີ່ຜິດ? 74
ພາລະບົດບາດສໍາຄັນຂອງການປົກປ້ອງສັງຄົມ: 75
ພາກທີ 5: ການກໍານົດເປົ້າໝາຍເພື່ອການປົກປ້ອງສັງຄົມ 78
ວິທີການກໍານົດເປົ້າໝາຍທີ່ສໍາຄັນ 79
ພາກທີ 6: ປະເພດຂອງການປົກປ້ອງສັງຄົມ: ແບບມີເງື່ອນໄຂ 83
ການໂຕ້ແຍ້ງຕໍ່ກັບການອຸດໜູນແບບມີເງື່ອນໄຂ 83

**ຫຼັກສູດ 2: ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ** **88**

ພາກທີ 1: ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ 88
ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ 88
ພາກທີ 2: ການລົງທຶນໃສ່ການປົກປ້ອງສັງຄົມ 94
ປະເທດອື່ນເຂົາລົງທຶນໃສ່ການປົກປ້ອງສັງຄົມເທົ່າໃດ? 94
ຫຼັກການທີ່ຄວນຊີ້ນໍາການລະດົມທຶນເຂົ້າໃນວຽກງານປົກປ້ອງສັງຄົມ 96
ລັດມີຄວາມຮັບຜິດຊອບຫຍັງແດ່ຕໍ່ກັບການລະດົມທຶນເຂົ້າໃນການປ້ອງສັງຄົມ? 96
ການລະດົມທຶນ ເພື່ອສ້າງງົບປະມານເຂົ້າໃນການປົກປ້ອງສັງຄົມ 96

**ຫຼັກສູດ 3:ການອໍານວຍຄວາມສະດວກ ແລະ ການກະກຽມ** **104**

ພາກທີ 1: ບົດບາດຂອງຜູ້ອໍານວຍຄວາມສະດວກ 104
ພາກທີ 2: ເຕັກນິກໃນການອໍານວຍຄວາມສະດວກ 106
ພາກທີ 3:ສິ່ງທ້າທາຍຂອງຜູ້ອໍານວຍຄວາມສະດວກ 109
ພາກທີ 4: ການວາງແຜນ ແລະ ການກະກຽມ 112

**ການປະເມີນຜົນ ແລະ ການສັງລວມຄືນ** **115**

ການປະເມີນຜົນ ມື້ທີ 1 116
ການທວນຄືນ ມື້ທີ 1 118
ການປະເມີນຜົນມື້ທີ2 119
ການທວນຄືນ ມື້ທີ 2 121

**ການສະຫຼຸບສັງລວມ ແລະ ການປະເມີນຜົນມື້ທີ 3** **122**

ເອກະສານຊ້ອນທ້າຍ I.ການປະເມີນກ່ອນຝຶກອົບຮົມ 124
ເອກະສານຊ້ອນທ້າຍ II. ການປະເມີນຫຼັງຝຶກອົບຮົມ 126
ເອກະສານຊ້ອນທ້າຍ III. ບັນຊີກວດກາ ການຝຶກອົບຮົມ 129

**ເອກະສານອ້າງອີງ** **135**

# ຫຼັກສູດທີ 1: ພາກສະເໜີກ່ຽວກັບການປົກປ້ອງສັງຄົມ

## ▶ ພາກທີ1: ຄວາມສ່ຽງ ແລະ ວິທີການແກ້ໄຂບັນຫາຢູ່ໃນຊຸມຊົນ

ຄວາມທຸກຍາກ ແລະ ຄວາມບໍ່ຫມັ້ນຄົງ ແມ່ນມີຫລາຍສາເຫດ, ແຕ່ສ່ວນຫລາຍແລ້ວແມ່ນພົວພັນກັບຊ່ວງໄລຍະເວລາຢູ່ໃນວົງຈອນຊີວິດຂອງບຸກຄົນ. ແຕ່ລະຄົນໄດ້ປະເຊີນກັບສິ່ງທ້າທາຍ ແລະ ຄວາມສ່ຽງຢູ່ໃນແຕ່ລະຊ່ວງໄລຍະເວລາຂອງຊີວິດຂອງພວກເຂົາ, ເຊິ່ງຍັງໄດ້ສົ່ງຜົນກະທົບຕໍ່ເຄືອຂ່າຍສັງຄົມໃນວົງກວ້າງ, ລວມທັງຄອບຄົວ, ຄົວເຮືອນ, ກຸ່ມພີ່ນ້ອງ, ແລະ ຊຸມຊົນຂອງພວກເຂົາ. ປະເພດຂອງສິ່ງທ້າທາຍທີ່ບຸກຄົນປະເຊີນຢູ່ນັ້ນໄດ້ເຮັດໃຫ້ພວກເຂົາມີຄວາມສ່ຽງຕໍ່ການຕົກຢູ່ໃນມາດຕະຖານການດຳລົງຊີວິດທີ່ແຕກຕ່າງກັນ ເນື່ອງຈາກຄົນເຮົາໄດ້ຂ້າມຜ່ານເສັ້ນທາງຊີວິດ (Transform, 2017)

### ຄວາມສ່ຽງໃນຕະຫຼອດວົງຈອນຊີວິດ




**Source:** Development Pathways

ແມ່ຍິງມີຄວາມສ່ຽງ ແລະ ຄວາມບອບບາງສະເພາະຕະຫລອດຊ່ວງໄລຍະເວລາຂອງຊີວິດ. ຄວາມສ່ຽງທີ່ແມ່ຍິງປະເຊີນຢູ່ໃນຊີວິດປະຈຳວັນຂອງເຂົາເຈົ້າຢູ່ປະເທດກຳລັງພັດທະນາ ແມ່ນຖືກສ້າງຂຶ້ນແຕກຕ່າງກັນກັບຜູ້ຊາຍໃນດ້ານລັກສະນະທາງຊີວະສາດ ແລະ ບັນທັດຖານທາງສັງຄົມ ແລະ ຄວາມແຕກຕ່າງໃນຕະຫຼອດວົງຈອນຊີວິດ. ສິ່ງເຫຼົ່ານີ້ໄດ້ເຮັດໃຫ້ແມ່ຍິງມີຄວາມສ່ຽງຕໍ່ການຕົກຢູ່ໃນເຫດການສູກເສີນທາງດ້ານລາຍຮັບ ແລະ ເຮັດໃຫ້ເຂົາເຈົ້າບໍ່ມີຄວາມສາມາດທີ່ຈະຖ້ອນເງິນໄວ້ສຳລັບຍາມເຖົ້າແກ່ (Cameron 2019).

**ຄວາມສ່ຽງ ແລະ ຄວາມບອບບາງສະເພາະຂອງແມ່ຍິງໃນຕະຫຼອດວົງຈອນຊີວິດ:**

### ໄວໜຸ່ມ

- ຄວາມສ່ຽງດ້ານສຸຂະພາບທີ່ກ່ຽວຂ້ອງກັບການເກີດລູກ ແລະ ກິດຈະກຳທາງເພດ ມາດຖານທາງສັງຄົມ ແລະການຖືກຈຳແນກ
- ຄວາມບໍ່ຫມັ້ນຄົງໃນອາຊີບຍ້ອນການຖືພາ ແລະ ລ້ຽງລູກ
- ການຢ່າຮ້າງ
- ຂາດການເຂົ້າເຖິງສະຖາບັນການເງິນ ແລະ ໂອກາດໃນການສ້າງຊັບສິນ

### ໄວກາງຄົນ

- ຄວາມບໍ່ໝັ້ນຄົງໃນອາຊີບ ແລະ ຜົນຜະລິດຫຼຸດລົງຍ້ອນວ່າຕ້ອງດູແລເດັກ ແລະ ຜູ້ສູງອາຍຸ
- ຄ່າໃຊ້ຈ່າຍຕໍ່ການເສຍຊີວິດ ແລະ ການເຈັບເປັນ
- ຄ່າໃຊ້ຈ່າຍທາງສັງຄົມ ງານແຕ່ງຂອງລູກ, ງານສົບ, ແລະ ພິທີກຳອື່ນໆ

### ໄວສູງອາຍຸ

- ການເປັນໝ້າຍ
- ການສູນເສຍຊັບສິນ
- ຄວາມສ່ຽງຕໍ່ລາຍຮັບຈາກເງິນບຳນານທີ່ບໍ່ພຽງພໍ

**Source:** Lund and Srinivasan 2000

ເພື່ອຫຼີກລ່ຽງກັບຄວາມທຸກຍາກ ໂດຍທົ່ວໄປແລ້ວກຸ່ມຄົນ ຫຼື ບຸກຄົນທີ່ມີຄວາມສ່ຽງ/ບອບບາງໄດ້ນຳໃຊ້ຍຸດທະສາດໃນການຮັບມືກັບຄວາມທຸກຍາກທີ່ບໍ່ເປັນທາງການ ແລະ ເປັນທາງລົບເຊັ່ນ:

- ການກູ້ຢືມເງິນ
- ການນຳເອົາເງິນເກັບອອກມາໃຊ້
- ຫຼຸດຜ່ອນເຄື່ອງບໍລິໂພກທີ່ບໍ່ແມ່ນອາຫານ
- ຫຼຸດຜ່ອນການບໍລິໂພກທີ່ແມ່ນອາຫານ
- ສະລໍການຈ່າຍເງິນພັນທະ
- ຂາຍຊັບສິນ
- ຊື້ເຄື່ອງໃຊ້ຈຳເປັນດ້ວຍເງິນສິນເຊື່ອ
- ກວດເຊັກສຸຂະພາບລ່ວງໜ້າສຳລັບຕົນເອງ ຫຼືສະມາຊິກໃນຄອບຄົວ
- ຈຳນຳຊັບສິນເພື່ອເອົາເງິນສົດ
- ສະມາຊິກບາງຄົນຕ້ອງຍົກຍ້າຍ
- ຂາຍຊັບສິນ
- ເອົາລູກອອກໂຮງຮຽນ (WIEGO 2020)

ທຸກຄົນແມ່ນມີຄວາມສ່ຽງ, ແຕ່ຜູ້ທຸກຍາກແມ່ນມີຄວາມສ່ຽງໂດຍສະເພາະ ຍ້ອນວ່າພວກເຂົາມີຊັບສິນໜ່ອຍ, ເງິນທ້ອນໜ່ອຍ ຫຼື ບໍ່ມີໂອກາດທາງເສດຖະກິດ - ສັງຄົມອື່ນໆ.

# ▸ ພາກທີ 2: ແນວຄວາມຄິດພື້ນຖານ ແລະ ຄວາມເປັນມາຂອງການປົກປ້ອງສັງຄົມ

**ການປົກປ້ອງສັງຄົມແມ່ນຫຍັງ?**

ຄົນເຮົາປະເຊີນກັບຄວາມສ່ຽງ ຫຼື ເຫດການສຸກເສີນໃນຮອບວຽນຊີວິດ, ເຊິ່ງມີຜົນສະທ້ອນທາງການເງິນ:




ການປົກປ້ອງສັງຄົມແມ່ນສະໜອງໃຫ້ແກ່ສະມາຊິກໃນສັງຄົມ ເພື່ອປົກປ້ອງເຂົາເຈົ້າຈາກຄວາມຫຍຸ້ງຍາກທາງເສດຖະກິດ ແລະ ສັງຄົມ ທີ່ເກີດຈາກເຫດການສຸກເສີນ. ມັນແມ່ນ **ຊຸດນະໂຍບາຍ ແລະ ແຜນງານ**ທີ່ຖືກອອກແບບມາເພື່ອຊ່ວຍ**ຫລຸດຜ່ອນ ແລະ ປ້ອງກັນຄວາມທຸກຍາກ, ຄວາມດ້ອຍໂອກາດ** ແລະ **ການຖືກຈຳແນກອອກຈາກ ສັງຄົມ**ຕະຫລອດ**ວົງຈອນຊີວິດ.**

## ມາດຕະຖານສາກົນຕໍ່ກັບການປົກປ້ອງສັງຄົມ

ມາດຕະຖານສາກົນ ໄດ້ວາງພັນທະ ແລະ ຂໍ້ແນະນຳໃຫ້ບັນດາປະເທດຕ່າງໆໄດ້ປະຕິບັດຕາມ. ມາດຕະຖານເຫລົ່ານີ້ ຊ່ວຍໃນການຮ່າງກົດໝາຍ ແລະ ລະບຽບການ ແລະ ໃນການອອກແບບ ແລະ ຈັດຕັ້ງປະຕິບັດໂຄງການປົກປ້ອງສັງຄົມ.
ສປປ ລາວ ໄດ້ເປັນພາຄີກັບປະຊາຄົມສາກົນໃນສົນທິສັນຍາ ແລະ ຂໍ້ແນະນຳທີ່ສຸມໃສ່ສິດທີໃນການເຂົ້າເຖິງການປົກປ້ອງສັງຄົມ ແລະ ການພັດທະນາລະບົບປົກປ້ອງສັງຄົມເປັນຕົ້ນ:

- **ຖະແຫລງການວ່າດ້ວຍສິດທິມະນຸດ (1948)** –. ໄດ້ລະບຸການປົກປ້ອງສັງຄົມເປັນສິດທິທາງສັງຄົມ ແລະ ເສດຖະກິດ ຊຶ່ງໃນມາດຕາ 22 ແລະ ມາດຕາ 25 ລະບົບປົກປ້ອງສັງຄົມເປັນສິດທີສຳລັບທຸກຄົນໃນການເຂົ້າເຖິງການປິ່ນປົວ ສຸຂະພາບ, ການສຶກສາ, ວຽກທີ່ມີຄຸນຄ່າ ແລະ ເປັນທຳ, ມາດຕະຖານການດຳລົງຊີວິດທີ່ພຽງພໍ ຕະຫຼອດໄລຍະຮອບວຽນໃນການດຳລົງຊີວິດ.

- **ສົນທິສັນຍາສາກົນ ວ່າດ້ວຍສິດທິດ້ານເສດຖະກິດ, ສັງຄົມ ແລະ ວັດທະນາທຳ** (ຄຳແນະນຳທົ່ວໄປ ເລກທີ 19 ວ່າດ້ວຍສິດທິໃນການເຂົ້າເຖິງການປະກັນສັງຄົມ) (1966) ໄດ້ລະບຸສິດທິໃນການໄດ້ຮັບການປົກປ້ອງສັງຄົມ ຊຶ່ງມາດຕາ 9,11,12 ແລະ 13 ໄດ້ ກຳນົດການປະກັນສັງຄົມ ແລະ ມາດຕາອື່ນ ໄດ້ກຳນົດວ່າທຸກຄົນຕ້ອງດຳລົງຊີວິດຢູ່ໃນເກນທີ່ບໍ່ຕ່ຳກ່ວາມາດຕະຖານໃນການດຳລົງຊີວິດ ແລະ ທຸກຄົນຕ້ອງສາມາດເຂົ້າເຖິງການບໍລິການສັງຄົມທີ່ຈຳເປັນ

- **ສົນທິສັນຍາ ວ່າດ້ວຍມາດຕະຖານປະກັນສັງຄົມຂັ້ນພື້ນຖານ ສະບັບເລກທີ 102 ປີ 1952** ແລະ **ຂໍ້ແນະນຳຂອງ ອົງການແຮງງານສາກົນ ວ່າດ້ວຍການປົກປ້ອງສັງຄົມຂັ້ນພື້ນຖານ ສະບັບເລກທີ 202** ໄດ້ເປັນແນວທາງໃຫ້ກັບປະເທດສະມາຊິກສາມາດກຳນົດການປົກປ້ອງສັງຄົມຂັ້ນພື້ນຖານໃນປະເທດຂອງຕົນ ແລະ ຢ້ຳໃຫ້ເຫັນວ່າປະເທດໃດກໍສາມາດສະໜອງການປົກປ້ອງສັງຄົມຂັ້ນພື້ນຖານໄດ້ ໂດຍສາມາດນຳສະ ເໜີ, ພັດທະນາ ແລະ ສືບຕໍ່ດຳເນີນການປົກປ້ອງສັງຄົມຂັ້ນພື້ນຖານໃນປະເທດຕົນ ໂດຍອີງຕາມຄວາມສາມາດ ແລະ ສະພາບຂອງແຕ່ລະປະເທດ.




ແຫຼ່ງຂໍ້ມູນ: ILO, 2020

## ຫລັກການຕ່າງໆຢູ່ໃນສົນທິສັນຍາເລກທີ 102

| | |
|---|---|
| **ພັນທະຂອງລັດ** | ▶ ສະໜອງ ແລະ ຮັບປະກັນການອຸດໜູນຕາມທີ່ໄດ້ລະບຸໄວ້ຢູ່ໃນກົດໝາຍ<br>▶ ຮັບປະກັນການປະຕິບັດວຽກງານຂອງລະບົບໃຫ້ມີຄວາມເໝາະສົມເຊັ່ນ: ຊີ້ນໍາ ແລະ ບໍລິຫານສະຖາບັນ ແລະ ການບໍລິການທີ່ກ່ຽວຂ້ອງ |
| **ຄວາມພຽງພໍ ແລະ ການຄາດຄະເນ** | ▶ ການອູດໜູນຕ້ອງດັດປັບໃຫ້ແທດເໝາະກັບຄ່າຄອງຊີບ ແລະ ລາຍຮັບທົ່ວໄປ<br>▶ ກໍານົດການອຸດໜູນລ່ວງໜ້າ ແລະ ເປັນໄລຍະໃນລະດັບຕໍ່າ |
| **ການປະກອບທຶນສົມທົບ** | ▶ ຄ່າໃຊ້ຈ່າຍຕ້ອງມາຈາກການປະກອບທຶນສົມທົບຂອງຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານ ແລະ /ຫລື ພາສີອາກອນ, ແລະ ຫລີກລ້ຽງຄວາມທຸກຍາກ |
| **ສິດທີໃນການອຸທອນ** | ▶ ມີສິດທີ່ຈະອຸທອນໃນກໍລະນີຖືກປະຕິເສດການອຸດໜູນ ຫລື ຮ້ອງຮຽນກ່ຽວກັບຄຸນນະພາບ ແລະ ປະລິມານຂອງການອຸດໜູນ |
| **ຄວາມຄືບໜ້າ** | ▶ ຂະຫຍາຍການປົກຄຸມເທື່ອລະກ້າວ |

## ຫລັກການຕ່າງໆຢູ່ໃນຄໍາແນະນໍາເລກທີ 202

| | |
|---|---|
| **ທົ່ວປວງຊົນ** | ▶ ການປົກຄຸມຜູ້ຢູ່ອາໃສທົ່ວປວງຊົນ |
| **ບໍ່ຈໍາແນກ** | ▶ ບົນພື້ນຖານການປະຕິບັດເທົ່າທຽມກັນ (ແລະ ຄວາມສະເໝີພາບຍິງຊາຍ)<br>▶ ການຕອບສະໜອງຄວາມຕ້ອງການອັນເປັນພິເສດ<br>▶ ການມີສ່ວນຮ່ວມໃນສັງຄົມ, ລວມທັງເສດຖະກິດນອກລະບົບ |
| **ຄວາມໂປ່ງໃສ** | ▶ ສາມາດກວດສອບໄດ້ ແລະ ມີການຄຸ້ມຄອງ ແລະ ບໍລິການການເງິນເປັນຢ່າງດີ |
| **ສິດທິ ແລະ ກຽດສັກສີ** | ▶ ເຄົາລົບສິດທິ ແລະ ກຽດສັກສີຂອງປະຊາຊົນ<br>▶ ເຄົາລົບການຕໍ່ລອງລວມໝູ່ ແລະ ເສລີພາບໃນການຈັດຕັ້ງສະມາຄົມຂອງຊາວຜູ້ອອກແຮງງານຢ່າງເຕັມຮູບແບບ |

| | |
|---|---|
| **ການສະໜອງບໍລິການ** | ▶ ສະໜອງ ແລະ ຮັບປະກັນການອຸດໜູນຕາມທີ່ໄດ້ລະບຸໄວ້ຢູ່ໃນກົດໝາຍ |
| **ການປະເມີນຜົນ** | ▶ ຮັບປະກັນການປະຕິບັດວຽກງານຂອງລະບົບໃຫ້ມີຄວາມເໝາະສົມເຊັ່ນ: ຊີ້ນໍາ ແລະ ບໍລິຫານສະຖາບັນ ແລະ ການບໍລິການທີ່ກ່ຽວຂ້ອງ |

ເປົ້າໝາຍການພັດທະນາແບບຍືນຍົງ ຫລື SDGs ມີຈຸດປະສົງເພື່ອຫຼຸດຜ່ອນຄວາມທຸກຍາກ ແລະ ເພື່ອຊຸກຍູ້ຄວາມຍືນຍົງຂອງການພັດທະນາ ແລະ ຮັກສາສິ່ງແວດລ້ອມໃນສັງຄົມທີ່ມີຄວາມກົມກຽວກັນ, ເປົ້າໝາຍການພັດທະນາແບບຍືນຍົງ ໄດ້ຮັບການຈັດຕັ້ງຜັນຂະຫຍາຍ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ VIII ຊຶ່ງເປັນບູລິມະສິດທີ່ລັດຖະບານ ຈະຕ້ອງສຸມໃສ່ຈັດຕັ້ງປະຕິບັດໃຫ້ບັນລຸຮອດປີ 2030 ແລະ ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດສະບັບນີ້ ສະທ້ອນໃຫ້ເຫັນເຖິງຄວາມເອົາໃຈໃສ່ຂອງລັດຖະບານໃນການບັນລຸເປົ້າໝາຍດັ່ງກ່າວນີ້.ດັ່ງນັ້ນ, ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດຈຶ່ງລະມັດລະວັງເລືອກເປົ້າຫມາຍແລະຈຸດປະສົງ ເພື່ອຊ່ວຍໃຫ້ບັນລຸຄາດຫມາຍ SDG ທີ່ເຊື່ອມຕໍ່ໂດຍກົງກັບການປົກປ້ອງສັງຄົມ. ການຂະຫຍາຍຕົວເລກການປົກປ້ອງສັງຄົມເປັນວິທີການເພື່ອບັນລຸເປົ້າຫມາຍ / ຄາດໝາຍການພັດທະນາແບບຍືນຍົງຈໍານວນຫນຶ່ງເຊັ່ນ:




**ເປົ້າໝາຍ 1.3**

ສ້າງຕັ້ງລະບົບປົກປ້ອງສັງຄົມສໍາລັບທຸກຄົນ




**ເປົ້າໝາຍ 3.8**

ບັນລຸເປົ້າໝາຍປົກຄຸມສຸຂະ ພາບທົ່ວປວງຊົນ




**ເປົ້າໝາຍ 5.4**

ຮັບຮູ້ ແລະ ໃຫ້ຄຸນຄ່າຂອງການເບິ່ງແຍງ ແລະ ການເຮັດວຽກເຮືອນທີ່ບໍ່ມີລາຍຮັບ




**ເປົ້າໝາຍ 8.5**

ໃນປີ 2023, ບັນລຸເປົ້າໝາຍການມີວຽກເຮັດງານທໍາແບບເຕັມສ່ວນ, ມີປະສິດທິຜົນ ແລະ ມີຄຸນຄ່າສໍາຫຼັບທຸກຄົນ




**ເປົ້າໝາຍ 10.4**

ຮັບຮອງນະໂຍບາຍ ແລະ ບັນລຸຄວາມສະເໝີພາບອັນຍິ່ງໃຫຍ່ ແລະ ຕໍ່ເນື່ອງ

## ການປົກປ້ອງສັງຄົມຂັ້ນພື້ນຖານແມ່ນຫຍັງ?

ການປົກປ້ອງສັງຄົມຂັ້ນພື້ນຖານ ໝາຍເຖິງ ຫຼັກຄໍ້າປະກັນສັງຄົມຂັ້ນພື້ນຖານໃນລະດັບຊາດ ເພື່ອ ປ້ອງກັນ ຫລື ລຶບລ້າງຄວາມທຸກຍາກ, ຄວາມດ້ອຍໂອກາດ/ບອບບາງ, ແລະ ການຖືກຈຳແນກອອກຈາກສັງຄົມຂອງໝົດທຸກຄົນ, ໂດຍສະເພາະໃຫ້ບູລິມະສິດແກ່ ເດັກນ້ອຍ, ຜູ້ອາຍຸສູງ, ພິການ, ແລະ ຜູ້ວ່າງງານເປັນຕົ້ນ.

ການປົກປ້ອງສັງຄົມຂັ້ນພື້ນຖານ ສາມາດກຳນົດຢູ່ໃນ 4 ຫຼັກຄໍ້າປະກັນດັ່ງນີ້:

- **ການປິ່ນປົວສຸຂະພາບທີ່ຈຳເປັນພື້ນຖານ**, ລວມທັງການດູແລແມ່ເກີດລູກທັງຫມົດ
- ການຄໍ້າປະກັນລາຍຮັບຂັ້ນພື້ນຖານສຳລັບ**ເດັກນ້ອຍ**, ແລະ ການເຂົ້າເຖິງໂພຊະນາການ, ການເບິ່ງແຍງ ແລະ ການສຶກສາ
- ການຄໍ້າປະກັນລາຍຮັບຂັ້ນພື້ນຖານສຳລັບ**ຄົນໃນໄວເຮັດວຽກ**, ເຈັບປ່ວຍ, ວ່າງງານ, ເກີດລູກ, ພິການ, ແລະອື່ນໆ.
- ເງິນອຸດໜູນ, ການດູແລ, ແລະ ການບໍລິການສຳລັບ**ຜູ້ອາຍຸສູງ ແລະ ຄົນພິການ**

### 4 ຫຼັກຄໍ້າປະກັນການປົກປ້ອງສັງຄົມຂັ້ນພື້ນ ແລະ ນະໂຍບາຍການປົກປ້ອງສັງຄົມທົ່ວໄປ

| **ກອງທຶນຈ່າຍເງິນສົບທົບ** (ອຸດໜູນທີ່ໄດ້ຮັບຈາກການສົບທົບທຶນ ຫຼື ຈາກການຖືກປົກຄຸມແບບທົ່ວປວງຊົນ) | | **ການປົກປ້ອງສັງຄົມຂັ້ນພື້ນຖານ** | | **ກອງທຶນບໍ່ປະກອບເງິນສົມທົບ** (ອຸດໜູນທີ່ໄດ້ຮັບໂດຍບໍ່ມີການສົມທົບທຶນ, ໃນກໍລະນີທີ່ຈຳເປັນ ຫຼື ທຸກຍາກ ຫຼື ບໍ່ມີເງື່ອນໄຂໃດໆເລີຍ, ປົກກະຕິແລ້ວແມ່ນໄດ້ຮັບການສະໜອງທຶນຈາກການເກັບອາກອນ ແລະ / ຫຼືການຊ່ວຍເຫຼືອການພັດທະນາ) |
|---|---|---|---|---|
| ອຸດໜູນປິ່ນປົວສຸຂະພາບສຳລັບສະມາຊິກປະກັນສັງຄົມ / ປະກັນສຸຂະພາບ | → | ການເຂົ້າເຖິງການບໍລິການສາທາລະນະສຸກທີ່ຈຳເປັນພື້ນຖານ | ← | ໄດ້ຮັບເງິນຖົມຊຸມ ຫຼື ຮັບປິ່ນປົວຟຣີ (ເຊັ່ນ: ຜູ້ບໍ່ມີປະກັນ, ຜູ້ທຸກຍາກ, ເດັກນ້ອຍ, ຜູ້ທີ່ຢູ່ໃນໄວຈະເລີນພັນ ຫຼື ໄວອາຍຸສູງ) |
| ອຸດໜູນລູກ ແລະ ຄອບຄົວ ສຳລັບຜູ້ປະກັນຕົນ | → | ຄໍ້າປະກັນລາຍຮັບພື້ນຖານສຳລັບເດັກນ້ອຍ, ແລະ ເຂົ້າເຖິງໂພຊະນາການ, ການດູແລເບິ່ງແຍງ ແລະ ການສຶກສາ | ← | ໄດ້ຮັບເງິນຖົມຊຸມ ຫຼື ຮັບປິ່ນປົວຟຣີ (ເຊັ່ນ: ຜູ້ບໍ່ມີປະກັນ, ຜູ້ທຸກຍາກ, ເດັກນ້ອຍ, ຜູ້ທີ່ຢູ່ໃນໄວຈະເລີນພັນ ຫຼື ໄວສູງອາຍຸ) |
| ມີເງິນອຸດໜູນໄລຍະສັ້ນ ກໍລະນີທີ່ເຈັບປ່ວຍ, ວ່າງງານ, ເກີດລູກ ແລະ ປະສົບອຸບັດເຫດຈາກການເຮັດວຽກ. | → | ຄໍ້າປະກັນລາຍຮັບຂັ້ນພື້ນຖານສຳລັບປະຊາກອນໃນໄວເຮັດວຽກ, ທີ່ເຈັບປ່ວຍ, ວ່າງງານ, ເກີດລູກ. ພິການ ແລະ ອື່ນໆ | ← | ອຸດໜູນເດັກນ້ອຍ/ຄອບຄົວ ໃນຮູບແບບຂອງເງິນສົດ, ສິນຄ້າ ຫຼື ການບໍລິການ ຕາມຄວາມຕ້ອງການ ຫຼື ແລ້ວແຕ່ເງື່ອນໄຂທີ່ກ່ຽວກັບພຶດຕິກຳຂອງພໍ່ແມ່ |
| ມີເງິນບຳນານໃນກໍລະນີແກ່ເຖົ້າ, ປ່ວຍການ ແລະ ເສຍຜູ້ທີ່ເປັນເສົາຫຼັກຂອງຄອບຄົວ. | → | ມີເງິນບຳນານ, ມີການເບິ່ງແຍງດູແລ ແລະ ມີການບໍລິການສຳລັບຜູ້ ອາຍຸສູງ ແລະ ຜູ້ພິການ | ← | ອຸດໜູນຜູ້ສູງອາຍຸໃນຮູບແບບເປັນເງິນສົດ, ສິນຄ້າ ຫຼື ການບໍລິການ |

## ການຂະຫຍາຍການປົກປ້ອງສັງຄົມ: ວິທີການແບບຂັ້ນໄດ

ໄປນີ້ແມ່ນວິທີການຂະຫຍາຍການປົກຄຸມຂອງການປະກັນສັງຄົມທີ່ມີປະສິດທິພາບຂອງອົງການ ILO:

- ມິຕິທາງຂວາງ ປະກອບດ້ວຍການຂະຫຍາຍລະບົບປົກປ້ອງສັງຄົມຂັ້ນພື້ນຖານແຫ່ງຊາດໃຫ້ກວມເອົາຫຼາຍຄົນຂຶ້ນຕື່ມ, ໃຫ້ບູລິມະສິດແກ່ຄົນທຸກຍາກ ແລະ ຄົນດ້ອຍໂອກາດ ແລະ ຄ່ອຍຂະຫຍາຍອອກໄປຫາປະຊາຊົນທັງໝົດເທື່ອລະກ້າວ.
- ມິຕິທາງຕັ້ງ ສະໜອງລະດັບການອຸດໜູນການປົກປ້ອງສັງຄົມໃຫ້ສູງຂຶ້ນ ແລະ ໃຫ້ການບໍລິການຜູ້ຖືກປົກຄຸມໃຫ້ຫຼາຍຂຶ້ນ.

ຈຸດປະສົງແມ່ນເພື່ອພັດທະນາຂັ້ນການປົກປ້ອງໃຫ້ສູງຂຶ້ນເລື້ອຍໆ, ແທນທີ່ຈະເປັນພຽງແຕ່ຂັ້ນພື້ນຖານ. ການປຽບທຽບທີ່ເກີດຂຶ້ນແມ່ນ "ຂັ້ນໄດປະກັນສັງຄົມ". ເມື່ອເສດຖະກິດເຕີບໂຕຂຶ້ນ ແລະ ມີການສ້າງຊ່ອງທາງການເງິນ, ລະບົບປົກປ້ອງສັງຄົມສາມາດ ແລະ ຄວນກ້າວຂຶ້ນ "ຂັ້ນໄດ", ຂະຫຍາຍຂອບເຂດ, ຂັ້ນ, ແລະ ຄຸນນະພາບຂອງການອຸດໜູນ ແລະ ການບໍລິການທີ່ສະໜອງໃຫ້" (ອົງການແຮງງານສາກົນ, 2016)

### ນຳໃຊ້ວິທີການແບບ "ຂັ້ນໄດ" ເພື່ອຂະຫຍາຍການປົກຄຸມການປົກປ້ອງສັງຄົມ



### ຄຳສັບ ແລະ ຄຳນິຍາມການປົກປ້ອງສັງຄົມຢູ່ໃນຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ

**ການປົກປ້ອງສັງຄົມ** ແມ່ນຊຸດນະໂຍບາຍ ແລະ ໂຄງການທີ່ອອກແບບເພື່ອຫລຸດຜ່ອນຄວາມທຸກຍາກ ແລະ ປ້ອງກັນບໍ່ໃຫ້ເກີດຄວາມທຸກຍາກ, ຄວາມດ້ອຍໂອກາດ ແລະ ການຖືກຈຳແນກຈາກສັງຄົມ ໃນຕະຫລອດຮອບວຽນການດຳລົງຊີວິດ, ລະບົບການປົກປ້ອງສັງຄົມ ເປັນການແກ້ໄຂຂົງເຂດນະໂຍບາຍທັງໝົດເຫລົ່ານີ້ ໂດຍການປະສົມປະສານລະບົບປົກປ້ອງສັງຄົມແບບບໍ່ປະກອບທຶນສົມທົບ ( ລະບົບສະຫວັດດີການສັງຄົມ) ໂດຍການສະໜັບສະໜູນຈາກງົບປະມານຂອງລັດ.

**ການປະກັນສັງຄົມ** ໝາຍເຖິງ ການຮັບປະກັນໃຫ້ຜູ້ປະກັນຕົນ ແລະ ສະມາຊິກຄອບຄົວໄດ້ຮັບການອຸດໜູນຈາກ ກອງທຶນປະກັນສັງຄົມ ເພື່ອຄ້ຳປະກັນການດຳລົງຊີວິດຂັ້ນພື້ນຖານ ເມື່ອມີການປິ່ນປົວສຸຂະພາບ, ເກີດອຸປະຕິເຫດແຮງງານ ຫລື ພະຍາດອາຊີບ, ອອກລູກ, ຫວ່າງງານ ຫລື ປ່ວຍການ, ບຳນານຜູ້ອາຍຸສູງ, ເສຍຊີວິດ, ອຸດໜູນສະມາຊິກຄອບຄົວ ແລະ ຕາມເງື່ອນໄຂທີ່ໄດ້ກຳນົດໄວ້ແຕ່ລະກໍລະນີ ການປະກັນສັງຄົມ ແມ່ນລະບົບປະກອບທຶນສົມທົບຈາກຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານ.

**ການຊ່ວຍເຫລືອສັງຄົມ** ໝາຍເຖິງ ການຊ່ວຍເຫລືອ ແລະ ການບໍລິການ ເພື່ອຕອບສະໜອງຄວາມຕ້ອງການທາງດ້ານວັດຖຸ ແລະ ຈິດໃຈ.

**ກຸ່ມຄົນບອບບາງ ຫລື ມີຄວາມສ່ຽງ** ໝາຍເຖິງ ກຸ່ມຄົນທີ່ມີຄວາມສ່ຽງ ໂດຍສະເພາະທາງດ້ານສັງຄົມ, ເສດຖະກິດ, ການເມືອງ ຫລື ບັນຫາອື່ນໆ

**ຜູ້ອອກແຮງງານນອກລະບົບ** ໝາຍເຖິງ ຜູ້ອອກແຮງງານທີ່ຈ້າງງານຕົນເອງ.

**ຄວາມທຸກຍາກ** ໝາຍເຖິງ ການຂາດປັດໃຈພື້ນຖານໃນການດຳລົງຊີວິດປະຈຳວັນ ເປັນຕົ້ນຂາດເຂີນສະບຽງອາຫານທີ່ບໍ່ສາມາດສະໜອງພະລັງງານ 2100 ກິໂລກາລໍລີຕໍ່ຄົນຕໍ່ມື້, ຂາດເຂີນເຄື່ອງນຸ່ງຫົ່ມທີ່ຈຳເປັນ, ບໍ່ມີທີ່ຢູ່ອາໄສຖາວອນ, ບໍ່ສາມາດໃຊ້ຈ່າຍໃນການປິ່ນປົວເວລາເຈັບເປັນພື້ນຖານ, ບໍ່ສາມາດໃຊ້ຈ່າຍເຂົ້າໃນການສຶກສາຂັ້ນພື້ນຖານ, ບໍ່ມີເງື່ອນໄຂເຂົ້າເຖິງຕາໜ່າງການບໍລິການດ້ານພື້ນຖານໂຄງລ່າງທີ່ຈຳເປັນຂອງສັງຄົມ

**ການອຸດໜູນແບບບໍ່ປະກອບທຶນສົມທົ**ບ ແມ່ນ ລະບົບທີ່ສະມາຊິກບໍ່ຈຳເປັນຕ້ອງໄດ້ປະກອບທຶນສົມທົບ ເພື່ອຮັບການອຸດໜູນ.

**ໂຄງການວຽກສາທາລະນະ** ສະໜອງລາຍຮັບໃຫ້ແກ່ຜູ້ທຸກຍາກ ໂດຍໃຫ້ມີວຽກເຮັດງານທຳ ແລະ ເປັນໂຄງການທີ່ຖືກອອກແບບໃຫ້ການຊ່ວຍເຫລືອໃນຍາມຕິດຂັດດ້ານລາຍຮັບໂດຍສະເພາະໃນຍາມທີ່ "ບໍ່ມີວຽກເຮັດງານທຳ ຫລື "ອຶດຫິວ". ໂຄງການດັ່ງກ່າວ ສ່ວນຫລາຍຈະສ້າງພື້ນຖານໂຄງລ່າງເຊັ່ນ: ເສັ້ນທາງຊົນນະບົດ, ຊົນລະປະທານ, ບ່ອນເກັບນ້ຳ, ການປູກຕົ້ນໄມ້, ໂຮງຮຽນ, ສະຖານທີ່ຮັກສາສຸຂະພາບ.

**ສະຫວັດດີການສັງຄົມ** ໝາຍເຖິງ ລະບົບການບໍລິການສັງຄົມເພື່ອປ້ອງກັນ, ແກ້ໄຂບັນຫາສັງຄົມ ແລະ ການພັດທະນາສັງຄົມ ລວມທັງການສົ່ງເສີມຄວາມໝັ້ນຄົງທາງສັງຄົມເພື່ອໃຫ້ປະຊາຊົນດຳລົງຊີວິດໃນສັງຄົມຕາມລະດັບມາດຕະຖານ ໂດຍຕອບສະໜອງການບໍລິການຕາມຄວາມຕ້ອງການຂັ້ນພື້ນຖານຂອງປະຊາຊົນໃຫ້ໄດ້ຮັບການພັດທະນາຄຸນນະພາບຊີວິດຢ່າງທົ່ວເຖິງ ແລະ ເປັນທຳລວມທັງດ້ານການສຶກສາທີ່ດີ, ການມີສຸຂະພາບດີ, ການມີທີ່ຢູ່ອາໄສ, ການມີວຽກເຮັດງານທຳ, ການມີລາຍໄດ້, ມີສະຫວັດດີການດ້ານແຮງງານ ແລະ ການມີຄວາມໝັ້ນຄົງທາງສັງຄົມ.

# ▸ ພາກທີ 3: ລະບົບການປົກປ້ອງສັງຄົມຢູ່ ສປປ ລາວ

ລັດຖະບານ ແຫ່ງ ສປປ ລາວ ຮັບຮູ້ເຖິງບົດບາດຂອງການປົກປ້ອງສັງຄົມ ໃນການຫຼຸດຜ່ອນຄວາມທຸກຍາກ ແລະ ຄວາມບໍ່ສະເໝີພາບ ແລະ ມີບົດບາດໃນການສົ່ງເສີມການພັດທະນາເສດຖະກິດ-ສັງຄົມ ແລະ ຄວາມສາມັກຄີຢູ່ໃນສັງຄົມ. ການເຮັດວຽກເພື່ອປັບປຸງເງື່ອນໄຂຂອງຜູ້ທຸກຍາກແມ່ນມີຄວາມຄັນຢູ່ໃນຍຸດທະສາດນີ້, ແລະ ຮັບປະກັນວ່າຜູ້ທີ່ໄດ້ບັນລຸຄວາມໝັ້ນຄົງທາງດ້ານລາຍຮັບທີ່ພຽງພໍ ຈະບໍ່ກັບໄປພົບກັບຄວາມທຸກຍາກອີກ.

ລຸ່ມນີ້ແມ່ນແຜນວາດລະບົບການປົກປ້ອງສັງຄົມຢູ່ ສປປ ລາວ ທີ່ມີຢູ່




- ປະກັນສັງຄົມສໍາລັບແຮງງານໃນລະບົບ, ຕ.ຢ., ອປຊ
- ປະກັນສຸຂະພາບແຫ່ງຊາດ, ຕ.ຢ., ຫກປຊ

- ປະກັນສັງຄົມສໍາລັບແຮງງານທີ່ເຮັດວຽກອິດສະຫຼະ, ຕ.ຢ, ອປຊ

- ອຸດໜູນເງິນ, ຕ.ຢ., MECG

- ອຸດໜູນແບບບໍ່ເປັນເງິນ, ຕ.ຢ, ໂຄງການອາຫານກາງເວັນໃນໂຮງຮຽນ

NSSF = National Social Security Fund; NHI = national health insurance;
MECG = Mother and Early Childhood Grant

**ລະບົບການປົກປ້ອງສັງຄົມຢູ່ ສປປ ລາວ**

| ການປົກປ້ອງສັງຄົມຂັ້ນພື້ນຖານປະຊາກອນເປົ້າໝາຍພາກລັດ | | ປະຊາກອນເປົ້າໝາຍ | | | |
|---|---|---|---|---|---|
| | | ພາກລັດ | ພາກວິສະຫະກິດ | ຂະແໜງນອກລະບົບ | |
| | | | | ຜູ້ບໍ່ທຸກ | ຜູ້ທຸກຍາກ |
| ສຸຂະພາບ | ການປົກຄຸມດ້ານສຸຂະພາບ | ໄດ້ | ການປົກຄຸມຕໍ່າ | ການປົກຄຸມໃນລະດັບກາງ | ການປົກຄຸມໃນລະດັບກາງ |
| ເດັກນ້ອຍ | ອຸດໜູນເດັກ ແລະ ຄອບຄົວ | ຍັງຕໍ່າ | ການປົກຄຸມຕໍ່າ | ການປົກຄຸມຕໍ່າ | ການຄຸ້ມຄອງຕໍ່າ |
| ການປົກຄຸມດ້ານສຸຂະພາບ | ປ່ວຍການ | ໄດ້ | ການປົກຄຸມຕໍ່າ | ການປົກຄຸມຕໍ່າ | ບໍ່ໄດ້ປົກຄຸມ |
| | ເກີດລູກ | ໄດ້ | ການປົກຄຸມຕໍ່າ | ການປົກຄຸມຕໍ່າ | ບໍ່ໄດ້ປົກຄຸມ |
| | ເສຍກຳລັງແຮງງານ | ໄດ້ | ການປົກຄຸມຕໍ່າ | ການປົກຄຸມຕໍ່າ | ບໍ່ໄດ້ປົກຄຸມ |
| | ອຸບັດເຫດແຮງງານ ຫຼື ພະຍາດອາຊີບ | ໄດ້ | ການປົກຄຸມຕໍ່າ | ການປົກຄຸມຕໍ່າ | ບໍ່ໄດ້ປົກຄຸມ |
| | ວ່າງງານ | ໄດ້ | ການປົກຄຸມຕໍ່າ | ການປົກຄຸມຕໍ່າ | ບໍ່ໄດ້ປົກຄຸມ |
| | ສູນເສຍເສົາຫຼັກຂອງຄອບຄົວ | ໄດ້ | ການປົກຄຸມຕໍ່າ | ການປົກຄຸມຕໍ່າ | ບໍ່ໄດ້ປົກຄຸມ |
| ການປົກຄຸມດ້ານສຸຂະພາບ | ບຳນານຜູ້ອາຍຸສູງ | ໄດ້ | ການປົກຄຸມຕໍ່າ | ການປົກຄຸມຕໍ່າ | ບໍ່ໄດ້ປົກຄຸມ |

ອີງຕາມຜົນການປະເມີນການປຶກສາຫາລືແຫ່ງຊາດທີ່ຈັດຂຶ້ນໃນປີ 2017, ຕໍ່ໄປນີ້ແມ່ນການປະເມີນການປົກປ້ອງສັງຄົມຂັ້ນພື້ນຖານຢູ່ ສປປ ລາວ:

## 1. ການປົກປ້ອງສັງຄົມໃນວຽກງານສາທາ

ອີງຕາມກອບການອຸດໜູນການປົກປ້ອງສັງຄົມ, ການບັນລຸການຄໍ້າປະກັນການປົກປ້ອງສຸຂະພາບຂັ້ນຕໍ່າ ຮຽກຮ້ອງໃຫ້ມີການປິ່ນປົວສຸຂະພາບທີ່ສາມາດຈ່າຍໄດ້ "ບັນລຸຕາມເງື່ອນໄຂຂອງການມີການບໍລິການ, ສາມາດເຂົ້າເຖິງໄດ້, ສາມາດຍອມຮັບໄດ້ ແລະ ມີຄຸນນະພາບ". ອຸປະສັກຕົ້ນຕໍໃນການບັນລຸມາດຕະຖານຂັ້ນຕໍ່າໃຫ້ແກ່ຜູ້ຢູ່ອາໃສທັງໝົດແມ່ນ:

- ການຂາດແຄນບຸກຄະລາກອນທາງການແພດທີ່ໄດ້ຮັບການຝຶກອົບຮົມ ແລະ ຂາດການປິ່ນປົວທີ່ມີຄວາມກ້າວໜ້າ ແລະ ຢາ ຢູ່ເຂດຫ່າງໄກສອກຫຼີກ.
- ຂາດການເຂົ້າເຖິງພູມສັນຖານສຳລັບປະຊາກອນທີ່ອາໃສຢູ່ເຂດຫ່າງໄກສອກຫຼີກ;
- ອຸປະສັກທາງດ້ານການເງິນລວມທັງການປະເຊີນກັບຄວາມສ່ຽງຂອງລາຍຈ່າຍຕໍ່ກັບການປິ່ນປົວສຸຂະພາບ, ເຊິ່ງຈະນຳໄປສູ່ການເກີດມີຄວາມທຸກຍາກເພີ່ມຂຶ້ນ, ໂດຍສະເພາະໃນບັນດາຜູ້ທຸກຍາກ ແລະໃກ້ທຸກຍາກ.

ພາຍໃຕ້ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ, ລັດຖະບານມີເປົ້າໝາຍບັນລຸອັດຕາການປົກຄຸມປະຊາຊົນໃຫ້ໄດ້ 80 ສ່ວນຮ້ອຍພາຍໃນປີ 2020 ແລະ ການປົກຄຸມສຸຂະພາບທົ່ວປວງຊົນພາຍໃນປີ 2025.  ອັດຕາການປົກຄຸມຕາມກົດໝາຍຂອງລະບົບປະກັນສຸຂະພາບແຫ່ງຊາດໃນປີ 2019 ແມ່ນ 93 ສ່ວນຮ້ອຍ.

**ອັດຕາການປົກຄຸມການປົກປ້ອງສັງຄົມດ້ານສຸຂະພາບ ຢູ່ ສປປ ລາວ, 2008-19**




**Source:** Ministry of Health, 2019

## ການປົກປ້ອງສັງຄົມດ້ານສຸຂະພາບແບ່ງຕາມກຸ່ມເປົ້າໝາຍໃນປີ 2019




VTC = Vientiane Capital
**Source:** Ministry of Health, 2019

ໃນປີ 2019, ເພື່ອໃຫ້ສອດຄ່ອງກັບກົດໝາຍປະກັນສຸຂະພາບແຫ່ງຊາດ, ກະຊວງສາທາລະນະສຸກໄດ້ໂຮມລະບົບກອງທຶນປະກັນສັງຄົມໃນຂະແໜງໃນລະບົບເຂົ້າກັບລະບົບປະກັນສຸຂະພາບແຫ່ງຊາດ. ລະບົບປະກັນສຸຂະພາບແຫ່ງຊາດໄດ້ເອື້ອຍອີງໃສ່ແຫຼ່ງທຶນຈາກການເກັບພາສີອາກອນໄດ້ສົມທົບກັບການປະກອບທຶນສົມທົບຂອງແຮງງານໃນລະບົບເປັນສ່ວນໃຫຍ່. ນີ້ກໍເພື່ອຮັບປະກັນວ່າຜູ້ທີ່ບໍ່ສາມາດປະກອບທຶນສົມທົບເຂົ້າກອງທຶນສາມາດເຂົ້າເຖິງການປິ່ນປົວໄດ້.

ໃນການເຂົ້າເຖິງການປິ່ນປົວສຸຂະພາບພາຍໃຕ້ກອງທຶນປະກັນສຸຂະພາບແຫ່ງຊາດ, ຄົນເຈັບຕ້ອງຈ່າຍສົມທົບໃນອັດຕາທີ່ຕໍ່າຢູ່ໃນສະຖານປິ່ນປົວສຸຂະພາບເລີ່ມຕົ້ນແຕ່ 5,000 ຫາ 30,000 ກີບ (ປະມານ 0.50 ຫາ 3 ໂດລາສະຫະລັດ), ຂຶ້ນກັບຄວາມຕ້ອງການການປິ່ນປົວຂອງເຂົາເຈົ້າ:

**ການຈ່າຍສົມທົບຢູ່ໃນສະຖານທີ່ປິ່ນປົວສຸຂະພາບ**

- 5,000 ກີບ ໃນຂັ້ນສຸກສາລາ;
- 10,000 ກີບ ສຳລັບກວດເຂດນອກໃນໂຮງໝໍຂັ້ນເມືອງ ແລະ ແຂວງ;
- 30,000 ກີບ ສຳລັບນອນໂຮງໝໍໃນໂຮງໝໍຂັ້ນເມືອງ ແລະ ແຂວງ.

ອີງຕາມນະໂຍບາຍແຫ່ງຊາດທີ່ໄດ້ຮັບຮອງໃນປີ 2012, ແມ່ ແລະ ເດັກນ້ອຍອາຍຸຕໍ່າກວ່າ 5 ປີແມ່ນໄດ້ຮັບການຍົກເວັ້ນຈາກການຈ່າຍເງິນສົມທົບເຫຼົ່ານີ້. ນອກຈາກນັ້ນ, ຄົນເຈັບທີ່ທຸກຍາກກໍ່ໄດ້ຮັບການຍົກເວັ້ນ, ເຊັ່ນດຽວກັນກັບແຮງງານທີ່ເຮັດວຽກໃນລະບົບທີ່ໄດ້ປະກອບເງິນສົມທົບເຂົ້າກອງທຶນ.

## 2. ການປົກປ້ອງສັງຄົມສຳລັບເດັກ

ມາຮອດປັດຈຸບັນ ສປປ ລາວ ຍັງບໍ່ບັນລຸການປົກປ້ອງສັງຄົມຂັ້ນພື້ນຖານສຳລັບເດັກ. ຫຼາຍໂຄງການມີຈຸດປະສົງສະຫນອງການເຂົ້າເຖິງໂພຊະນາການ, ການສຶກສາ, ແລະ ການດູແລສຸຂະພາບສຳລັບເດັກນ້ອຍ. ເຖິງຢ່າງໃດກໍ່ຕາມ, ເນື່ອງຈາກຂໍ້ຈຳກັດໃນການປົກຄຸມ ແລະ ບໍ່ມີທຶນພຽງພໍສຳລັບໂຄງການເຫຼົ່ານີ້, ເດັກນ້ອຍຍັງບໍ່ຖືກຄ້ຳປະກັນໃນການເຂົ້າເຖິງການບໍລິການ ແລະ ເຄື່ອງຂອງທີ່ຈຳເປັນ ແລະ ພຽງພໍ. ໂຄງການທີ່ມີຢູ່ຄວນໄດ້ຮັບການຂະຫຍາຍ ແລະ ປັບປຸງໃຫ້ດີຂື້ນກວ່າເກົ່າພ້ອມກັບການສະໜອງທຶນເພີ່ມເຕີມ.

### ອັດຕາການປົກຄຸມຂອງລະບົບປົກປ້ອງສັງຄົມທີ່ມີຢູ່ໂດຍເລັ່ງໃສ່ເດັກເປັນເປົ້າໝາຍ

| ລະບົບປົກປ້ອງສັງຄົມ | ກຸ່ມເປົ້າໝາຍ | ອັດຕາປົກຄຸມ |
|---|---|---|
| **ເຂົ້າໂຮງຮຽນໂດຍບໍ່ເສຍຄ່າ (ໃຫ້ເງິນບໍລິຫານໂຮງຮຽນ ເພື່ອຍົກເລີກການເກັບຄ່າລົງທະບຽນ)** | ນັກຮຽນໃນທຸກລະດັບການສຶກສາ | ນັກຮຽນກຽມປະຖົມ, ປະຖົມ ແລະ ມັດທະຍົມສຶກສາ ຢູ່ໃນຈຳນວນທີ່ພຽງພໍຕໍ່ກັບເງິນຊ່ວຍເຫຼືອ ແຕ່ຄ່າທຳນຽມແບບບໍ່ເປັນທາງການກໍຍັງມີຢູ່ |
| **ເບ້ຍລ້ຽງ/ທຶນການສຶກສາ ໃນຊັ້ນຮຽນລະດັບມັດທະຍົມ** | ນັກຮຽນຈາກຄອບຄົວທີ່ທຸກຍາກ | ນັກຮຽນຈຳນວນ 2901 ຄົນ (ໃນປີ2017) |
| **ໃຫ້ອາຫານກາງເວັນ** | ນັກຮຽນຊັ້ນປະຖົມ ແລະ ມັດທະຍົມສຶກສາໃນເຂດເມືອງຫ່າງໄກສອກຫຼີກ | ນັກຮຽນຊັ້ນປະຖົມ ຈຳນວນ 2135 ຄົນ ຈາກທັງໝົດ 8884 ຄົນ; ນັກຮຽນມັດທະຍົມ 200 ຄົນ ຈາກທັງໝົດ 1586. (ໃນປີ 2017) |
| **ສູນໂພສະນາການຂັ້ນບ້ານ (ກອງທຶນຫຼຸດຜ່ອນຄວາມທຸກຍາກ - ໂຄງການປັບປຸງຊີວິດການເປັນຢູ່ ແລະ ຄ້ຳປະກັນສະບຽງອາຫານ)** | ແມ່ ແລະ ເດັກ | ແມ່ ແລະ ເດັກ ຈຳນວນ 429 ຄົນ (ໃນປີ 2017) |
| **ໂຄງການອຸດໜູນແມ່ຍິງຖືພາ ແລະ ເດັກກ່ອນໄວຮຽນຢູ່ ສປປ ລາວ (MECG)** | ແມ່ຍິງຖືພາ ແລະ ເດັກເກີດໃໝ່ | 2,596 (2022) |

## 3. ການປະກັນສັງຄົມສຳລັບປະຊາກອນໃນເກນອອກແຮງງານ

A. ການປະກັນສັງຄົມສຳລັບຜູ້ອອກແຮງງານທີ່ເຮັດວຽກໃນຂະແໜງໃນລະບົບ

ລະບົບປະກັນສັງຄົມສຳລັບຜູ້ອອກແຮງງານໃນເສດຖະກິດໃນລະບົບ ລວມທັງການອຸດໜູນພາຍໃຕ້ກົດໝາຍວ່າດ້ວຍແຮງງານ (ເລກທີ 43/ສພຊ ປີ 2013) ແລະ ລະບົບປະກັນສັງຄົມທີ່ມີການປະກອບສົມທົບທຶນພາຍໃຕ້ກົດ ໝາຍວ່າດ້ວຍປະກັນສັງຄົມ (ເລກທີ 34/ສພຊ ປີ 2013).

ກົດໝາຍສະບັບປັບປຸງວ່າດ້ວຍປະກັນສັງຄົມ ປີ2013 (ເລກທີ 34/ສພຊ).ກອງທຶນປະກັນສັງຄົມແຫ່ງຊາດໄດ້ໂຮມສອງລະບົບເຂົ້າກັນ - ກອງທຶນປະກັນສັງຄົມພາກລັດຖະກອນ ສຳລັບພະນັກງານພາກລັດ; ແລະ ອົງການປະກັນສັງຄົມ (ອປຊ) ສຳລັບແຮງງານໃນລະບົບພາກເອກະຊົນ. ຈຸດປະສົງແມ່ນເພື່ອແບ່ງປັນຄວາມສ່ຽງ ແລະ ຮັບປະກັນຄວາມຍືນຍົງ, ເປັນຄັ້ງທຳອິດທີ່ກອງທຶນປະກັນສັງຄົມແຫ່ງຊາດຂະຫຍາຍອັດຕາການປົກຄຸມ (ພາກສະໝັກໃຈ) ອອກໄປເຖິງແຮງງານນອກລະບົບ ແລະ ຜູ້ເຮັດວຽກອິດສະຫຼະ, ໂດຍມີຈຸດປະສົງຂະຫຍາຍສະມາຊິກໃຫ້ໄດ້ໄວຂຶ້ນ

### ອັດຕາການປົກຄຸມຂອງລະບົບປະກັນສັງຄົມທີ່ມີຢູ່/ອຸດໜູນຜູ້ອອກແຮງງານໃນລະບົບ

| ການອຸດໜູນ/ກອງທຶນ | ກຸ່ມເປົ້າໝາຍ | ອັດຕາການປົກຄຸມ |
|---|---|---|
| **ກອງທຶນປະກັນສັງຄົມ**<br>▶ **ອຸດໜູນວ່າງງານ**<br>▶ **ປະກັນສຸຂະພາບ**<br>▶ **ອຸດໜູນປ່ວຍການ**<br>▶ **ອຸດໜູນອຸບັດເຫດແຮງງານ ແລະ ພະຍາດອາຊີບ**<br>▶ **ອຸດໜູນເສຍກຳລັງແຮງງານ**<br>▶ **ອຸດໜູນເກີດລູກ**<br>▶ **ອຸດໜູນສະມາຊິກຄອບຄົວ**<br>▶ **ອຸດໜູນເສຍຊີວິດ**<br>▶ **ບຳນານ** | ▶ ຜູ້ອອກແຮງງານໃນລະບົບ<br>▶ ພະນັກງານລັດ<br>▶ ສະມາຊິກຜູ້ສະໝັກໃຈ, ຜູ້ມີອາຊີບອິດສະຫຼະ ແລະ ຈາກຂະແໜງການນອກລະບົບ | ຈຳນວນຜູ້ປະກັນຕົນ:<br>12 446<br>**15%** ຂອງປະຊາກອນ ເຊິ່ງລວມທັງຜູ້ທີ່ຢູ່ໃນການປົກຄອງ (ໃນປີ 2020)<br><br>ຈຳນວນສະມາຊິກຂອງກອງທຶນປະກັນສັງຄົມມີ:<br>ລັດຖະກອນ: **180,609**<br>ວິສາຫະກິດເອກະຊົນໃນລະບົບ: **121,698**<br>ຜູ້ປະກັນຕົນແບບສະໝັກໃຈ: **12,446** |
| **ພາຍໃຕ້ກົດໝາຍແຮງງານ:**<br>▶ **ຈ່າຍເງິນຊົດເຊີຍ**<br>▶ **ພັກວຽກເມື່ອເຈັບປ່ວຍແຕ່ໄດ້ຮັບເງິນເດືອນປົກກະຕິ**<br>▶ **ພັກວຽກເມື່ອເກີດລູກແຕ່ໄດ້ຮັບເງິນເດືອນປົກກະຕິ** | ▶ ຜູ້ອອກແຮງງານເຮັດວຽກໃນລະບົບ | ຍັງບໍ່ທັນສົມບູນ. ຜູ້ໃຊ້ແຮງງານຍັງບໍ່ປະຕິບັດຕາມຂໍ້ກຳນົດ |

**ສັງເກດ:**

- ພະນັກງານລັດຖະກອນ ແລະ ພາກວິສາຫະກິດເອກະຊົນໃນລະບົບ ຈະໄດ້ຮັບ 9 ອຸດໜູນ
- ຜູ້ປະກັນຕົນແບບສະໝັກໃຈ ຈະໄດ້ຮັບ 7 ອຸດໜູນ (ບໍ່ໄດ້ຮັບອຸດໜູນວ່າງງານ ແລະ ອຸບັດຕິເຫດແຮງງານ)
- ການອຸດໜູນຂອງກົດໝາຍວ່າດ້ວຍແຮງງານ ປະກອບມີການເກີດສິດທີ່ເກີດຈາກຄວາມຮັບຜິດຊອບຂອງຜູ້ໃຊ້ແຮງງານ, ປະກອບມີເງິນຊົດເຊີຍ, ວັນພັກເຈັບເປັນທີ່ໄດ້ຮັບເງິນເດືອນ, ເງິນອຸດໜູນເກີດລູກ, ແລະ ເງິນຊົດເຊີຍຈາກອຸບັດຕິເຫດແຮງງານ. ການຄຸ້ມຄອງຕົວຈິງ ແລະການເຂົ້າເຖິງການອຸດໜູນເຫຼົ່ານີ້ແມ່ນບໍ່ມີຄວາມແນ່ນອນ, ໂດຍອີງຫຼັກຖານການບອກເລົ່າທີ່ຊີ້ໃຫ້ເຫັນເຖິງການປະຕິບັດຂໍ້ກຳນົດຂອງຜູ້ໃຊ້ແຮງງານຍັງມີລະດັບຕ່ຳ.

**ປະກອບເງິນສົມທົບຂອງຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານຕາມສ່ວນຮ້ອຍຂອງຄ່າແຮງງານຂອງຜູ້ອອກແຮງງານ, ຕາມປະເພດການອຸດໜູນ**

| ປະເພດການອຸດໜູນ | ປະເພດການອຸດໜູນ | | |
|---|---|---|---|
| | ພະນັກງານລັດຖະກອນ | ວິສະຫະກິດໃນລະບົບ | ຜູ້ປະກັນຕົນພາກສະໝັກໃຈ |
| ປະກັນສຸຂະພາບ | 1.5 | 1.5 | 1.5 |
| ອຸບັດຕິເຫດແຮງງານ ແລະ ພະຍາດອາຊີບ | 0.5 | 0.5 | n/a |
| ອຸດໜູນໄລຍະສັ້ນ (ເກີດລູກ, ປ່ວຍການ, ເສຍຊີວິດ) | 2.5 | 2.5 | 2.5 |
| ອຸດໜູນໄລຍະຍາວ (ບຳນານ, ເສຍກຳລັງແຮງງານ, ສະມາຊິກຄອບຄົວ) | 12 | 5 | 5 |
| ອຸດໜູນວ່າງງານ | n/a | 2 | n/a |
| **ລວມ:** | **16.5** | **11.5** | **9** |
| ການຈ່າຍສົມທົບ | | | |
| ຜູ້ໃຊ້ແຮງງານ | 8.5% | 6% | 9% |
| ຜູ້ອອກແຮງງານ | 8% | 5.5% | |

n/a = ບໍ່ເໝາະສົມ.

### ການຈ່າຍສົມທົບ:

**B. ການປົກປ້ອງສັງຄົມສຳລັບຜູ້ອອກແຮງງານໃນເສດຖະກິດນອກລະບົບ ແລະ ຜູ້ທຸກຍາກ**
ເສດຖະກິດນອກລະບົບຢູ່ຊົນນະບົດ ເປັນປະຊາກອນສ່ວນໃຫຍ່ຂອງ ສປປ ລາວ. ປະມານ 80 ສ່ວນຮ້ອຍຂອງປະຊາກອນມີການເຄື່ອນໄຫວທາງດ້ານເສດຖະກິດເພື່ອຫາລ້ຽງຊີບຢູ່ນອກວຽກທີ່ເປັນລະບົບ. ປະມານ 72 ສ່ວນຮ້ອຍແມ່ນຢູ່ໃນເສດຖະກິດພື້ນຖານ(ກະສິກຳ), ອັດຕາສ່ວນໃຫຍ່ຂອງປະຊາກອນແມ່ນຊາວກະສິກອນກຸ່ມຢູ່ກຸ່ມກິນ. ປະຊາກອນກຸ່ມນີ້ໄດ້ຮັບການປົກຄຸມຈາກການປົກປ້ອງສັງຄົມໃນຮູບແບບໃດໜຶ່ງໜ້ອຍທີ່ສຸດ.

ດັ່ງທີ່ໄດ້ກ່າວມາຂ້າງເທິງ, ນີ້ເປັນຄັ້ງທຳອິດທີ່ໄດ້ມີການຂະຫຍາຍອັດຕາການປົກຄຸມທາງກົດໝາຍ( ພາກສະໝັກໃຈ)ອອກໄປຫາຜູ້ອອກແຮງງານນອກລະບົບ ແລະ ເຮັດວຽກອິດສະຫຼະ, ອັດຕາການຈ່າຍເງິນສົມທົບແມ່ນ 9 ສ່ວນຮ້ອຍ. ເຖິງແມ່ນວ່າກອງທຶນປະກັນສັງຄົມແຫ່ງຊາດ ຈະກວມເອົາຜູ້ອອກແຮງງານນອກລະບົບພາກສະໝັກໃຈ ແລະ ເຮັດວຽກອິດສະຫຼະກໍ່ຕາມ ແຕ່ການເຂົ້າເປັນສະມາຊິກຍັງຕ່ຳຫຼາຍ. ການອຸດໜູນ ແລະ ວິທີການສ່ວນໃຫຍ່ແມ່ນຕອບສະໜອງຄວາມຕ້ອງການຂອງຜູ້ອອກແຮງງານໃນເສດຖະກິດໃນລະບົບ. ອີງຕາມບົດລາຍງານປະຈຳປີ 2020 ຂອງອົງການປະກັນສັງຄົມແຫ່ງຊາດ (ອປຊ) ອົງການປະກັນສັງຄົມແຫ່ງຊາດມີສະມາຊິກພາກສະໝັກໃຈພຽງແຕ່12,446 ຄົນເທົ່ານັ້ນ. ຂະນະດຽວກັນ, ຜູ້ອອກແຮງງານນອກລະບົບແມ່ນໄດ້ຮັບການຄຸ້ມຄອງໂດຍລະບົບປະກັນສຸຂະພາບແຫ່ງຊາດ.

ນອກນັ້ນ, ຜູ້ອອກແຮງງານຢູ່ເຂດຊົນນະບົດ ແລະ ຊາວກະສິກອນຂະໜາດນ້ອຍຍັງຂາດວຽກເຮັດງານທຳຕາມລະດູການ ຫຼື ຂາດລາຍໄດ້ຕາມລະດູການເຊິ່ງນຳໄປສູ່ວົງຈອນອາຫານ ແລະ ລາຍໄດ້ບໍ່ໝັ້ນຄົງ. ນະໂຍບາຍເພື່ອແກ້ໄຂກຸ່ມຄົນເຫຼົ່ານີ້ເຊັ່ນ: ໂຄງການວຽກສາທາະນະ ຫຼື ການຝຶກອົບຮົມວິຊາຊີບ ຍັງບໍ່ທັນໄດ້ຮັບການພັດທະນາຢ່າງເຕັມສ່ວນ.

ໂຄງການສະຫວັດດີການສັງຄົມ ຫຼື ຕ້ານຄວາມທຸກຍາກອື່ນໆ ສ່ວນຫຼາຍເປັນການຊ່ວຍເຫຼືອບັນເທົາທຸກໄພພິບັດສະເພາະໃດໜຶ່ງ ແລະ ເປັນໂຄງການຂະໜາດນ້ອຍ ແນໃສ່ກຸ່ມທີ່ມີຄວາມສ່ຽງສະເພາະ ຫຼື ເຂດທຸກຍາກ.

## 4. ການປົກປ້ອງສັງຄົມ ສຳລັບຜູ້ອາຍຸສູງ

ໃນປະຈຸບັນ, ຍັງບໍ່ມີລະບົບປົກປ້ອງສັງຄົມສະເພາະແນໃສ່ຜູ້ອາຍຸສູງ, ຍົກເວັ້ນເງິນບຳນານເນື່ອງຈາກວ່າເປັນສ່ວນຫນຶ່ງຂອງລະບົບປະກັນສັງຄົມແຫ່ງຊາດທີ່ມີການປະກອບທຶນສົມທົບ. ອີງຕາມຂໍ້ມູນການປົກປ້ອງສັງຄົມຂອງອົງການ ILO (2022), ມີພຽງແຕ່ປະມານ 6,3% ຂອງຜູ້ອາຍຸສູງໄດ້ຮັບເງິນບຳນານດັ່ງກ່າວ. ດັ່ງນັ້ນ ຈຶ່ງຂາດການຄ້ຳປະກັນລາຍຮັບຂັ້ນພື້ນຖານສຳລັບຜູ້ອາຍຸສູງຈຳນວນຫລາຍທີ່ບໍ່ມີເງື່ອນໄຂໄດ້ຮັບສິດຈາກການໃຊ້ເວລາຫຼາຍປີໃນເສດຖະກິດຊົນນະບົດນອກລະບົບ ເພື່ອຮັບເງິນບຳນານຈາກການປະກັນສັງຄົມທີ່ເປັນທາງການ. ຄຳແນະນຳຈາກພາກສ່ວນກ່ຽວຂ້ອງແຫ່ງຊາດລວມມີການພິຈາລະນາສ້າງຕັ້ງເງິນບຳນານທາງສັງຄົມຂັ້ນຕ່ຳສຳລັບກຸ່ມຄົນເຫລົ່ານີ້, ລວມທັງການອຸດໜູນທາງວັດຖຸເຊັ່ນ ການເຂົ້າເຖິງການດູແລສຸຂະພາບ, ທີ່ຢູ່ອາໄສ ຫຼື ການເດີນທາງໂດຍບໍ່ເສຍຄ່າ.

# ▶ ພາກທີ 4: ພາລະບົດບາດຂອງການປົກປ້ອງສັງຄົມ

## ການປົກປ້ອງສັງຄົມ: ຄວາມຈິງ ຫລື ຄວາມເຊື່ອທີ່ຜິດ?

ມີຫຼາຍຄວາມເຊື່ອທີ່ຜິດກ່ຽວກັບການປົກປ້ອງສັງຄົມ ເຊິ່ງມັນໄດ້ເປັນອຸປະສັກຕໍ່ຄວາມເຂົ້າໃຈກ່ຽວກັບກັບການປົກປ້ອງສັງຄົມທີ່ວ່າການປົກປ້ອງສັງຄົມເປັນແຮງຍູ້ດັນທີ່ເຂັ້ມແຂງໃນການປົກປ້ອງບຸກຄົນຕ່າງໆ ແລະ ປົກປ້ອງສັງຄົມຈາກຄວາມສ່ຽງຕ່າງໆ.

ເພື່ອສະແດງໃຫ້ເຫັນເຖິງເນື້ອໃນຈິດໃຈຂອງການປົກປ້ອງສັງຄົມ ແລະ ສໍາຄັນໄປກວ່ານັ້ນສະແດງໃຫ້ເຫັນເຖິງ,ຄວາມເຊື່ອທີ່ຜິດຕໍ່ກັບການປົກປ້ອງສັງຄົມ, ທ່ານ Oliver De Schutter ຜູ້ລາຍງານພິເສດຂອງອົງການສະຫະປະຊາຊາດ ກ່ຽວກັບຄວາມທຸກຍາກທີ່ສຸດ ແລະ ສິດທິມະນຸດ, ໄດ້ນໍາສະເຫນີວີດີໂອຮູບພາບເຄື່ອນໄຫວ. ວີດີໂອໄດ້ເນັ້ນໃສ່ 5 ຄວາມເຊື່ອທີ່ຍັງເປັນບັນຫາຄົງຄ້າງຄືດັ່ງລຸ່ມນີ້:

ຄວາມເຊື່ອ 1: “ສະຫວັດດີການເຮັດໃຫ້ຄົນຂີ້ຄ້ານ”
ຄວາມເຊື່ອ 2: “ການຊ່ວຍເຫຼືອສັງຄົມ ມີການສໍ້ໂກງຫລາຍເກີນໄປ”:
ຄວາມເຊື່ອ 3: “ມີເງິນພຽງພໍທີ່ຈະກວມເອົາກົນໄກຄວາມສາມັກຄີ”
ຄວາມເຊື່ອ 4: “ ການບໍລິການທາງສັງຄົມ ແລະ ສາທາ ມີແຕ່ອຸດໜູນຜູ້ທຸກຍາກເທົ່ານັ້ນ”
ຄວາມເຊື່ອ 5: “ສາທາລະນະສຸກ, ການສຶກສາ, ການບໍລິການສັງຄົມ ແມ່ນບໍ່ດີຕໍ່ເສດຖະກິດ”

---

**ເບິ່ງ**

ເບິ່ງວີດີໂອຂອງທ່ານ Oliver De Schutter ຜູ້ລາຍງານພິເສດຂອງອົງການສະຫະປະຊາຊາດ ກ່ຽວກັບຄວາມທຸກຍາກທີ່ສຸດ ແລະ ສິດທິມະນຸດ ແລະ ສະແດງໃຫ້ເຫັນເຖິງຄວາມເຊື່ອທົ່ວໄປຕໍ່ກັບການປົກປ້ອງສັງຄົມ: “ 5 ຄວາມເຊື່ອທີ່ຜິດຕໍ່ກັບການປົກປ້ອງສັງຄົມ “
https://www.srpoverty.org/2021/06/21/new-animated-video-5-myths-about-social-protection/

---

## ພາລະບົດບາດສໍາຄັນຂອງການປົກປ້ອງສັງຄົມ:

- ການປົກປ້ອງສັງຄົມມີບົດບາດສໍາຄັນໃນການຈັດຕັ້ງປະຕິບັດສິດທິມະນຸດ ເພື່ອປົກປ້ອງສັງຄົມຢ່າງແທ້ຈິງ, ຫຼຸດຜ່ອນຄວາມທຸກຍາກ ແລະ ຄວາມບໍ່ສະເໝີພາບ, ແລະ ສະໜັບສະໜູນການຂະຫຍາຍຕົວໂດຍທຸກຄົນໄດ້ເຂົ້າຮ່ວມ - ດ້ວຍການຊຸກຍູ້ສົ່ງເສີມຊັບພະຍາກອນມະນຸດ ແລະ ຜະລິດຕະພາບ, ສະໜັບສະໜູນໃຫ້ເກີດມີຄວາມຕ້ອງການຢູ່ພາຍໃນປະເທດ ແລະ ອໍານວຍຄວາມສະດວກໃຫ້ແກ່ການຫັນປ່ຽນໂຄງສ້າງຂອງເສດຖະກິດແຫ່ງຊາດ.
- ການປົກປ້ອງສັງຄົມແມ່ນປັດໃຈຫຼັກຂອງຍຸດທະສາດແຫ່ງຊາດ ເພື່ອສົ່ງເສີມການພັດທະນາມະນຸດ, ສະຖຽນລະພາບທາງການເມືອງ ແລະ ການຂະຫຍາຍຕົວໂດຍທຸກຄົນໄດ້ເຂົ້າຮ່ວມ.
- ການລົງທຶນໃນການປົກປ້ອງທາງສັງຄົມ ຈະຊ່ວຍໃຫ້ບັນດາປະເທດພັດທະນາທ່າແຮງດ້ານການຜະລິດຂອງປະຊາຊົນຢ່າງຄົບຖ້ວນ, ປະກອບສ່ວນເຂົ້າໃນການມີວຽກເຮັດງານທໍາໃນລະບົບ, ສະຫນັບສະຫນູນການປ່ຽນແປງທາງດ້ານເສດຖະກິດແລະສັງຄົມ, ສົ່ງເສີມການເຕີບໂຕແບບຍືນຍົງ ແລະ ເທົ່າທຽມກັນ, ຫຼຸດຜ່ອນຄວາມສ່ຽງ, ແລະ ຊຸກຍູ້ການພັດທະນາເສດຖະກິດແລະສັງຄົມ.

**ແຫຼ່ງຂໍ້ມູນ:** ILO, n.d.-a.

## ກໍລະນີສຶກສາ: ການອຸດໜູນເດັກຢູ່ປະເທດໄທ

### ເບິ່ງ

"ການອຸດໜູນເງິນຢູ່ປະເທດໄທ":
https://www.youtube.com/watch?v=3bQjAZEHWZQ&t=30s
13:49 ນາທີ

ວິດີໂອນີ້ແມ່ນກ່ຽວກັບແນວຄວາມຄິດຂອງການອຸດໜູນເດັກຂອງປະເທດໄທ ເຊິ່ງເປັນການປົກປ້ອງສັງຄົມສໍາລັບເດັກນ້ອຍມາຈາກຄອບຄົວທີ່ມີລາຍໄດ້ຕໍ່າ. ເງິນອຸດໜູນເດັກແມ່ນເງິນທີ່ຈ່າຍໃຫ້ພໍ່ແມ່ ຫຼື ຜູ້ເບິ່ງແຍງເດັກທີ່ອາໄສຢູ່ໃນຄອບຄົວທຸກຍາກເປັນປົກກະຕິ ເພື່ອຊ່ວຍຕອບສະໜອງຄ່າຄອງຊີບທີ່ຈໍາເປັນ. ບາງປະເທດ, ເອີ້ນການອຸດໜູນນີ້ວ່າ "ເບ້ຍລ້ຽງເດັກ" ຫຼື "ອຸດໜູນເດັກ".

ການອຸດໜູນເດັກຂອງປະເທດໄທ ສະໜອງການປົກປ້ອງທາງສັງຄົມຂັ້ນຕໍ່າສໍາລັບເດັກນ້ອຍທີ່ມີອາຍຸຕໍ່າກວ່າ 6 ປີ. ນັບຕັ້ງແຕ່ໄດ້ຮັບການຮັບຮອງໃນປີ 2015 ເປັນຕົ້ນມາ, ໂຄງການດັ່ງກ່າວໄດ້ຂະຫຍາຍອອກເປັນ 2 ໄລຍະ ແລະ ປະຈຸບັນໄດ້ສະໜອງເງິນເອຸດໜູນເດືອນລະ 600 ບາດ ໃຫ້ແກ່ເດັກນ້ອຍອາຍຸຕໍ່າກວ່າ 6 ປີ ຈໍານວນ 2,3 ລ້ານຄົນ ຈາກຄອບຄົວທີ່ມີລາຍໄດ້ຕໍ່ຫົວຄົນຕໍ່ປີຕໍ່າກວ່າ 100,000 ບາດ.

ໃນເດືອນກັນຍາ ປີ 2020, ຄະນະກໍາມະການເດັກ ແລະ ຊາວໜຸ່ມແຫ່ງຊາດ (NCYC) ໄດ້ອະນຸມັດການຂະຫຍາຍການອຸດໜູນເດັກໃຫ້ກວມເອົາເດັກນ້ອຍທັງໝົດທີ່ມີອາຍຸຕໍ່າກວ່າ 6 ປີ, ປະຈຸບັນແມ່ນກໍາລັງລໍຖ້າການອະນຸມັດຈາກຄະນະລັດຖະມົນຕີ. ຖ້າຫາກວ່າໄດ້ຮັບການຮັບຮອງ, ໂຄງການດັ່ງກ່າວຈະໃຫ້ການອຸດໜູນແກ່ເດັກນ້ອຍອາຍຸຕໍ່າກວ່າ 6 ປີທັງໝົດ 4,2 ລ້ານຄົນຢູ່ໄທ

ອີງຕາມການປະເມີນຜົນຂອງສະຖາບັນຄົ້ນຄ້ວາການພັດທະນາຂອງປະເທດໄທໃນປີ 2018, ປະມານ 30% ຂອງເດັກນ້ອຍທີ່ມາຈາກຄອບຄົວທຸກຍາກທີ່ມີສິດໄດ້ຮັບການອຸດໜູນ ແມ່ນບໍ່ໄດ້ຮັບການອຸດໜູນ ເນື່ອງຈາກຄວາມຜິດພາດໃນລະຫວ່າງການກວດກັ່ນກອງ ແລະ ການຂຶ້ນທະບຽນ - ໂຄງການໃຫ້ເງິນອຸດໜູນ ເພື່ອເປົ້າໝາຍເຂົ້າເຖິງຜູ້ທຸກຍາກ ໃນທົ່ວໂລກກໍໄດ້ພົບກັບສິ່ງທ້າທາຍເຫຼົ່ານີ້ເປັນປົກກະຕິ ແລະ ໄດ້ມີເອກະສານບັນທຶກຄວາມທ້າທາຍເຫຼົ່ານີ້.

ໂຄງການອຸດໜູນເດັກທົ່ວປວງຊົນ ຈະມີຄວາມຕ້ອງການດ້ານງົບປະມານເພີ່ມອີກ 1,5 ຕື້ບາດ, ເຊິ່ງຈະເຮັດໃຫ້ຍອດລາຍຈ່າຍລວມຂອງການອຸດໜູນມີພຽງແຕ່ 0,16% ຂອງ GDP ໃນປີ 2024. ໃນປີ 2027 ຄາດຄະເນວ່າ ຈະມີຄວາມຕ້ອງການເງິນຈໍານວນ 27ຕື້ບາດ ສໍາລັບການອຸດໜູນເດັກທົ່ວປວງຊົນ. ເຖິງຢ່າງໃດກໍ່ຕາມ, ງົບປະມານທັງໝົດທີ່ຕ້ອງການ ຈະຫຼຸດລົງໃນຊຸມປີຕໍ່ໜ້າ ເນື່ອງຈາກຈໍານວນປະຊາກອນເດັກນ້ອຍຫຼຸດລົງ. ຫຼັກຖານສະແດງໃຫ້ເຫັນວ່າ ປະເທດສາມາດທີ່ຈະຂະຫຍາຍໂຄງການອຸດໜູນເດັກ ໃນຂະນະທີ່ສາມາດຮັກສາຄວາມຍືນຍົງດ້ານງົບປະມານຂອງຕົນໄວ້ໄດ້.

**ແຫຼ່ງຂໍ້ມູນ:** UNICEF Thailand 2022.

## ຜົນໄດ້ຮັບ ແລະ ປະໂຫຍດຈາກການອຸດໜູນເດັກຢູ່ປະເທດໄທ (CSG)

- ສົ່ງຜົນໃຫ້ໂພຊະນາການດີຂຶ້ນ: ເດັກນ້ອຍຢູ່ໃນຄົວເຮືອນທີ່ໄດ້ຮັບການອຸດໜູນ CSG ມີຄວາມສ່ຽງໜ່ອຍທີ່ຈະຂາດສານອາຫານ ຖ້າສົມທຽບທຽບກັບເດັກນ້ອຍຢູ່ໃນຄົວເຮືອນທີ່ຄ້າຍຄືກັນທີ່ບໍ່ໄດ້ຮັບການອຸດໜູນເດັກ. ໃນທາງສະຖິຕິ ຜົນກະທົບນີ້ແມ່ນມີຄວາມສຳຄັນໃນທຸກຕົວຢ່າງຍ່ອຍທີ່ກ່ຽວຂ້ອງ.

- ສົ່ງຜົນໃຫ້ມີການເຂົ້າເຖິງການບໍລິການຫຼັງເກີດລູກດີຂຶ້ນ: ສຳລັບຄົວເຮືອນທີ່ທຸກຍາກຫຼາຍ ເຫັນວ່າການອຸດໜູນໄດ້ສ້າງຜົນກະທົບທີ່ດີ ເຊິ່ງເຫັນໄດ້ຈາກການໄປກວດຫຼັງເກີດລູກ ເຊິ່ງມີສູງກວ່າ 9 ສ່ວນຮ້ອຍ; ໃນຂະນະດຽວກັນ ເດັກແດງທີ່ໄດ້ຮັບການອຸດໜູນ ຖ້າສົມທຽບໃສ່ກັບກຸ່ມດຽວກັນທີ່ນຳມາສົມທຽບ ແລະ ໃນຕົວຢ່າງຍ່ອຍທີ່ທັບຊ້ອນກັນຂອງຄົວເຮືອນທຸກຍາກ ແລະ ຄົວເຮືອນໃກ້ທຸກຍາກ ຈາກການໄປກວດຫຼັງເກີດລູກເຫັນວ່າມີຈຳນວນສູງກວ່າ 7 ສ່ວນຮ້ອຍ.

- ການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ: ຜູ້ເປັນແມ່ຢູ່ໃນຄົວເຮືອນທີ່ທຸກຍາກທີ່ສຸດທີ່ໄດ້ຮັບການອຸດໜູນເດັກ ມີແນວໂນ້ມທີ່ຈະເປັນຜູ້ຕັດສິນໃຈຕົ້ນຕໍໃນການຕັດສິນໃຈຕໍ່ກັບການໃຊ້ຈ່າຍໃນການຊື້ອາຫານ ແລະ ມີການຄວບຄຸມລາຍຮັບຂອງເຂົາເຈົ້າຫຼາຍຂຶ້ນ ເມື່ອສົມທຽບໃສ່ກັບຜູ້ເປັນແມ່ຢູ່ໃນຄົວເຮືອນທີ່ທຸກຍາກທີ່ສຸດທີ່ຄ້າຍຄືກັນ ແລະ ບໍ່ໄດ້ຮັບການອຸດໜູນເດັກ. ຄວາມແຕກຕ່າງຂອງກຸ່ມຕົວຢ່າງຍ່ອຍອື່ນໆ ແລະ ຕົວຢ່າງທັງໝົດແມ່ນບໍ່ມີຄວາມແຕກຕ່າງກັນຫຼາຍ, ແຕ່ສຳລັບກຸ່ມອື່ນໆເຫຼົ່ານີ້, ອັດຕາສ່ວນຂອງແມ່ຍິງທີ່ຄວບຄຸມຕົ້ນຕໍ ແມ່ນສູງກວ່າອັດຕາສ່ວນຂອງກຸ່ມຄົນທີ່ທຸກຍາກທີ່ສຸດ.

### ອຳນາດການຕັດສິນໃຈຂອງແມ່ຍິງຕໍ່ກັບການໃຊ້ຈ່າຍໃນການຊື້ອາຫານຢູ່ໃນຄົວເຮືອນ




### ຄຳຖາມໃນການທົບທວນ:

- ທ່ານໄດ້ຮຽນຮູ້ຫຍັງແດ່ຈາກການອຸດໜູນຂອງປະເທດໄທ ທີ່ສາມາດນຳໃຊ້ໃຫ້ແທດເໝາະກັບສະພາບ ແລະ ຈຸດພິເສດຂອງລາວ?

# ▶ ພາກທີ 5: ການກຳນົດເປົ້າໝາຍເພື່ອການປົກປ້ອງສັງຄົມ

ອີງຕາມສະພາບ ແລະ ຈຸດພິເສດຂອງການປົກປ້ອງສັງຄົມ, ການກຳນົດເປົ້າຫມາຍ ຫມາຍເຖິງກົນໄກໃດໜຶ່ງທີ່ຈະລະບຸຕົວບຸກຄົນ, ຄົວເຮືອນ, ແລະ ກຸ່ມຄົນທີ່ມີສິດ, ເພື່ອຈຸດປະສົງການໂອນຊັບພະຍາກອນຫຼືບຸລິມະສິດໃນການເຂົ້າເຖິງການບໍລິການສັງຄົມຕ່າງໆ. 'ກົນໄກການກຳນົດເປົ້າຫມາຍທີ່ໄດ້ຮັບຄວາມນິຍົມຫລາຍກວ່າໝູ່ ປະກອບມີການວັດແທກຖານະທາງການເງິນ ຫຼື ຄວາມທຸກຍາກ, ການວັດແທກກຸ່ມຕົວແທນຖານະທາງການເງິນ; ການຈັດປະເພດ, ທີ່ຕັ້ງພູມສັນຖານ, ການຄັດເລືອກໂດຍອີງໃສ່ຊຸມຊົນເປັນພື້ນຖານ, ແລະ ການຄັດເລືອກຕົນເອງ.

ເຫດຜົນສຳຄັນທີ່ສຸດສຳລັບການກຳນົດເປົ້າຫມາຍ 'ແມ່ນເພື່ອນຳໂຄງການ ໄປຫາຜູ້ທີ່ຈະໄດ້ຮັບຜົນປະໂຫຍດຫຼາຍທີ່ສຸດ. ການກຳນົດເປົ້າໝາຍອາດຈະມີຈຸດປະສົງອື່ນອີກຄື:

- ເພື່ອຫຼຸດຜ່ອນຄວາມທຸກຍາກໃຫ້ໄດ້ຫລາຍທີ່ສຸດ;
- ເພື່ອຮັບປະກັນວ່າບໍ່ມີໃຜຖືກ 'ປະໄວ້ຂ້າງຫລັງ';
- ເພື່ອບັນຈຸຄ່າໃຊ້ຈ່າຍໃນການສະຫນອງ; ແລະ
- ເພື່ອນຳໃຊ້ຊັບພະຍາກອນໃຫ້ມີປະສິດທິພາບສູງສຸດ ເມື່ອປະເຊີນກັບຂໍ້ຈຳກັດທາງດ້ານງົບປະມານ.

ຫຼື ອາດຈະເພື່ອຜົນປະໂຫຍດທາງການເມືອງ.
ການນຳໃຊ້ການກຳຫນົດເປົ້າຫມາຍຍັງເປັນບັນຫາໂຕ້ແຍ້ງກັນ, ຄຳວິພາກວິຈານສຳລັບທັງສອງແນວທາງປະຕິບັດ (ເນື່ອງຈາກວ່າ ກົນໄກການກຳນົດເປົ້າຫມາຍທັງຫມົດມີຂໍ້ຜິດພາດ ແລະ ມີຄ່າໃຊ້ຈ່າຍ) ແລະ ເຫດຜົນທາງຈັນຍາບັນ (ເນື່ອງຈາກວ່າມັນສາມາດນຳໄປສູ່ 'ຄວາມແຕກແຍກທາງສັງຄົມ ແລະ ແນວຄວາມຄິດທີ່ບໍ່ກວມເອົາຜົນປະໂຫຍດຂອງປະຊາຊົນຈຳນວນໜຶ່ງ ແມ່ນຄວາມບໍ່ຍຸຕິທຳທາງສັງຄົມ'). ກົນໄກການກຳນົດເປົ້າໝາຍ ພົບກັບຄວາມຫຍຸ້ງຍາກໃນການອອກແບບ ແລະ ການຈັດຕັ້ງປະຕິບັດ ເພື່ອເຂົ້າເຖິງຜູ້ທີ່ຕ້ອງການຄວາມຊ່ວຍເຫຼືອຫລາຍທີ່ສຸດ; ດັ່ງນັ້ນ, ກຸ່ມຄົນດ້ອຍໂອກາດຈຳນວນໜຶ່ງອາດບໍ່ຖືກນັບເຂົ້າ. ໂດຍປົກກະຕິແລ້ວ, ການວັດແທກກຸ່ມຕົວແທນຖານະທາງການເງິນ/ຄວາມທຸກຍາກ ເພື່ອມາກວດສອບເຖິງລັກສະນະ 'ຂໍ້ຜິດພາດໃນການນັບເຂົ້າ ແລະ ການບໍ່ໄດ້ນັບເຂົ້າ ໂດຍປົກກະຕິແລ້ວ ແມ່ນຢູ່ 30-40%', ການເກັບກຳຂໍ້ມູນ ແລະ ການວິເຄາະຄວາມທຸກຍາກເພື່ອກຳນົດເປົ້າຫມາຍ, ແລະ ການເກັບຮັກສາຂໍ້ມູນນີ້ໃຫ້ທັນສະກັບສະພາບການ ອາດມີຄ່າໃຊ້ຈ່າຍສູງ. ນອກຈາກນັ້ນ, ການກຳນົດເປົ້າຫມາຍຍັງເພີ່ມຄວາມເຄັ່ງຕຶງທາງສັງຄົມ. ຫຼັກຖານກ່ຽວກັບຜົນກະທົບຂອງການກຳນົດເປົ້າຫມາຍທີ່ກວ້າງຂວາງຕໍ່ກັບຄວາມສາມັກຄີພາຍໃນສັງຄົມແມ່ນຍັງຈຳກັດ, ຜົນຂອງການສຳຫລວດຍັງບໍ່ມີຄວາມຈະແຈ້ງ (Carter, Roelen, Enfield, & Avis, 2019)

## ວິທີການກຳນົດເປົ້າໝາຍທີ່ສຳຄັນ

ຂໍ້ດີ ແລະ ຂໍ້ເສຍຂອງທາງເລືອກໃນການກຳນົດເປົ້າຫມາຍຕ່າງໆ

| | ທົ່ວປວງຊົນ ແລະ ແບບສະເພາະກຸ່ມຄົນ | ຂົງເຂດພູມສັນຖານທີ່ທຸກຍາກ | ເລັ່ງໃສ່ຜູ້ທຸກຍາກ (PMT) | ຊຸມຊົນເປັນພື້ນຖານຫຼັກ |
|---|---|---|---|---|
| **ຂໍ້ດີ** | **1.** ວິທີການກຳນົດທົ່ວປວງຊົນມີຕົ້ນທຶນບໍລິຫານຕໍ່າ, ຍ້ອນວ່າບໍ່ມີຄ່າໃຊ້ຈ່າຍໃນການກຳນົດກຸ່ມເປົ້າໝາຍ, ແລະ ງ່າຍສຳລັບຜູ້ບໍລິຫານທີ່ຈະປະຕິບັດ, ໂດຍສະເພາະຢູ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເຊິ່ງເປັນປະເທດທີ່ມີພື້ນຖານໂຄງລ່າງ ແລະ ຊັບພະຍາກອນມະນຸດຈຳກັດ.<br>**2.** ຫຼຸດຜ່ອນຄວາມຜິດພາດການບໍ່ນັບເອົາກຸ່ມຄົນໃດໜຶ່ງເຂົ້າ; ໃນນັ້ນ, ຄົນທຸກຍາກມີແນວໂນ້ມທີ່ຈະໄດ້ຮັບຜົນປະໂຫຍດຈາກວິທີການນີ້ | **1.** ທາງເລືອກນີ້ສ່ວນຫຼາຍແລ້ວຈະຊ່ວຍຫຼຸດຄ່າໃຊ້ຈ່າຍໃນການບໍລິຫານ, ເນື່ອງຈາກວ່າການກຳນົດເມືອງທຸກຍາກຈະມີຄ່າໃຊ້ຈ່າຍໃນການບໍລິການໜ່ອຍ ຖ້າສົມທຽບກັບການກຳນົດຜູ້ທຸກຍາກ ຜ່ານການວັດແທກກຸ່ມຕົວແທນຖານະທາງການເງິນ/ຄວາມທຸກຍາກ(PMT). (ອີງຕາມແຜນທີ່ຄວາມທຸກຍາກຕາມການສຳຫຼວດພູມສັນຖານຢູ່ໃນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.) | **1.** ຫຼຸດຜ່ອນການອຸດໜູນທີ່ພົວພັນກັບຄ່າໃຊ້ຈ່າຍຂອງໂຄງການ, ເນື່ອງຈາກວ່າປະຊາຊົນກຸ່ມເປົ້າຫມາຍທີ່ມີສິດໄດ້ຮັບການອຸດໜູນນັ້ນແຄບລົງ.<br>**2.** ໃນກໍລະນີທີ່ຄວາມຜິດພາດໃນການບໍ່ຖືກນັບເຂົ້າ ແລະ ການນັບເຂົ້າຢູ່ໃນລະດັບປານກາງ, ວິທີການນີ້ກໍມີຄ່າໃຊ້ ຈ່າຍທີ່ມີປະສິດທິພາບສູງໃນການຫຼຸດຜ່ອນຄວາມທຸກຍາກ, ແລະ ດັ່ງນັ້ນຈຶ່ງສະຫນອງທາງເລືອກທີ່ເປັນໄປໄດ້ສຳລັບກໍລະນີທີ່ມີຂໍ້ຈຳກັດທາງດ້ານງົບປະມານ ເຊັ່ນດຽວກັນກັບຄວາມສົນໃຈທາງດ້ານການເມືອງ. | **1.** ສະມາຊິກຊຸມຊົນເອງໄດ້ເຕົ້າໂຮມກັນເພື່ອຈັດລຳດັບ ຫຼື ກຳນົດຄົວເຮືອນທີ່ເຂົາເຈົ້າຖືວ່າທຸກຍາກ, ໂດຍປົກກະຕິແລ້ວມີການສົນທະນາກ່ຽວກັບຄຳນິຍາມ ຫຼືມາດຖານທີ່ພົວພັນກັບຄວາມທຸກຍາກ (Alatas et al. 2012).<br>**2.** ມີຄວາມຖືກຕ້ອງຫຼາຍກ່ວາການວັດແທກຕົວແທນຖານະທາງການເງິນ/ຄວາມທຸກຍາກ ໃນການກຳນົດຜູ້ທຸກຍາກໂດຍສະເພາະຢູ່ເຂດຫ່າງໄກສອກຫຼີກ, ຊົນນະບົດ. |

| | | | |
|---|---|---|---|
| **3.** ສະກັດກັ້ນການເກີດມີການຈຳແນກທາງສັງຄົມທີ່ຕິດພັນກັບການອຸດໜູນທີ່ເລັ່ງໃສ່ກຸ່ມຄົນທຸກຍາກ.<br>**4.** ສົ່ງເສີມການເຂົ້າຮ່ວມທາງສັງຄົມ ແລະ ກຽດສັກສີຂອງປະຊາກອນທີ່ມີຄວາມສ່ຽງ/ຄວາມບອບບາງ.<br>**5.** ລັກສະນະຂອງບັນດາໂຄງການອຸດໜູນທົ່ວປວງຊົນ ແລະ ການເຂົ້າເຖິງທຸກຄົນຢ່າງສະເໝີພາບ ຈະຊ່ວຍເຮັດໃຫ້ສິດທິມະນຸດປະກົດຜົນເປັນຈິງຢູ່ໃນການປົກປ້ອງສັງຄົມ ແລະ ສົ່ງເສີມຄວາມສາມັກຄີທາງສັງຄົມພາຍໃນຊຸມຊົນ. | **3.** ການກຳນົດເປົ້າ ໝາຍຂົງເຂດທຸກຍາກໂດຍອີງໃສ່ພູມສັນຖານສາມາດຫຼຸດຜ່ອນຄວາມຜິດພາດໃນການນັບເຂົ້າໄດ້ຢ່າງຫຼວງຫຼາຍ ເຊິ່ງພົວພັນກັບການກຳນົດທົ່ວປວງຊົນ ແລະ ກໍເປັນວິທີການທີ່ປະຫຍັດຄ່າໃຊ້ຈ່າຍຫຼາຍຂຶ້ນ, ໂດຍສະເພາະເມື່ອມີງົບປະມານຕໍ່າ ແລະ ເນັ້ນໃສ່ການຫຼຸດຜ່ອນຄວາມຜິດພາດໃນການນັບເຂົ້າ. ໂດຍສະເພາະແມ່ນໃນເວລາກຳນົດເປົ້າຫມາຍ ຂະຫນາດນ້ອຍກວ່າ (ຕົວຢ່າງ, ເມືອງ ສົມທຽບກັບພາກພື້ນ), ດ້ວຍວິທີນີ້ ການເລັ່ງໃສ່ຜູ້ທຸກຍາກຈຶ່ງມີປະສິດທະພາບຫຼາຍກວ່າ. ວິທີການນີ້ແມ່ນເໝາະສົມສຳລັບສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ເນື່ອງຈາກອັດຕາຄວາມທຸກຍາກຢູ່ຂັ້ນເມືອງແມ່ນມີຢູ່ໃນການສຳຫຼວດພົນລະເມືອງປີ 2015 ແລ້ວ.<br>**4.** ການກຳນົດຂົງເຂດທຸກຍາກໂດຍອີງໃສ່ພູມສັນຖານແມ່ນສາມາດຫັນປ່ຽນເປັນວິທີການທົ່ວປວງຊົນໄດ້ງ່າຍກວ່າລະບົບການວັດແທກຕົວແທນຖານະທາງການເງິນ/ ຄວາມທຸກຍາກ | **3.** ການກຳນົດເປົ້າໝາຍຜູ້ທຸກຍາກສາມາດເປັນຈຸດເລີ່ມຕົ້ນທີ່ດີໃນການນຳສະເໜີໂຄງການຄັ້ງທຳອິດ, ເຊິ່ງສາມາດກ້າວໄປສູ່ວິທີການອຸດໜູນທົ່ວປວງຊົນທົ່ວໄປໃນໄລຍະກາງ/ໄລຍະຍາວ. | **3.** ສ້າງຄວາມພໍອົກໃຈໃນຊຸມຊົນຫຼາຍຂຶ້ນ, ເຊິ່ງມັກຈະມີຜົນກະທົບທາງບວກເຊັ່ນ: ການຂັດແຍ້ງ ຫຼື ການປະທ້ວງໃນເວລາຈັດຕັ້ງປະຕິບັດໂຄງການ ແມ່ນມີໜ່ອຍ(Yusuf, 2010; Alatas et al, 2012). |

| | | | | |
|---|---|---|---|---|
| **ຈຸດອ່ອນ** | 1. ຄ່າໃຊ້ຈ່າຍໃນໂຄງການໂດຍລວມສູງ, ເນື່ອງຈາກວ່າປະຊາຊົນຈຳນວນຫຼວງຫຼາຍມີສິດໄດ້ຮັບການອຸດໜູນ. ປະເທດທີ່ມີລາຍຮັບຕ່ຳ ອາດພົບກັບຄວາມຫຍຸ້ງຍາກເປັນພິເສດໃນການບັນລຸ ແລະ ມີຄວາມຍືນຍົງ. ໂຄງການທີ່ມີຄ່າໃຊ້ຈ່າຍສູງ ອາດຈະສາມາດໃຫ້ການອຸດໜູນໄດ້ພຽງແຕ່ໃນໄລຍະສັ້ນ ແລະ ຫຼັງຈາກນັ້ນກໍໝົດໄປ.<br>2. ການແນະນຳ ແລະ ຜັນຂະຫຍາຍໂຄງການຂະໜາດໃຫຍ່ເທື່ອລະກ້າວອາດໃຊ້ເວລາຫຼາຍປີ. ກໍລະນີນີ້ຕົກຢູ່ໃນກໍລະນີຂອງ ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ເຊິ່ງວ່າມີໂຄງການ ສະຫວັດດີການສັງຄົມໜ່ອຍທີ່ສຸດ ທີ່ໄດ້ຮັບທຶນໃນໄລຍະຍາວ ແລະ ຈັດຕັ້ງປະຕິບັດ ໂດຍລັດຖະບານ. ໂຄງການສ່ວນໃຫຍ່ທີ່ມີຢູ່ນັ້ນເປັນໂຄງການທີ່ຜູ້ໃຫ້ທຶນເປັນຜູ້ນຳພາຈັດຕັ້ງປະຕິບັດ, ພື້ນຖານໂຄງລ່າງແຫ່ງຊາດສຳລັບ ໂຄງການສະຫວັດດີການສັງຄົມແມ່ນມີໜ່ອຍຫຼາຍ (ເຊັ່ນ: ອຸປະກອນ, ICT ແລະຊັບພະຍາກອນມະນຸດທີ່ມີທັກສະ). ດັ່ງນັ້ນ, ຈຳເປັນຕ້ອງໄດ້ສ້າງຕັ້ງລະບົບຂຶ້ນກ່ອນ, ລະບົບນີ້ຕ້ອງໄດ້ໃຊ້ເວລາດົນ - ໂດຍສະເພາະ ອຸປະສັກທາງພູມສັນຖານຊົນນະບົດຂອງສາທາລະນະລັດປະຊາທິປະໄຕປະຊາຊົນລາວ.<br>3. ເຖິງແມ່ນວ່າໂຄງການອຸດໜູນທົ່ວປວງຊົນ ອາດຈະມີຄວາມສົນໃຈທາງການເມືອງຈຳນວນໜຶ່ງ ເນື່ອງຈາກປະຊາກອນສ່ວນໃຫຍ່ມີສິດໄດ້ຮັບການອຸດໜູນ (ກົງກັນຂ້າມກັບໂຄງການອຸດໜູນທີ່ເລັ່ງໃສ່ຄົນທຸກຍາກ), ໃນຂັ້ນສູນກາງ ອາດຈະບໍ່ມີຄວາມສົນໃຈທາງການເມືອງຫຼາຍອີງຕາມເຫດຜົນ ອາດຈະດີກວ່າຖ້ານຳໃຊ້ຊັບພະຍາກອນຢູ່ຂົງເຂດອື່ນ, ເຊັ່ນ: ພື້ນຖານໂຄງການ. | 1. ໂດຍລວມແລ້ວຄ່າໃຊ້ຈ່າຍຂອງໂຄງການແມ່ນສູງກວ່າການກຳນົດກຸ່ມເປົ້າຫມາຍຜູ້ທຸກຍາກ ໂດຍໃຊ້ວິທີການວັດແທກຖານະທາງການເງິນ/ຄວາມທຸກຍາກ / PMT, ຍ້ອນວ່າປະຊາຊົນທັງຫມົດໃນເມືອງທີ່ມີສິດໄດ້ຮັບການອຸດໜູນ.<br>2. ທາງເມືອງອາດຈະຕ້ອງໄດ້ແຈກຢາຍອັດຕາການອຸດໜູນໃຫ້ຄົບຕາມກຳນົດເປັນເວລາຫຼາຍປີ<br>3. ຄົນທຸກຍາກທີ່ອາໃສຢູ່ໃນເມືອງທີ່ບໍ່ທຸກຍາກແມ່ນຈະບໍ່ຖືກນັບເຂົ້າ, (ຄວາມຜິດພາດໃນການບໍ່ຖືກນັບເຂົ້າ).<br>4. ຄວາມຜິດພາດໃນການນັບເຂົ້າອາດຈະເພີ່ມຂຶ້ນຖ້າສົມທຽບກັບວັດແທກກຸ່ມຕົວແທນຖານະທາງການເງິນ/ຄວາມທຸກຍາກ | 1. ໂດຍທົ່ວໄປແລ້ວ, ວິທີການນີ້ແມ່ນເກີດມີຄວາມຜິດພາດສູງໃນການນັບເຂົ້າ ແລະ ບໍ່ຖືກນັບເຂົ້າ ເນື່ອງຈາກມີຂໍ້ບົກຜ່ອງຫຼາຍຢ່າງໃນການອອກແບບ, ມັກຈະບໍ່ສາມາດເຂົ້າເຖິງຄົນທຸກຍາກທີ່ສຸດ, ຄົນມີຄວາມສ່ຽງ, ແລະ ເຮັດໃຫ້ບໍ່ມີປະສິດທິພາບ.<br>2. ຄ່າໃຊ້ຈ່າຍຂອງໂຄງການໂດຍລວມຕໍ່ຄົນສູງ ເນື່ອງຈາກການເລັ່ງໃສ່ກຸ່ມເປົ້າໝາຍ ມີຄ່າໃຊ້ຈ່າຍສູງ.<br>3. ອາດຈະກໍ່ໃຫ້ເກີດຄວາມຂັດແຍ່ງທາງສັງຄົມຢູ່ໃນຊຸມຊົນ, ຍ້ອນວ່າປະຊາຊົນຢູ່ໃນຊຸມຊົນດຽວກັນອາດຈະບໍ່ເຂົ້າໃຈວ່າເປັນຫຍັງພວກເຂົາບໍ່ມີເງື່ອນໄຂໄດ້ຮັບກາອຸດໜູນ, ໃນຂະນະທີ່ເພື່ອນບ້ານຂອງພວກເຂົາໄດ້ຮັບການອຸດໜູນ.<br>4. ຜູ້ນຳຊຸມຊົນ/ນາຍບ້ານ, ເຊິ່ງເປັນຜູ້ທີ່ຄຸ້ນເຄີຍກັບສະພາບຂອງສະມາຊິກຊຸມຊົນ/ໝູ່ບ້ານ, ບໍ່ເຫັນດີ ແລະ ບໍ່ໃຫ້ການສະໜັບສະໜູນ ແລະບໍ່ເຂົ້າມາມີບົດບາດໃນການ ອອກແບບ ແລະ ການຕັດສິນໃຈຕໍ່ກັບການທົດສອບຕົວແທນ.<br>5. ວິທີການນີ້ຂັດກັບວິທີການຖືເອົາສິດທິເປັນພື້ນຖ | 1. ມີຄວາມສ່ຽງຕໍ່ການເກີດຄວາມຜິດພາດໃນການນັບເຂົ້າ; ຄົວເຮືອນທີ່ຂ້ອນຂ້າງຮັ່ງມີອາດຈະຖືກນັບເຂົ້າເນື່ອງຈາກການສໍ້ລາດບັງຫຼວງ.<br>2. 'ຜູ້ມີອິດທິພົນ ຫຼື ມີບົດບາດສູງ (ສະມາຊິກຊຸມຊົນທີ່ມີສະຖານະພາບສູງ ມີອິດທິພົນຕໍ່ການແຈກຢາຍການອຸດໜູນ). ຊຸມຊົນອາດຈະບໍ່ມີຄວາມເຂົ້າໃຈດີຕໍ່ກັບຊັບສິນແທ້ຈິງຂອງບາງຄົວເຮືອນ (Handa et al, 2012).<br>3. ຍົກຍ້າຍຄ່າໃຊ້ຈ່າຍບາງສ່ວນຈາກຜູ້ບໍລິຫານໄປສູ່ສະມາຊິກຊຸມຊົນ (Development Pathways, 2019). |

**ແຫຼ່ງຂໍ້ມູນ:** ILO, unpublished; BMZ, 2017.

## ກໍລະນີສຶກສາ: ບໍານານທາງສັງຄົມສໍາລັບພົນລະເມືອງອາວຸໂສ ຢູ່ປະເທດຟີລິບປິນ

### ເບິ່ງ

https://www.youtube.com/watch?v=5b22h3PoYgo
9:39 ນາທີ

ການປະຕິຮູບລະບົບເງິນບໍານານຂອງຟີລິບປິນໃນບໍ່ດົນມານີ້ ໄດ້ເຮັດໃຫ້ພົນລະເມືອງອາວຸໂສທີ່ໄດ້ຮັບບໍາເນັດທາງສັງຄົມມີຈໍານວນເພີ່ມຂຶ້ນເຖິງ 2.8 ລ້ານຄົນໃນຕົ້ນປີ 2017, ແລະ ຈໍານວນເງິນບໍານານ ຂອງລະບົບປະກັນສັງຄົມກໍເພີ່ມຂຶ້ນ - ແຕ່ກໍຍັງມີປະມານ 40% ຂອງພົນລະເມືອງອາວຸໂສຂອງຟີລິບປິນຍັງບໍ່ໄດ້ເຂົ້າຮ່ວມໃນລະບົບບໍານານ.

ພັນທະມິດໃນການບໍລິການຂອງຜູ້ອາຍຸສູງ ແລະ ແຮວເອດສາກົນ (HelpAge International) ໄດ້ທົບທວນການຈັດຕັ້ງປະຕິບັດ ແລະ ຜົນກະທົບຂອງລະບົບບໍານານທາງສັງຄົມ ແລະ ໄດ້ພົບວ່າ ລະບົບບໍານານທາງສັງຄົມທົ່ວປວງຊົນ ເປັນລະບົບການໃຫ້ບໍານານ ແລະ ແທດເໝາະກັບຄວາມຕ້ອງການຫຼາຍຂຶ້ນກວ່າເກົ່າ ແລະ ແທດເໝາະກັບສະພາບ ແລະ ຈຸດພິເສດຂອງປະເທດ. ເພື່ອໃຫ້ປະກົດຜົນເປັນຈິງ ແລະ ຫລີກລ່ຽງບໍ່ໃຫ້ພົນລະເມືອງອາວຸໂສຄົນໃດໜຶ່ງຫລຸດອອກຈາກການອຸດໜູນ ໂດຍສະເພາະ 'ກຸ່ມຄົນຢູ່ໃນລະດັບປານກາງ', ຫຼື ຂະແໜງນອກລະບົບ ສ່ວນຫຼາຍແລ້ວແມ່ນຖືກປະໄວ້ຂ້າງຫຼັງ, ການສຶກສາສໍາຫຼວດໄດ້ໃຫ້ຄໍາແນະນໍາວ່າ ແຜນງານບໍານານທາງສັງຄົມພາຍໃຕ້ກົດໝາຍວ່າດ້ວຍການຂະຫຍາຍພົນລະເມືອງອາວຸໂສປີ 2010 (ກົດໝາຍວ່າດ້ວຍ ສາທາລະນະລັດ ເລກທີ 9994) ຕ້ອງໄດ້ມີການປັບປຸງ.

ວິດີໂອນີ້ບັນທຶກການອຸດໜູນ, ຊ່ອງຫວ່າງ, ແລະ ຄວາມທ້າທາຍຂອງບໍານານຜູ້ອາຍຸສູງຈໍານວນໜຶ່ງ ແລະ ຜູ້ຈັດຕັ້ງປະຕິບັດຢູ່ໃນລະບົບບໍານານທາງສັງຄົມໃນປະຈຸບັນຢູ່ຟີລິບປິນ, ລວມທັງຄໍາແນະນໍາສໍາລັບວິທີການໃຫມ່ທີ່ຈະເປັນປະໂຫຍດ ບໍ່ພຽງແຕ່ສໍາລັບບາງສ່ວນເທົ່ານັ້ນ ແຕ່ເປັນປະໂຫຍດໃຫ່ແກ່ປະຊາກອນອາຍຸສູງທັງໝົດຂອງຟີລິບປິນ.

# ▸ ພາກທີ 6: ປະເພດຂອງການປົກປ້ອງສັງຄົມ: ແບບມີເງື່ອນໄຂ

- ການອຸດໜູນເງິນສົດແບບມີເງື່ອນໄຂ ຮຽກຮ້ອງໃຫ້ຜູ້ໄດ້ຮັບການອຸດໜູນປະຕິບັດຕາມເງື່ອນໄຂສະເພາະໃດໜຶ່ງໃນການຮັບເງິນ. ສ່ວນຫຼາຍແລ້ວແມ່ນພົວພັນກັບການເຂົ້າໂຮງຮຽນຫຼືການດູແລສຸຂະພາບ (ຕົວຢ່າງ, 90 ເປີເຊັນໄດ້ເຂົ້າໂຮງຮຽນ ຫຼື ຝາກທ້ອງ).ຖ້າຜູ້ໄດ້ຮັບການອຸດໜູນບໍ່ປະຕິບັດຕາມເງື່ອນໄຂເຫຼົ່ານີ້ ແມ່ນຈະໄດ້ມີການໃສ່ມາດຕະການ ຫຼື ປັບໂທດ (ເຊັ່ນ ຢຸດເຊົາໂອນເງິນ).
- ແບບມີເງື່ອນໄຂທີ່ບໍ່ຮຸນແຮງ:ວິທີການປະສົມປະສານ. ແມ່ນເພື່ອເຕືອນໃຫ້ປະຊາຊົນຮູ້ວ່າການທີ່ເຂົາເຈົ້າຈະໄດ້ຮັບການອຸດໜູນເງິນສົດນັ້ນແມ່ນເພື່ອໃຫ້ບັນລຸເປົ້າຫມາຍຂອງໂຄງການໄດ້ຫຼາຍຂື້ນ, ໂດຍບໍ່ຕ້ອງໄດ້ແບກຫາບພາລະໜັກໃນການຕິດຕາມແລະການປະເມີນຜົນ(M&E)ໂຄງການທີ່ໃຫ້ການອຸດໜູນແບບມີເງື່ອນໄຂທີ່ແທ້ຈິງ (Hemsteede 2018). ສິ່ງທີ່ແຕກຕ່າງກັບການອູດໜູນແບບມີເງື່ອນກໍຄື ຖ້າຜູ້ໄດ້ຮັບການອູດໜູນບໍ່ປະຕິບັດຕາມເງື່ອນໄຂທີ່ພໍຮັບໄດ້ນັ້ນ ແມ່ນຈະບໍ່ໄດ້ມີການປັບໂທດ ຫຼື ໃສ່ມາດຕະການກັບຜູ້ໄດ້ຮັບການອູດໜູນ.
- ການອຸດໜູນເງິນສົດແບບບໍ່ເງື່ອນໄຂ ບໍ່ໄດ້ຮຽກຮ້ອງໃຫ້ຜູ້ໄດ້ຮັບການອຸດໜູນທີ່ເປັນເປົ້າໝາຍຕ້ອງປະຕິບັດຕາມເງື່ອນໄຂສະພາະໃດໜຶ່ງ.

ທາງເລືອກທາງນະໂຍບາຍທີ່ສຳຄັນອີກອັນຫນຶ່ງແມ່ນ ການເຂົ້າເຖິງການອຸດໜູນຄວນຈະເຮັດໃຫ້ເປັນເງື່ອນໄຂຕໍ່ຜູ້ຮັບຜົນປະໂຫຍດ ແລະ ໃຫ້ສອດຄ່ອງກັບພຶດຕິກຳສະເພາະທີ່ລັດຖະບານກຳນົດໄວ້. ສ່ວນຫລາຍແລ້ວເງື່ອນໄຂມັກຈະພົວພັນກັບການເຂົ້າໂຮງຮຽນຫຼືການກວດສຸຂະພາບ ຖ້າບໍ່ປະຕິບັດຕາມເງື່ອນໄຂ ກໍຈະໄດ້ມີການປັບໂທດ ຫລືຍຸດເຊົາໃຫ້ການອຸດໜູນ, ເຊັ່ນຖອນການອຸດ (UN ESCAP 2018).

ຍົກຕົວຢ່າງ, ພາຍໃຕ້ໂຄງການຫຼຸດຜ່ອນຄວາມທຸກຍາກ ແລະ ຂາດສານອາຫານໃນຊົນນະບົດຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ການໂອນເງິນສົດແມ່ນມີເງື່ອນໄຂ ຄືຕ້ອງໄດ້ເຂົ້າຮ່ວມກອງປະຊຸມປະຈຳເດືອນຂັ້ນບ້ານໃນຫົວຂໍ້ ການສື່ສານທີ່ນຳໄປສູ່ການປ່ຽນແປງທາງສັງຄົມ ແລະ ພຶດຕິກຳ, ເຊັ່ນດຽວກັນກັບການຊົມໃຊ້ການບໍລິການສຸຂະພາບ ແລະໂພຊະນາການທີ່ສຳຄັນ, ເຊັ່ນ ການຝາກທ້ອງຂອງແມ່ຍິງຖືພາ, ການຕິດຕາມການຈະເລີນເຕີບໂຕ ແລະ ການສົ່ງເສີມການລ້ຽງລູກໃນເກນອາຍຸ 0-2 ປີ, ແລະ ການສັກຢາວັກຊີນທີ່ເໝາະສົມຕາມເກນອາຍຸເດັກ 0-2 ປີ. (World Bank 2019).

### ການໂຕ້ແຍ້ງຕໍ່ກັບການອຸດໜູນແບບມີເງື່ອນໄຂ

**ເຫັນດີກັບການອຸດໜູນແບບມີເງື່ອນໄຂ:**

- ການມີເງື່ອນໄຂຊ່ວຍໃຫ້ຂ້າມຜ່ານສະຖານະການຕ່າງໆທີ່ຄົວເຮືອນບໍ່ມີຄວາມເຂົ້າໃຈເຊິ່ງເລິກຕໍ່ກັບຜົນປະໂຫຍດຂອງການບໍລິການ, ເຊັ່ນວ່າ ຜົນຕອບແທນຂອງການສຶກສາ.
- ການມີເງື່ອນໄຂຍັງອາດຈະແກ້ໄຂສະຖານະການທີ່ຜູ້ຮັບຜິດຊອບໃນການຕັດສິນໃຈຕໍ່ກັບຫາສຳຄັນຢູ່ໃນຄອບຄົວທີ່ຂາດຂໍ້ມູນ ຫຼື ຄວາມສົນໃຈໃນການລົງທຶນ ເຊິ່ງຜູ້ກຳນົດນະໂຍບາຍຖືວ່າສຳຄັນສຳລັບການພັດທະນາເສດຖະກິດ ແລະ ການພັດທະນາມະນຸດຂອງປະເທດ.
- ການມີເງື່ອນໄຂອາດຈະເສີມສ້າງ ແລະ/ຫຼື ກະຕຸ້ນພຶດຕິກຳທາງບວກ, ເຊັ່ນ: ການສົ່ງເດັກຍິງໄປເຂົ້າໂຮງຮຽນ ເພື່ອຂ້າມຜ່ານຄວາມຫຼາກຫຼາຍດ້ານບົດບາດຍິງຊາຍ ແລະ ບັນທັດຖານດັ້ງເດີມ.
- ອາດຈະໄດ້ຮັບການສະຫນັບສະຫນູນທາງການເມືອງຈາກຜູ້ວາງນະໂຍບາຍ, ຜູ້ເສຍພາສີອາກອນ ແລະ ຊຸມຊົນເອງຈຳນວນໜຶ່ງ ໄດ້ງ່າຍຂື້ນ ຖ້າການໂອນເງິນເຊື່ອມໂຍງກັບຄວາມຮັບຜິດຊອບສະເພາະໃດໜຶ່ງ.

### ບໍ່ເຫັນດີກັບການອຸດໜູນແບບມີເງື່ອນໄຂ:

- ຈາກທັດສະນະດ້ານສິດທິມະນຸດ, ບຸກຄົນມີສິດໄດ້ຮັບການປົກປ້ອງສັງຄົມທີ່ບໍ່ມີເງື່ອນໄຂຕໍ່ການປະຕິບັດຮູບການໃດໜຶ່ງ, ສະນັ້ນ ການມີເງື່ອນໄຂຈຶ່ງເປັນການບໍ່ເຄົາລົບຫຼັກການຂອງກຽດສັກສີ, ຄວາມສະເໝີພາບ ແລະ ການບໍ່ຈຳແນກຂອງມະນຸດ.
- ການມີເງື່ອນໄຂອາດຈະເຮັດໃຫ້ເກີດມີຄວາມດ້ອຍໂອກາດ/ສ່ຽງ ຫຼື ເປັນການລົງໂທດຜູ້ທີ່ມີຄວາມສ່ຽງທີ່ສຸດຕໍ່ກັບຄວາມທຸກຍາກ ແລະ ຂາດເຂີນ, ຍ້ອນວ່າພວກເຂົາອາດບໍ່ສາມາດປະຕິບັດຕາມເງື່ອນໄຂອັນເນື່ອງມາຈາກໄລຍະທາງ, ຄວາມພິການ, ການຈຳແນກ ຫຼື ອຸປະສັກທາງພາສາ. ນອກຈາກນີ້, ຄອບຄົວທຸກຍາກກໍບໍ່ສາມາດປະຕິບັດຕາມເງື່ອນໄຂບາງຢ່າງໄດ້ຍ້ອນວ່າ ໂຮງຮຽນ ແລະ ທ່ານຫມໍ ມັກຈະຖາມເອົາ "ຄ່າທຳນຽມ" ເຖິງແມ່ນວ່າການສຶກສາ ແລະ ການຮັກສາສຸຂະພາບຈະບໍ່ໄດ້ເສຍຄ່າກໍຕາມ.

- ການມີເງື່ອນໄຂອາດສ້າງແຮງຈູງໃຈ ແລະ ໂອກາດທາງລົບໃນການສວຍໃຊ້ອຳນາດຂອງບາງກຸ່ມຄົນ, ໂດຍສະເພາະແມ່ນຜູ້ຮັບຜິດຊອບການຕິດຕາມ ແລະ ບັງຄັບໃຊ້ເງື່ອນໄຂ, ເຮັດໃຫ້ມີການໃຊ້ສິດອຳນາດທີ່ບໍ່ເທົ່າທຽມກັນຫຼາຍຂື້ນ.
- ການມີເງື່ອນໄຂອາດເຮັດໃຫ້ຄວາມສາມາດຂອງຄົວເຮືອນທຸກຍາກໃນການເລືອກການລົງທຶນທີ່ເໝາະສົມທີ່ສຸດສຳຫຼັບຂອງເຂົາເຈົ້າຫຼຸດລົງ, ຖ້າສົມມຸດວ່າເຂົາເຈົ້າບໍ່ມີຄວາມສາມາດໃນການເລືອກທີ່ສະຫລາດ, ຖ້າເປັນດັ່ງນັ້ນ, ເງື່ອນໄຂສະເພາະຂອງຂະແໜງການໃດໜຶ່ງອາດກໍ່ໃຫ້ເກີດຄວາມສ່ຽງຕໍ່ຜົນກະທົບຂອງຫຼາຍຂະແໜງການ ແລະ ເສີມສ້າງເຊິ່ງກັນ ແລະ ກັນຂອງການອຸດໜູນເງິນ.
- ການເງື່ອນໄຂສ້າງພາລະໜັກທາງການເງິນ ແລະ ການບໍລິຫານ ຍ້ອນວ່າການຕິດຕາມການຈັດຕັ້ງປະຕິບັດ, ແລະ ການຈັດຕັ້ງປະຕິບັດຢ່າງມີປະສິດທິພາບແມ່ນຂື້ນກັບຄວາມອາດສາມາດຂອງມະນຸດ ແລະ ການສະໜອງການບໍລິການທີ່ມີຄຸນນະພາບໃນລະດັບຊາດ ແລະ ລະດັບທ້ອງຖິ່ນ.

ນອກຈາກການນຳໃຊ້ເງື່ອນໄຂ ແລະ ການລົງໂທດແລ້ວ ກໍຍັງມີທາງເລືອກອື່ນໆອີກ. ລັດຖະບານຍັງສາມາດແນະນຳການກະຕຸ້ນ ຫຼື ສັນຍາລັກໃນການສົ່ງເສີມ ເຂົ້າໃນການອອກແບບລະບົບກອງທຶນ. ຕົວຢ່າງ, ເດັກນ້ອຍສາມາດລົງທະບຽນໃນລະບົບປົກປ້ອງສັງຄົມຢູ່ໃນໂຮງຮຽນ ເພື່ອສະແດງໃຫ້ເຫັນເຖິງການເຊື່ອມໂຍງລະຫວ່າງການອຸດໜູນ ແລະ ການສະແຫວງຫາການສຶກສາ. ຜູ້ເບິ່ງແຍງເດັກອາດຈະຕ້ອງໄດ້ລົງນາມໃນສັນຍາທີ່ຈະສົ່ງລູກຂອງເຂົາເຈົ້າໄປໂຮງຮຽນ ຫຼື, ຄືກັບໂຄງການອຸດໜູນເດັກຂອງປະເທດອາຟຣິກາໃຕ້,ຊື່ຂອງໂຄງການສະແດງໃຫ້ເຫັນຂໍ້ຄວາມທີ່ເຂັ້ມແຂງກ່ຽວກັບຈຸດປະສົງຂອງໂຄງການໂດຍບໍ່ມີການບັງຄັບໃຊ້ເງື່ອນໄຂ (UN ESCAP 2018).

**ແຫຼ່ງຂໍ້ມູນ:** UNICEF 2016.

## ກໍລະນີສຶກສາ 1: ໂຄງການອຸດໜູນແມ່ ແລະ ເດັກ (MECG)

ໂຄງການອຸດໜູນແມ່ ແລະ ເດັກ (MECG) ແມ່ນໂຄງການຮ່ວມມືກັນລະຫວ່າງ ອົງການ UNICEF, ອົງການ ILO ແລະ ອົງການ UNCDF ແນໃສ່ປັບປຸງການເຂົ້າເຖິງການບໍລິການດ້ານສຸຂະພາບ ແລະ ການປົກປ້ອງເດັກ ສຳລັບແມ່ຍິງຖືພາ ແລະ ເດັກນ້ອຍ ຢູ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ມີຜູ້ໄດ້ຮັບຜົນປະໂຫຍດທັງໝົດ 982 ຄົນ ໃນ 46 ບ້ານຂອງເມືອງສະໜາມໄຊ ທີ່ໄດ້ລົງທະບຽນໃນໂຄງການ MECG, ເຊິ່ງເປັນໂຄງການທົດລອງການອຸດໜູນເງິນໃຫ້ແມ່ຍິງຖືພາ ແລະ ເດັກ ແນໃສ່ປັບປຸງອັດຕາການສັກຢາວັກຊີນ ແລະ ເຂົ້າເຖິງການຝາກທ້ອງ ແລະ ການບໍລິການຫຼັງເກີດ, ລວມທັງການບໍລິການປົກປ້ອງເດັກ. ໂຄງການທົດລອງກວມເອົາແມ່ຍິງຖືພາ 529 ຄົນ ແລະ ເດັກນ້ອຍ 453 ຄົນທີ່ມີອາຍຸຕ່ຳກວ່າ 6 ເດືອນ.

ຜູ້ໄດ້ຮັບຜົນປະໂຫຍດຈາກໂຄງການດັ່ງກ່າວຈະໄດ້ຮັບການອຸດໜູນໂດຍກົງ 150,000 ກີບຕໍ່ເດືອນ, ການຈ່າຍແມ່ນໄດ້ຈ່າຍທຸກໆສອງເດືອນ ຕົກເປັນເງິນຢູ່ 300,000 ກີບ, ຜ່ານລະບົບ ຢູ ມັນນີ ( U-Money) ຫຼື ຈ່າຍເງິນສົດໃຫ້ກັບທີ່ ໂດຍຜ່ານ ສະຕາ ຟິນເທັກ (Star Fintech).

ເມື່ອສົມທຽບກັບໂຄງການຫຼຸດຜ່ອນຄວາມທຸກຍາກ ແລະ ຂາດສານອາຫານໃນເຂດຊົນນະບົດທີ່ໄດ້ກ່າວມາຂ້າງເທິງ, ໂຄງການ MECG ໄດ້ນຳໃຊ້ວິທີການແບບມີເງື່ອນໄຂ “ທີ່ພໍຮັບໄດ້” ເຂົ້າໃນການອອກແບບໂຄງການ. ການອຸດໜູນເງິນແມ່ນບໍ່ໄດ້ນຳໃຊ້ແບບມີເງື່ອນໄຂຄົບຖ້ວນ, ແຕ່ຜູ້ໄດ້ຮັບຜົນປະໂຫຍດຈາກໂຄງການ MECG ກໍຮູ້ເຖິງຈຸດປະສົງຂອງໂຄງການເປັນຢ່າງດີ. ຂ້າງລຸ່ມນີ້ແມ່ນເງື່ອນໄຂ “ທີ່ພໍຮັບໄດ້” ຂອງໂຄງການ MECG:

- Pregnant women should recieve antenatal care from a Health Worker at the health facility at least four times during pregnancy.
- All Pregnant women should always sleep under a mosquito net.
- Pregnant woman with vaginal bleeding, severe abdominal pain, difficult breathing should go to the nearest clinic as early as possible.
- Pregnant woman should deliver at the health facility assisted by a trained health worker.
- A baby should be breast fed within the first hour after delivery.
- Register your baby at least a week after delivery.

**For Clarification or Grlevances About the Program Please Contact:**

**District Labor and Social Welfare Office:**
**Tel:** 020 9983 5199

**Provinclal Labor and Social Welfare Department:**
**Tel:** 036 211 037

**Department of Social Welfare, MOLSW:**
**Tel:** 021 213 005

## ກໍລະນີສຶກສາ 2: ໂຄງການອຸດໜູນການສຶກສາແບບມີເງື່ອນໄຂ (CCTE)

**ເບິ່ງ**

**ໂຄງການອຸດໜູນການສຶກສາແບບມີເງື່ອນໄຂ (CCTE)**

https://www.youtube.com/watch?v=vkOfrM5grXM
ເວລາ : 3:44

ປະເທດຕວັກກີ ໄດ້ຈັດຕັ້ງປະຕິບັດໂຄງການອຸດໜູນການສຶກສາແບບມີເງື່ອນໄຂ (CCTE) ປະສົບຜົນສຳເລັດນັບຕັ້ງແຕ່ປີ 2003 ເປັນຕົ້ນມາ, ໂຄງການດັ່ງກ່າວສ້າງຜົນປະໂຫຍດໃຫ້ແກ່ຄອບຄົວ ແລະເດັກນ້ອຍຫຼາຍລ້ານຄົນ. ໃນປີ 2017, ພາຍໃຕ້ການຮ່ວມມືຂອງ ກະຊວງຄອບຄົວ, ແຮງງານ ແລະ ການບໍລິການສັງຄົມ, ກະຊວງສຶກສາແຫ່ງຊາດ, ອົງການ ເລດ ຄຼີເຊັນ ຕົວກກີ ແລະ ອົງການ UNICEF, ໂຄງການ CCTE ໄດ້ຂະຫຍາຍກວມເອົາເດັກນ້ອຍຊາວອົບພະຍົບໃນໄວຮຽນທີ່ອາໄສຢູ່ໃນປະເທດຕວັກກີ ພາຍໃຕ້ການປົກປ້ອງຊົ່ວຄາວ/ສາກົນ. ໂຄງການດັ່ງກ່າວໄດ້ຮັບທຶນສະໜັບສະໜູນຈາກສະຫະພາບເອີຣົບ, ແລະ ລັດຖະບານນອກແວ ແລະ ສະຫະລັດອາເມລິກາ.

ກົດລະບຽບການເກີດສິດ ແລະ ມູນຄ່າ/ ອັດຕາການອຸດໜູນທີ່ເດັກນ້ອຍຕົວກກີໃນໂຄງການ CCTE ແຫ່ງຊາດໄດ້ຮັບ ກໍໄດ້ນຳໃຊ້ກັບຜູ້ໄດ້ຮັບຜົນປະໂຫຍດຈາກຊາວຊີເຣຍ ແລະ ຊາວອົບພະຍົບອື່ນໆ ຢູ່ໃນໂຄງການ CCTE ສຳລັບຊາວອົບພະຍົບ. ຄອບຄົວໄດ້ຮັບການສະຫນັບສະຫນູນເງິນສົດທຸກໆສອງເດືອນຜ່ານ ບັດ ກີຊີເລ ໂດຍມີເງື່ອນໄຂ ເດັກຕ້ອງເຂົ້າໂຮງຮຽນເປັນປົກກະຕິ (ຢ່າງຫນ້ອຍ 80 ເປີເຊັນ) ໃນສົກຮຽນກ່ອນຫນ້າ.

ນັກຮຽນທີ່ລົງທະບຽນຢູ່ໃນໂຮງຮຽນລັດຂອງປະເທດຕົວກກີ, ສູນການສຶກສາຊົ່ວຄາວ, ແລະໂຄງການການຮຽນຮູ້ແບບເລັ່ງລັດ ແມ່ນມີສິດໄດ້ຮັບຜົນປະໂຫຍດຈາກໂຄງການ.

**ແຫຼ່ງຂໍ້ມູນ:** UNICEF, n.d.

**ຄຳຖາມທວນຄືນ:**

- ໃຜເປັນຜູ້ແບກຫາບພາລະໃນການປະຕິບັດຕາມເງື່ອນໄຂ? ລວມທັງຜູ້ໄດ້ຮັບຜົນປະໂຫຍດ ແລະ ພາກສ່ວນຈັດຕັ້ງປະຕິບັດ.
- ທ່ານຄິດວ່າ ການອຸດໜູນແບບບໍ່ມີເງື່ອນໄຂ ຈະນຳໄປສູ່ການເພິ່ງພາອາໄສ/ເອື້ອຍອີງ ແລະ ຂີ້ຄ້ານບໍ?
- ຜົນກະທົບຂອງການອຸດໜູນແບບມີເງື່ອນໄຂຕໍ່ບົດບາດຍິງຊາຍມີຫຍັງແດ່?



# ຫຼັກສູດ 2: ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ

## ພາກທີ 1: ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ

ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ແມ່ນອີງຕາມດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍ ການຮັບຮອງ ແລະ ປະກາດໃຊ້ ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ, ເລກທີ 224/ນຍ, ລົງວັນທີ 01 ເມສາ 2020.

### ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ

**ວິໄສທັດ**

ຮອດປີ 2030, ປະຊາຊົນລາວຕາມກຸ່ມເປົ້າໝາຍຕ່າງໆໄດ້ຮັບການເຂົ້າເຖິງການບໍລິການລະບົບປົກປ້ອງສັງຄົມດ້ານການປະກັນສຸຂະພາບ, ການປະກັນສັງຄົມ ແລະ ສະຫວັດດີການສັງຄົມຂັ້ນພື້ນຖານຢ່າງກ້ວາງຂວາງ, ສະເໝີພາບ, ມີປະສິດທິພາບ ແລະ ມີຄວາມຍືນຍົງ.

**ຫລັກການລວມ**

ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ແມ່ນອີງໃສ່ຫລັກການຄວາມສະເໝີພາບ, ຄວາມພຽງພໍ , ປະສິດທິພາບ, ໃຫ້ກວມເອົາທຸກຄົນ, ຄວາມຄືບໜ້າ ແລະ ຄວາມຍືນຍົງ ພາຍໃຕ້ເງື່ອນໄຂໃຫ້ປະຊາຊົນລາວ ຕາມກຸ່ມເປົ້າໝາຍຕ່າງໆ ໄດ້ເຂົ້າເຖິງການບໍລິການປົກປ້ອງສັງຄົມໃນເງື່ອນໄຂດຽວກັນ ໂດຍບໍ່ຈຳແນກອາຍຸ, ເພດ, ພູມລຳເນົາ, ສະຖານະທາງເສດຖະກິດ-ສັງຄົມ ຫລື ອື່ນໆ.

**ເປົ້າໝາຍລວມ**

ຮອດປີ 2025, ລະບົບປົກປ້ອງສັງຄົມ ໄດ້ຮັບການພັດທະນາໃຫ້ມີຄວາມເຂັ້ມແຂງ ແລະ ມີປະສິດທິພາບດີຂຶ້ນ ໂດຍມີເປົ້າໝາຍໃນການໃຫ້ບໍລິການປົກປ້ອງສັງຄົມ ໃຫ້ກວມເອົາກຸ່ມເປົ້າໝາຍຢ່າງກ້ວາງຂວາງກວ່າເກົ່າ ແລະ ມີມາດຕະຖານດ້ານການບໍລິການທີ່ມີຄຸນນະພາບທີ່ດີຂຶ້ນ.

**ເປົ້າໝາຍສະເພາະ**

- **ເປົ້າໝາຍ 1: ພັດທະນາ ແລະ ສ້າງຄວາມເຂັ້ມແຂງໃຫ້ລະບົບປະກັນສຸຂະພາບ.**
  ພັດທະນາວຽກປະກັນສຸຂະພາບໃຫ້ມີຄວາມເຂັ້ມແຂງ ເພື່ອຮັບປະກັນການເຂົ້າເຖິງການບໍລິການປິ່ນປົວສຸຂະພາບທີ່ມີຄຸນນະພາບ ໂດຍບໍ່ສ້າງຄວາມຫຍຸ້ງຍາກດ້ານການເງິນ ແລະ ໃຫ້ມີປະສິດທິພາບສຳລັບທຸກຄົນ ດ້ວຍການສະໜັບສະໜູນງົບປະມານໃຫ້ພຽງພໍ ແລະ ການຂະຫຍາຍການປະກັນສຸຂະພາບສຳລັບທຸກຄົນພາຍໃນປີ 2025.

- **ເປົ້າໝາຍ 2: ພັດທະນາ ແລະ ສ້າງຄວາມເຂັ້ມແຂງໃຫ້ລະບົບປະກັນສັງຄົມ.**
  ພັດທະນາວຽກປະກັນສັງຄົມໃຫ້ມີຄວາມເຂັ້ມແຂງ, ເປັນລະບົບ ແລະ ມີປະສິດທິພາບ ເພື່ອໃຫ້ສາມາດເກັບແຫລ່ງເງິນສົມທົບເຂົ້າກອງທຶນປະກັນສັງຄົມແຫ່ງຊາດ ແລະ ໃຫ້ການບໍລິການອຸດໜູນປະກັນສັງຄົມປະເພດຕ່າງໆສຳລັບຜູ້ປະກັນຕົນທີ່ເປັນພະນັກງານ-ລັດຖະກອນ, ຜູ້ອອກແຮງງານໃນຫົວໜ່ວຍແຮງງານ, ຜູ້ປະກອບອາຊີບສ່ວນບຸກຄົນ ແລະ ສະມາຊິກຄອບຄົວທີ່ເກີດສິດຢ່າງກ້ວາງຂວາງ ລວມທັງການຄຸ້ມຄອງກອງທຶນປະກັນສັງຄົມແຫ່ງຊາດໃຫ້ມີຄວາມໂປ່ງໃສ, ການສະສົມທຶນ ແລະ ຄວາມຍືນຍົງ

- **ເປົ້າໝາຍ 3: ພັດທະນາ ແລະ ສ້າງຄວາມເຂັ້ມແຂງໃຫ້ລະບົບສະຫວັດດີການສັງຄົມ.**
  ພັດທະນາວຽກສະຫວັດດີການສັງຄົມໃຫ້ມີຄວາມເຂັ້ມແຂງ, ເປັນລະບົບ ແລະ ມີປະສິດທິພາບ ເພື່ອໃຫ້ການບໍລິການໃນການສົງເຄາະ ຫລື ການອຸດໜູນໃຫ້ເດັກຢູ່ໃນຄອບຄົວທຸກຍາກ ຫລື ດ້ອຍໂອກາດ, ຜູ້ພິການ, ຜູ້ອາຍຸສູງ ແລະ ຜູ້ອອກແຮງງານນອກລະບົບ ແລະ ສະໜອງການສົງເຄາະບັນເທົາທຸກສຸກເສີນຜູ້ປະສົບໄພພິບັດຕ່າງໆໃຫ້ມີປະສິດທິຜົນ, ສະໜອງທຶນການບໍລິຫານໂຮງຮຽນ, ທຶນສຳລັບນັກຮຽນທີ່ທຸກຍາກໃນຊັ້ນຮຽນຕ່າງໆ ແລະ ທຶນອາຫານທ່ຽງໃນໂຮງຮຽນ ເພື່ອປະກອບສ່ວນອັນສຳຄັນເຂົ້າໃນການຫຼຸດຜ່ອນຄວາມທຸກຍາກ, ການພັດທະນາຊັບພະຍາກອນມະນຸດ ແລະ ການພັດທະນາເສດຖະກິດ-ສັງຄົມ.

**ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ປະກອບມີ 3 ຈຸດປະສົງດັ່ງນີ້:**

**1. ຈຸດປະສົງວຽກປະກັນສຸຂະພາບ**

**ຈຸດປະສົງ 1.1:** ສ້າງຄວາມເຂັ້ມແຂງການພັດທະນາວຽກປະກັນສຸຂະພາບ ເພື່ອໃຫ້ເປັນລະບົບ ແລະ ມີປະສິດທິພາບ ໃຫ້ທຸກຄົນ ສາມາດເຂົ້າເຖິງການບໍລິການປິ່ນປົວສຸຂະພາບ

**ກິດຈະກຳ 1:** ພັດທະນາ ແລະ ຈັດຕັ້ງປະຕິບັດລະບົບນິຕິກຳກ່ຽວກັບວຽກປະກັນສຸຂະພາບສຳລັບທຸກຄົນ

**ກິດຈະກຳ 2:** ພັດທະນາລະບົບ ແລະ ສ້າງຄວາມອາດສາມາດໃຫ້ກັບອົງການຈັດຕັ້ງບໍລິຫານລະບົບປະກັນສຸຂະພາບແຫ່ງຊາດໃຫ້ມີປະສິດທິຜົນ

**ກິດຈະກຳ 3:** ພັດທະນາ ແລະ ກຳນົດມາດຕະຖານຂັ້ນພື້ນຖານສຳລັບສະຖານທີ່ໃຫ້ບໍລິການປິ່ນປົວສຸຂະພາບ

**ກິດຈະກຳ 4:** ຂະຫຍາຍການເຂົ້າເຖິງການບໍລິການປິ່ນປົວສຸຂະພາບຂອງປະຊາຊົນໃນເຂດຊົນນະບົດ

**ກິດຈະກຳ 5:** ຈັດສັນງົບປະມານລັດ ແລະ ການລະດົມແຫລ່ງທຶນໃຫ້ພຽງພໍ ແລະ ທັນເວລາກັບວຽກປະກັນສຸຂະພາບ.

**2. ຈຸດປະສົງວຽກປະກັນສັງຄົມ**

**ຈຸດປະສົງ 2.1:** ຜູ້ອອກແຮງງານທຸກຄົນ ແລະ ແຮງງານທີ່ປະກອບອາຊີບສ່ວນບຸກຄົນຂອງຂະແໜງໃນລະບົບໄດ້ຮັບການປົກຄຸມປະກັນສັງຄົມ

**ກິດຈະກຳ 1:** ຂະຫຍາຍການປົກຄຸມປະກັນສັງຄົມ ສຳລັບຜູ້ອອກແຮງງານໃຫ້ກວມເອົາກຸ່ມເປົ້າໝາຍຕ່າງໆ

**ກິດຈະກຳ 2:** ຈັດຕັ້ງປະຕິບັດການກວດກາຫົວໜ່ວຍວິສາຫະກິດທີ່ໄດ້ຂຶ້ນທະບຽນວິສາຫະກິດກັບກະຊວງອຸດສາຫະກຳ ແລະ ການຄ້າ

**ກິດຈະກຳ 3:** ສົ່ງເສີມການເຂົ້າຮ່ວມປະກັນສັງຄົມ

**ກິດຈະກຳ 4:** ຄົ້ນຄ້ວາ ແລະ ອອກແບບວິໄຈຄະນິດສາດປະກັນສັງຄົມ ແລະ ຮັບປະກັນໃຫ້ມີທຶນພຽງພໍ

**ກິດຈະກຳ 5:** ປັບປຸງລະບົບການເກັບເງິນສົມທົບຂອງປະກັນສັງຄົມ ແລະ ການອຸດໜູນ.

**ຈຸດປະສົງ 2.2:** ປະກັນສັງຄົມປົກຄຸມຈຳນວນແຮງງານນອກລະບົບເພີ່ມຂຶ້ນ

**ກິດຈະກຳ 6:** ສ້າງກົນໄກການບໍລິການໃນການເຂົ້າຮ່ວມລະບົບປະກັນສັງຄົມສຳລັບຜູ້ອອກແຮງງານນອກລະບົບຕາມກຸ່ມອາຊີບຕ່າງໆ ແລະ ການຮັບອຸດໜູນແບບເໝາະສົມ

**3. ຈຸດປະສົງວຽກສະຫວັດດີການສັງຄົມ**

**ຈຸດປະສົງ 3.1:** ຂະຫຍາຍການປົກຄຸມ ແລະ ການບໍລິການໃຫ້ກຸ່ມເປົ້າໝາຍ

**ກິດຈະກຳ 1:** ການບໍລິການອຸດໜູນ ແລະ ການສົງເຄາະແມ່ຍິງຖືພາ ແລະ ເດັກ

**ກິດຈະກຳ 2:** ການບໍລິການອຸດໜູນ ຫລື ການສົງເຄາະໃຫ້ຜູ້ພິການ ແລະ ຜູ້ທີ່ລອດຊີວິດຈາກອຸປະຕິເຫດລະເບີດຕົກຄ້າງ

**ກິດຈະກຳ 3:** ການບໍລິການອຸດໜູນ ຫລື ການສົງເຄາະໃຫ້ຜູ້ອາຍຸສູງ

**ກິດຈະກຳ 4:** ການບໍລິການອຸດໜູນ ແລະ ການສົງເຄາະໃຫ້ຜູ້ປະສົບເຄາະຮ້າຍຈາກໄພພິບັດຕ່າງໆ

**ກິດຈະກຳ 5:** ຂະຫຍາຍໂຄງການອາຫານສຳລັບເດັກນັກຮຽນທຸກຄົນໃນໂຮງຮຽນຂັ້ນອະນຸບານ, ຂັ້ນກຽມປະຖົມ, ຂັ້ນ ປະຖົມ ແລະ ຂັ້ນມັດທະຍົມຕອນຕົ້ນຂອງລັດຢູ່ບັນດາບ້ານ ແລະ ເມືອງທີ່ທຸກຍາກໃນທົ່ວປະເທດ

**ກິດຈະກຳ 6:** ເພີ່ມການສະໜອງທຶນການສຶກສາ ແລະ ເບ້ຍລ້ຽງອຸດໜູນສຳລັບນັກຮຽນຂັ້ນມັດທະຍົມຕອນຕົ້ນ ໂດຍ ໃຫ້ບຸລິມະສິດກັບນັກຮຽນຈາກຄອບຄົວທຸກຍາກ ແລະ ດ້ອຍໂອກາດ

**ກິດຈະກຳ 7:** ເພີ່ມການສະໜອງງົບປະມານບໍລິຫານໂຮງຮຽນໃຫ້ທັນຕາມກຳນົດເວລາໂດຍຂະຫຍາຍຂອບເຂດການ ປົກຄຸມບັນດາໂຮງຮຽນລະບົບສາມັນໃນທົ່ວປະເທດ

**ກິດຈະກຳ 8:** ໃຫ້ການສະໜອງທຶນອາຊີວະສຶກສາ, ຝຶກວິຊາຊີບ ຫລື ສີມືແຮງງານໃຫ້ຜູ້ຢູ່ໃນໄວອອກແຮງງານທີ່ທຸກຍາກ ແລະ ດ້ອຍໂອກາດໃຫ້ເຂົ້າເຖິງການມີວຽກເຮັດທີ່ມີຄູນຄ່າ ແລະ ເປັນທຳ.

**ກິດຈະກຳ 9:** ສົ່ງເສີມການຈັດຕັ້ງກຸ່ມຮ່ວມມືການຜະລິດ ແລະ ການບໍລິການລັດດ້ວຍຮູບແບບຕ່າງໆ ເພື່ອການສ້າງວຽກເຮັດງານທຳທີ່ມີຄຸນຄ່າ ແລະ ເປັນທຳ

**ມາດຕະການຈັດຕັ້ງປະຕິບັດ**

**1. ກົນໄກການປະສານງານ ແລະ ການຮ່ວມມືກັບຂະແໜງການ ທີ່ກ່ຽວຂ້ອງ**

- ຄະນະກໍາມາທິການແຫ່ງຊາດເພື່ອການປົກປ້ອງສັງຄົມ ແມ່ນຮັບຜິດຊອບຊີ້ນໍາການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດໂດຍລວມ ແລະ ມີການປະສານງານກັບຂະແໜງການຈັດຕັ້ງປະຕິຕ່າງໆ; ຄູ່ຮ່ວມພັດທະນາ; ການຕິດຕາມ ແລະ ປະເມີນຜົນ ໃນການຈັດຕັ້ງປະຕິບັດຍຸດທະສາດແຫ່ງຊາດເພື່ອປົກປ້ອງສັງຄົມ; ການປະເມີນສະພາບລວມໃນການປົກປ້ອງສັງຄົມທົ່ວປະເທດ.
- ຄະນະກໍາມາທິການແຫ່ງຊາດ ເພື່ອການປົກປ້ອງສັງຄົມ ເປັນອົງການຈັດຕັ້ງຂອງລັດຖະບານທີ່ເຄື່ອນໄຫວບໍ່ປະຈໍາການ, ມີພາລະບົດບາດ ເປັນເສນາທິການໃຫ້ລັດຖະບານ ກ່ຽວກັບວຽກປົກປ້ອງສັງຄົມໃນຂອບເຂດທົ່ວປະເທດ ໂດຍມີຈຸດປະສານງານລວມ ແລະ ມີກອງເລຂາປະຈໍາການຂອງຄະນະກໍາມາທິການແຫ່ງຊາ ເຊິ່ງມີໜ້າທີ່ຕິດຕາມການຈັດຕັ້ງປະຕິບັດກິດຈະກໍາຢ່າງໃກ້ຊິດ ແລະ ຊ່ວຍປະສານງານກັບບັນດາຂະແໜງການຈັດຕັ້ງປະຕິບັດ, ນອກຈາກວຽກອື່ນໆ.
- ສໍາລັບຂັ້ນທ້ອງຖິ່ນ ຈະໄດ້ແຕ່ງຕັ້ງຄະນະກໍາມະການຮັບຜິດຊອບຂຶ້ນ ໂດຍປະກອບມີ ທ່ານຮອງເຈົ້າແຂວງ ເປັນປະທານ , ຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມ ເປັນຮອງ ແລະ ພະແນກການທີ່ກ່ຽວຂ້ອງເປັນຄະນະ.
- ການປະສານງານການຈັດຕັ້ງປະຕິບັດແຕ່ລະຈຸດປະສົງຂອງຍຸດທະສາດ ໄດ້ແບ່ງຄວາມຮັບຜິດຊອບໃຫ້ຂະແໜງການຫລັກເປັນໃຈກາງໃນການຈັດຕັ້ງປະຕິບັດ ຄື: ຈຸດປະສົງຍຸດທະສາດທີ 1 ວຽກປະກັນສຸຂະພາບ ແມ່ນຢູ່ພາຍໃຕ້ຄວາມ ຮັບຜິດຊອບຂອງກະຊວງສາທາລະນະສຸກ;ຈຸດປະສົງຍຸດທະສາດທີ 2 ວຽກງານປະກັນສັງຄົມ ແມ່ນຢູ່ພາຍໃຕ້ຄວາມຮັບຜິດຊອບຂອງອົງການປະກັນສັງຄົມແຫ່ງຊາດ;ຈຸດປະສົງຍຸ ທະສາດທີ 3 ວຽກສະຫວັດດີການສັງຄົມ ແມ່ນຢູ່ພາຍໃຕ້ຄວາມຮັບຜິດຊອບກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງສຶກສາທິການ ແລະ ກິລາ, ກະຊວງກະສິກໍາ ແລະ ປ່າໄມ້. ເຊິ່ງມີຄວາມຮັບຜິດຊອບໃນການປະສານງານການຈັດຕັ້ງປະຕິບັດຈຸດປະສົງນີ້.

**2. ການລະດົມແຫລ່ງທຶນ ແລະ ການສະໜັບສະໜູນງົບປະມານແບບຍືນຍົງ**

- ແຫລ່ງງົບປະມານສະໜັບສະໜູນວຽກປະກັນສຸຂະພາບ: ແຫລ່ງງົບປະມານທີ່ຈໍາເປັນໃນການສະໜັບສະໜູນການຈັດຕັ້ງປະຕິບັດບັນດາກິດຈະກໍາວຽກປະກັນສຸຂະພາບ ແມ່ນໄດ້ງົບປະມານມາຈາກການປະກອບທຶນສົມທົບຂອງຜູ້ປະກັນສຸຂະພາບ ແລະ ທຶນສົມທົບຈາກລັດຖະບານ ດັ່ງທີ່ກໍານົດໄວ້ໃນກົດໝາຍວ່າດ້ວຍການປະກັນສຸຂະພາບ.
- ແຫລ່ງງົບປະມານສະໜັບສະໜູນວຽກປະກັນສັງຄົມ: ແຫລ່ງງົບປະມານທີ່ຈໍາເປັນໃນການສະໜັບສະໜູນການຈັດຕັ້ງປະຕິບັດບັນດາກິດຈະກໍາຕາມຈຸດປະສົງວຽກປະກັນສັງຄົມ ແມ່ນໄດ້ງົບປະມານມາຈາກທຶນສົມທົບຈາກຜູ້ປະກັນຕົນ, ຜູ້ໃຊ້ແຮງງານ ແລະ ທຶນສົມທົບຂອງລັດຖະບານຕາມທີ່ກໍານົດໄວ້ໃນກົດໝາຍວ່າດ້ວຍການປະກັນສັງຄົມ.
- ແຫລ່ງງົບປະມານສະໜັບສະໜູນວຽກສະຫວັດດີການສັງຄົມ: ແຫລ່ງງົບປະມານທີ່ຈໍາເປັນໃນການສະໜັບສະ ໜູນວຽກສະຫວັດດີການສັງຄົມຈະໄດ້ສ້າງກົນໄກໃນການລະດົມທຶນສະເພາະ ແລະ ບໍລິຫານທຶນສະໜັບສະໜູນບັນດາກິດຈະກໍາຕາມຈຸດປະສົງວຽກສະຫວັດດີການສັງຄົມຂຶ້ນ ໂດຍມີເປົ້າໝາຍເພື່ອອໍານວຍຄວາມສະດວກໃນການນໍາໃຊ້ແຫລ່ງງົບປະມານຂອງລັດ ແລະ ແຫລ່ງທຶນທີ່ລະດົມໄດ້ຈາກການຊ່ວຍເຫລືອລ້າໃຫ້ເກີດປະໂຫຍດສູງສຸດ.

**3. ການຮ່ວມມືກັບບັນດາຄູ່ຮ່ວມພັດທະນາ**

- ບັນດາຄູ່ຮ່ວມພັດທະນາທີ່ກ່ຽວຂ້ອງມີຄວາມສໍາຄັນໃນການສະໜັບສະໜູນການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດໃຫ້ປະສົບຜົນສໍາເລັດ ໂດຍສະເພາະໃນໄລຍະເລີ່ມຕົ້ນ.
- ຄະນະກໍາມາທິການແຫ່ງຊາດເພື່ອການປົກປ້ອງສັງຄົມແຫ່ງຊາດ ຈະສ້າງຕັ້ງໜ່ວຍງານປຶກສາຫາລືວຽກປົກປ້ອງສັງຄົມ ເພື່ອເປັນກົນໄກການປະສານງານ ແລະ ການຈັດກອງປະຊຸມປຶກສາຫາລືໃນລະດັບຕ່າງໆຮ່ວມກັບບັນດາຄູ່ຮ່ວມພັດທະນາ ເພື່ອລະດົມທຶນ ແລະ ຊັບພະຍາກອນ ເຂົ້າໃນການຈັດຕັ້ງປະຕິບັດບັນດາກິດຈະກໍາສະຫວັດດີການສັງຄົມ.

**4. ການໂຄສະນາເຜີຍແຜ່ ແລະ ການສ້າງຄວາມອາດສາມາດໃນການຈັດຕັ້ງປະຕິບັດ**

- ຄະນະກໍາມາທິການແຫ່ງຊາດເພື່ອການປົກປ້ອງສັງຄົມແຫ່ງຊາດ ເປັນໃຈກາງໃນການໂຄສະນາເຜີຍແຜ່ກ່ຽວກັບເນື້ອໃນ ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ໃຫ້ບັນດາຂະແໜງການຂອງລັດ ແລະ ພາກສ່ວນຕ່າງໆໃນສັງຄົມຢູ່ຂັ້ນສູນ ກາງ, ຂັ້ນແຂວງ ແລະ ຂັ້ນເມືອງ ໃຫ້ມີຄວາມຮັບຮູ້ເຂົ້າໃຈ ແລະ ເປັນເອກະພາບໃນການຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ.
- ໃນຂັ້ນສູນກາງ, ບັນດາຂະແໜງການ ຈະມີຄວາມອາດສາມາດທີ່ດີໃນການສ້າງແຜນການ ແລະ ມີຄວາມເຂົ້າໃຈກ້ວາງ ຂວາງໃນວຽກປົກປ້ອງສັງຄົມ, ໃນຂັ້ນທ້ອງຖິ່ນ ການສ້າງຄວາມອາດສາມາດ ແມ່ນຈະສຸມໃສ່ການຈັດຕັ້ງປະຕິບັດກິດຈະກໍາຕາມພາລະບົດບາດຂອງຕົນ.
- ການສຶກສາຄົ້ນຄ້ວາຈະໄດ້ດໍາເນີນການໂດຍຜ່ານການຮ່ວມມືລະຫວ່າງສະຖາບັນການຄົ້ນຄວ້າ ແລະ ຄູ່ຮ່ວມພັດທະນາ ເພື່ອເພີ່ມທະວີຄວາມເຂົ້າໃຈຕໍ່ກັບບັນຫາການປົກປ້ອງສັງຄົມຢູ່ສປປລາວ.
- ສ້າງການໂຄສະນາເຜີຍແຜ່ຜ່ານສື່ມວນຊົນ ແລະ ສື່ສັງຄົມອອນລາຍມີ ເພື່ອໃຫ້ປະຊາຊົນ ແລະ ສັງຄົມມີຄວາມເຂົ້າໃຈ ແລະ ປັບປຸງຄວາມຮັບຮູ້ກ່ຽວກັບລະບົບປະກັນສັງຄົມ, ລະບົບປະກັນສຸຂະພາບແຫ່ງຊາດ, ແລະ ການອຸດໜູນສະຫວັດດີການສັງຄົມໃໝ່.

**5. ການຕິດຕາມ ແລະ ປະເມີນຜົນ**

- ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ຈະໄດ້ຮັບການປະເມີນໄລຍະກາງສະໄໝໃນປີ 2022 ເພື່ອປະເມີນຄວາມຄືບໜ້າໃນການຈັດຕັ້ງປະຕິບັດກິດຈະກໍາໃນໄລຍະທີ 1, ໝາກຜົນທີ່ໄດ້ຈາກການຈັດຕັ້ງປະຕິບັດກິດຈະກໍາ ແລະ ຖ້າຈໍາເປັນຕ້ອງມີການປັບປຸງເພີ່ມເຕີມໃນການຈັດຕັ້ງປະຕິບັດເພື່ອໃຫ້ບັນລຸເປົ້າໝາຍໃນປີ 2025.

- ບັນດາຄູ່ຮ່ວມພັດທະນາ ຍັງຈະໄດ້ສະໜັບສະໜູນການປະເມີນໄລຍະກາງ ແລະ ໄລຍະທ້າຍຂອງການຈັດຕັ້ງປະຕິບັດ ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ໄລຍະ 6 ເດືອນທ້າຍປີຂອງປີ 2024 ໂດຍຈະມີກອງປະຊຸມຂອງຄະນະກຳມາທິການແຫ່ງຊາດຮ່ວມກັບບັນດາຄູ່ຮ່ວມພັດທະນາ ເພື່ອແລກປ່ຽນຜົນໄດ້ຮັບຂອງການປະເມີນໄລຍະສຸດທ້າຍ ແລະ ເລີ່ມຕົ້ນກະກຽມໄລຍະຕໍ່ໄປເພື່ອໃຫ້ບັນລຸວິໄສທັດ ຮອດປີ 2030.
- ສ້າງເຄື່ອງມື ແລະ ວິທີການ ໃນການດຳເນີນການປະເມີນຜົນການຈັດຕັ້ງປະຕິບັດໄລຍະກາງໃນປີ 2022 ໂດຍນຳໃຊ້ວິທີ ການປະລິມານ ແລະ ຄຸນນະພາບ.



# ພາກທີ 2: ການລົງທຶນໃສ່ການປົກປ້ອງສັງຄົມ

## ປະເທດອື່ນເຂົາລົງທຶນໃສ່ການປົກປ້ອງສັງຄົມເທົ່າໃດ?

ອີງຕາມການຄາດຄະເນຂອງ ອົງການ ILO ທີ່ໄດ້ນຳສະເໜີຢູ່ໃນບົດລາຍງານການປະກັນສັງຄົມ/ການປົກປ້ອງສັງຄົມສາກົນ: 2017 -19, ໂດຍສະເລ່ຍແລ້ວ, ບັນດາປະເທດໃນທົ່ວໂລກໄດ້ຈັດສັນລວມຍອດຜະລິດຕະພັນພາຍໃນ (GDP) ຂອງຕົນເຂົ້າໃນການປົກປ້ອງສັງຄົມ 11 ເປີເຊັນ ເຊິ່ງບໍ່ລວມລາຍຈ່າຍຂອງລັດໃນຂະແໜງສາທາ. ຂະໜາດຂອງປະຊາກອນຢູ່ໃນແຕ່ລະປະເທດຍັງຖືກນຳໃຊ້ເຂົ້າໃນການຄິດໄລ່ອັດຕາສ່ວນຂອງ GDP ທີ່ໄດ້ຈັດສັນເຂົ້າໃນການປົກປ້ອງສັງຄົມ: ໃນກໍລະນີນີ້, ຜົນໄດ້ຮັບສະແດງໃຫ້ເຫັນວ່າ “ຄ່າສະເລ່ຍ” ຜູ້ຢູ່ອາໄສໃນແຕ່ລະປະເທດມີພຽງແຕ່ 8.4 ເປີເຊັນຂອງ GDP ຂອງປະເທດໄດ້ຖືກຈັດສັນເປັນການອູດໜູນຂອງການປົກປ້ອງສັງຄົມໃນຮູບແບບເປັນເງິນສົດແລະເປັນວັດຖຸ.



- Less than 5 per cent
- From 5 to less than 10 per cent
- From 10 to less than 15 per cent
- 15 per cent and above
- No data

**ແຫຼ່ງຂໍ້ມູນ:** ILO 2017.

## ການປົກປ້ອງສັງຄົມຢູ່ທະວີບອາຊີ ແລະ ປາຊີຟິກ: ພາບລວມ




**ແຫຼ່ງຂໍ້ມູນ:** ILO n.d.-b..

- ຢູ່**ທະວີບອາຊີ-ປາຊີຟິກ**, ປະເທດກຳລັງພັດທະນາໄດ້ນຳໃຊ້ປະມານ 3.7% ຂອງ GDP ຂອງພວກເຂົາເຂົ້າໃນການປົກປ້ອງສັງຄົມ - ໜຶ່ງສ່ວນສາມຂອງການສະເລ່ຍໃນທົ່ວໂລກ.
- ຍ້ອນ**ການລົງທຶນຕໍ່າມື້** ຈຶ່ງເປັນສາເຫດເຮັດໃຫ້ປະຊາກອນຈຳນວນ 60 ເປີເຊັນໃນພາກພື້ນບໍ່ມີການປົກປ້ອງຖ້າເຂົາເຈົ້າຫາກເຈັບປ່ວຍ, ພິການ, ວ່າງງານ, ຖືພາ ຫຼື ເຖົ້າແກ່.

**ຕົວຢ່າງ:**

- **ມີພຽງແຕ່ 21 ປະເທດ ໃນຈຳນວນ 49 ປະເທດ**ເທົ່ານັ້ນທີ່ໃຫ້ການປົກປ້ອງສັງຄົມແກ່ເດັກນ້ອຍ ແລະ ຄອບຄົວ.
- **ຜູ້ວ່າງງານໜຶ່ງໃນຫ້າຄົນເທົ່ານັ້ນ**ທີ່ໄດ້ຮັບການອຸດໜູນວ່າງງານ.
- **ໜ້ອຍກວ່າ 4 ໃນ 10 ຄົນ** ເຂົ້າເຖິງການຮັກສາສຸຂະພາບທີ່ສາມາດຈ່າຍໄດ້.
- **ຫລາຍກວ່າເຄິ່ງໜຶ່ງຂອງຜູ້ອາຍຸສູງ**ໄດ້ຮັບບຳເນັດຜູ້ອາຍຸສູງ.

ລັດຖະບານລາວ ໃຊ້ງົບປະມານສະເລ່ຍ 1-2% ຂອງລວມຍອດຜະລິດຕະພັນພາຍໃນ (GDP)  ເຂົ້າໃນວຽກງານປົກປ້ອງສັງຄົມ. ອົງການ ILO ຄາດຄະເນວ່າ ເພື່ອສະໜອງການປົກປ້ອງສັງຄົມຂັ້ນພື້ນຖານໃຫ້ແກ່ທຸກຄົນ, ປະເທດທີ່ມີລາຍຮັບຕໍ່າ ແລະ ປານກາງຕໍ່າຈະຕ້ອງໄດ້ເພີ່ມການໃຊ້ຈ່າຍເຂົ້າໃນການປົກປ້ອງສັງຄົມໃຫ້ຢູ່ລະຫວ່າງ 5,1 – 15,9% ຂອງ GDP.

## ຫຼັກການທີ່ຄວນຊີ້ນຳການລະດົມທຶນເຂົ້າໃນວຽກງານປົກປ້ອງສັງຄົມ

**ກ້າວໄປສູ່ຄວາມເປັນຈິງ:** "ກ້າວໄປສູ່ຄວາມເປັນຈິງ" ຮັບຮູ້ວ່າການໄດ້ຮັບສິດທິມະນຸດຢ່າງຄົບຖ້ວນນັ້ນບໍ່ສາມາດເກີດຂຶ້ນໄດ້ໃນທັນທີ ແຕ່ກໍ່ມີຄວາມພະຍາຍາມໃນແຕ່ລະມື້ທີ່ຈະຫຍັບເຂົ້າໃຫ້ໃກ້ຄຽງທີ່ສຸດ. ພັນທະດັ່ງກ່າວນີ້ ກໍເຫັນໄດ້ເຖິງຂໍ້ຈຳກັດຂອງລັດຖະບານໃນການຈັດສັນຊັບພະຍາກອນ; ເຖິງຢ່າງໃດກໍຕາມ, ລັດຖະບານຕ້ອງໄດ້ດຳເນີນບັນດາບາດກ້າວສະເພາະ ເພື່ອຮັບປະກັນວ່າສິດທິທາງດ້ານເສດຖະກິດ ແລະ ສັງຄົມຂອງປະຊາຊົນໄດ້ຮັບການປັບປຸງໃຫ້ດີຂຶ້ນເປັນໄລຍະ.

**ນຳໃຊ້ຊັບພະຍາກອນທີ່ມີໃຫ້ເກີດຜົນປະໂຫຍດສູງສຸດ:** ເງື່ອນໄຂຂອງການນຳໃຊ້ຊັບພະຍາກອນທີ່ມີໃຫ້ເກີດຜົນປະໂຫຍດສູງສຸດ ໝາຍຄວາມວ່າລັດຖະບານບໍ່ສາມາດຫຼຸດພັນທະດ້ານສິດທິມະນຸດລົງໄດ້ເນື່ອງຈາກຂາດຊັບພະຍາກອນ. ລັດຖະບານຕ້ອງສະແດງໃຫ້ເຫັນວ່າພວກເຂົາກຳລັງໃຊ້ຊັບພະຍາກອນທີ່ມີໃຫ້ເກີດຜົນປະໂຫຍດສູງສຸດ ເພື່ອບັນລຸສິດທິມະນຸດຢ່າງແທ້ຈິງ.

**ບໍ່ຖອຍກັບຫລັງ:** "ການບໍ່ຖອຍກັບຫລັງ" ໝາຍຄວາມວ່າ ເມື່ອໃດທີ່ມີການນຳໃຊ້ສິດທິມະນຸດຢ່າງຄົບຖ້ວນແລ້ວ, ຕ້ອງໄດ້ຮັກສາໄວ້ ແລະ ບໍ່ຄວນຖອຍກັບຄືນ.

## ລັດມີຄວາມຮັບຜິດຊອບຫຍັງແດ່ຕໍ່ກັບການລະດົມທຶນເຂົ້າໃນການປ້ອງສັງຄົມ?

ລັດມີບົດບາດສຳຄັນໃນການຮັບປະກັນທຶນເຂົ້າໃນການປົກປ້ອງສັງຄົມ. ບາງຂົງເຂດທີ່ຕ້ອງສຸມໃສ່ມີດັ່ງນີ້:

- ເກັບຈາກການປະກອບທຶນສົມທົບປະກັນສັງຄົມ
- ເກັບຈາກພາສີອາກອນ
- ຕັ້ງອັດຕາພາສີອາກອນ
- ເປັນເຈົ້າພາບຈັດການເຈລະຈາຕໍລອງສາມຝ່າຍກັບຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານ ເພື່ອຕັ້ງອັດຕາການປະກອບທຶນສົມທົບເຂົ້າປະກັນສັງຄົມ
- ໃຊ້ມາດຕະການຕໍ່ຜູ້ລະເມີດໃນກໍລະນີບໍ່ຈ່າຍເງິນສົມທົບເຂົ້າປະກັນສັງຄົມ ແລະ ບໍ່ຈ່າຍພາສີອາກອນ
- ປະກອບສ່ວນທຶນສົມທົບເຂົ້າໃນລະບົບປະກັນສັງຄົມ
- ງົບປະມານ ແລະ ຈ່າຍເປັນເງິນ ແລະ ອາຫານ

**ແຫຼ່ງຂໍ້ມູນ:** WIEGO 2022.

### ການລະດົມທຶນ ເພື່ອສ້າງງົບປະມານເຂົ້າໃນການປົກປ້ອງສັງຄົມ

ເຊັ່ນດຽວກັບການຕັດສິນໃຈໃນການໃຊ້ຈ່າຍ, ມີຄວາມແຕກໂຕນທີ່ຄ້າຍຄືກັນຂອງລັດຖະບານໃນວິທີການລະດົມຊັບພະຍາກອນເພື່ອການພັດທະນາເສດຖະກິດ ແລະ ສັງຄົມ. ຫຼາຍປະເທດໄດ້ປະສົບຜົນສຳເລັດໃນການລະດົມຊັບພະຍາກອນເຂົ້າໃນການລົງທຶນພາກລັດໃນຊ່ວງເກີດວິກິດການ. ໂດຍການນຳໃຊ້ທຸກວິທີທາງ ເພື່ອນຳໃຊ້ງົບ ປະມານໃຫ້ເກີດຜົນປະໂຫຍດສູງສຸດ, ບັນດາປະເທດເຫຼົ່ານີ້ໄດ້ບັນລຸການເຕີບໂຕແບບຍືນຍົງ ແລະ ມີຄຸນນະພາບ, ແລະໃນທາງກັບກັນກໍໄດ້ສ້າງແຫຼ່ງຊັບພະຍາກອນໄດ້ຕື່ມອີກ; ເຂົາເຈົ້າໄດ້ເປັນຕົວຢ່າງໃຫ້ຄົນອື່ນທີ່ຕິດຢູ່ກັບບັນຫາງົບປະມານຈຳກັດ, ການໃຊ້ຈ່າຍເຂົ້າໃນວຽກງານສັງຄົມຕໍ່າ ແລະ ການຂະຫຍາຍຕົວເສດຖະກິດບໍ່ເຂັ້ມແຂງ.

ແຕ່ລະປະເທດມີສະພາບຈຸດພິເສດແຕກຕ່າງກັນ ສະນັ້ນຈຶ່ງຕ້ອງກວດສອບເບິ່ງທາງເລືອກດ້ານງົບປະມານຢ່າງມີຄວາມລະມັດລະວັງໃນລະດັບຊາດ ແລະຊອກຫາຫລາຍທາງເລືອກໂດຍຜ່ານການປຶກສາຫາລືກັບຫລາຍພາກສ່ວນ. ຫລາຍປະເທດກໍໄດ້ຮັບຮອງເອົານະໂຍບາຍດ້ານງົບປະມານແບບປະສົມປະສານ, ໂດຍປົກກະຕິແລ້ວແມ່ນເລືອກເອົາຈາກ 8 ທາງເລືອກແບບປະສົມປະສານ ເພື່ອໃຫ້ລັດຖະບານສາມາດສ້າງແຫລ່ງຊັບພະຍາກອນເພີ່ມເຕີມເຂົ້າໃນການປົກປ້ອງສັງຄົມ ດັ່ງທີ່ໄດ້ສະຫລຸບສັງລວມດັ່ງຕໍ່ໄປນີ້:

| ທາງເລືອກໃນການລົງທຶນ | ເນື້ອໃນ | ຕົວຢ່າງ |
|---|---|---|
| **ຈັດສັນລາຍຈ່າຍພາກລັດຄືນໃໝ່** | ນີ້ແມ່ນທາງເລືອກແບບດັ້ງເດີມທີ່ສຸດ, ເຊິ່ງລວມມີການປະເມີນການຈັດສັນງົບປະມານຢ່າງຕໍ່ເນື່ອງ ໂດຍການທົບທວນລາຍຈ່າຍຕໍ່ວຽກງານສາທາລະນະ (PERs) ແລະ ການວິເຄາະງົບປະມານປະເພດອື່ນໆຕາມຫົວຂໍ້, ທົດແທນການລົງທຶນທີ່ມີຄ່າໃຊ້ຈ່າຍສູງ, ມີຜົນກະທົບຕໍ່າກັບຜູ້ທີ່ໄດ້ຮັບຜົນກະທົບຈາກເສດຖະກິດ- ສັງຄົມຂະໜາດໃຫຍ່. ລົບລ້າງການໃຊ້ຈ່າຍທີ່ບໍ່ມີປະສິດທິຜົນ ແລະ/ຫຼືການແກ້ໄຂການສໍ້ລາດບັງຫຼວງ. | **ປະເທດອີຢິບ** ໄດ້ສ້າງໜ່ວຍງານຍຸຕິທຳທາງເສດຖະກິດຂຶ້ນຢູ່ໃນກະຊວງການເງິນ ເພື່ອກວດກາຄືນບັນດາບຸລິມະສິດລາຍຈ່າຍ, ແລະ **ປະເທດຄອດຕາລິກາ  ແລະ ໄທ** ໄດ້ຫັນການໃຊ້ຈ່າຍດ້ານການທະຫານໄປເປັນການສະໜອງການບໍລິການສາທາລະນະສຸກທົ່ວປວງຊົນ.<br><br>**ປະເທດຟີລິບປິນ:** ກຸ່ມກວດກາສັງຄົມຂອງປະເທດຟີລິບປິນ-ໂຄງການທາງເລືອກໃນການວາງງົບປະມານ  "ດຳເນີນການສຶກສາຄົ້ນຄວ້າ ແລະ ມີຄວາມພະຍາຍາມໃນການລະດົມຂົນຂວາຍ ການຫັນຈາກການວິເຄາະງົບປະມານປະຈຳປີ, ໂຄສະນາຕໍ່ຕ້ານການໃຫ້ທຶນເປັນກ້ອນ, ແລະ ການເຂົ້າຮ່ວມຂອງລັດຖະບານແຫ່ງຊາດ ແລະ ນິຕິບັນຍັດ ໃນຂະບວນການຂຶ້ນງົບປະມານ" ເພື່ອລົງທຶນໃສ່ໂຄງການປົກປ້ອງສັງຄົມ. ຕົວຢ່າງ, ງົບປະມານສຳລັບເງິນບຳນານທາງສັງຄົມສຳລັບພົນລະເມືອງອາວຸໂສ  ຄ່ອຍໆເພີ່ມຂຶ້ນຈາກ 871 ລ້ານເປໂຊໃນປີ 2011 ເປັນ 23 ຕື້ເປໂຊໃນປີ 2021. |

| | | |
|---|---|---|
| **ການເພີ່ມລາຍຮັບຈາກການເກັບພາສີອາກອນ:** | ນີ້ແມ່ນຊ່ອງທາງຕົ້ນຕໍທີ່ສາມາດບັນລຸໄດ້ໂດຍການປ່ຽນແປງອັດຕາພາສີອາກອນປະເພດຕ່າງໆເຊັ່ນ: ການບໍລິໂພກ, ຜົນກຳໄລຂອງບໍລິສັດ, ກິດຈະກຳທາງດ້ານການເງິນ, ລາຍຮັບສ່ວນບຸກຄົນ, ຊັບສິນ, ການນຳເຂົ້າ ຫຼື ສົ່ງອອກ, ການຂຸດຄົ້ນຊັບພະຍາກອນທຳມະຊາດ, ແລະ ອື່ນໆ ຫຼືໂດຍການເພີ່ມປະສິດທິພາບຂອງວິທີການເກັບພາສີອາກອນ ແລະ ການປະຕິບັດຕາມລະບຽບຫລັກການໂດຍລວມ. | **ປະເທດ ບໍລິເວຍ ( ອາເມລິກາໃຕ້), ບອດສວານາ ( ອາຟິກກາ) ແລະ ປະເທດແຊມເບຍ (ອາຟິກກາ)** ລ້ວນແລ້ວແຕ່ເປັນປະເທດກຳລັງພັດທະນາທີ່ນຳໃຊ້ ແຫຼ່ງຊັບພະຍາກອນທຳມະຊາດ ເພື່ອສ້າງລາຍຮັບ ໂດຍຜ່ານລະບົບອາກອນ ແລະ ມາດຕະການອື່ນໆ ມາລົງທຶນໃສ່ລະບົບປົກປ້ອງສັງຄົມເພື່ອຫລຸດຜ່ອນຄວາມທຸກຍາກ ແລະ ບໍ່ສະເໝີພາບ.<br><br>**ລັດຖະບານປະເທດອິນໂດເນເຊຍ** ຄ່ອຍໆຖອນເງິນທີ່ອຸດໜູນນ້ຳມັນ ທີ່ມີມູນຄ່າແພງ ແລະ ບໍ່ຍືນຍົງ ເພື່ອມາອຸດໜູນດ້ານປົກປ້ອງສັງຄົມ ເພື່ອຫລຸດຜ່ອນອັດຕາຄວາມທຸກຍາກ. ນອກນັ້ນ ຍັງຄ່ອຍໆຂະຫຍາຍເຂດປົກຄຸມດ້ານການປິ່ນປົວສຸຂະພາບ ໃຫ້ກວມເອົາປະຊາກອນໃນທົ່ວປະເທດໂດຍເນັ້ນໃສ່ການສ້າງລະບົບສາທາລະນະສຸກທົ່ວປວງຊົນ.<br><br>**ປະເທດ ອີຣານ** ກໍ່ໄດ້ປະຕິຮູບລະບົບອຸດໜູນນ້ຳມັນເຊື້ອໄຟເຊັ່ນກັນ, ແລະ ໄດ້ຈັດຕັ້ງໃຫ້ອຸດໜູນເງິນສົດ ແລະ ປົກປ້ອງສັງຄົມທຸກຖ້ວນໜ້າ, ໂດຍໄດ້ຮັບການຍອມຮັບຂອງປະຊາກອນຕໍ່ກັບການປະຕິຮູບໂດຍລັດຖະບານເປັນຜູ້ຖົມຊຸມ. |
| **ຂະຫຍາຍເຂດປົກຄຸມຂອງປະກັນສັງຄົມ ແລະ ລາຍຮັບຈາກການຈ່າຍສົມທົບ** | ຂະຫຍາຍການປົກຄຸມຂອງລະບົບປະກັນສັງຄົມທີ່ມີໃຫ້ກວ້າງຂວາງອອກ, ແລະ ສະນັ້ນ ການເກັບເງິນສົມທົບ (ລວມທັງການປັບປຸງການຂຶ້ນທະບຽນ ແລະ ຂະບວນການຈ່າຍໃຫ້ງ່າຍຂຶ້ນ ແລະ ສາມາດເຂົ້າເຖິງໄດ້ດ້ວຍລະບົບດິຈິຕອນ) ແມ່ນເປັນວິທີໜຶ່ງທີ່ໜ້າເຊື່ອຖືໄດ້ໃນການລະດົມທຶນເຂົ້າໃນການປົກປ້ອງສັງຄົມ, ປະງົບປະມານໄວ້ເພື່ອໃຊ້ຈ່າຍເຂົ້າໃນວຽກງານສັງຄົມອື່ນໆ; ການອຸດໜູນຈາກການປົກປ້ອງສັງຄົມເຊື່ອມໂຍງກັບການປະກອບທຶນສົມທົບຈາກການຈ້າງງານຍັງຊຸກຍູ້ໃຫ້ເສດຖະກິດນອກລະບົບເຂົ້າມາເປັນລະບົບ. | ຢູ່**ປະເທດບຣາຊິນ** ລັດຖະບານໄດ້:<br>1. ຫຼຸດຄ່າໃຊ້ຈ່າຍໃນການເຂົ້າເປັນລະບົບ ແລະ ສະນອງແຮງຈູງໃຈ ໃຫ້ແກ່ບັນຫດາບໍລິສັດ ແລະ ປະຊາຊົນໃນການເຂົ້າສູ່ໃນລະບົບ;ບຣາຊິນຈັດຕັ້ງປະຕິບັດໂຄງການລະບົບ<br>2. ມູນຄ່າຈ່າຍປະກອບທຶນສົມທົບສຳລັບວິສາຫະກິດຂະໜາດໜ້ອຍ ແລະ ກາງ ແລະ ຜູ້ອອກແຮງງານອິດສະຫຼະແມ່ນຕໍ່າກ່ວາຜູ້ອອກແຮງງານໃນລະບົບ;<br>3. ຈັດຕັ້ງປະຕິບັດໂຄງການລະບົບອາກອນດຽວທີ່ເອີ້ນວ່າ “ງ່າຍດາຍ” ທີ່ໃຫ້ບັນດາວິສາຫະກິດຂະໜາດນ້ອຍ ແລະ ກາງ ແລະ ຜູ້ອອກແຮງງານອິດສະຫຼະ ສາມາດຈ່າຍອາກອນ ແລະ ເງິນສົມທົບໄດ້ຢ່າງງ່າຍດາຍ ແລະ ຈ່າຍເທື່ອດຽວພ້ອມກັນ.<br><br>ມີໄດ້ເຮັດໃຫ້ຕົວເລກຜູ້ປະກັນຕົນທີ່ຈ່າຍເງິນສົມທົບປະກັນສັງຄົມແມ່ນເພີ່ມຂຶ້ນເປັນ 23 ລ້ານຄົນ, ແລະ ງົບປະມານລັດກໍ່ເພີ່ມຂຶ້ນເຊັ່ນກັນ.<br><br>**ປະເທດອາກຊັງຕິນ, ອູລູກວຍ, ແລະ ອີກົວດໍ** ກໍ່ປະສົບຜົນສຳເລັດໃນການຈັດຕັ້ງປະຕິບັດກົນໄກແບບຄ້າຍໆກັນ. |

<table>
<tr>
<td>ລະດົມຂົນຂວາຍເອົາການຊ່ວຍເຫຼືອລ້າ ແລະ ການຮ່ວມມື</td>
<td>ຮຽກຮ້ອງໃຫ້ມີການມີສ່ວນຮ່ວມຂອງລັດຖະບານຜູ້ໃຫ້ທຶນຫລາຍປະເທດ ຫຼື ອົງການຈັດຕັ້ງສາກົນ ເພື່ອຂະຫຍາຍການຮ່ວມມືເໜືອ - ໃຕ້ ຫລື ການຮ່ວມມືໃຕ້ - ໃຕ້.</td>
<td>ອົງການ ພັນທະມິດສາກົນ ເພື່ອການປົກປ້ອງສັງຄົມຂັ້ນພື້ນຖານ (2020), ເຊິ່ງປະກອບດ້ວຍອົງການຈັດຕັ້ງທາງສັງຄົມຫຼາຍກວ່າ 200 ອົງການ, ໄດ້ຮຽກຮ້ອງໃຫ້ກອງທຶນໂລກສະໜອງການປົກປ້ອງສັງຄົມໃຫ້ແກ່ບັນດາປະເທດທຸກຍາກທີ່ສຸດ, ເພື່ອໄດ້ຮັບການສະຫນອງທຶນຈາກ Global North.<br><br>ກອງທຶນປົກປ້ອງສັງຄົມສາກົນ ເລີ່ມຕົ້ນເຮັດໃຫ້ລະບົບປະກັນສັງຄົມແຫ່ງຊາດ ເປັນລະບົບທີ່ສາມາດຈ່າຍໄດ້ ໂດຍການສະຫນອງທຶນມາຈາກຫຼາຍແຫຼ່ງ, ລວມທັງ:<br>▶ ການຊ່ວຍເຫຼືອລ້າ ເພື່ອການພັດທະນາ (ODA), ໂດຍການເພີ່ມຄຳໝັ້ນສັນຍາຂອງ ODA ຕໍ່ກັບການສ້າງລະບົບປົກປ້ອງສັງຄົມ;<br>▶ ເພີ່ມທະວີການຮ່ວມມືສາກົນກ່ຽວກັບການເກັບພາສີອາກອນ; ແລະ<br>▶ ຜ່ານສະຖາບັນການເງິນສາກົນ (ITUC 2021).</td>
</tr>
<tr>
<td>ການກຳຈັດກະແສເງິນທີ່ຜິດກົດໝາຍ</td>
<td>ເນື່ອງຈາກວ່າຊັບພະຍາກອນຈຳນວນຫຼວງຫຼາຍໄດ້ຮົ່ວໄຫລອອກຈາກປະເທດກຳລັງພັດທະນາຢ່າງຜິດກົດໝາຍໃນແຕ່ລະປີ, ປະມານ 10 ທົບຂອງມູນຄ່າການຊ່ວຍເຫລືອລ້າທັງໝົດ, ຜູ້ວາງນະໂຍບາຍຄວນປາບປາມການຟອກເງິນ, ການໃຫ້ສິນບົນ, ການຫຼົບຫຼີກພາສີ, ການສໍ້ໂກງການຄ້າ ແລະ ອາດຊະຍາກຳທາງການເງິນອື່ນໆທີ່ຜິດກົດໝາຍ ແລະ ເຮັດໃຫ້ລັດຖະບານສູນເສຍລາຍຮັບທີ່ຈຳເປັນເຂົ້າໃນການພັດທະນາເສດຖະກິດແລະສັງຄົມ.</td>
<td></td>
</tr>
<tr>
<td>ນຳໃຊ້ທຶນສຳຮອງເງິນຕາຕ່າງປະເທດຂອງທະນາຄານກາງ ແລະ ຂອງຄັງເງິນແຫ່ງຊາດ</td>
<td>ໃນນີ້ລວມມີການຫຼຸດຜ່ອນການສະສົມງົບປະມານ ແລະ ລາຍຮັບຂອງລັດອື່ນໆທີ່ເກັບໄວ້ໃນກອງທຶນພິເສດ, ເຊັ່ນ: ກອງທຶນຄວາມຮັ່ງມີຂອງອຳນາດອະທິປະໄຕ, ແລະ/ຫຼື ການນຳໃຊ້ຄັງສຳຮອງເງິນຕາຕ່າງປະເທດເກີນຂອບເຂດຂອງທະນາຄານກາງ ເພື່ອການພັດທະນາພາຍໃນປະເທດ ແລະ ພາກພື້ນ.</td>
<td>ປະເທດ ຊີລີ, ນອກແວ ແລະ ເວນນີໂຊລາ ໃນບັນດາປະເທດອື່ນໆ, ກຳລັງພິຈາລະນານຳໃຊ້ຄັງສຳຮອງງົບປະມານສຳລັບການລົງທຶນທາງສັງຄົມ.</td>
</tr>
</table>

| | | |
|---|---|---|
| **ການກູ້ຢືມ ຫຼື ປັບປຸງໂຄງສ້າງໜີ້ສິນທີ່ມີຢູ່** | ໃນນີ້ແມ່ນພົວພັນກັບການສໍາຫຼວດທາງເລືອກໃນການກູ້ຢືມພາຍໃນ ແລະ ຕ່າງປະເທດດ້ວຍລາຄາຕໍ່າ, ລວມທັງການສໍາປະທານ, ປະຕິບັດຕາມການປະເມີນຄວາມຍືນຍົງຂອງໜີ້ສິນຢ່າງລະມັດລະວັງ. ສໍາລັບປະເທດທີ່ຕົກຢູ່ໃນສະພາບທີ່ມີໜີ້ສິນສູງ, ການປັບປຸງໂຄງສ້າງໜີ້ສິນທີ່ມີຢູ່ຄືນໃໝ່ອາດເປັນໄປໄດ້ ແລະ ສົມເຫດສົມຜົນຖ້າຫາກວ່າມີຂໍ້ສົງໃສຕໍ່ກັບໜີ້ສິນແລະ/ຫຼື ໂອກາດທີ່ຈະມີຄ່າໃຊ້ຈ່າຍເກີດຂຶ້ນ ແລະ ເຮັດໃຫ້ກຸ່ມຄົນດ້ອຍໂອກາດມີຄວາມສ່ຽງສູງຂຶ້ນ. | **ປະເທດອາຟຣິກາໃຕ້** ໄດ້ອອກພັນທະບັດນະຄອນເພື່ອສະໜອງທຶນການບໍລິການຂັ້ນພື້ນຖານ ແລະ ພື້ນຖານໂຄງລ່າງຕົວເມືອງ.<br><br>ໃນຊຸມປີມໍ່ໆມານີ້, ຫຼາຍກວ່າ 60 ປະເທດໄດ້ດໍາເນີນການແກ້ໄຂໜີ້ສິນຄືນໃໝ່ຢ່າງສໍາເລັດຜົນ, ແລະ ຫຼາຍກວ່າ 20 ປະເທດໄດ້ແກ້ໄຂໜີ້ສິນສາທາລະນະ ເຊັ່ນ: **ເອກວາດໍ, ໄອແລນ ແລະ ອີຣັກ,** ໄດ້ຊີ້ນໍາການເກັບອອມໜີ້ສິນໃຫ້ແກ່ບັນດາໂຄງການສັງຄົມ. |
| **ຮັບຮອງເອົາກອບເສດຖະກິດມະຫາພາກທີ່ເໝາະສົມກວ່າ** | ນີ້ເຮັດໃຫ້ການຂາດດຸນງົບປະມານສູງຂຶ້ນ ແລະ ລະດັບອັດຕາເງິນເຟີ້ສູງຂຶ້ນໂດຍບໍ່ມີອັນຕະລາຍຕໍ່ຄວາມໝັ້ນຄົງຂອງເສດຖະກິດມະຫາພາກ. | ບັນດາປະເທດກໍາລັງພັດທະນາຈໍານວນຫຼວງຫຼາຍໄດ້ນໍາໃຊ້ລາຍຈ່າຍຂາດດຸນ ແລະ ກອບເສດຖະກິດມະຫາພາກທີ່ຮອງຮັບໃນໄລຍະການຖົດຖອຍຂອງເສດຖະກິດໂລກ ເພື່ອຕອບສະໜອງຄວາມຕ້ອງການທີ່ກົດດັນໃນຊ່ວງເວລາມີການເຕີບໂຕຕໍ່າ ແລະ ສະໜັບສະໜູນການຟື້ນຕົວຂອງເສດຖະກິດ-ສັງຄົມ. |

**ແຫຼ່ງຂໍ້ມູນ:** Transform 2017.

**ເບິ່ງ**

**ກໍລະນີສຶກສາ : "ການສ້າງອະນາຄົດຂ້າງໜ້າໃຫ້ດີຂຶ້ນຕື່ມອີກ: ການລົງທຶນໃສ່ຜູ້ອອກແຮງງານຂອງປະເທດອາຟຣິກາ"**
https://www.youtube.com/watch?v=5IcNCkNVOXQ
ເວລາ : 5:03

ວີດີໂອນີ້ແມ່ນຜະລິດໂດຍສະຫະພັນກໍາມະບານສາກົນ (ITUC)- ອາຟຣິກາ ແລະ ແມ່ຍິງໃນການຈ້າງງານນອກລະບົບ: ສາກົນ ແລະ ການຈັດຕັ້ງ (WIEGO) ກ່ຽວກັບການສະໜອງທຶນເຂົ້າໃນການປົກປ້ອງສັງຄົມຢູ່ອາຟຣິກາ. ກໍລະນີນີ້ສະແດງໃຫ້ເຫັນວ່າຄວາມຍຸຕິທໍາດ້ານອາກອນເຮັດໃຫ້ມີເຫດຜົນທາງດ້ານເສດຖະກິດ, ໃນຂະນະທີ່ການດຸ່ນດ່ຽງງົບປະມານຈາກຄົນທຸກຍາກແມ່ນບໍ່ມີເຫດຜົນທາງເສດຖະກິດ(ຕົວຢ່າງ, ໂດຍຜ່ານອາກອນທາງອ້ອມເຊັ່ນ: ອາກອນມູນຄ່າເພີ່ມ, ຫຼື VAT). ນອກນີ້ຍັງໄດ້ສະເໜີການລະດົມທຶນເຂົ້າໃສ່ວຽກງານປົກປ້ອງສັງຄົມ ໂດຍຊຸກຍູ້ການຈ່າຍທີ່ແທ້ຈິງ ເຊິ່ງແມ່ນ0,7% ຂອງ GDP ຂອງອົງການຮ່ວມມືດ້ານເສດຖະກິດເພື່ອການພັດທະນາ (OECD), ລັດ (ສ່ວນໃຫຍ່ແມ່ນປະເທດທີ່ພັດທະນາແລ້ວ) ພ້ອມທັງສ້າງກອງທຶນປົກປ້ອງສັງຄົມສາກົນ.

**ຕົວຢ່າງບັນຫາໃນການສະໜອງທຶນເຂົ້າໃນການປົກປ້ອງສັງຄົມ**

**ບັນຫາທີ 1:**

ຢູ່ປະເທດ D, ລັດຖະບານມີລາຍຮັບຕໍ່າ ຍ້ອນວ່າອັດຕາການເກັບພາສີອາກອນຕໍ່າ. ນີ້ໝາຍຄວາມວ່າລັດຖະບານບໍ່ມີທຶນພຽງພໍໃນການລົງທຶນໃສ່ໂຄງການຂະຫຍາຍການຊ່ວຍເຫຼືອສັງຄົມໃຫ້ກວມເອົາແຮງງານນອກລະບົບຫຼາຍຂຶ້ນ. ລັດຖະບານຈະສາມາດເພີ່ມການເກັບລາຍຮັບຈາກພາສີອາກອນເພື່ອເພີ່ມທຶນທີ່ມີຢູ່ແລ້ວເຂົ້າໃນໂຄງການຊ່ວຍເຫຼືອສັງຄົມໄດ້ແນວໃດ?

ວິທີການແກ້ໄຂ: ລັດຖະບານສາມາດເພີ່ມລາຍຮັບທົ່ວໄປໄດ້ໂດຍການເພີ່ມການເກັບລາຍຮັບພາສີອາກອນໃຫ້ຫລາຍຂຶ້ນໂດຍການ:

- ປັບປຸງລະບົບບໍລິຫານໂດຍການເຮັດໃຫ້ປະຊາຊົນແລະບໍລິສັດສາມາດຈ່າຍພາສີອາກອນໄດ້ງ່າຍຂຶ້ນ ແລະກຳນົດ ແລະ ໃສ່ລະບຽບທຸລະກິດຂະຫນາດໃຫຍ່ ແລະ ຜູ້ເສຍພາສີອາກອນລາຍໃຫຍ່ທີ່ບໍ່ໄດ້ເສຍພາສີອາກອນຂອງຕົນຄົບຖ້ວນ.
- ການເພີ່ມພາສີອາກອນຄວາມຮັບຜິດຊອບຕໍ່ສັງຄົມຂອງທຸລະກິດຂະຫນາດໃຫຍ່ແລະບໍລິສັດຂຸດຄົ້ນບໍ່ແຮ່, ແລະ ການເພີ່ມລາຍຮັບ, ຊັບສິນ ແລະ ພາສີອາກອນຈາກມູນມໍລະດົກຂອງບຸກຄົນຮັ່ງມີ. ວິທີການນີ້ຈະເກັບພາສີອາກອນກັບຄົນຮັ່ງມີທີ່ສຸດຢູ່ໃນປະເທດຫຼາຍກວ່າຄົນທຸກຍາກ. ຂະນະດຽວກັນນັ້ນ, ລັດຖະບານກໍສາມາດຫຼຸດອັດຕາພາສີອາກອນມູນຄ່າເພີ່ມ ເພື່ອສະຫນັບສະຫນູນເຈົ້າຂອງທຸລະກິດຂະຫນາດນ້ອຍ ແລະ ຜູ້ອອກແຮງງານໂດຍການຫຼຸດຜ່ອນລາຄາສິນຄ້າ ແລະ ການບໍລິການທີ່ເຂົາເຈົ້າເອື່ອຍອີງໃສ່ປະຈຳວັນ.
- ການຍົກເລີກການຜ່ອນຜັນພາສີອາກອນໃຫ້ແກ່ບໍລິສັດຂຸດຄົ້ນບໍ່ແຮ່ ແມ່ນວິທີການເພີ່ມລາຍຮັບຈາກການເກັບພາສີອາກອນຈາກບໍລິສັດຂະຫນາດໃຫຍ່. ທຶນເພີ່ມເຕີມເຫຼົ່ານີ້ສາມາດຊ່ວຍສະໜອງທຶນໃຫ້ແກ່ໂຄງການປົກປ້ອງສັງຄົມ ແລະ ການບໍລິການສາທາລະນະອື່ນໆ.

**ບັນຫາທີ 2:**

ທຸກໆປະເທດ, ສ່ວນຫລາຍແມ່ຍິງ ແລະ ຊາວໜຸ່ມຈະມີລາຍຮັບໜ້ອຍ ແລະ ມີລາຍຮັບບໍ່ປົກກະຕິຖ້າສົມທຽບໃສ່ແຮງງານທີ່ເຮັດວຽກໃນເສດຖະກິດນອກລະບົບ. ນີ້ຈະເຮັດໃຫ້ເຂົາເຈົ້າມີຄວາມຫຍຸ້ງຍາກໃນການປະກອບທຶນສົມທົບເຂົ້າໃນລະບົບປະກັນສັງຄົມ. ນອກນັ້ນ ແມ່ຍິງຍັງອາດຈະປະກອບສ່ວນຫນ້ອຍລົງຍ້ອນການພັກຜ່ອນຈາກການເຮັດວຽກໃນຊ່ວງຊີວິດຂອງເຂົາເຈົ້າຍ້ອນການເກີດລູກ ແລະ ດູແລເບິ່ງແຍງສະມາຊິກໃນຄົວເຮືອນ. ແມ່ຍິງ  ໜຸ່ມໃນໄວຈະເລີນພັນມີແນວໂນ້ມທີ່ຈະດຳລົງຊີວິດຢູ່ໃນຄວາມທຸກຍາກຍ້ອນຄວາມຮັບຜິດຊອບໃນການດູແລລູກ ແລະ ມີລາຍຮັບຕໍ່າກວ່າ. ໂດຍສະເພາະແລ້ວ ແຮງງານກຸ່ມຄົນເຫລົ່ານີ້ຈະພົບກັບຄວາມຫຍຸ້ງຍາກໃນການປະກອບທຶນສົມທົບເຂົ້າໃນລະບົບປະກັນສັງຄົມ, ເຖິງວ່າເຂົາເຈົ້າຕ້ອງການຊ່ວຍເຫລືອໃນການເກີດລູກ, ລ້ຽງລູກ ແລະ ລາຍຮັບ. ນີ້ອາດຈະຫມາຍຄວາມວ່າເຂົາເຈົ້າໄດ້ຮັບຂັ້ນການອຸດໜູນຕໍ່າກວ່າແຮງງານອື່ນໆທີ່ມີລາຍຮັບສູງ ແລະ ໄດ້ປະກອບທຶນສົມທົບເຂົ້າໃນລະບົບປະກັນສັງຄົມຫລາຍກວ່າ. **ຈະຕ້ອງມີໂຄງສ້າງລະບົບປົກປ້ອງສັງຄົມແນວໃດ ເພື່ອໃຫ້ກຸ່ມແມ່ຍິງສະເພາະນີ້ ແລະ ແຮງງານໜຸ່ມໄດ້ເຂົ້າມາມີສ່ວນຮ່ວມ?**

ວິທີການແກ້ໄຂ: ລັດຖະບານມີທາງເລືອກທີ່ຈະອອກແບບລະບົບປະກັນສັງຄົມທີ່ເປັນອັນສະເພາະເພື່ອຊ່ວຍເຫລືອຊາວຫນຸ່ມ ແລະ ແມ່ຍິງໂດຍການ:

- ແນະນຳອົງປະກອບ "ຄວາມສາມັກຄີ" ທີ່ບໍ່ໄດ້ປະກອບທຶນສົມທົບ - ລັດຍົກເວັ້ນແຮງງານນອກກລະບົບຈຳນວນໜຶ່ງໃນການຈ່າຍເງິນສົມທົບເຂົ້າໃນລະບົບປະກັນສັງຄົມ.
- ລັດຊ່ວຍແບ່ງຈ່າຍເງິນສົມທົບ.
- ແຮງງານນອກລະບົບຈ່າຍເງິນສົມທົບເຂົ້າໃນລະບົບປະກັນສັງຄົມໜ່ອຍກວ່າແຮງງານໃນລະບົບ.
- ເວລາໃນການຈ່າຍເງິນສົມທົບຕ້ອງມີຄວາມຍືດຫຍຸ່ນ ເພື່ອໃຫ້ແຮງງານຈ່າຍເງິນສົມທົບເມື່ອເຂົາເຈົ້າສາມາດຈ່າຍໄດ້.
- ໃຫ້ສິນເຊື່ອອຸດໜູນເພື່ອທົດແທນເງິນສົມທົບຂອງແຮງງານເພດຍິງເມື່ອເຂົາເຈົ້າພັກວຽກເພື່ອເບິ່ງແຍງລູກ.

ສຳລັບຊາວຫນຸ່ມເພດຍິງຢູ່ໃນກຸ່ມດ້ອຍໂອກາດທີ່ສຸດ, ຍຸດທະສາດທີ່ມີປະສິດທິພາບ ແລະ ມີຄວາມສະເຫມີພາບທີ່ສຸດແມ່ນອາດຈະໄດ້ຂະຫຍາຍການຊ່ວຍເຫຼືອທາງສັງຄົມໃນຮູບແບບຂອງເງິນສົດ ຫຼື ອາຫານ, ແທນທີ່ຈະພະຍາຍາມຂະຫຍາຍການປະກັນສັງຄົມ.

**ແຫຼ່ງຂໍ້ມູນ:** WIEGO 2022

# ຫຼັກສູດ 3:ການອຳນວຍຄວາມສະດວກ ແລະ ການກະກຽມ

## ພາກທີ 1: ບົດບາດຂອງຜູ້ອຳນວຍຄວາມສະດວກ

ຜູ້ອຳນວຍຄວາມສະດວກໃນການຮຽນຮູ້ຂອງຜູ້ໃຫຍ່ແມ່ນເພື່ອນຮ່ວມຮຽນຮູ້ນຳກັນ, ແທນທີ່ຈະເປັນ “ຄູສອນ” ທີ່ມີຄຳຕອບທັງຫມົດໃຫ້. ບົດບາດຂອງຜູ້ອຳນວຍຄວາມສະດວກແມ່ນສ້າງແນວຄວາມຄິດ ແລະ ຄວາມຮູ້ໃໝ່ໆ, ແລະ ກະຕຸ້ນໃຫ້ຜູ້ເຂົ້າຮ່ວມເຮັດເຊັ່ນດຽວກັນ.

ການອຳນວຍຄວາມສະດວກແມ່ນຮູບແບບຂອງການເປັນຜູ້ນຳພາ. ຜູ້ອຳນວຍຄວາມສະດວກມີໂອກາດທີ່ຈະສ້າງແບບຈຳລອງປະເພດຂອງການເປັນຜູ້ນຳທີ່ມີຄຸນນະພາບ ແລະ ສາມາດເຮັດໃຫ້ມີການປ່ຽນແປງເກີດຂຶ້ນ. ນັ້ນກໍໝາຍຄວາມວ່າ ຜູ້ອຳນວຍຄວາມສະດວກຕ້ອງມີມາດຕະຖານສູງຕໍ່ກັບຄວາມຊື່ສັດແລະຍຸຕິທຳ ໂດຍວາງໂຕເປັນກາງ, ມີສ່ວນຮ່ວມ, ໂປ່ງໃສ ແລະ ສາມາດກວດສອບໄດ້, ແລະແບ່ງປັນອຳນາດ ແລະ ສິດອຳນາດກັບຜູ້ເຂົ້າຮ່ວມ. ໃນກຸ່ມປະສົມຜູ້ຊາຍ ແລະ ແມ່ຍິງ, ຜູ້ອຳນວຍຄວາມສະດວກສາມາດສະແດງໃຫ້ເຫັນເຖິງຄວາມສະເໝີພາບຍິງ-ຊາຍ ໂດຍຮັບປະກັນວ່າຜູ້ຊາຍ ແລະ ແມ່ຍິງໄດ້ຮັບສິດສຽງ, ບົດບາດ ແລະ ຄວາມຮັບຜິດຊອບຕໍ່ກັບການຝຶກອົບຮົມເທົ່າທຽມກັນ.

ບົດບາດສຳຄັນຂອງຜູ້ອຳນວຍຄວາມສະດວກກໍ່ຄືການກະຕຸກຊຸກຍູ້ໃຫ້ຜູ້ເຂົ້າຮ່ວມໄດ້ມີຄວາມກ້າວໜ້າຂຶ້ນດ້ວຍຕົນເອງ, ສາມາດຕີໝາຍ ແລະນຳໃຊ້ທັກສະໃໝ່ເຂົ້າໃນການປະຕິບັດຕົວຈິງຢູ່ໃນຊຸມຊົນ ແລະໃນບ່ອນເຮັດວຽກໄດ້.
ຜູ້ອຳນວຍຄວາມສະດວກມີໜ້າທີ່ຮັບຜິດຊອບທີ່ສຳຄັນດັ່ງນີ້:

- ເພື່ອໃຫ້ໄດ້ຄົນທີ່ເໝາະສົມມາເຂົ້າຝຶກອົບຮົມຢູ່ໃນຫ້ອງຝຶກອົບຮົມ ແລະ ສ້າງພື້ນທີ່ທີ່ປອດໄພສຳລັບການຮຽນຮູ້.
- ຊ່ວຍກຳນົດ ແລະ ຮັກສາຈຸດສຸມຂອງການຝຶກອົບຮົມເພື່ອແລກປ່ຽນເປົ້າຫມາຍການຮຽນຮູ້ຮ່ວມກັນ.
- ເພື່ອຊຸກຍູ້ສົ່ງເສີມການມີສ່ວນຮ່ວມທີ່ເຊື່ອມໂຍງຄວາມຮູ້ໃຫມ່ກັບປະສົບການຊີວິດເຂົ້າກັນ (ແລະ ການປະຕິບັດ!).
- ຊຸກຍູ້ໃຫ້ຜູ້ເຂົ້າຮ່ວມໄດ້ທົດສອບແນວຄວາມຄິດທີ່ໄດ້ຮັບຈາການຝຶກອົບຮົມເພື່ອໃຫ້ເກີດມີຄວາມຮູ້, ທັກສະ ແລະ ຄວາມໝັ້ນໃຈໃໝ່.

**ລາຍການກວດ ສຳລັບຜູ້ອຳນວຍຄວາມສະດວກ:**

- ເຂົ້າໃຈແຈ້ງຕໍ່ກັບບົດບາດຂອງທ່ານ: ພຶດຕິກຳຂອງທ່ານສື່ຄວາມໝາຍແທນຄຳເວົ້າ ແລະ ມັນຈະບົ່ງບອກວ່າທ່ານບໍ່ແມ່ນຄູສອນແຕ່ເປັນເພື່ອນຮ່ວມຮຽນ.
- ລະວັງຕາຂອງທ່ານ: ສົບສາຍຕາກັບຜູ້ເຂົ້າຮ່ວມ.
- ລະວັງສຽງຂອງທ່ານ: ພະຍາຍາມບໍ່ເວົ້າດັງເກີນໄປ, ຄ່ອຍເກີນໄປ, ຫຼື ເວົ້າຫຼາຍເກີນໄປ.
- ລະວັງ “ພາສາທາງຮ່າງກາຍ” ຂອງທ່ານ: ພິຈາລະນາເຖິງບ່ອນທີ່ທ່ານນັ່ງ ຫຼື ຢືນ ແລະ ວິທີອື່ນໆທີ່ທ່ານອາດໃຊ້ສິດອຳນາດແບບບໍ່ເໝາະສົມໂດຍບໍ່ຮູ້ສຶກໂຕ.
- ລະວັງຕໍ່ຄວາມຮັບຜິດຊອບຂອງທ່ານ: ຮັບປະກັນວ່າທຸກຄົນມີໂອກາດໄດ້ຖືກຮັບຟັງ ແລະຖືກປະຕິບັດຢ່າງສະເໝີພາບ; ຊຸກຍູ້ໃຫ້ມີການອອກແນວຄວາມຄິດທີ່ມີຄວາມແຕກຕ່າງກັນ ແຕ່ຈຳກັດບໍ່ໃຫ້ມີການໂຕ້ຖຽງກັນ; ສະກັດກັ້ນຜູ້ທີ່ມັກຄອບງຳຜູ້ອື່ນ; ຊຸກຍູ້ຜູ້ທີ່ບໍ່ມີຄວາມໝັ້ນໃຈ.
- ຕ້ອງຮູ້ວ່າເມື່ອໃດຄວນເຮັດຫຍັງ: ເມື່ອມີຄວາມຈຳເປັນກໍຕ້ອງໄດ້ອະທິບາຍ ແລະ ສະຫຼຸບສັງລວມ; ຕ້ອງຮູ້ຕັດສິນໃຈວ່າເມື່ອໃດຄວນໃຫ້ເວລາການສົນທະນາຕໍ່ໄປອີກ ແລະ ເມື່ອໃດຄວນຈະຍ້າຍໄປຫົວຂໍ້ຕໍ່ໄປ; ເຕືອນກຸ່ມເມື່ອເຂົາເຈົ້າອອກນອກຫົວຂໍ້.
- ຮູ້ເຖິງອຳນາດຂອງທ່ານ ແລະ ແລກປ່ຽນອຳນາດ: ມອບໜ້າທີ່ຮັບຜິດຊອບໃຫ້ຄົນອື່ນເມື່ອເຫັນວ່າມີຄວາມເປັນໄປໄດ້ (ຕົວຢ່າງ: ມອບໜ້າທີ່ໃຫ້ບັນທຶກ, ຮັກສາເວລາ, ແລະ ຖ້າເປັນໄປໄດ້ໃຫ້ນຳພາໃນການສົນທະນາ).

# ▸ ພາກທີ 2: ເຕັກນິກໃນການອຳນວຍຄວາມສະດວກ

**ເຄື່ອງມືເປັນຄຳເວົ້າ/ປາກເປົ່າສຳລັບການອຳນວຍຄວາມສະດວກການຝຶກອົບຮົມ**

ໃນເວລາອຳນວຍຄວາມສະດວກການສົນທະນາກຸ່ມໃນຊຸດຝຶກອົບຮົມ, ທ່ານສາມາດນຳໃຊ້ເຄື່ອງມືປາກເປົ່າແບບງ່າຍດາຍຈຳນວນໜຶ່ງ ເພື່ອເຮັດໃຫ້ຜູ້ເຂົ້າຮ່ວມໄດ້ມີສ່ວນຮ່ວມ ແລະ ຮັບປະກັນວ່າທຸກຄົນໄດ້ມີສ່ວນຮ່ວມ.

**ຄຳຖາມກວດສອບຄວາມເຂົ້າໃຈ ຫລື ແນວຄວາມຄິດທົ່ວໄປ**

ຄຳຖາມກວດສອບຄວາມເຂົ້າໃຈ ຫລື ແນວຄວາມຄິດທົ່ວໄປ ໄດ້ເອົາມານຳໃຊ້ເພື່ອກວດກາເບິ່ງອາລົມຫຼືຄວາມຄິດເຫັນທົ່ວໄປຂອງກຸ່ມຕໍ່ກັບຫົວຂໍ້ໃດໜຶ່ງຫຼືຈຸດໃດໜຶ່ງໃນການສົນທະນາ. ການສຳຫລວດແບບງ່າຍດ່າຍ ພຽງແຕ່ຂໍໃຫ້ຜູ້ເຂົ້າຮ່ວມ "ຍົກໂປ້ຂຶ້ນ, ຍົກໂປ້ລົງ" ກໍພຽງພໍທີ່ຈະຮູ້ໄດ້ເຖິງແນວຄວາມຄິດເຫັນທົ່ວໄປຂອງກຸ່ມ.

**ການຖອດຂໍ້ຄວາມ**

ການຖອດຂໍ້ຄວາມໝາຍເຖິງການສະແດງເນື້ອໃນອັນດຽວກັນທີ່ໄດ້ກ່າວມາກ່ອນ ແຕ່ເອົາເນື້ອໃນປະໂຫຍກນັ້ນມາເວົ້າດ້ວຍຄຳເວົ້າຂອງຕົນເອງ ເພື່ອກວດເບິ່ງວ່າທັງຕົນເອງ ແລະ ສະມາຊິກຜູ້ອື່ນໆໃນກຸ່ມມີຄວາມເຂົ້າໃຈຄືກັນ.

**ການຫັນປ່ຽນທິດຄຳຖາມ ແລະ ຄຳຄິດເຫັນ**

ການຫັນປ່ຽນທິດຄຳຖາມໄປຫາກຸ່ມຈະຊ່ວຍໃຫ້ຜູ້ເຂົ້າຮ່ວມໄດ້ມີສ່ວນຮ່ວມໃນການສົນທະນາຫຼາຍຂຶ້ນ. ນອກຈາກນັ້ນ, ມັນຍັງຊ່ວຍໃຫ້ກຸ່ມໄດ້ມີການສະທ້ອນຄືນອີກດ້ວຍ.

**ການເຊື່ອມໂຍງ ແລະ ການອ້າງອີງກັບຄືນ**

ຈະຊ່ວຍໃຫ້ກຸ່ມຕິດຕາມການສົນທະນາແລະເຊື່ອມຕໍ່ແນວຄວາມຄິດໂດຍການອ້າງອີງໃສ່ການສົນທະນາຫຼືຄວາມຄິດກ່ອນໜ້ານີ້.

**ການຫັນປ່ຽນທັດສະນະ**

ຖ້າພາຍໃນກຸ່ມຫາກຕິດຂັດຢູ່ໃນບາງຈຸດໃນເວລາສົນທະນາ, ພະຍາຍາມຫັນປ່ຽນທັດສະນະ ແລະ ເບິ່ງບັນຫາຈາກມູມມອງອື່ນ.

**ການສະຫລຸບສັງລວມ**

ການເວົ້າຊໍ້າຄືນ ຊຸກຍູ້ໃຫ້ເກີດມີການຮຽນຮູ້, ແລະ ການສະຫຼຸບສັງລວມສິ່ງທີ່ໄດ້ຮຽນມາ ຈະຊ່ວຍໃຫ້ກຸ່ມມີການເສີມສ້າງການຮຽນຮູ້ຂຶ້ນ. ໃຫ້ມີການສະຫລຸບສັງລວມເລື້ອຍໆ ຫຼື ບອກຕາງໜ້າຂອງກຸ່ມຂຶ້ນສະຫລຸບສັງລວມ, ຜູ້ເຂົ້າຮ່ວມທີ່ໄດ້ຄິດຄືນ ແລະ ສະຫຼຸບເນື້ອໃນຂອງການຮຽນອອກເປັນສຽງ ມີແນວໂນ້ມທີ່ຈະເກັບຄວາມຊົງຈຳກ່ຽວກັບບົດຮຽນໄດ້ຫຼາຍກວ່າ.

**ການເນັ້ນໜັກໃສ່ການເສີມສ້າງໃນທາງບວກ**

ສຳຄັນແມ່ນຕ້ອງໄດ້ກະຕຸກຊຸກຍູ້ຜູ້ເຂົ້າຮ່ວມ(ໂດຍສະເພາະຜູ້ທີ່ຂາດຄວາມໝັ້ນໃຈ) ໃຫ້ກ້າສະແດງຄວາມຄິດເຫັນຂອງເຂົາເຈົ້າ. ສະນັ້ນ, ເມື່ອຜູ້ໃດຜູ້ໜຶ່ງສະເໜີແນວຄວາມຄິດທີ່ດີ, ຕ້ອງໄດ້ສະແດງໃຫ້ເຂົາເຈົ້າເຫັນວ່າການມີສ່ວນຮ່ວມຂອງເຂົາເຈົ້ານັ້ນເປັນທີ່ໜ້າຍ້ອງຍໍຊົມເຊີຍ,  ເພື່ອໃຫ້ບຸກຄົນນັ້ນຮູ້ສຶກໝັ້ນໃຈພຽງພໍ ທີ່ຈະສະແດງແນວຄວາມຄິດອື່ນໆອີກໃນການສົນທະນາຄັ້ງຕໍ່ໄປ.

### ການຟັງແບບໃຫ້ຄວາມສົນໃຈ

- ສົນໃຈກັບສິ່ງທີ່ຄົນນັ້ນເວົ້າ. ສະແດງໃຫ້ເຫັນວ່າທ່ານກໍາລັງຟັງ. ແຈ້ງໃຫ້ເຂົາເຈົ້າຮູ້ວ່າທ່ານຈະໄດ້ບັນທຶກ. ໃຫ້ຄໍາຄິດເຫັນດ້ວຍຄໍາເວົ້າ ແລະ ບໍ່ເປັນຄໍາເວົ້າ, ເຊັ່ນ: ການສົບສາຍຕາ, ງຶກຫົວ ແລະ ຍິ້ມ.
- ເວົ້າຊໍ້າຄືນ ຫຼື ການຖອດຂໍ້ຄວາມ ສິ່ງທີ່ຄົນນັ້ນກໍາລັງບອກທ່ານ ເພື່ອຊຸກຍູ້ໃຫ້ມີການໂຕ້ຕອບ. ຕົວຢ່າງ, ຄົນທີ່ລະແວງສົງໄສຈະເວົ້າວ່າ: "ຂ້ອຍບໍ່ສາມາດເຂົ້າຮ່ວມໃນການຝຶກອົບຮົມນີ້ແທ້ໆ." ຄໍາຕອບຂອງທ່ານອາດຈະເປັນ: "ທ່ານຄິດວ່າທ່ານບໍ່ສາມາດເຂົ້າຮ່ວມໃນການຝຶກອົບຮົມຄັ້ງນີ້ແມ່ນບໍ? ບອກຂ້ອຍຕື່ມ."
- ສະທ້ອນເຖິງຄວາມຮູ້ສຶກ ແລະ ປະສົບການຂອງຜູ້ທີ່ກໍາລັງບັນລະຍາຍ. ຕົວບົ່ງຊີ້, ຕົວຢ່າງ:  ເວົ້າວ່າ," ເຈົ້າຮູ້ສຶກເສຍໃຈຫຼາຍກ່ຽວກັບເລື່ອງນີ້", "ເຈົ້າເຮັດໃຫ້ຂ້ອຍຮູ້ສຶກວ່າເລື່ອງນີ້ເຮັດໃຫ້ເຈົ້າມີຄວາມກັງວົນຫລາຍ" ຫຼື "ຈາກສິ່ງທີ່ເຈົ້າເວົ້າມາ, ເບິ່ງຄືວ່າເຈົ້າຕົກຢູ່ໃນຄວາມຫຍຸ້ງຍາກ. ເຈົ້າມີຄວາມສົງໄສກ່ຽວກັບເນື້ອໃນຂອງການຝຶກອົບຮົມນີ້, ແຕ່ເຈົ້າກໍ່ມີຄວາມສົນໃຈຢາກຮູ້ຢາກເຫັນເຊັ່ນກັນ."
- ສະຫຼຸບສັງລວມຄວາມຮູ້ສຶກ ແລະ ປະສົບການຂອງບຸກຄົນ ເພື່ອເນັ້ນໃສ່ປະເດັນ ຫຼື ຂໍການຢືນຢັນ. ຍົກຕົວຢ່າງ, ທ່ານສາມາດເວົ້າວ່າ: "ຂ້ອຍຮູ້ ວ່າເຈົ້າບໍ່ຕ້ອງການເຂົ້າຮ່ວມໃນບາງພາກຂອງການຝຶກອົບຮົມ, ແຕ່ເຈົ້າເຕັມໃຈທີ່ຈະລອງເຂົ້າຮ່ວມໃນພາກສະເໜີຂອງການຝຶກອົບຮົມ ແມ່ນບໍ?
- ກວດສອບຄວາມເຂົ້າໃຈ. ຖາມຄໍາຖາມທີ່ກະຕຸກຊຸກຍູ້ບຸກຄົນໃຫ້ຂໍ້ມູນເພີ່ມເຕີມ ຫຼື ເພື່ອຊີ້ແຈ້ງຄວາມບໍ່ເຂົ້າໃຈໃນຈຸດໃດໜຶ່ງ. ຕົວຢ່າງ, ທ່ານສາມາດເວົ້າວ່າ: "ຂ້ອຍບໍ່ແນ່ໃຈວ່າຂ້ອຍເຂົ້າໃຈກ່ຽວກັບສິ່ງທີ່ເຈົ້າເວົ້າກ່ຽວກັບ X" ຖືກຕ້ອງບໍ ຫຼື "ຂໍໃຫ້ເຈົ້າເວົ້າກ່ຽວກັບ Y ຕື່ມອີກໄດ້ບໍ?"
- ອອກຄໍາຄິດເຫັນຕໍ່ກັບຄວາມຄິດຫຼືຄວາມຮູ້ສຶກຂອງບຸກຄົນ. ເປີດເຜີຍຂໍ້ມູນສ່ວນຕົວທີ່ພົວພັນກັບຕົວທ່ານເອງ. ຕົວຢ່າງ, ເຈົ້າສາມາດເວົ້າວ່າ: "ຂ້ອຍເຂົ້າໃຈໃນຄວາມລັງເລໃຈຂອງເຈົ້າ, ເພາະວ່າຂ້ອຍມີຄວາມກັງວົນທີ່ຄ້າຍຄືກັນກ່ອນການຝຶກອົບຮົມຄັ້ງທໍາອິດຂອງຂ້ອຍ."
- ສະແດງການສະໜັບສະໜູນ. ສະແດງຄວາມອົບອຸ່ນ ແລະ ເປັນຫ່ວງເປັນໄຍ. ຕົວຢ່າງ, ທ່ານສາມາດເວົ້າວ່າ: " ເບິ່ງຄືວ່າເຈົ້າໄດ້ພົບທາງອອກທີ່ດີແລ້ວ. ພວກເຮົາສາມາດເວົ້າກ່ຽວກັບເລື່ອງນີ້ຕື່ມອີກພາຍຫລັງ, ຖ້າເຈົ້າຕ້ອງການ."
- ຢູ່ງຽບໆ. ໃຫ້ເວລາກັບຄົນ ເພື່ອຄົ້ນຄິດ ແລະ ເວົ້າ. ວາງຕົວໃຫ້ສະດວກສະບາຍຕໍ່ກັບຄວາມງຽບ.

**ແຫລ່ງຂໍ້ມູນ:** HelpAge international, 2020

### ການຊຸກຍູ້ໃຫ້ແມ່ຍິງມີສ່ວນຮ່ວມ

ແມ່ຍິງມີຫລາຍບູລິມະສິດທີ່ຈະຕ້ອງເຮັດ ແລະ ບົດບາດຍິງ-ຊາຍທີ່ເຂົາເຈົ້າໄດ້ຖືກມອບໝາຍໃຫ້ນັ້ນອາດຈະບໍ່ຊຸກຍູ້ສົ່ງເສີມ - ຫຼື ອະນຸຍາດໃຫ້ເຂົາເຈົ້າມີສ່ວນຮ່ວມໃນກິດຈະກໍາສາທາລະນະ ຫຼືກິດຈະກໍາຕ່າງໆ. ດັ່ງນັ້ນ, ການເຊື້ອເຊີນແມ່ຍິງໃຫ້ເຂົ້າຮ່ວມການຝຶກອົບຮົມ ແລະ ຄາດຫວັງໃຫ້ແມ່ຍິງມາເຂົ້າຮ່ວມເປັນຈໍານວນຫລວງຫລາຍເທົ່ານັ້ນອາດຈະຍັງບໍ່ພຽງພໍ. ຜູ້ຈັດຕັ້ງການຝຶກອົບຮົມຍັງຕ້ອງໄດ້ປຸກລະດົມ ແລະ ສົ່ງເສີມການມີສ່ວນຮ່ວມຂອງແມ່ຍິງຢ່າງຫ້າວຫັນ.

ຜູ້ອໍານວຍຄວາມສະດວກທີ່ມີປະສົບການຮູ້ວ່ານີ້ຫມາຍເຖິງການໃຊ້ເວລາແລະຊັບພະຍາກອນໃຫ້ຫລາຍຂຶ້ນ ເພື່ອສ້າງຄວາມສໍາພັນ ແລະ ຄວາມໄວ້ວາງໃຈກັບກຸ່ມແມ່ຍິງ ແລະ ລາຍບຸກຄົນ. ເພື່ອໃຫ້ບັນລຸສິ່ງເຫລົ່ານີ້ ອາດຈະຕ້ອງໄດ້ມີກິດຈະກໍາເຊັ່ນ: ໃຊ້ເວລາກັບເຂົາເຈົ້າໃນເວລາພັກຜ່ອນ ແລະ ສ້າງຄວາມເຂົ້າໃຈຕໍ່ກັບເລື່ອງລາວຂອງເຂົາເຈົ້າ ຫຼື ໃຫ້ເຂົາເຈົ້າໄດ້ມີບົດບາດຫຼາຍຂຶ້ນໃນກິດຈະກໍາຕ່າງໆ.

# ▶ ພາກທີ 3: ສິ່ງທ້າທາຍຂອງຜູ້ອຳນວຍຄວາມສະດວກ

| ປະເພດຜູ້ເຂົ້າຮ່ວມ | ເປັນຫຍັງຈຶ່ງເກີດຂຶ້ນ | ສິ່ງທີ່ຕ້ອງເຮັດ |
|---|---|---|
| **ຄົນມິດງຽບ** | ▶ ເບື່ອ<br>▶ ບໍ່ສົນໃຈ<br>▶ ເຂີນອາຍ<br>▶ ຮູ້ຫຼາຍກວ່າ | ▶ ຖາມແນວຄວາມຄິດ ເພື່ອດຶງດູດຄວາມສົນໃຈຂອງເຂົາເຈົ້າ<br>▶ ຕັ້ງຄຳຖາມຖາມຄົນຢູ່ຂ້າງລາວ. ຫຼັງຈາກນັ້ນ, ຂໍໃຫ້ຄົນທີ່ມິດງຽບນັ້ນອອກຄຳເຫັນຕໍ່ກັບແນວຄວາມຄິດນັ້ນ.<br>▶ ຍ້ອງຍໍບຸກຄົນນີ້ໃນຄັ້ງທຳອິດທີ່ລາວປະກອບສ່ວນ. ຈາກໃຈຈິງ<br>▶ ສະແດງຄວາມເຄົາລົບຕໍ່ປະສົບການຂອງບຸກຄົນນີ້, ຈາກນັ້ນ ຖາມແນວຄວາມຄິດຂອງລາວ |
| **ຄົນມັກຂັດຈັງຫວະ** | ສ່ວນຫຼາຍເປັນຄົນມີມາລະຍາດດີ ແຕ່ຖືກລົບກວນຈາກວຽກ ຫຼື ບັນຫາສ່ວນຕົວຂອງເຂົາເຈົ້າ. | ▶ ພະຍາຍາມຄວບຄຸມອາລົມໄວ້ໃຫ້ດີ<br>▶ ເຫັນດີກັບແນວຄວາມຄິດໜຶ່ງ ແລະ ຍ້າຍໄປເຮັດສິ່ງອື່ນແທນ.<br>▶ ຖ້າມີຄົນໃດໜຶ່ງເວົ້າໃນສິ່ງທີ່ບໍ່ເປັນຄວາມຈິງ, ໂຍນປະເດັນນັ້ນກຸ່ມເປັນຜູ້ຕອບປະຕິເສດ.<br>▶ ລົມກັບຜູ້ນັ້ນເປັນການສ່ວນຕົວ ເຊິ່ງເປັນວິທີສຸດທ້າຍເພື່ອຊອກຫາສິ່ງທີ່ລົບກວນເຂົາເຈົ້າ. |
| **ຄົນເວົ້າຍາວ** | ຄວາມຄິດອັນໜຶ່ງນຳໄປສູ່ແນວຄວາມຄິດອີກອັນ ໜຶ່ງ ແລະ ພາໃຫ້ຄົນນີ້ອອກຈາກປະເດັນທີ່ລົມກັນ | ▶ ເມື່ອຄົນນີ້ຢຸດເວົ້າເພື່ອຫາຍໃຈ, ໃຫ້ຟ້າວກ່າວຂອບໃຈລາວ, ແລ້ວຫັນຄວາມສົນໃຈໄປໃສ່ກຸ່ມຄືນ ແລະ ສືບຕໍ່<br>▶ ໃນລັກສະນະທີ່ເປັນມິດ, ຊີ້ບອກໃຫ້ຄົນນີ້ຮູ້ວ່າ "ພວກເຮົາເລີ່ມອອກນອກເລື່ອງເລັກໜ່ອຍ".<br>▶ ເປັນທາງເລືອກສຸດທ້າຍ, ໃຊ້ຕາຕະລາງການຝຶກອົບຮົມຂອງທ່ານເປັນຂໍ້ແກ້ຕົວ.<br>▶ ແນມເບິ່ງໂມງຂອງທ່ານແລ້ວເວົ້າວ່າ: "ເຮົາມີເວລາຂ້ອນຂ້າງຈຳກັດ". |

| | | |
|---|---|---|
| **ຄົນມັກຕອບຄຳຖາມ/ຄົນທີ່ພ້ອມຕອບຄຳຖາມ** | ເກີດຈາກຜູ້ເຂົ້າຮ່ວມທີ່ຫວັງດີ ແລະ ຢາກໃຫ້ຄວາມຊ່ວຍເຫຼືອ ແຕ່ກັບກາຍເປັນຄວາມຫຍຸ້ງຍາກ ເພາະບໍ່ໄດ້ເປີດໂອກາດໃຫ້ຄົນອື່ນໄດ້ມີສ່ວນຮ່ວມ. | ▶ ຕັດຄົນນີ້ອອກແບບນຸ້ມນວນໂດຍການຖາມຜູ້ເຂົ້າຮ່ວມຄົນອື່ນແທນ.<br>▶ ແນະນຳວ່າ "ພວກເຮົາຄວນໃຫ້ຄົນອື່ນໄດ້ເຮັດວຽກແດ່".<br>▶ ໃຫ້ຄົນນີ້ສະຫຼຸບສັງລວມ. ນີ້ຈະເຮັດໃຫ້ຄົນນີ້ເອົາໃຈໃສ່ ແລະ ໃຊ້ຄວາມກະຕືລືລົ້ນຂອງລາວໃຫ້ເປັນປະໂຫຍດ. |
| **ຄົນມັກສົນທະນາກັບຜູ້ອື່ນໃນເວລາຝຶກອົບຮົມ** | ຜູ້ມັກລົມກັບຄົນອື່ນ ປົກກະຕິແລ້ວແມ່ນມັກລົມກ່ຽວກັບເລື່ອງສ່ວນຕົວ ແຕ່ບາງຄັ້ງກໍອາດຈະກ່ຽວຂ້ອງກັບຫົວຂໍ້ຝຶກອົບຮົມ. | ▶ ເອີ້ນຊື່ຄົນນີ້ ແລະ ຖາມຄຳຖາມງ່າຍໆ.<br>▶ ເອີ້ນຊື່ຄົນນີ້ ແລະ ທວນຄືນແນວຄວາມຄິດທີ່ໄດ້ສະແດງອອກ, ແລະຖາມຄວາມຄິດເຫັນຄົນນີ້ຕໍ່ກັບປະເດັນດັ່ງກ່າວ.<br>▶ ໃຫ້ຄົນນີ້ໄດ້ເຂົ້າຮ່ວມໃນການສົນທະນາ. |
| **ທັດສະນະສ່ວນຕົວທີ່ບໍ່ເຂົ້າກັນ** | ສອງຄົນ ຫລື ຫລາຍຄົນບໍ່ລົງລອຍກັນ, ແບ່ງພັກແບ່ງພວກ ເຮັດໃຫ້ມີການຂັດແຍ່ງກັນ ແລະ ເປັນອັນຕະລາຍຕໍ່ຜົນສຳເລັດຂອງການຝຶກອົບຮົມ. | ▶ ພະຍາຍາມຍົກໃຫ້ເຫັນຂົງເຂດທີ່ສອງຄົນເຫັນດີນຳກັນ.ຫັນຄວາມສົນໃຈໄປໃສ່ຈຸດປະສົງຂອງການຝຶກອົບຮົມ.<br>▶ ໂຍນຄຳຖາມທີ່ພົວພັນກັບຫົວຂໍ້ໃຫ້ຄົນອື່ນທີ່ບໍ່ມີສ່ວນໃນການຂັດແຍ້ງຕອບ.<br>▶ ເປັນວິທີສຸດທ້າຍ, ບອກຢ່າງກົງໄປກົງມາວ່າເລື່ອງຂອງສ່ວນບຸກຄົນຄວນປະໄວ້ນອກການສົນທະນາ. |
| **ຄົນມັກອອກນອກກອບຫົວຂໍ້ສົນທະນາ/ຄົນເວົ້ານອກເລື່ອງ** | ຍົກແນວຄວາມຄິດບໍ່ຖືກຕ້ອງຂຶ້ນມາສົນທະນາ | ▶ ໃຫ້ເວົ້າວ່າ: "ນັ້ນກໍເປັນວິທີໜຶ່ງໃນການເບິ່ງບັນຫາ" ແລະ ແກ້ໄຂແນວຄວາມຄິດທີ່ບໍ່ຖືກຕ້ອງຢ່າງນຸ້ມນວນ.<br>▶ ໃຫ້ເວົ້າວ່າ: "ຂ້ອຍເຂົ້າໃຈຈຸດທີ່ເຈົ້າເວົ້າມາ, ແຕ່ພວກເຮົາມາເບິ່ງຄືນສະຖານະການໃນປະຈຸບັນຂອງພວກເຮົາບໍ?"<br>▶ ຮັບມືກັບສະຖານະການຢ່າງນຸ້ມນວນ, ເພາະວ່າທ່ານຈະໄປຂັດກັບຄົນນີ້. ຄວນຈື່ໄວ້ວ່າ, ສະມາຊິກທັງຫມົດຂອງກຸ່ມຈະໄດ້ຍິນວິທີທີ່ທ່ານຕອບແຕ່ລະຄົນ. ທ່ານສາມາດຊຸກຍູ້ຫຼືຂັດຂວາງການມີສ່ວນຮ່ວມຂອງເຂົາເຈົ້າດ້ວຍວິທີການສື່ສານຂອງທ່ານ. |

| | | |
|---|---|---|
| **ຄົນຫົວດື້/ຄົນບໍ່ຍອມຮັບຟັງຄໍາຄິດເຫັນຂອງຄົນອື່ນ** | ບໍ່ຄໍານຶງເຖິງແນວຄວາມຄິດຂອງອີກຝ່າຍໜຶ່ງ. ສະຫນັບສະຫນູນທັດສະນະຂອງຕົນເອງບໍ່ວ່າຈະເປັນແນວໃດກໍຕາມ | ▶ ຂໍໃຫ້ສະມາຊິກຄົນອື່ນໆໃນກຸ່ມສະແດງຄວາມຄິດເຫັນຕໍ່ກັບແນວຄວາມຄິດຂອງບຸກຄົນນີ້. ເຂົາເຈົ້າອາດຈະເພີ່ມທັດສະນະອື່ນ ແລະ ຊ່ວຍໃຫ້ບຸກຄົນນີ້ເຫັນແນວຄວາມຄິດທີ່ແຕກຕ່າງອອກໄປ.<br>▶ ເຕືອນໃຫ້ຜູ້ນີ້ຮູ້ວ່າມີເວລາສັ້ນ. ແນະນໍາໃຫ້\ລາວຍອມຮັບທັດສະນະສ່ວນໃຫຍ່.<br>▶ ບອກວ່າ ທ່ານຍິນດີທີ່ຈະລົມຕໍ່ອີກນໍາຫລັງ. ຫຼັງຈາກນັ້ນ, ໃຫ້ຕິດຕາມ. |
| **ຄົນເວົ້າຫລາຍ** | ▶ ມີຄວາມຕັ້ງໃຈສູງ<br>▶ ອວດຜູ້ອື່ນ<br>▶ ຮູ້ຂໍ້ມູນຫລາຍ<br>▶ ມັກເວົ້າ | ▶ ຕັ້ງຄໍາຖາມຍາກຖາມຄົນນີ້ ເພື່ອໃຫ້ລາວງຽບລົງ.<br>▶ ໃຫ້ເວົ້າວ່າ: "ນັ້ນເປັນຈຸດທີ່ໜ້າສົນໃຈ. ມາເບິ່ງຜູ້ອື່ນໆວ່າຄິດແນວໃດຕໍ່ກັບບັນຫານີ້."<br>▶ ເອົາຄວາມຮູ້ຂອງບຸກຄົນນີ້ມາເລົ່າສູ່ກຸ່ມຕົນເອງຟັງ. ໂດຍທົ່ວໄປແລ້ວ, ສໍາລັບບຸກຄົນທີ່ເວົ້າຫຼາຍເກີນໄປ, ທ່ານຄວນເນັ້ນໃຫ້ເຫັນເຖິງຄວາມຈໍາເປັນທີ່ຕ້ອງໃຫ້ທຸກຄົນໄດ້ມີໂອກາດເຂົ້າຮ່ວມ. |
| **ຄົນມັກຈົ່ມ/ມັກຕໍານິ** | ມັກຈົ່ມມັກເວົ້າ, ບໍ່ມີສາເຫດເຮັດໃຫ້ຈົ່ມ ແຕ່ກໍຍັງຈົ່ມ ຫຼື ມີເຫດຜົນໃຫ້ຈົ່ມ. | ▶ ໃຫ້ເຫັນວ່າ ເປົ້າໝາຍຂອງພວກເຮົາແມ່ນເຮັດວຽກໃຫ້ມີປະສິດທິພາບ ແລະ ມີການຮ່ວມມືເທົ່າທີ່ຈະເປັນໄປໄດ້ ໃນຖ່າມກາງສະພາບເງື່ອນໄຂໃນປັດຈຸບັນ.<br>▶ ບອກບຸກຄົນນີ້ວ່າທ່ານຈະລົມກ່ຽວກັບບັນຫາຂອງລາວເປັນສ່ວນຕົວພາຍຫລັງ.<br>▶ ບອກໃຫ້ສະມາຊິກຄົນອື່ນໃນກຸ່ມຕອບການຈົ່ມວ່າຂອງລາວ. |

**ແຫຼ່ງຂໍ້ມູນ:** HelpAge International 2020

# ▶ ພາກທີ 4: ການວາງແຜນ ແລະ ການກະກຽມ

ການໃຊ້ເວລາໃນການວາງແຜນການຝຶກອົບຮົມ, ໂດຍສະເພາະໃຊ້ເວລາໃນການສ້າງສາຍສຳພັນເພື່ອໃຫ້ເກີດຄວາມໄວ້ວາງໃຈແລະຄວາມຫມັ້ນໃຈ ແມ່ນອີງໃສ່ການປະເມີນຄວາມຕ້ອງການແລະຄວາມສົນໃຈຂອງຜູ້ເຂົ້າຮ່ວມ. ເມື່ອໄດ້ສ້າງຈຸດປະສົງຂອງການຝຶກອົບຮົມແລ້ວ, ກໍຍັງຕ້ອງໄດ້ວາງແຜນກ່ຽວກັບການຈັດກອງປະຊຸມ ແລະ ຄຳນຶງເຖິງແຜນການອື່ນໆນຳອີກດ້ວຍ. ສິ່ງເຫລົ່ານີ້ແມ່ນຕ້ອງໄດ້ໃຊ້ເວລາ ແລະ ເຮື່ອງແຮງ. ການສ້າງທີມງານວາງແຜນຈະສາມາດຊ່ວຍແບ່ງປັນຄວາມຮັບຜິດຊອບເຫຼົ່ານີ້ ແລະ ຕິດຕາມໃຫ້ເປັນໄປຕາມແຜນ. ສາມອົງປະກອບທີ່ຄວນພິຈາລະນາໃນທີມງານມີດັ່ງນີ້:

- ▶ **ການຈັດກອງປະຊຸມ:** ຈອງສະຖານທີ່, ສະຫນອງຄວາມຕ້ອງການໃນການແປພາສາ ແລະ ເຕັກໂນໂລຊີ, ກະກຽມຫ້ອງປະຊຸມ ແລະ ກວດກາເບິ່ງສຽງ, ໄຟ, ອຸນຫະພູມ, ການຈັດແຈງອາຫານວ່າງ ແລະ ອາຫານ.

**ສະຖານທີ່, ເວລາ ແລະ ການກະກຽມສະຖານທີ່:**

ເມື່ອສົ່ງບັດເຊີນເຂົ້າຮ່ວມຝຶກອົບຮົມ, ຕ້ອງຊອກເບິ່ງວ່າຜູ້ເຂົ້າຮ່ວມມີຄວາມຕ້ອງການສະເພາະໃດແດ່, ຕົວຢ່າງ, ກ່ຽວກັບການເຂົ້າເຖິງ, ອາຫານ ຫຼື ການສື່ສານ.

ກ່ອນກອງປະຊຸມ, ທ່ານຕ້ອງໄດ້ພິຈາລະນາສິ່ງຕໍ່ໄປນີ້:

- ▶ ຄົນພິການສາມາດມາເຖິງສະຖານທີ່ໄດ້ບໍ?ເຂົາເຈົ້າຕ້ອງໄດ້ໃຊ້ການເດີນທາງສະເພາະໃດໜຶ່ງບໍເພື່ອມາເຖິງສະຖານທີ່? ມີງົບປະມານສຳລັບການເດີນທາງ  ຫລື ຜູ້ເບິ່ງແຍງຊ່ວຍເຫລືອບໍ ຖ້າຈຳເປັນ?
- ▶ ຄົນພິການສາມາດເຂົ້າມາຫ້ອງປະຊຸມໄດ້ບໍ? ສຳລັບຄົນທີ່ມີຄວາມຈຳກັດໃນການເຄື່ອນທີ່, ທາງເຂົ້າ ສາມາດເຂົ້າໄດ້ງ່າຍບໍ, ມີທາງຍ່າງ ຫຼື ຮາວຈັບ ເພື່ອຊ່ວຍຄົນຂຶ້ນຂັ້ນໄດບໍ? ຫຼືມີທາງເຂົ້າທາງອື່ນອີກບໍ?
- ▶ ຄົນພິການສຳມາດເຂົ້າເຖິງຫ້ອງປະຊຸມໄດ້ງ່າຍບໍ (ຫຼື ຫ້ອງນອນຖ້ານອນຢູ່ໃນສະຖານທີ່ປະຊຸມ) ? ຫ້ອງປະຊຸມ (ຫຼືຫ້ອງນອນ) ຢູ່ຊັ້ນລຸ່ມບໍ ຫຼື ຖ້າບໍ່ຢູ່ຊັ້ນລຸ່ມ, ມີລິຟຂຶ້ນໄປບໍ? ພື້ນຫ້ອງພຽງບໍ? ມີແສງສະຫວ່າງພຽງພໍບໍເພື່ອໃຫ້ຄົນແນມເຫັນບ່ອນທີ່ເຂົາເຈົ້າຍ່າງ?
- ▶ ຄົນພິການສາມາດເຄື່ອນຍ້າຍໄປມາໃນຫ້ອງປະຊຸມໄດ້ງ່າຍບໍ? ຫ້ອງມີຂະໜາດໃຫຍ່ພໍພຽງບໍ, ມີບ່ອນວ່າງເພື່ອໃຫ້ກຸ່ມຍ່ອຍໄດ້ເຮັດວຽກນຳກັນບໍ? ມີພື້ນທີ່ພຽງພໍສຳລັບຕັ້ງເຈ້ຍແຜ່ນໃຫຍ່ ແລະ ມີຝາ ເພື່ອຕິດເຈ້ຍແຜ່ນໃຫຍ່ບໍ?ມີແສງສະຫວ່າງພຽງພໍບໍ?
- ▶ ຄົນທີ່ມີຄວາມຕ້ອງການການສື່ສານພິເສດສາມາດເຂົ້າຮ່ວມໃນການສົນທະນາໃນເວລາຝຶກອົບຮົມໄດ້ບໍ? ຜູ້ເຂົ້າຮ່ວມທີ່ມີສາຍຕາສັ້ນ ຫຼື ມີບັນຫາການໄດ້ຍິນ ສາມາດນັ່ງຢູ່ໃກ້ທາງໜ້າໄດ້ບໍ? ຖ້າຜູ້ເຂົ້າຮ່ວມໃຊ້ພາສາມື, ທ່ານມີນາຍແປພາສາມືບໍ?
- ▶ ຄົນພິການໃຊ້ຫ້ອງນ້ຳໄດ້ບໍ? ພວກເຂົາສາມາດເຂົ້າເຖິງໄດ້ງ່າຍບໍ? ປະຕູກວ້າງພຽງພໍບໍ? ຊັກໂຄກໃນຫ້ອງນ້ຳສາມາດຂຶ້ນນັ່ງ ແລະ ລົງໄດ້ງ່າຍບໍ່?

**ແຫຼ່ງຂໍ້ມູນ:** HelpAge International 2020

- ▶ **ການບໍລິຫານ:** ສົ່ງບັດເຊີນ ແລະ ຕິດຕາມການຕອບຮັບເຂົ້າຮ່ວມກອງປະຊຸມ, ຮັບຜິດຊອບການຈ່າຍເງິນ ແລະ ໃບແຈ້ງໜີ້, ຈັດແຈງວັດຖຸອຸປະກອນ ແລະ ເຄື່ອງໃຊ້ຕ່າງໆ, ດຳເນີນຜົນການປະເມີນ ແລະ ຕິດຕາມການສື່ສານ.
- ▶ **ການອຳນວຍຄວາມສະດວກ**: ການກຳນົດກຸ່ມເປົ້າໝາຍ ແລະ ການປະເມີນຄວາມຕ້ອງການໃນການຮຽນຮູ້ຂອງເຂົາເຈົ້າ, ອອກແບບວາລະການຝຶກອົບຮົມ ແລະ ກຳນົດຈຸດປະສົງ ແລະຜົນໄດ້ຮັບຂອງການຮຽນຮູ້, ກຳນົດ ແລະ ເຊີນຜູ້ນຳສະເໜີ ຫຼື ຜູ້ຊ່ຽວຊານ, ອຳນວຍຄວາມສະດວກໃນກິດຈະກຳການຮຽນຮູ້ ແລະ ສ້າງບົດບັນຍາຍ.





# ການປະເມີນຜົນ ແລະ ການສັງລວມຄືນ

# ການປະເມີນຜົນ ມື້ທີ 1

| | |
|---|---|
| **ເວລາ:** | **5 ນາທີ** |
| **ຈຸດປະສົງ** | ກໍານົດບົດຮຽນສໍາຄັນທີ່ຖອດຖອນໄດ້ໃນຕອນທ້າຍຂອງມື້ທີ1. |
| **ອຸປະກອນ** | ▶ ເຈ້ຍແຜ່ນໃຫຍ່ 3 ແຜ່ນ<br>▶ ບິກເຟີດ (1 ກ້ານຜູ້ເຂົ້າຮ່ວມຄົນໜຶ່ງ )<br>▶ ເຈ້ຍສິຕິດ |
| **ການກະກຽມ** | ເອົາເຈ້ຍແຜ່ນໃຫຍ່ 3 ແຜ່ນ ແລະ ແຕ້ມຮູບໜ້າສະແດງຄວາມຮູ້ສຶກໃສ່ແຕ່ລະໃບ: ໃບໜ້າຍິ້ມ, ໃບໜ້າບໍ່ສະແດງຄວາມຮູ້ສຶກຫຍັງ ແລະ ໃບໜ້າໂສກເສົ້າ, ດັ່ງຕໍ່ໄປນີ້<br> |
| **ຂັ້ນຕອນ** | **1.** ຢາຍເຈ້ຍສິຕິດ ແລະ ບອກຜູ້ເຂົ້າຮ່ວມຂຽນຄໍາຄິດຄໍາເຫັນຂອງເຂົາເຈົ້າຕໍ່ກັບມື້ຮຽນ, ລວມທັງການບໍລິຫານການຝຶກອົບຮົມ(ເຊັ່ນ: ເວລາພັກຜ່ອນ, ອາຫານຫວ່າງ ຫຼື ສະຖານທີ່ຝຶກອົບຮົມ); ການອໍານວຍຄວາມສະດວກ (ເຊັ່ນ: ຂັ້ນຕອນການຝຶກອົບຮົມ, ຄວາມຊັດເຈນ, ປັດໃຈຄວາມມ່ວນຊື່ນ); ແລະ ເນື້ອໃນຂອງການຝຶກອົບຮົມ. ບອກພວກເຂົາໃຫ້ຂຽນພຽງແຕ່ຫນຶ່ງຄໍາເຫັນຕໍ່ໜຶ່ງໃບ.<br>**2.** ບອກຜູ້ເຂົ້າຮ່ວມເອົາເຈ້ຍສິຕິດ ໄປຕິດໃສ່ກ້ອງຮູບໃບໜ້າຄວາມຮູ້ສຶກທີ່ເໝາະສົມ. |

# ▸ ການປະເມີນຜົນ ມື້ທີ 1

| | |
|---|---|
| **ເວລາ:** | **15 ນາທີ** |
| **ຈຸດປະສົງ** | ທົບທວນສິ່ງທີ່ຜູ້ເຂົ້າຮ່ວມໄດ້ຮຽນ, ແລະ ຊີ້ແຈງບັນຫາຕ່າງໆກ່ອນຈະເລີ່ມຕົ້ນຝຶກອົບຮົມມື້ທີ 2 |
| **ອຸປະກອນ** | ເຈ້ຍ 5 ແຜ່ນ |
| **ການກະກຽມ** | ຂຽນຄໍາຖາມດັ່ງຕໍ່ໄປນີ້ໃສ່ເຈ້ຍ (ຄໍາຖາມໜຶ່ງຕໍ່ເຈ້ຍແຜ່ນໜຶ່ງ)<br><br>▶ ຕອນນີ້ທ່ານຮູ້ຫຍັງແດ່ ທີ່ທ່ານບໍ່ຮູ້ມາກ່ອນ?<br>▶ ທ່ານໄດ້ມີການປ່ຽນແປງແນວຄວາມຄິດອັນໃດແດ່?<br>▶ ທ່ານຈະເຮັດຫຍັງແຕກຕ່າງຈາກເມື່ອກ່ອນ?<br>▶ ມີອັນໃດທີ່ທ່ານຍັງພົບກັບຄວາມຫຍຸ້ງຍາກຈາກສິ່ງທີ່ໄດ້ຮຽນມື້ວານນີ້?<br>▶ ທ່ານຮູ້ສຶກແນວໃດຕໍ່ກັບສິ່ງທີ່ທ່ານໄດ້ຮຽນຢູ່ນີ້?<br><br>ເອົາເຈ້ຍມາຫໍ່ເຂົ້າກັນເປັນຫຼາຍຊັ້ນ ໃຫ້ຄືກັບຮູບຜັກກະຫຼໍ່າປີ. |
| **ຂັ້ນຕອນ** | **1.** ບອກຜູ້ເຂົ້າຮ່ວມຢືນເປັນວົງມົນໃຫຍ່.<br>**2.** ຄູຝຶກເປີດເພງ ແລະ ຜູ້ເຂົ້າສົ່ງເຈ້ຍ "ຮູບຜັກກະຫຼໍ່າປີ" ຕາມວົງມົນ.<br>**3.** ຄູຝຶກຢຸດເພງ. ຜູ້ທີ່ຖືເຈ້ຍໃນມືເມື່ອເພງຢຸດ ຈະໄດ້ແກະເຈ້ຍຊັ້ນນອກສຸດອອກ ແລະ ໂຍນເຈ້ຍຄໍາຖາມນັ້ນຖິ້ມຕອບຄໍາຖາມທີ່ຂຽນໃສ່ນັ້ນ.<br>**4.** ເມື່ອຕອບຄໍາຖາມແລ້ວ, ເຈ້ຍຄໍາຖາມນັ້ນັ້ນຈະຖືກຖິ້ມ ແລະ ສືບຕໍ່ຫຼິ້ນເກມຕາມຈໍານວນເຈ້ຍທີ່ເຫຼືອຢູ່. ສືບຕໍ່ຫຼິ້ນເກມຈົນກ່ວາຈະໄດ້ຕອບຄໍາຖາມທັງໝົດ. |

# ການປະເມີນຜົນ ມື້ທີ 2

**ເວລາ:**

**10 ນາທີ**

**ຈຸດປະສົງ**

ກຳນົດບົດຮຽນສຳຄັນທີ່ຖອດຖອນໄດ້ໃນຕອນທ້າຍຂອງມື້ທີ 2.

**ອຸປະກອນ**

- ເຈ້ຍແຜ່ນໃຫຍ່  2 ແຜ່ນ
- ບິກເຟີດສີແດງ ຫຼື ສະຕິກເກີ້ເປັນຮູບວົງມົນນ້ອຍສີແດງ

**ການກະກຽມ**

1. ເອົາເຈ້ຍແຜ່ນໃຫຍ່ສອງແຜ່ນມາຕິດກັນເພື່ອສ້າງເປັນແຜ່ນໃຫຍ່. ແຕ້ມເສັ້ນແກນຕັ້ງ ແລະ ແກນຂວາງໃສ່ໃນເຈ້ຍ. ແກນ y ແມ່ນເສັ້ນຕັ້ງຢູ່ເບື້ອງຊ້າຍ ແລະ ຂຽນເລກ -5 ຢູ່ລຸ່ມສຸດຫາ +5 ຢູ່ເທິງສຸດ. ແກນ x ແມ່ນເສັ້ນທາງຂວາງແຕ່ຊ້າຍຫາຂວາສຸດເຈ້ຍ.
2. ໃສ່ຊື່ໃຫ້ແກນ x  ວ່າ "ຫົວຂໍ້ຝຶກອົບຮົມ". ຂຽນຊື່ຫົວຂໍ້ຝຶກອົບຮົມຕາມແກນ x (ຕົວຢ່າງ, "ຄວາມສ່ຽງ ແລະ ວິທີການແກ້ໄຂບັນຫາ/ກົນໄກການຮັບມືຂອງຊຸມຊົນ", "ການສະຫນອງທຶນເຂົ້າໃນວຽກງານປົກປ້ອງສັງຄົມ").
3. ໃສ່ຊື່ໃຫ້ແກນ y ວ່າ "ອາລົມ ຄວາມຮູ້ສຶກ".
4. ເມື່ອແຕ້ມແລ້ວ ຄວນມີລັກສະນະຄ້າຍຄືຮູບຂ້າງລຸ່ມນີ້:



| | |
|---|---|
| ຂັ້ນຕອນ | 1. ບອກຜູ້ເຂົ້າຮ່ວມປະເມີນອາລົມ ຄວາມຮູ້ສຶກຂອງເຂົາເຈົ້າຕໍ່ກັບແຕ່ລະຫົວຂໍ້ຝຶກອົບຮົມ ຕາມແກນ y ໂດຍການແຕ້ມຈຸດສີແດງ (ຫຼືວາງສະຕິກເກີໃສ່). ໂດຍລວມແລ້ວ, ເຂົາເຈົ້າຮູ້ສຶກວ່າຄູຝຶກໄດ້ບັນລຸຈຸດປະສົງຂອງການຝຶກອົບຮົມໃນມື້ນັ້ນບໍ? ໃນເວລາເຮັດກິດຈະກຳໃຫ້ຄູຝຶກອອກຈາກຫ້ອງ ຫຼື ເຮັດອັນອື່ນ ເພື່ອໃຫ້ຜູ້ເຂົ້າຮ່ວມມີເວລາສ່ວນຕົວທີ່ຈະຕອບໃສ່ເຈ້ຍ. |

## ການທວນຄືນ ມື້ທີ 2

| | |
|---|---|
| ເວລາ: | 15 ນາທີ |
| ຈຸດປະສົງ | ທົບທວນສິ່ງທີ່ຜູ້ເຂົ້າຮ່ວມໄດ້ຮຽນ, ແລະ ຊີ້ແຈງບັນຫາຕ່າງໆກ່ອນຈະເລີ່ມຕົ້ນຝຶກອົບຮົມມືທີ 3. |
| ອຸປະກອນ | ເຈ້ຍເປົ່າ ແລະ ບິກ |
| ການກະກຽມ | ບໍ່ມີ |

**ຂັ້ນຕອນ**

1. ບອກຜູ້ເຂົ້າຮ່ວມຂຽນຄຳຖາມທີ່ເຫມາະສົມກ່ຽວກັບຫົວຂໍ້ທີ່ສົນທະນາກັນໃນມື້ທີ 2 ໃສ່ເຈ້ຍ.
2. ຈັດເປັນວົງມົນຫ່າງຈາກໂຕະ, ເຟີນິເຈີ ຫຼືສິ່ງກີດຂວາງອື່ນໆ. ຖ້າອາກາດດີ, ກໍສາມາດຈັດຢູ່ນອກຫ້ອງໄດ້.
3. ບອກຜູ້ເຂົ້າຮ່ວມຫໍ່ເຈ້ຍເຂົ້າກັນ ເພື່ອເຮັດເປັນ “ໝາກບານ”.
4. ເວົ້າວ່າ “ມາຫຼິ້ນເກມຍາດໝາກບານກັນເທາະ” ແລະ ເລີ່ມໂຍນໝາກບານ. ໃຊ້ເວລາ 30 ວິນາທີ ເພື່ອໃຫ້ຜູ້ເຂົ້າຮ່ວມໂຍນ, ຮັບ ແລະ ໂຍນໝາກບານອີກຫຼາຍເທື່ອ.
5. ໃນຕອນທ້າຍຂອງ 30 ວິນາທີ, ເປົ່າໝາກວີດ ເພື່ອໄດ້ຢຸດເຊົາຍາດໝາກບານ. ບອກຜູ້ເຂົ້າຮ່ວມແຕ່ລະຄົນເລືອກເອົາໝາກບານ ແລະ ເປີດໝາກບານ.
6. ບອກຜູ້ເຂົ້າຮ່ວມປ່ຽນກັນອ່ານຄຳຕອບທີ່ຂຽນຢູ່ໃນເຈ້ຍ. ຫຼິ້ນຫຼາຍຮອບ ແລະ ຖາມຄຳຖາມໃໝ່ຖ້າຫາກວ່າທ່ານຕ້ອງການຈະທົບທວນເນື້ອໃນການຝຶກອົບຮົມ.

# ການສະຫຼຸບສັງລວມ ແລະ ການປະເມີນຜົນ ມື້ທີ 3

| | |
|---|---|
| **ເວລາ:** | 30 ນາທີ |
| **ຈຸດປະສົງ** | ທົບທວນຄືນວ່າຄວາມຄາດຫວັງຂອງຜູ້ເຂົ້າຮ່ວມໄດ້ບັນລຸ ຫຼື ບໍ່ ແລະ ຄວາມກັງວົນຂອງເຂົາເຈົ້າໄດ້ຖືກແກ້ໄຂໃນຕອນທ້າຍຂອງມື້ທີ 3. |
| **ອຸປະກອນ** | ຄວາມຄາດຫວັງໃນເບື້ອງຕົ້ນທີ່ຜູ້ເຂົ້າຮ່ວມສ້າງຂຶ້ນໃນພາກແນະນຳ (ກິດຈະກຳ 2). |
| **ການກະກຽມ** | ບໍ່ມີ |
| **ຂັ້ນຕອນ** | **1.** ບອກຜູ້ເຂົ້າຮ່ວມຄິດຄືນກ່ຽວກັບຄວາມຄາດຫວັງຂອງເຂົາເຈົ້ານັບແຕ່ມື້ທີ 1. ຖາມເຂົາເຈົ້າວ່າ ຄວາມຄາດຫວັງຂອງເຈົ້າໄດ້ບັນລຸບໍ? ໃຫ້ເວລາ 5 -10ນາທີເພື່ອຄິດກ່ຽວກັບປະເດັນນີ້ຢ່າງງຽບໆ.<br>**2.** ເນັ້ນໃຫ້ເຫັນວ່າການສືບຕໍ່ຮຽນຮູ້ແມ່ນຜ່ານການຈັດຕັ້ງປະຕິບັດ. ແນະນຳໃຫ້ຜູ້ເຂົ້າຮ່ວມຕິດຕໍ່ກັນ ເພື່ອແລກປ່ຽນປະສົບການ ແລະ ສະໜັບສະໜູນເຊິ່ງກັນ ແລະ ກັນ.<br>**3.** ບອກໃຫ້ອາສາສະໝັກແລກປ່ຽນສິ່ງທີ່ເຂົາເຈົ້າຈະເຮັດໃນຕໍ່ໜ້າ. ເຂົາເຈົ້າຈະເຮັດຫຍັງແດ່ໃນໄລຍະສາມເດືອນຂ້າງໜ້າຫຼັງຈາກການຝຶກອົບຮົມ?<br>**4.** ບອກໃຫ້ອາສາສະໝັກອີກ 3 – 4 ຄົນ ແລກປ່ຽນສິ່ງທີ່ເຂົາເຈົ້າຈະເຮັດ ຖ້າແຕກຕ່າງຈາກສິ່ງທີ່ໄດ້ກ່າວມາແລ້ວ. |


on Social Protection in Lao PDR
JOINT SDG FUND
Australian AID



# ເອກະສານ ຊ້ອນທ້າຍ

# ເອກະສານຊ້ອນທ້າຍ I.ການປະເມີນກ່ອນຝຶກອົບຮົມ

| ຂໍ້ມູນສ່ວນຕົວ | | | | | |
|---|---|---|---|---|---|
| ຊື່ (ທາງເລືອກ ໃສ່ຊື່ ຫຼືບໍ່ໃສ່ກໍໄດ້) | | | | | |
| ອົງການຈັດຕັ້ງ | | ໜ້າທີ່ຮັບຜິດຊອບ /ຕຳແໜ່ງ | | | |
| ຈຳນວນປີທີ່ເຮັດວຽກ ກັບອົງການຈັດຕັ້ງ | | ເພດ | | ອາຍຸ | |

| ການຝຶກອົບຮົມການປົກປ້ອງສັງຄົມຜ່ານມາ | |
|---|---|
| ຜ່ານມາເຄີຍເຂົ້າຮ່ວມການຝຶກອົບຮົມໃນຫົວຂໍ້ປົກປ້ອງສັງຄົມບໍ? | ○ ເຄີຍ<br>○ ບໍ່ເຄີຍ |
| ຖ້າເຄີຍ, ຈົ່ງເວົ້າລະອຽດວ່າຫົວຂໍ້ຫຍັງ, ຝຶກຢູ່ໃສ (ລະບຸຊັດເຈນທຸກການຝຶກອົບຮົມ ທີ່ເຄີຍເຂົ້າຮ່ວມຜ່ານມາ) | |
| ຈົ່ງປະເມີນລະດັບຄວາມສົນໃຈດ້ານການຝຶກອົບຮົມຫົວຂໍ້ການປົກປ້ອງສັງຄົມ ຂອງທ່ານ? | ○ ບໍ່ສົນໃຈເລີຍ<br>○ ສົນໃຈໜ້ອຍໜຶ່ງ<br>○ ສົນໃຈພໍປານກາງ<br>○ ສົນໃຈຫຼາຍ |

ຈົ່ງປະເມີນລະດັບຄວາມຮູ້ຂອງທ່ານຕໍ່ຫົວຂໍ້ລຸ່ມນີ້:

| | ສາມາດ ນຳໃຊ້ໄດ້ດີ | ສາມາດ ສອນໃຫ້ ຜູ້ອື່ນໄດ້ | ບໍ່ຮູ້ຫຍັງ ເລີຍ | ຮູ້ໜ້ອຍໜຶ່ງ ແຕ່ບໍ່ມີ ປະສົບການ | ມີປະສົບການ ໜ້ອຍໜຶ່ງ ແຕ່ຍັງຕ້ອງການ ການຊີ້ນຳນຳພາ |
|---|---|---|---|---|---|
| | | | | | |

| | | | | | |
|---|---|---|---|---|---|
| ຫຼັກການພື້ນຖານດ້ານການປົກປ້ອງສັງຄົມ | | | | | |
| ກອບແຜນການ ແລະ ໜ້າທີ່ການຂອງລະບົບປົກປ້ອງສັງຄົມ | | | | | |
| ການລົງທຶນໃນລະບົບປົກປ້ອງສັງຄົມ | | | | | |
| ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ | | | | | |
| ແຜນຈັດຕັ້ງປະຕິບັດຍຸດທະສາດປົກປ້ອງສັງຄົມແຫ່ງຊາດ | | | | | |
| ລະບົບປະກັນສຸຂະພາບຂອງ ສປປ ລາວ | | | | | |
| ກອງທຶນປະກັນສັງຄົມຂອງ ສປປ ລາວ | | | | | |
| ລະບົບສະຫວັດດີການສັງຄົມ ຂອງ ສປປ ລາວ | | | | | |

Lao PDR = Lao People’s Democratic Republic.

# ເອກະສານຊ້ອນທ້າຍ II. ການປະເມີນຫຼັງຝຶກອົບຮົມ

**ກະລຸນາປະເມີນລະດັບຄວາມພໍໃຈຕໍ່ກັບການຈັດການບໍລິຫານ ແລະ ການກະກຽມສຳລັບຊຸດຝຶກອົບຮົມ ໂດຍໝາຍເອົາຄະແນນ 1 ( ບໍ່ດີ) ຈົນເຖິງ 5 (ດີເລີດ)**

| | 1 | 2 | 3 | 4 | 5 |
|---|---|---|---|---|---|
| ການສື່ສານກ່ອນມາຝຶກອົບຮົມ | | | | | |
| ການສື່ສານໃນລະຫວ່າງການຝຶກອົບຮົມ | | | | | |
| ການຈັດການບໍລິຫານ ແລະ ຮູບແບບການຝຶກອົບຮົມ | | | | | |
| ອາຫານ | | | | | |
| ທີ່ພັກເຊົາ | | | | | |
| ການເຂົ້າເຖິງສະຖານທີ່ຝຶກອົບຮົມ | | | | | |
| ການແປພາສາ | | | | | |

**ກະລຸນາປະເມີນລະດັບຄວາມພໍໃຈຕໍ່ກັບການອຳນວຍຄວາມສະດວກ/ ການຝຶກອົບຮົມໂດຍໝາຍເອົາຄະແນນ 1 ( ບໍ່ດີ) ຈົນເຖິງ 5 (ດີເລີດ)**

| | 1 | 2 | 3 | 4 | 5 |
|---|---|---|---|---|---|
| ການອະທິບາຍ ແລະ ການນຳສະເໜີມີຄວາມຈະແຈ້ງ | | | | | |
| ການສະໜັບສະໜູນຊ່ວຍເຫຼືອຜູ້ເຂົ້າຮ່ວມ ແລະ ສ້າງໃຫ້ຜູ້ເຂົ້າຮ່ວມມີຄວາມໝັ້ນໃຈຫຼາຍຂຶ້ນ | | | | | |
| ກິດຈະກຳ, ວິທີການຝຶກອົບຮົມ ແລະ ເອກະສານ ເຄື່ອງມືຕ່າງໆ | | | | | |
| ການຄວບຄຸມເວລາ ແລະ ເອົາໃຈໃສ່ຕໍ່ກັບຄວາມອິດເມື່ອຍຂອງຜູ້ເຂົ້າຮ່ວມ | | | | | |
| ການຖ່າຍທອດຄວາມຮູ້ໃນບົດຮຽນແຕ່ລະພາກ | | | | | |

### 3. ກະລຸນາປະເມີນລະດັບຄວາມພໍໃຈຕໍ່ກັບເນື້ອໃນຂອງການຝຶກອົບຮົມໂດຍໝາຍເອົາຄະແນນ 1 ( ບໍ່ດີ) ຈົນເຖິງ 5 (ດີເລີດ)

| | 1 | 2 | 3 | 4 | 5 |
|---|---|---|---|---|---|
| **ເນື້ອໃນກ່ຽວຂ້ອງກັບວຽກງານຂອງທ່ານ ແລະ ທ່ານໄດ້ມີຄວາມຮູ້ ແລະ ທັກສະເພີ່ມຂຶ້ນ** | | | | | |

**ຄຳຄິດເຫັນ**

### 4. ບົດຮຽນພາກໃດທີ່ທ່ານເຫັນວ່າມີປະໂຫຍດຫຼາຍທີ່ສຸດ ?

**ຄຳຄິດເຫັນ**

### 5. ບົດຮຽນພາກໃດທີ່ທ່ານເຫັນວ່າມີປະໂຫຍດໜ່ອຍທີ່ສຸດ?

**ຄຳຄິດເຫັນ**

### 6. ຫົວຂໍ້ໃດທີ່ທ່ານຕ້ອງການຄວາມຊ່ວຍເຫຼືອຕື່ມອີກ ຫຼື ຕ້ອງໄດ້ຝຶກຊ້ອມອີກ ເພື່ອໃຫ້ທ່ານມີຄວາມໝັ້ນໃຈ ຕໍ່ກັບຫົວຂໍ້ດັ່ງກ່າວ?

**ຄຳຄິດເຫັນ**

### 7. ໂດຍລວມແລ້ວ, ການຝຶກອົບຮົມໄດ້ບັນລຸຄວາມຄາດຫວັງຂອງທ່ານບໍ?

- ○ ໄດ້, ຄົບຖ້ວນ
- ○ ໄດ້ເຄິ່ງໜຶ່ງ
- ○ ບໍ່, ບໍ່ໄດ້ເລີຍ

**ຄຳຄິດເຫັນ**

### 8. ການຝຶກອົບຮົມມີອັນໃດບໍທີ່ບໍ່ຄົບຖ້ວນ ແລະ ເຫັນວ່າຕ້ອງມີ?

**ຄຳຄິດເຫັນ**

### 9. ທ່ານມີຄຳຄິດເຫັນ ຫຼື ຄຳແນະນຳ ອັນໃດບໍ ລວມທັງກິດຈະກຳທີ່ທ່ານຄິດວ່າມີປະໂຫຍດຕໍ່ກັບການຝຶກອົບຮົມໃນຄັ້ງຕໍ່ໄປ?

**ຄຳຄິດເຫັນ**

# ເອກະສານຊ້ອນທ້າຍ III. ບັນຊີກວດກາ ການຝຶກອົບຮົມ

ຕໍ່ໄປນີ້ ແມ່ນລາຍການເອກະສານທີ່ຖືກຝຶກຕ້ອງໄດ້ກະກຽມໃນແຕ່ລະພາກ.

| ພາກ | ລາຍການກວດ | ໝາຍເຫດ |
|---|---|---|
| **ພາກນຳສະເໜີ** | | |
| **ກິດຈະກຳ 1: ການທຳຄວາມຮູ້ຈັກກັນ** | ○ ຈັດພິມເອກະສານ1 (1 ຊຸດຕໍ່ຜູ້ເຂົ້າຮ່ວມໜຶ່ງຄົນ)<br>○ ບິກເພີດ ( 1 ກ້ານຕໍ່ຜູ້ເຂົ້າຮ່ວມ ໜຶ່ງຄົນ) | |
| **ກິດຈະກຳ 2: ກົດລະບຽບ ແລະ ຄວາມຄາດຫວັງ** | ○ ເຈ້ຍແຜ່ນໃຫຍ່ 5 ແຜ່ນ<br>○ ບິກເພີດ 4 ກ້ານ<br>○ ສະກອດຕິດເຈ້ຍ | 1. ຂຽນຈຸດປະສົງຂອງການຝຶກອົບຮົມໃສ່ເຈ້ຍແຜ່ນໃຫຍ່.<br>2. ຕິດເຈ້ຍແຜ່ນໃຫຍ່ທີ່ຂຽນຈຸດປະສົງຂອງການຝຶກອົບຮົມ ແລະ ປະໄວ້ຕະຫລອດການຝຶກອົບຮົມ.<br>3. ຕິດເຈ້ຍແຜ່ນໃຫຍ່ 1 ແຜ່ນໃສ່ຝາ ພ້ອມກັບຂຽນຫົວຂໍ້ "ກົດລະບຽບ".<br>4. ຕິດເຈ້ຍແຜ່ນໃຫຍ່ ອີກ 3 ແຜ່ນໃສ່ຝາ ພ້ອມກັບຂຽນຫົວຂໍ້ດັ່ງນີ້:<br>a. ເນື້ອໃນ/ວິທີການ<br>b. ຜູ້ອຳນວຍຄວາມສະດວກການຝຶກອົບຮົມ / ຜູ້ບັນຍາຍ<br>c. ຜູ້ເຂົ້າຮ່ວມ |
| **ພາກທີ 1:**<br>**ກິດຈະກຳ 3:**<br>**ແຜນວາດຄວາມສ່ຽງ ແລະ ວິທີການແກ້ໄຂບັນຫາຢູ່ໃນຊຸມຊົນ** | ○ ພິມເອກະສານແຈກຢາຍ 2 (1 ສະບັບຕໍ່ຜູ້ເຂົ້າຮ່ວມໜຶ່ງຄົນ)<br>○ ເຈ້ຍແຜ່ນໃຫຍ່ 6 ແຜ່ນ<br>○ ບິກເພີດ 6 ກ້ານ<br>○ ສະກັອດຕິດເຈ້ຍ<br>○ ຂຽນນໍ້າເບີຂອງກຸ່ມແລະ ໜ້າວຽກຂອງກຸ່ມ<br>○ ບົດນຳສະເໜີພົວເວີພອຍ ພາກທີ1 | **ກຸ່ມ 1:** ມີສະມາຊິກຄອບຄົວຜູ້ອອກແຮງງານປະສົບອຸປະຕິເຫດ<br>**ກຸ່ມ 2:** ມີເດັກນ້ອຍເກີດໃໝ່, ລູກສາວອາຍຸ 6 ປີມີຄວາມພິການທາງສະໝອງ, ແລະ ລູກຊາຍອາຍຸ 12 ປີ<br>**ກຸ່ມ 3:** ພໍ່ເປັນຊາວນາ, ເປັນຄົນຊົນເຜົ່<br>**ກຸ່ມ 4:** ພໍ່ແມ່ທີ່ເປັນຜູ້ອອກແຮງງານ ໄດ້ເຄື່ອນຍ້າຍໄປອອກແຮງງານ<br>**ກຸ່ມ 5:** ຄອບຄົວທີ່ຫາກໍ່ສູນເສຍຜູ້ທີ່ເປັນຫລັກຫາເງິນມາລ້ຽງຄອບຄົວ<br>**ກຸ່ມ 6:** ລູກສາວຢູ່ໃນໄວອອກແຮງງານ ອາໃສຢູ່ກັບພໍ່ແມ່ເຖົ້າແກ່ສອງຄົນ |

| | | |
|---|---|---|
| **ພາກທີ 2: ແນວຄວາມຄິດພື້ນຖານ ແລະ ຄວາມເປັນມາຂອງການປົກປ້ອງສັງຄົມ**<br><br>**ກິດຈະກຳ 4: ຄຳສັບ ແລະ ຄວາມໝາຍ** | ○ ບົດນຳສະເໜີພາວເວີພອຍ ຄຳສັບ ແລະ ຄຳນິຍາມຂອງການປົກປ້ອງສັງຄົມ<br>○ ບົດນຳສະເໜີພົວເວີພອຍ ພາກທີ2 | |
| **ພາກທີ 3: ລະບົບປົກປ້ອງສັງຄົມທີ່ມີ ຢູ່ ສປປ ລາວ**<br><br>**ກິດຈະກຳ 5: ລິເລີ່ມສ້າງຮູບພາບການປົກປ້ອງສັງຄົມຢູ່ ສປປ ລາວ**<br><br>**ກິດຈະກຳ 6: ໃຜຢາກເປັນເສດຖີແດ່?** | ○ ຈັດພິມ ເອກະສານ 3<br>○ ບົດນຳສະເນີພາວເວີພອຍ ພາກທີ 3<br>○ ຈັດພິມ 3 ບັດທີ່ຂຽນດ້ວຍ A, B ແລະ C (6 ຊຸດ) | |
| **ການປະເມີນຜົນ ມື້ທີ 1** | ○ ເຈ້ຍແຜ່ນໃຫຍ່ 3 ແຜ່ນ<br>○ ບິກເພີດ (1 ກ້ານຜູ້ເຂົ້າຮ່ວມຄົນໜຶ່ງ )<br>○ ເຈ້ຍສິຕິດ | ເອົາເຈ້ຍແຜ່ນໃຫຍ່ 3 ແຜ່ນ ແລະ ແຕ້ມຮູບໜ້າສະແດງຄວາມຮູ້ສຶກໃສ່ແຕ່ລະໃບ: ໃບໜ້າຍິ້ມ, ໃບໜ້າບໍ່ສະແດງຄວາມຮູ້ສຶກຫຍັງ ແລະ ໃບໜ້າໂສກເສົ້າ, ດັ່ງຕໍ່ໄປນີ້:<br><br>☺ 😐 ☹ |

| | | |
|---|---|---|
| **ການທວນຄືນ<br>ມື້ທີ 1** | ○ ເຈ້ຍ 5 ແຜ່ນ | ຂຽນຄຳຖາມດັ່ງຕໍ່ໄປນີ້ໃສ່ເຈ້ຍ (ຄຳຖາມ ໜຶ່ງຕໍ່ເຈ້ຍແຜ່ນໜຶ່ງ)<br>▶ ຕອນນີ້ທ່ານຮູ້ຫຍັງແດ່ ທີ່ທ່ານບໍ່ຮູ້ມາກ່ອນ?<br>▶ ທ່ານໄດ້ມີການປ່ຽນແປງແນວຄວາມຄິດອັນໃດແດ່?<br>▶ ທ່ານຈະເຮັດຫຍັງແຕກຕ່າງຈາກເມື່ອກ່ອນ?<br>▶ ມີອັນໃດທີ່ທ່ານຍັງພົບກັບຄວາມຫຍຸ້ງຍາກຈາກສິ່ງທີ່ໄດ້ຮຽນມື້ວານນີ້?<br>▶ ທ່ານຮູ້ສຶກແນວໃດຕໍ່ກັບສິ່ງທີ່ທ່ານໄດ້ຮຽນຢູ່ນີ້?<br><br>ເອົາເຈ້ຍມາຫໍ່ເຂົ້າກັນເປັນຫຼາຍຊັ້ນ ໃຫ້ຄືກັບຮູບຜັກກະຫຼໍ່າ 1 ປີ. |
| **ພາກທີ 4: ພາລະບົດບາດຂອງການປົກປ້ອງສັງຄົມ**<br><br>**ກິດຈະກຳ7: ຄວາມເຊື່ອທີ່ຜິດ ຫລື ຄວາມຈິງ?** | ○ ພິມ : ຄວາມເຊື່ອທີ່ຜິດ ຫລື ຄວາມຈິງ?<br>○ ບົດນຳສະເນີພາວເວີພອຍພາກທີ 4<br>○ ວິດີໂອ “ຄວາມເຊື່ອທີ່ຜິດ ຫລື ຄວາມຈິງ ຂອງອົງການ”<br>○ ວິດີໂອ “ ໂຄງການອຸດ ໜູນເດັກຢູ່ໄທ” | |
| **ພາກທີ 5 : ວິທີການກຳນົດເປົ້າໝາຍການປົກປ້ອງສັງຄົມ**<br><br>**ກິດຈະກຳ 8: ຄວາມເຂົ້າໃຈຕໍ່ກັບຄວາມສັບຊ້ອນຂອງການກຳຫນົດເປົ້າຫມາຍ**<br><br>**ກິດຈະກຳ 9: ກຳນົດກຸ່ມເປົ້າໝາຍເພື່ອການປົກປ້ອງສັງຄົມ** | ○ ຈັດພິມເອກະສານ 4 (2 ຊຸດ)<br>○ ບົດນຳສະເນີພາວເວີພອຍ ພາກທີ 5<br>○ ວິດີໂອ: “ອຸດໜູນບຳນານທາງສັງຄົມຢູ່ປະເທດຟີລິບປິນ” | |
| **ພາກທີ 6: ການອຸດໜູນແບບມີເງື່ອນໄຂ  ແລະ ແບບບໍ່ມີເງື່ອນໄຂ**<br><br>**ກິດຈະກຳ 10: ແບບມີເງື່ອນໄຂ ແລະ ແບບບໍ່ມີເງື່ອນໄຂ** | ○ ບົດນຳສະເນີພາວເວີພອຍພາກທີ 6<br>○ ວິດີໂອ: “CCTE”<br>○ ບັດທີ່ພິມຂໍ້ຄວາມໃສ່ດັ່ງນີ້:<br>▶ ແບບມີເງື່ອນໄຂ<br>▶ ແບບມີເງື່ອນໄຂທີ່ພໍຮັບໄດ້<br>▶ ແບບບໍ່ມີເງື່ອນໄຂຫຍັງທັງໝົດ | |

| | | |
|---|---|---|
| **ການປະເມີນຜົນ ມື້ທີ 2** | ◯ ເຈ້ຍແຜ່ນໃຫຍ່ 2 ແຜ່ນ<br>◯ ບິກເຟີດສີແດງ ຫຼື ສະຕິກເກີ້ ເປັນຮູບວົງມົນນ້ອຍສີແດງ | 1. ເອົາເຈ້ຍແຜ່ນໃຫຍ່ສອງແຜ່ນມາຕິດກັນເພື່ອ ສ້າງເປັນແຜ່ນໃຫຍ່. ແຕ້ມເສັ້ນແກນຕັ້ງ ແລະ ແກນຂວາງໃສ່ໃນເຈ້ຍ. ແກນ y ແມ່ນເສັ້ນຕັ້ງຢູ່ ເບື້ອງຊ້າຍ ແລະ ຂຽນເລກ -5 ຢູ່ລຸ່ມສຸດຫາ +5 ຢູ່ເທິງສຸດ. ແກນ x ແມ່ນເສັ້ນທາງຂວາງ ແຕ່ຊ້າຍຫາຂວາສຸດເຈ້ຍ.<br>2. ໃສ່ຊື່ໃຫ້ແກນ x ວ່າ "ຫົວຂໍ້ຝຶກອົບຮົມ". ຂຽນຊື່ຫົວຂໍ້ຝຶກອົບຮົມຕາມແກນ x (ຕົວຢ່າງ, "ຄວາມສ່ຽງ ແລະ ວິທີການແກ້ໄຂບັນຫາ/ ກົນໄກການຮັບມືຂອງຊຸມຊົນ", "ການສະຫນອງທຶນເຂົ້າໃນວຽກງານ ປົກປ້ອງສັງຄົມ").<br>3. ໃສ່ຊື່ໃຫ້ແກນ y ວ່າ "ອາລົມ ຄວາມຮູ້ສຶກ". |
| **ການທວນຄືນ ມື້ທີ 2** | ◯ ເຈ້ຍຂະໜາດ A6 (1 ແຜ່ນຕໍ່ຜູ້ເຂົ້າຮ່ວມໜຶ່ງຄົນ) | |
| **ພາກທີ 7: ການສັງລວມ ຄວາມເຂົ້າໃຈຕໍ່ການປົກປ້ອງ ສັງຄົມ**<br><br>**ກິດຈະກຳ 11: "ສົງໃສ ລະແວງ" ແລະ "ຜູ້ທີ່ເຊື່ອ"** | ◯ ພິຈັດມ : "ສົງໃສລະແວງ" ແລະ"ຜູ້ທີ່ເຊື່ອ"<br>◯ ບັດທີ່ພິມຂໍ້ຄວາມໃສ່ດັ່ງນີ້:<br>▶ "ຂ້ອຍເຊື່ອວ່າການປົກປ້ອງ ສັງຄົມ ແມ່ນການຊ່ວຍເຫລືອ ແລະ ເຮັດໃຫ້ຄົນທຸກຍາກເອື່ອຍ ອີງໃສ່ຄົນອື່ນ "<br>▶ "ຂ້ອຍເຊື່ອວ່າການປົກປ້ອງ ສັງຄົມແມ່ນການລົງທຶນໃສ່ ອານາຄົດ"<br>◯ ສະກອັດຕິດເຈ້ຍ | ຕັ້ງສອງສະຖານີກົງກັນຂ້າມກັນຢູ່ໃນຫ້ອງ ແລະ ເອົາ ສອງບັດຕິດໄວ້ເທິງ ແລະ ເອົາສະກອດຕິດເຈ້ຍ ຍາວປະມານ 3 ແມັດ ໄປຕິດໄວ້ລະຫວ່າງກາງຂອງ ສອງສະຖານີ ເພື່ອແບ່ງຫ້ອງອອກເປັນຫ້ອງ ລະຫວ່າງຜູ້ລະແວງສົງໃສ ແລະ ຜູ້ທີ່ເຊື່ອ, ທັງສອງ ທີມປິ່ນໜ້າໃສ່ກັນ (ສອງທີມຢືນກົງກັນຂ້າມກັນ). |

| | | |
|---|---|---|
| **ຫຼັກສູດ 2:**<br>**ພາກທີ 1: ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ**<br><br>**ກິດຈະກຳ 12: ການສ້າງແຜນວາດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດກັບການປົກປ້ອງສັງຄົມທີ່ມີຢູ່ພາຍໃນແຂວງ** | ○ ປື້ມຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ (ຜູ້ລະໜຶ່ງຊຸດ1)<br>○ ເຈ້ຍແຜ່ນໃຫຍ່ 6 ແຜ່ນ<br>○ ບິກເຟີດ<br>○ ບົດນຳສະເໜີພາວເວີພອຍ ຫຼັກສູດ 2: ພາກທີ 1 | |
| **ພາກທີ 2: ການລົງທຶນໃສ່ລະບົບປົກປ້ອງສັງຄົມ**<br><br>**ກິດຈະກຳ 13: ສາມ "A": ການຂະຫຍາຍການລົງທຶນໃສ່ລະບົບປົກປ້ອງສັງຄົມ** | ○ ປື້ມ ເອກະສານແຈກຢາຍ 5<br>○ ເຈ້ຍແຜ່ນໃຫຍ່<br>○ ສະກອດຕິດເຈ້ຍ<br>○ ບົດນຳສະເໜີພາວເວີພອຍ ຫຼັກສູດ 2: ພາກທີ 2 | 1. ຕັດຕາມເສັ້ນຢູ່ໃນເອກະສານແຈກຢາຍ 5, ຕັດອອກເປັນ 4 ບັດ.<br>2. ຕໍ່ເຈ້ຍແຜ່ນໃຫຍ່ 2 ແຜ່ນໃສ່ກັນ (ຕໍ່ທາງຕັ້ງເພື່ອໃຫ້ໄດ້ຮູບສີ່ຫຼ່ຽມໃຫຍ່) ແລະ ແຕ້ມຮູບວົງມົນ 3 ວົງກວມກັນ, ໃສ່ຊື່ໃຫ້ແຕ່ລະວົງມົນຄື: ຍອມຮັບ, ອຳນາດ(ການຈັດຕັ້ງ), ຄວາມສາມາດ (ເບິ່ງຮູບຂ້າງລຸ່ມນີ້). ຕິດເຈ້ຍໃສ່ຝາໄວ້ເພື່ອໃຫ້ຜູ້ເຂົ້າຮ່ວມທຸກຄົນສາມາດເຕົ້າໂຮມກັນຢູ່ທາງໜ້າໃນເວລາເຮັດກິດຈະກຳ. |
| **ພາກທີ 3: ບາດກ້າວຕໍ່ໄປຂອງຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ (NSPS)**<br><br>**ກິດຈະກຳ14: ການຈັດຕັ້ງປະຕິບັດຍຸດທະສາດປົກປ້ງສັງຄົມຢູ່ຂັ້ນແຂວງ** | ○ ເຈ້ຍແຜ່ນໃຫຍ່ (1 ແຜ່ນຕໍ່ກຸ່ມ) | |
| **ການສະຫຼຸບສັງລວມ ແລະ ການປະເມີນຜົນ ມື້ທີ 3** | ○ ຄວາມຄາດຫວັງໃນເບື້ອງຕົ້ນທີ່ຜູ້ເຂົ້າຮ່ວມສ້າງຂຶ້ນໃນພາກແນະນຳ (ກິດຈະກຳ 2). | |

# ▶ ເອກະສານອ້າງອີງ


Alatas, Vivi; Banerjee, Abhijit; Hanna, Rema; Olken, Benjamin A.; and Tobias, Julia. 2012. "Targeting the poor: Evidence from a field experiment in Indonesia". American Economic Review, Vol 102, No 4, pp 1206-1240.

Cameron, Lisa. 2019. "Social Protection Programs for Women in Developing Countries", IZA World of Labor Brief, February.

Carter, Becky; Roelen, Keetie; Enfield, Sue; and Avis, William. 2019. Social Protection Topic Guide. K4D. Kidd, Stephen; and Athias, Diloá. 2019. "Hit and Miss: An assessment of targeting effectiveness in social protection", Development Pathways Working Paper March 2019.

Federal Ministry for Economic Cooperation and Development (BMZ). 2017. Leave no one behind: Insights from Cambodia's national poverty identification system. German Health Practice Collection.

Handa, Sudhanshu; Huang, Carolyn; Hypher, Nicola et al. 2012. "Targeting effectiveness of social cash transfer programs in three African countries". Journal of Development Effectiveness, Vol 4, No 1, pp 78-108.

HelpAge International. 2020. Gender Equality Training Toolkit.

Hemsteede, Roeland. 2018. "Conditional or Unconditional Cash Transfers?: From Ideology to Policy Dialogue". Socialprotection.org Blog, 24 January.

ILO. 2016. Social Protection Assessment-Based National Dialogue: A Global Guide.

———. 2017. World Social Protection Report 2017–19: Universal Social Protection to Achieve the Sustainable Development Goals.

———. n.d.-a. "Social Protection", available at: https://www.ilo.org/africa/countries-covered/tanzania/WCMS_549369/lang--en/index.htm.

———. n.d.-b. "World Social Protection Data Dashboards", available at: https://www.social-protection.org/gimi/WSPDB.action?id=19.

———. Unpublished. "Costing of Social Welfare Programmes to Support the Rollout of the National Social Protection Strategy in Lao PDR", 2021 report.

--------. 2020. ILO Social Security Standards: Learn, Ratify, and Apply.

ITUC (International Trade Union Conference). 2021. "A Global Social Protection Fund Is Possible", ITUC Campaign Brief.

Lund, Frances; and Srinivas, Smita. 2000. Learning from Experience: A Gendered Approach to Social Protection for Workers in the Informal Economy. Geneva, International Labour Office.

Transform. 2017. Manual for a Leadership and Transformation Curriculum On Building and Managing Social Protection Floors in Africa.

UNICEF (United Nations Children's Fund). 2016. "Conditionality in Cash Transfers: UNICEF's Approach", UNICEF Social Inclusion Summary, February.

———. n.d. "The Conditional Cash Transfer for Education (CCTE) Programme", available at: https://www.unicef.org/turkey/en/conditional-cash-transfer-education-ccte-programme.

UNICEF Thailand. 2019. Thailand Child Support Grant (CSG) Impact Assessment Endline Report.
-------. 2022. "Press Release on UNICEF Calls for Universal Child Support Grant to Ensure No Child Left Behind in Thailand's COVID-19 Recovery", 7 June 2022.

UN ESCAP (United Nations Economic and Social Commission for Asia and the Pacific). 2018. Why We Need Social Protection.

———. 2018. How to Design Inclusive Social Protection Systems.

United Nations. 2021. The Protection We Want: Social Outlook for Asia and the Pacific.

Yusuf, Moeed. 2010. "Community targeting for poverty reduction: Lessons from developing countries". The Pardee Papers, No 8. Boston: Boston University.

WIEGO (Women in Informal Employment: Globalizing and Organizing). 2022. Social Protection Advocacy Course Module.

UN Joint Programme

"Leaving No One Behind: Establishing the Basis for Social Protection Floors in Lao PDR"